





# ບົດລາຍງານຂອງຂະແໜງການແກ້ໄຂບັນຫາ ລບຕ ປະຈຳປີ 2012

ຄະນະກຳມະການຄຸ້ມຄອງແຫ່ງຊາດ.(ຄຊກລ)

ກ່ຽວກັບການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປລາວ

UXO - NRA

*ຮູບໜ້າປົກຂອງປື້ມບົດລາຍງານ: ຮູບແມ່ຍິງກຳລັງເກັບກ່ຽວຜົນຜະລິດເຂົ້າຂອງ ຕົນທີ່ປູກຢູ່ລະຫວ່າງກາງແລວເນື້ອທີ່ດິນປູກຕົ້ນວິກຂອງບໍລິສັດສະໂຕລາເອັນໄຊ ຢູ່ແຂວງສາລະວັນ. ໃນປີ 2012 ບໍລິສັດສະໂຕລາເອັນໄຊ ໄດ້ເຮັດວຽກຮ່ວມກັບບໍລິສັດເອັດສ໌ບີເທັດເກັບກູ້ລະເບີດ ເພື່ອເຮັດການກວດກູ້ ລບຕ ໃນບໍລິເວນເນື້ອທີ່ປູກໄມ້ວິກຂອງຕົນ.*
*ຮູບພາບຢູ່ດ້ານຂວາສຸດ: ບໍລິສັດເອັດສ໌ບີເທັດເກັບກູ້ລະເບີດ ກຳລັງດຳເນີນການກວດກູ້ ລບຕ ໃຫ້ແກ່ບໍລິສັດສະໂຕລາເອັນໄຊ ຢູ່ແຂວງສາລະວັນ.*
*ຮູບພາບຢູ່ດ້ານລຸ່ມສຸດ: ແມ່ນການກວດກູ້ ລບຕ ຢູ່ໃນບໍລິເວນສະຖານທີ່ທ່ອງທ່ຽວທີ່ມີຊື່ສຽງແຫ່ງໜຶ່ງຢູ່ແຂວງຊຽງຂວາງ.*

ບົດລາຍງານຂອງຂະແໜງການແກ້ໄຂບັນຫາ ລບຕ ປະຈຳປີ 2012

ບົດລາຍງານປະຈຳປີສະບັບນີ້ ສ້າງຂຶ້ນໂດຍຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ)

ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມ ກະລຸນາພົວພັນ: ຫ້ອງການ ຄຊກລ

ບ້ານ ສີສັງວອນ, ຕູ້ ປ.ນ 7621, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ
ເວັບໄຊ: www.nra.gov.la

ໂທ: (856-21 262386)

ລວບລວມ ແລະ ອອກແບບໂດຍ: ວິລະວົງ ສີສະຫວັດ, ຫຼ້າຊ້ອຍ ພິພັກ, ໂອລີເວີ ບູເດີນ ແລະ ເຊວຊີ ແພຣິດ

ອອກແບບໂດຍ: ຈິງຄຳ ພອນແກ້ວ

ຈັດຮູບແບບປື້ມໂດຍ: ບຸນຍະສອນ (ບໍລິສັດດີເຄອາກທ໌)

ຮູບພາບ: ຮູບພາບທີ່ປະກົດຢູ່ໃນບົດລາຍງານຂອງອົງການປະຕິບັດງານແມ່ນຖືເປັນລິຂະສິດຂອງອົງການ, ສ່ວນຮູບພາບອື່ນໆທີ່ຖ່າຍໂດຍ: ວິລະວົງ ສີສະຫວັດ, ຫຼ້າຊ້ອຍ ພິພັກ, ເຊວຊີ ແພຣິດ, ສາຍຝົນ ສຸກຂະວັນ ແລະ ໂອລີເວີ ບູເດີນ ແມ່ນຂໍສະຫງວນລິຂະສິດເປັນຂອງ ຄຊກລ.

ຂໍສະແດງຄວາມຮູ້ບຸນຄຸນ:

ຫ້ອງການ ຄຊກລ ຂໍສະແດງຄວາມຂອບໃຈມາຍັງອົງການປະຕິບັດງານແກ້ໄຂບັນຫາ ລບຕ ທີ່ໄດ້ສະໜອງຮູບພາບ, ຂໍ້ມູນໂຄງການຂອງທ່ານ ແລະ ກິດຈະກຳຕ່າງໆເຂົ້າໃສ່ໃນປື້ມບົດລາຍງານສະບັບນີ້.

ໜ່ວຍງານແຜນການ/ປະຊາສຳພັນຂອງຫ້ອງການ ຄຊກລ ຂໍສະແດງຄວາມຮູ້ບຸນຄຸນ ມາຍັງບັນດາເພື່ອຮ່ວມງານພາຍໃນຫ້ອງການ ຄຊກລ ໝົດທຸກຄົນ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ຄວາມພະຍາຍາມດ້ານຕ່າງໆ ເຂົ້າໃສ່ໃນການສັງລວມປື້ມບົດລາຍງານປະຈຳປີສະບັບນີ້.

ບົດລາຍງານສະບັບນີ້ ອາດມີບາງເນື້ອໃນມີການປ່ຽນແປງ, ຫຼົງລືມ ຫຼື ຜິດພາດ ພາຍຫຼັງທີ່ມີການພິມອອກແຈກຢາຍ, ກະລຸນາເຂົ້າມາທີ່ເວັບໄຊ້: www.nra.gov.la

ສະຫງວນລິຂະສິດ: ຫ້ອງການ ຄຊກລ, 2013.

# ບົດລາຍງານຂອງຂະແໜງການແກ້ໄຂບັນຫາ ລບຕ ປະຈຳປີ 2012

## ສາລະບານ


**ບົດນຳ: ຂອງປະທານ ຄຊກລ** ii
**ບົດນຳ: ຂອງຫົວໜ້າຫ້ອງການ ຄຊກລ** iii
**ບົດນຳ: ຂອງຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ** iv

**ອະທິບາຍສັບຫຍໍ້** v

**ຜົນສຳເລັດຕ່າງໆຂອງຂະແໜງການ: ລາຍງານຕົວເລກ** 1
**ລາຍງານສະພາບການເງິນໃນຂະແໜງການ ລບຕ** 4

**ສະພາບຕົວຈິງ ລບຕ ຕົກຄ້າງ ແລະ ຕົວເລກ** 5
**ລະເບີດບໍ່ທັນແຕກ (ລບຕ) ແມ່ນຫຍັງ?** 5

**ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາ ລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ** **6**
- ກິດຈະກຳຕ່າງໆຂອງ ຄຊກລ 6
- ການເຊື່ອມສານບົດບາດຍິງ-ຊາຍ 8
- ຄູ່ຮ່ວມງານຕ່າງໆ 9
- ລາຍງານສະພາບການເງິນຂອງ ຄຊກລ 10

**ບົດລາຍງານພິເສດ** **11**
- ການກວດກູ້ ລບຕ ຢູ່ເມືອງບົວລະພາ 12
- ກອງປະຊຸມສຸດຍອດອາເຊັມ (ASEM) 14
- ເປົ້າໝາຍສະຫັດສະວັດ ອັນດັບ 9 15
- ຜືນປ່າແຫ່ງເມັດເຂົ້າ: ບໍລິສັດເອັດສ໌ບີເທັດ ແລະ ບໍລິສັດສະໂຕລາເອັນໄຊ 16

**ບົດລາຍງານຂອງອົງການປະຕິບັດງານ** **20**
**ບົດລາຍງານກອງປະຊຸມກຸ່ມວິຊາການວຽກງານເກັບກູ້ ລບຕ** **21**
**ອົງການປະຕິບັດງານເກັບກູ້ ລບຕ ເພື່ອມະນຸດສະທຳ** **22**
- ອົງການສາກົນເພື່ອຊ່ວຍເຫຼືອຄົນພິການ (ເຫັດໄອ) **22**
- ອົງການເກັບກູ້ລະເບີດເຈມັດ (ເຈມັດ) 26
- ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) 28
- ອົງການເກັບກູ້ລະເບີດແມັກ (ແມັກ) 33
- ອົງການຊ່ວຍເຫຼືອລ້າຂອງປະຊາຊົນນໍອກແວ (ເອັນພີເອ) 38
- ອົງການຮ່ວມໃຈບໍລິການສາກົນ (ໂຊດີ) 40
- ອົງການເຮໂລຫຼາດ 44

**ບໍລິສັດເອກະຊົນເກັບກູ້ ລບຕ ພາຍໃນ ແລະ ຕ່າງປະເທດ** **47**
- ບໍລິສັດອາສາ 47
- ບໍລິສັດແບັກເທັກ 48
- ບໍລິສັດລາວບີເອັດສ໌ແອວ 49
- ບໍລິສັດເອັມເອັມຈີລ້ານຊ້າງມິນເນີໂຮນ 51
- ບໍລິສັດມິວເຊີດສ໌ 54
- ບໍລິສັດພີເອັດສ໌ດີ 58
- ບໍລິສັດເອັດສ໌ບີເທັດ 59

**ບົດລາຍງານກອງປະຊຸມກຸ່ມວິຊາການວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ** **61**
**ອົງການປະຕິບັດງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ** **63**
- ສະມາຄົມຊ່ວຍເຫຼືອ ແລະ ບັນເທົາທຸກ (ເອເອອາ) 63
- ອົງການບໍລິການບັນເທົາທຸກຂອງກາໂຕລິກ (ຊີອາເອັດສ໌)67
- ອົງການຊ່ວຍເຫຼືອດ້ານອົງຄະທຽມ ແລະ ເຄື່ອງຄ້ຳຊູ (ໂຄບ) 70
- ສະມາຄົມຊ່ວຍເຫຼືອເພື່ອປັບປຸງຄຸນນະພາບຊີວິດໃຫ້ແກ່ຜູ້ເສຍອົງຄະ ແລະ ຜູ້ຖືກເຄາະຮ້າຍຈາກ ລບຕ (ຄິວແອວເອ) 73
- ອົງການສຶກສາໂລກ (ເວີອິດູເຄເຊີ້ນ) 78

**ເອກະສານຊ້ອນທ້າຍ**
- ດຳລັດຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 406/ນຍ, ລົງວັນທີ 8 ພະຈິກ 2011 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ 85
- ຂໍ້ຕົກລົງ ສະບັບເລກທີ 096/ຄຊກລ, ລົງວັນທີ 28 ພຶດສະພາ 2013 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ 87



# ບົດນຳ:

## ຂອງປະທານຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ

ຂ້າພະເຈົ້າ ມີຄວາມປິຕິຍິນດີເປັນຢ່າງຍິ່ງ ທີ່ໄດ້ເປັນກຽດລາຍງານກ່ຽວກັບການເຄື່ອນໄຫວວຽກງານຂອງຂະແໜງການແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ ສຳລັບປີ 2012, ຊຶ່ງເປັນປີທີ່ມີຜົນຄວາມຄືບໜ້າພົ້ນເດັ່ນຫຼາຍຢ່າງຢູ່ໃນຂະແໜງການ. ຜົນສຳເລັດອັນສຳຄັນຕົ້ນຕໍແມ່ນການປະຕິບັດຄາດໝາຍຫຼຸດຜ່ອນຈຳນວນຜູ້ຖືກເຄາະຮ້າຍຈາກ ລບຕ ຈາກ 300 ຄົນ ສະເລ່ຍໃນປີ 2008 ລົງເຫຼືອ 56 ຄົນໃນປີ 2012, ຊຶ່ງສາມາດເວົ້າໄດ້ວ່າ ທຸກໆຄວາມພະຍາຍາມທີ່ພວກເຮົາໄດ້ພ້ອມກັນຈັດຕັ້ງປະຕິບັດໃນໄລຍະຜ່ານມານັ້ນ ກໍ່ເພື່ອເຮັດໃຫ້ຈຳນວນຜູ້ເສຍຊີວິດ ແລະ ຮັບບາດເຈັບຈາກ ລບຕ ຫຼຸດລົງໃຫ້ເຫຼືອສູນເທົ່າທີ່ຈະໄວໄດ້. ແຕ່ເຖິງຢ່າງໃດກໍ່ຕາມ, ພວກເຮົາຈຶ່ງພາກພູມໃຈຕໍ່ຜົນສຳເລັດ ແລະ ໄຊຊະນະດັ່ງກ່າວທີ່ຍາດມາໄດ້ໃນການປະກອບສ່ວນເຂົ້າໃນການປົກປັກຮັກສາປະຊາຊົນລາວບັນດາເຜົ່າຫຼຸດພົ້ນອອກຈາກຄວາມສ່ຽງ ແລະ ຄວາມອັນຕະລາຍຂອງລະເບີດລູກຫວ່ານ ແລະ ລບຕ ຊະນິດອື່ນໆທີ່ຕົກຄ້າງຢູ່ໃນ ສປປ ລາວ.

ນະໂຍບາຍຕົ້ນຕໍທີ່ໄດ້ມີການປັບປຸງໃນປີ 2012 ແມ່ນໄດ້ຮັບຮອງເອົາແຜນຍຸດທະສາດແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາ ລບຕ "*ເສັ້ນທາງກ້າວສູ່ຄວາມປອດໄພ II*" ແຕ່ປີ 2011-2020, ຊຶ່ງແຜນຍຸດທະສາດສະບັບນີ້ ແມ່ນມີການກຳນົດແຈ້ງ ເປົ້າໝາຍຍຸດທະສາດ ແລະ ກິດຈະກຳລະອຽດທີ່ຈະປະຕິບັດ ແຕ່ນີ້ຮອດປີ 2020. ແຜນຍຸດທະສາດໄດ້ວາງຄາດໝາຍໄວ້ເນື້ອທີ່ 200,000 ເຮັກຕາ ທີ່ຈະຕ້ອງເຮັດການກູ້ໃຫ້ສຳເລັດ, ສະເລ່ຍ 20,000 ເຮັກຕາຕໍ່ປີ. ອີງໃສ່ຄວາມອາດສາມາດຂອງພວກເຮົາໃນປະຈຸບັນນີ້ແມ່ນສາມາດກວດກູ້ໄດ້ພຽງແຕ່ 5,000 ຫາ 6,000 ເຮັກຕາ, ຊຶ່ງມັນຮຽກຮ້ອງຕ້ອງການໃຫ້ມີການເພີ່ມເນື້ອທີ່ກວດກູ້ໃຫ້ຫຼາຍຂຶ້ນກວ່າເກົ່າໃນແຕ່ລະປີ ແລະ ຕ້ອງມີການເພີ່ມທຶນເຂົ້າຕື່ມໃຫ້ຫຼາຍຂຶ້ນໃນທົ່ວຂະແໜງການ. ບັນຫາດັ່ງກ່າວນີ້, ລັດຖະບານເຮົາ ກໍ່ໄດ້ໃຫ້ຄຳໝັ້ນສັນຍາວ່າຈະປະກອບທຶນສົມທົບເຂົ້າໃສ່ວຽກງານແກ້ໄຂບັນຫາ ລບຕ ເພີ່ມຂຶ້ນໃນແຕ່ລະປີ ແລະ ຈະຜັກດັນໃຫ້ປະຊາຄົມໂລກເຫັນຄວາມສຳຄັນຂອງວຽກງານດັ່ງກ່າວ ແລະ ຫວັງຢ່າງຍິ່ງວ່າ ບັນດາປະຊາຄົມໂລກຈະເພີ່ມການສະໜັບສະໜູນຢ່າງຈິງໃຈເຂົ້າໃສ່ວຽກງານທີ່ສຳຄັນດັ່ງກ່າວນີ້ຕໍ່ໄປ.

ນອກຈາກນັ້ນ, ລັດຖະບານລາວ ຍັງໄດ້ມີການປັບປຸງຄວາມອາດສາມາດກຳລັງຂອງກອງທັບໃນການ "ແກ້ໄຂບັນຫາ ລບຕ ເພື່ອມະນຸດສະທຳ" ເພື່ອຂະຫຍາຍໃຫ້ເປັນກຳລັງໃນການປະກອບສ່ວນເຂົ້າໃນການແກ້ໄຂບັນຫາ ລບຕ ຮ່ວມກັບສາກົນ ທີ່ດຳເນີນວຽກງານສຳຫຼວດ ແລະ ກວດກູ້ ຢູ່ໃນ 14 ຂອງ 17 ແຂວງທີ່ມີ ລບຕ ຕົກຄ້າງໃນ ສປປ ລາວ. ໃນປີ 2012 ພະນັກງານຈາກກອງທັບປະຊາຊົນລາວ ຈຳນວນ 15 ຄົນ ໄດ້ເຂົ້າຮ່ວມການຝຶກອົບຮົມກ່ຽວກັບນັກເກັບກູ້, ນັກສຳຫຼວດ ແລະ ແພດ ແລະ ໃນປີຕໍ່ໄປກໍ່ຈະນຳສົ່ງເອົາພະນັກຂອງກອງທັບເຂົ້າຮ່ວມການຝຶກອົບດັ່ງກ່າວຕື່ມອີກໃຫ້ຫຼາຍຂຶ້ນກວ່າເກົ່າ.

ພ້ອມນັ້ນ, ແຜນຍຸດທະສາດສະບັບດັ່ງກ່າວນີ້ ຍັງໄດ້ຫັນເອົາການຈັດຕັ້ງປະຕິບັດກິດຈະກຳຕ່າງໆໃນການສຳຫຼວດ ແລະ ການເກັບກູ້ ລບຕ ໃຫ້ມີການເຊື່ອມໂຍງຢ່າງໃກ້ຊິດຕິດແທດກັບບູລິມະສິດການພັດທະນາຕ່າງໆຂອງຊາດ ແນໃສ່ເຮັດໃຫ້ ສປປ ລາວ ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ພາຍໃນປີ 2020, ຊຶ່ງຄູ່ຮ່ວມພັດທະນາທີ່ສຳຄັນຂອງເຮົາຄືອົງການ ສປຊ ທີ່ເປັນອົງການທີ່ມີປະສົບການໃນດ້ານຕ່າງໆຂອງການພັດທະນາ ລວມທັງປະສົບການຕ່າງໆຢູ່ໃນຂະແໜງການແກ້ໄຂບັນຫາ ລບຕ ກໍ່ຈະຍັງສືບເປັນຄູ່ຮ່ວມງານທີ່ສຳຄັນໃນການແກ້ໄຂບັນຫາ ລບຕ ຄຽງຄູ່ກັນ.

ພວກເຮົາ ຂໍສະແດງຄວາມຍ້ອງຍໍຊົມເຊີຍມາຍັງທ່ານ ມິນ ຟາມ, ຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ, ທັງເປັນປະທານຮ່ວມກອງປະຊຸມຂະແໜງການແກ້ໄຂບັນຫາ ລບຕ ຂອງພວກເຮົາ ຕໍ່ການສະໜັບສະໜູນທີ່ດີຂອງທ່ານຕະຫຼອດມາ ແລະ ຂໍຖືໂອກາດນີ້ ກ່າວຍິນດີຕ້ອນຮັບທ່ານນາງ ແຄເຣນ ສະຈອດ ທີ່ໄດ້ຕົກລົງເຫັນດີໃນການເຂົ້າມາເປັນປະທານຮ່ວມກອງປະຊຸມຂະແໜງການແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ.

ຜົນສຳເລັດຕ່າງໆໃນຂະແໜງການແກ້ໄຂບັນຫາ ລບຕ ໄດ້ມາຍ້ອນການທຸ້ມເທື່ອເຫແຮງ, ປະຕິບັດໜ້າທີ່ຢ່າງໜັກຂອງບັນດາພະນັກງານກຳມະກອນທັງຍິງ ແລະ ຊາຍ ທີ່ເຮັດວຽກຢູ່ໃນຂະແໜງການແກ້ໄຂບັນຫາ ລບຕ ພ້ອມດ້ວຍ ການສືບຕໍ່ສະໜັບສະໜູນທີ່ສຳຄັນຕ່າງໆຂອງປະຊາຄົມໂລກ. ຜ່ານການປະຕິບັດວຽກງານແກ້ໄຂບັນຫາ ລບຕ ດັ່ງກ່າວນີ້ ແມ່ນຈະເຮັດໃຫ້ພວກເຮົາສາມາດບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາ ອັນດັບ 9 ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VII. ຂ້າພະເຈົ້າຂໍຖືໂອກາດນີ້ ສະແດງຄວາມຂອບໃຈຢ່າງຈິງໃຈມາຍັງບັນດາທ່ານໝົດທຸກຄົນ. ພ້ອມນັ້ນ, ຂໍອວຍໄຊໃຫ້ພອນບັນດາທ່ານຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມປອດໄພໃນການດຳເນີນວຽກງານ ແລະ ສືບຕໍ່ປະຕິບັດໜ້າທີ່ງານມີຄວາມໝາຍສຳຄັນນີ້ໃຫ້ສຳເລັດ ໃນນາມຕາງໜ້າປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ.

ພະນະທ່ານ ບຸນເຮືອງ ດວງພະຈັນ

ລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ,

ຫົວໜ້າຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ,

ປະທານຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ).



# ບົດນຳ:

## ຂອງຫົວໜ້າຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ

ດັ່ງທີ່ພະນະທ່ານ ບຸນເຮືອງ ດວງພະຈັນ ປະທານ ຄຊກລ ໄດ້ມີຄຳເຫັນຂ້າງເທິງ, ປີ 2012 ຖືໄດ້ວ່າເປັນທີ່ມີຜົນສຳເລັດທີ່ສຳຄັນຫຼາຍຢ່າງໃນຂະແໜງການແກ້ໄຂບັນຫາ ລບຕ ເປັນຕົ້ນແມ່ນ ຈຳນວນຜູ້ເສຍຊີວິດ ແລະ ໄດ້ຮັບບາດເຈັບ ໄດ້ຫຼຸດລົງ ຍ້ອນການປະຕິບັດວຽກງານການກວດກູ້ ແລະ ວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຂອງບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ, ຊຶ່ງເປັນອົງການທີ່ເຮັດວຽກຢ່າງໃກ້ຊິດຕິດແທດກັບກຸ່ມທີ່ມີຄວາມສ່ຽງຕ່າງໆ. ພວກເຮົາຮູ້ສຶກພູມໃຈຕໍ່ຜົນງານ ແລະ ໄຊຊະນະດັ່ງກ່າວ.

ພ້ອມນັ້ນ, ໃນປີ 2012 ຂະແໜງການແກ້ໄຂບັນຫາ ລບຕ ຂອງພວກເຮົາ ຍັງໄດ້ຮັບຮອງເອົາແຜນຍຸດທະສາດແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາ ລບຕ “*ເສັ້ນທາງກ້າວສູ່ຄວາມປອດໄພ II*” ແຕ່ປີ 2011-2020, ຊຶ່ງແຜນຍຸດທະສາດສະບັບນີ້ ໄດ້ສະໜອງທິດທາງທີ່ລະອຽດໃຫ້ແກ່ການປະຕິບັດວຽກງານແກ້ໄຂບັນຫາ ລບຕ ແລະ ມີການກຳນົດແຈ້ງພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງ ຄຊກລ ໃນການເຮັດໜ້າທີ່ປະສານງານ, ຄຸ້ມຄອງ ແລະ ຊີ້ນຳຂະແໜງການແກ້ໄຂບັນຫາ ລບຕ.

ການຂະຫຍາຍຕົວທີ່ສຳຄັນອີກອັນໜຶ່ງຕະຫຼອດໄລຍະປີ 2012, ຄຊກລ ໄດ້ສືບຕໍ່ວຽກງານຢ່າງຕັ້ງໜ້າ ໂດຍສະເພາະແມ່ນເພື່ອຮັບປະກັນໃຫ້ບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ ຕ້ອງມີໜັງສືຢັ້ງຢືນຮັບຮອງການປະຕິບັດງານ ແລະ ດຳເນີນວຽກງານໂດຍສອດຄ່ອງກັບມາດຕະຖານແຫ່ງຊາດວ່າດ້ວຍການປະຕິບັດວຽກງານແກ້ໄຂບັນຫາ ລບຕ. ຄຽງຄູ່ກັນນັ້ນ, ໜ້າທີ່ຮັບຜິດຊອບຫຼັກຂອງ ຄຊກລ ແມ່ນເພື່ອຮັບປະກັນໃຫ້ການດຳເນີນກິດຈະກຳຕ່າງໆໃນການແກ້ໄຂບັນຫາ ລບຕ ສອດຄ່ອງກັບແຜນພັດທະນາ ແລະ ແຜນການລຶບລ້າງຄວາມທຸກຍາກແຫ່ງຊາດ ແນໃສ່ຮັບປະກັນໃຫ້ປະຊາຊົນລາວບັນດາເຜົ່າທີ່ມີຄວາມສ່ຽງຈາກ ລບຕ ຫຼຸດພົ້ນອອກຈາກຄວາມອັນຕະລາຍດັ່ງກ່າວ.

ໃນປີ 2012, ເປັນປີທີ່ ຄຊກລ ໄດ້ເລີ່ມຕົ້ນລວບລວມເອົາແຜນໂຄງການພັດທະນາຕ່າງໆຂອງລັດຖະບານເຂົ້າໃນແຜນການເກັບກູ້ ລບຕ. ຄຊກລ ໄດ້ຈັດກອງປະຊຸມວາງແຜນເກັບກູ້ລະເບີດບໍ່ທັນແຕກທີ່ຕົກຄ້າງຂຶ້ນສຳລັບແຂວງພາກເໜືອ, ກາງ ແລະ ໃຕ້ ຂອງ ສປປ ລາວ ພາຍໃຕ້ການເປັນປະທານຂອງພະນະທ່ານຮອງນາຍົກລັດຖະມົນຕີ, ຊຶ່ງຈຸດປະສົງຂອງກອງປະຊຸມ ທັງ 3 ພາກນີ້ແມ່ນເພື່ອປຶກສາຫາລືກັບອຳນາດການປົກຄອງຂັ້ນແຂວງ ແລະ ເມືອງ ກ່ຽວກັບການກຳນົດພື້ນທີ່ບູລິມະສິດໃນການກວດກູ້ ລບຕ ຢູ່ບັນດາແຂວງທີ່ມີ ລບຕ ຕົກຄ້າງ ແລະ ແນໃສ່ຮັບປະກັນໃຫ້ການເກັບກູ້ ລບຕ ໄດ້ຮັບໃຊ້ບູລິມະສິດການພັດທະນາຕ່າງໆຂອງຊາດ. ການເຮັດວຽກແບບນີ້ແມ່ນເປັນບາດກ້າວເລີ່ມຕົ້ນທີ່ດີ ແລະ ຜົນໄດ້ຮັບຕ່າງໆຈາກກອງປະຊຸມ ແມ່ນຈະນຳໄປຜັນຂະຫຍາຍໃຫ້ເປັນແຜນການຫຼາຍປີຂອງຂະແໜງການແກ້ໄຂບັນຫາ ລບຕ ເພື່ອປະຕິບັດແຜນຍຸດທະສາດ 10 ປີ “*ເສັ້ນທາງກ້າວສູ່ຄວາມປອດໄພ II*”.

ຂ້າພະເຈົ້າ ພ້ອມດ້ວຍ ພະນັກງານ ຄຊກລ ຮູ້ສຶກດີໃຈຫຼາຍທີ່ໄດ້ປະຕິບັດໜ້າທີ່ຮ່ວມກັບບັນດາຄູ່ຮ່ວມງານຕ່າງໆໃນຂະແໜງການແກ້ໄຂບັນຫາ ລບຕ ເປັນຕົ້ນແມ່ນ ບັນດານັກເກັບກູ້, ຊາວຊານ ແລະ ປະເທດຜູ້ໃຫ້ທຶນຕ່າງໆ. ພວກເຮົາສັນຍາວ່າ ຈະສືບຕໍ່ຮັກສາ ແລະ ອຳນວຍຄວາມສະດວກໃຫ້ແກ່ການດຳເນີນງານຂອງບັນດາອົງການປະຕິບັດງານຂອງພາຍໃນ ແລະ ຕ່າງປະເທດທີ່ມີຈຳນວນເພີ່ມຂຶ້ນໃນປະຈຸບັນນີ້ ໃຫ້ສາມາດປະຕິບັດວຽກງານໂດຍສອດຄ່ອງກັບມາດຕະຖານແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ ໃຫ້ໄດ້ຢ່າງເຕັມສ່ວນ.

ຂໍສະແດງຄວາມຂອບໃຈສຳລັບການສືບຕໍ່ໃຫ້ການຮ່ວມມື ແລະ ມີການປະສານສົມທົບຮ່ວມກັນທີ່ດີຕະຫຼອດມາໃນການປະຕິບັດວຽກງານແກ້ໄຂບັນຫາ ລບຕ ໃນນາມຕາງໜ້າໃຫ້ລັດຖະບານລາວ ແລະ ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ.



ພູຊຽວ ຈັນທະສົມບູນ

ຫົວໜ້າຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ
ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ.



# ບົດນຳ:

## ຂອງຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ, ປະທານຮ່ວມກອງປະຊຸມຂະແໜງການແກ້ໄຂບັນຫາ ລບຕ

ຂ້າພະເຈົ້າ ຮູ້ສຶກດີໃຈຫຼາຍທີ່ໄດ້ມີໂອກາດນຳສະເໜີບາງຜົນສຳເລັດທີ່ສຳຄັນ ຢູ່ໃນປຶ້ມບົດລາຍງານຂອງຂະແໜງການແກ້ໄຂບັນຫາ ລບຕ ສຳລັບປີ 2012. ພ້ອມນັ້ນ, ຂໍກ່າວສະແດງຍິນດີຕ້ອນຮັບທ່ານເອກອັກຄະລະຖະທູດສະຫະລັດອາເມລິກາ ທ່ານນາງ ແຄເຣນ ສູຈວດ ທີ່ໄດ້ເຂົ້າມາເປັນປະທານຮ່ວມກອງປະຊຸມຂະແໜງການແກ້ໄຂບັນຫາ ລບຕ.

ດັ່ງທີ່ພະນະທ່ານ ບຸນເຮືອງ ດວງພະຈັນ ປະທານ ຄຊກລ ແລະ ທ່ານ ພູຊຽວ ຈັນທະສິມບູນ ຫົວໜ້າຫ້ອງການ ຄຊກລ ໄດ້ມີຄຳເຫັນຂ້າງເທິງ, ປີ 2012 ເປັນປີທີ່ມີຜົນສຳເລັດທີ່ສຳຄັນຫຼາຍຢ່າງ ເປັນຕົ້ນແມ່ນ ຈຳນວນຜູ້ເສຍຊີວິດ ແລະ ໄດ້ຮັບບາດເຈັບຈາກ ລບຕ ໄດ້ຫຼຸດລົງທຽບໃສ່ປີຜ່ານມາ, ແຜນຍຸດທະສາດ 10 ປີ ໃນການແກ້ໄຂບັນຫາ ລບຕ ໄດ້ຖືກຮັບຮອງ ແລະ ການເຂົ້າມາມີສ່ວນຮ່ວມຂອງກອງເກັບກູ້ລະເບີດມະນຸດສະທຳຂອງກອງທັບ ໃນການແກ້ໄຂບັນຫາ ລບຕ ເພື່ອມະນຸດສະທຳ.

ໃນປີ 2012 ເຫັນໄດ້ວ່າ ການຮ່ວມມືກັນລະຫວ່າງພາກພື້ນແມ່ນມີການຮ່ວມມືກັນຫຼາຍຂຶ້ນດັ່ງທີ່ບໍ່ເຄີຍມີມາກ່ອນ ເປັນຕົ້ນແມ່ນການຮ່ວມກັບ ສປ ຈີນ, ສສ ຫວຽດນາມ, ລາດຊະອານາຈັກກຳປູເຈຍ ແລະ ໄທ. ພ້ອມນັ້ນ, ຈຳນວນບຸກຄະລາກອນໃນຂະແໜງການແກ້ໄຂບັນຫາ ລບຕ ກໍ່ເພີ່ມຂຶ້ນ. ປະຈຸບັນນີ້, ຈຳນວນບຸກຄະລາກອນໃນທົ່ວຂະແໜງການ ລບຕ ມີທັງໝົດ 3,512 ຄົນ, ໃນນັ້ນ 30 ສ່ວນຮ້ອຍແມ່ນເປັນເພດຍິງ.

ພ້ອມດຽວນັ້ນ, ລັດຖະບານລາວ ກໍ່ໄດ້ຮັບການສະໜັບສະໜູນທາງດ້ານການເງິນຈາກບັນດາປະຊາຄົມໂລກໃນປີ 2011 ມີປະມານ 22 ລ້ານໂດລາສະຫະລັດ ແລະ ທຶນຂອງບໍລິສັດເກັບກູ້ລະເບີດພາຍໃນ ແລະ ຕ່າງປະເທດ ມີຈຳນວນ 8 ລ້ານໂດລາສະຫະລັດ. ມີຫຼາຍປະເທດຜູ້ໃຫ້ທຶນໄດ້ປະກອບສ່ວນທຶນຂອງຕົນເອງເຂົ້າໃສ່ກອງທຶນຊ່ວຍເຫຼືອລ້າໂດຍຜ່ານອົງການ ສປຊ ເປັນຜູ້ບໍລິຫານ, ຊຶ່ງກອງທຶນດັ່ງກ່າວນີ້ແມ່ນນຳໃຊ້ເຂົ້າໃນການສະໜັບສະໜູນໃຫ້ແກ່ລັດຖະບານລາວໃຫ້ສາມາດນຳໃຊ້ແບບຍືດຍຸ່ນໄດ້ເຂົ້າໃນການແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ. ການນຳໃຊ້ເງິນແບບມີຄວາມຍືດຍຸ່ນດັ່ງກ່າວ ແມ່ນໄດ້ສຸມໃສ່ວຽກງານສຳຫຼວດ ແລະ ກວດກູ້ ໃນເຂດພື້ນທີ່ບູລິມະສິດການພັດທະນາຕ່າງໆຂອງລັດຖະບານ ແນໃສ່ໃຫ້ບັນລຸບັນດາເປົ້າໝາຍສະຫັດສະວັດດ້ານການພັດທະນາຕ່າງໆ ໂດຍສະເພາະແມ່ນເປົ້າໝາຍສະຫັດສະວັດດ້ານການພັດທະນາ ອັນດັບ 9 ແລະ ເພື່ອເປັນການປະກອບສ່ວນເຂົ້າໃນການເຮັດໃຫ້ ສປປ ລາວ ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ.

ຂ້າພະເຈົ້າ ຂໍສະແດງຄວາມເຊື່ອໝັ້ນຢ່າງຈິງໃຈຕໍ່ຄຳໝັ້ນສັນຍາຂອງລັດຖະບານລາວ ໃນການເຮັດໃຫ້ບັນດາກຸ່ມສ່ຽງສືບຕໍ່ໄດ້ຮັບບູລິມະສິດການບໍລິການໃນການປິ່ນປົວສຸຂາພາບທາງການແພດຂັ້ນພື້ນຖານ, ແລະ ເຫັນໄດ້ວ່າ ການຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ ແມ່ນຍັງເຮັດໄດ້ໜ້ອຍ ເປັນຕົ້ນແມ່ນ ຜູ້ລອດຊີວິດຈາກ ລບຕ ບາງສ່ວນແມ່ນໄດ້ຮັບພຽງການຊ່ວຍເຫຼືອທາງດ້ານການປິ່ນປົວທາງແພດເທົ່ານັ້ນ, ສ່ວນຫຼາຍແມ່ນບໍ່ໄດ້ຮັບການຟື້ນຟູທາງດ້ານຮ່າງກາຍ, ຟື້ນຟູທາງດ້ານຈິດຕະສັງຄົມ ແລະ ການເຊື່ອມສານທາງເສດຖະກິດ.

ນອກຈາກນັ້ນ, ໃນຂະນະທີ່ພວກເຮົາກຳລັງຊື່ນຊົມຕໍ່ຜົນສຳເລັດຕ່າງໆຢູ່ໃນຂະແໜງການແກ້ໄຂບັນຫາ ລບຕ ໃນໜຶ່ງປີຜ່ານມານັ້ນ, ພວກເຮົາ ຕ້ອງໄດ້ຄຳນຶງເຖິງຄວາມຕ້ອງການອີກຫຼາຍຢ່າງຂອງປະຊາຊົນທີ່ດຳລົງຊີວິດຢູ່ກັບ ລບຕ ແນໃສ່ເພື່ອເພີ່ມຜະລິດຕະຜົນວຽກງານແກ້ໄຂບັນຫາ ລບຕ ໃນທົ່ວຂະແໜງການໃຫ້ຫຼາຍຂຶ້ນໃນປີຕໍ່ໜ້າ.

ມິນ ຟາມ

ຜູ້ປະສານງານ ແລະ ຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ,
ປະທານຮ່ວມກອງປະຊຸມຂະແໜງການແກ້ໄຂບັນຫາ ລບຕ.

# ອະທິບາຍຄຳສັບ ແລະ ຕົວຫຍໍ້

## ຄຳສັບທົ່ວໄປ

AGNA: ບໍລິສັດອານໍກຼຸບຂອງອາເມລິກາເໜືອ

ASEAN: ສະມາຄົມກຸ່ມປະເທດອາຊີຕາເວັນອອກສ່ຽງໃຕ້

AVM: ລະເບີດຝັງດິນຕ້ານພາຫະນະ

CA: ການໂຄສະນາສຶກສາຊຸມຊົນ

CCM: ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ

DA: ອຳນາດການປົກຄອງຂັ້ນເມືອງ

DFA: ການສຳຫຼວດພື້ນທີ່ບູລິມະສິດ ລບຕ ຕົກຄ້າງຢູ່ຂັ້ນເມືອງ

DOE: ກົມສຶກສາ

DOH: ກົມປິ່ນປົວ

EO: ດິນລະເບີດ

EOD: ນັກເກັບກູ້ ລບຕ

ERW: ລະເບີດເສດເຫຼືອປາງສົງຄາມ

GICHD: ສູນການເກັບກູ້ລະເບີດຝັງດິນສາກົນເພື່ອມະນຸດສະທຳຂອງເຈນີວາ

IMSMA: ລະບົບຖານຂໍ້ມູນ ລບຕ

INGOs: ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ

JICA: ອົງການຮ່ວມມືສາກົນຂອງຍີ່ປຸ່ນ

KAP Survey: ການສຳຫຼວດກ່ຽວກັບຄວາມຮັບຮູ້, ທັດສະນະຄະຕິ ແລະ ພຶດຕິກຳ

MBT: ສົນທິສັນຍາຕ້ານລະເບີດຝັງດິນ

MOES: ກະຊວງສຶກສາທິການ ແລະ ກິລາ

MRE: ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ

NRA: ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ.

PCIA: ການປະເມີນຜົນກະທົບພາຍຫຼັງການກວດກູ້ ລບຕ

PWD: ຄົນເສຍອົງຄະ

QLA: ສະມາຄົມປັບປຸງຄຸນນະພາບຊີວິດ

ToT: ການຝຶກອົບຮົມໃຫ້ຄູຝຶກ

UNDP: ອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ

UNICEF: ກອງທຶນຊ່ວຍເຫຼືອເດັກຂອງສະຫະປະຊາຊາດ

UXO: ລະເບີດບໍ່ທັນແຕກ

VA: ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ

VHV: ອາສາສະໝັກສຸກສາລາຂັ້ນບ້ານ

WVMF: ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍແຕ່ສະໄໝສົງຄາມ

## ອົງການປະຕິບັດງານເກັບກູ້ ລບຕ ເພື່ອມະນຸດສະທຳ

Halo: ອົງການເຮໂລທຼາດ

HI: ອົງການສາກົນເພື່ອຊ່ວຍເຫຼືອຄົນພິການ

JMAS: ອົງການເກັບກູ້ລະເບີດເຈມັດ

MAG: ອົງການເກັບກູ້ລະເບີດແມັກ

NPA: ອົງການຊ່ວຍເຫຼືອລ້າຂອງປະຊາຊົນນໍອກແວ

SODI: ອົງການຮ່ວມໃຈບໍລິການສາກົນ

UXO Lao: ໂຄງການເກັບກູ້ລະເບີດແຫ່ງຊາດ

## ບໍລິສັດເກັບກູ້ລະເບີດເອກະຊົນຂອງພາຍໃນ ແລະ ຕ່າງປະເທດ

ASA: ອາສາ

BACTEC: ແບັກເທັກ

BSL: ບົວລະວົງ

Milsearch: ມິວເຊີດສ໌

MMG: ເອັມເອັມຈີລ້ານຊ້າງມິນເນີໂຣນ

PSD: ພົນສັກດາ

## ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ການໂຄສະນາສຶກສາຄວາມສ່ຽງໄພ

AAR: ສະມາຄົມຊ່ວຍເຫຼືອ ແລະ ບັນເທົາທຸກ

COPE: ອົງການຊ່ວຍເຫຼືອດ້ານອົງຄະທຽມ ແລະ ເຄື່ອງຄ້ຳຊູ

CMR: ສູນຟື້ນຟູໜ້າທີ່ການ

WE: ອົງການສຶກສາໂລກ



ລິຂະສິດຮູບ: ອົງການສາກົນເພື່ອຊ່ວຍເຫຼືອຄົນພິການ

# ຜົນສຳເລັດຕ່າງໆຂອງຂະແໜງການ: ລາຍງານຕົວເລກ

## ອົງການປະຕິບັດງານເກັບກູ້ ລບຕ ເພື່ອມະນຸດສະທຳ

### ການສຳຫຼວດທົ່ວໄປ

| ອົງການ | ຈ/ນ ບ້ານ | ຈ/ນ ຄັ້ງຢ້ຽມຢາມ | ບົມໃຫຍ່ | ລະເບີດ ລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | *ລວມ* |
|---|---|---|---|---|---|---|---|
| ຄກລ | 1,422 | 2,200 | 95 | 4,895 | 55 | 4,555 | ***9,600*** |
| ເຫັດໄອ | 20 | 27 | 0 | 0 | 0 | 0 | ***0*** |
| ແມັກ | 284 | 858 | 3 | 646 | 0 | 176 | ***825*** |
| ເອັນພີເອ | 216 | 428 | 3 | 2,643 | 0 | 412 | ***3,058*** |
| ໂຊດີ | 35 | 184 | 13 | 349 | 0 | 44 | ***406*** |
| ເຮໂລຫຼາດ | 0 | 0 | 0 | 0 | 0 | 0 | ***0*** |
| *ລວມ:* | ***1,977*** | ***3,697*** | ***114*** | ***8533*** | ***55*** | ***5187*** | ***13,889*** |

### ການສຳຫຼວດທາງດ້ານວິຊາການເພື່ອປົດປ່ອຍເນື້ອທີ່

| ອົງການ | ດິນກະສິກຳ (ຮຕ) | ດິນພັດທະນາ (ຮຕ) | ລວມທັງໝົດ (ຮຕ) | ບົມໃຫຍ່ | ລະເບີດ | ລະເບີດ ຝັງດິນ | ລບຕ ຊະນິດອື່ນໆ | *ລວມ* |
|---|---|---|---|---|---|---|---|---|
| ຄກລ | 507.53 | 82.05 | 590 | 0 | 28 | 1 | 192 | ***221*** |
| ເອັນພີເອ | 0.22 | 0.00 | 0.22 | 0 | 2,015 | 0 | 140 | ***2,155*** |
| ໂຊດີ | 0 | 0.4 | 0.40 | 13 | 349 | 0 | 44 | ***406*** |
| *ລວມ:* | ***507.75*** | ***82.45*** | ***590.20*** | ***13*** | ***2,392*** | ***1*** | ***376*** | ***2,782*** |

### ການທຳລາຍເຄື່ອນທີ່

| ອົງການ | ຈ/ນ ບ້ານ | ຈ/ນ ຄັ້ງຢ້ຽມຢາມ | ບົມໃຫຍ່ | ລະເບີດ ລູກຫວ່ານ | ລະເບີດ ຝັງດິນ | ລບຕ ຊະນິດອື່ນໆ | *ລວມ* |
|---|---|---|---|---|---|---|---|
| ຄກລ | 1,151 | 1,672 | 179 | 8,754 | 146 | 11,263 | ***20,342*** |
| ເຫັດໄອ | 62 | 68 | 22 | 1,000 | 0 | 565 | ***1,587*** |
| ແມັກ | 0 | 1,255 | 5 | 1,947 | 0 | 793 | ***2,745*** |
| ເອັນພີເອ | 39 | 27 | 0 | 2,103 | 0 | 465 | ***2,568*** |
| ໂຊດີ | 27 | 171 | 13 | 360 | 0 | 76 | ***449*** |
| ເຮໂລຫຼາດ | 0 | 0 | 0 | 0 | 0 | 0 | ***0*** |
| *ລວມ:* | ***1,279*** | ***3,193*** | ***219*** | ***14,164*** | ***146*** | ***13,162*** | ***27,691*** |

### ການກວດກູ້ເນື້ອທີ່

| ອົງການ | ດິນກະສິກຳ (ຮຕ) | ດິນພັດທະນາ (ຮຕ) | ລວມທັງໝົດ (ຮຕ) | ບົມໃຫຍ່ | ລະເບີດ ລູກຫວ່ານ | ລະເບີດ ຝັງດິນ | ລບຕ ຊະນິດອື່ນໆ | *ລວມ* |
|---|---|---|---|---|---|---|---|---|
| ຄກລ | 2,318.65 | 290.24 | 2,608.89 | 54 | 14,484 | 18 | 14,070 | ***28,626*** |
| ເຫັດໄອ | 24.85 | 7.41 | 32.26 | 0 | 60 | 0 | 532 | ***592*** |
| ແມັກ | 806.20 | 14.74 | 820.94 | 5 | 8,528 | 0 | 1,756 | ***10,289*** |
| ເອັນພີເອ | 100.97 | 53.88 | 154.85 | 0 | 2,228 | 0 | 142 | ***2,370*** |
| ໂຊດີ | 168 | 39 | 207.00 | 1 | 711 | 0 | 818 | ***1,530*** |
| *ລວມ:* | ***3,418.67*** | ***405.27*** | ***3,823.94*** | ***60*** | ***26,011*** | ***18*** | ***17,318*** | ***43,407*** |

| ອົງການ | ດິນກະສິກຳ (ຮຕ) | ດິນພັດທະນາ (ຮຕ) | ລວມທັງໝົດ (ຮຕ) | ບົມໃຫ່ຍ | ລະເບີດ ລູກຫວ່ານ | ລະເບີດ ຝັງດິນ | ລບຕ ຊະນິດອື່ນໆ | *ລວມ* |
|---|---|---|---|---|---|---|---|---|
| ລວມອົງການ | 3,926.43 | 487.72 | 4,414.14 | 292 | 42,567 | 165 | 30,856 | ***73,880*** |
| *ລວມ:* | ***3,926.43*** | ***487.72*** | ***4,414.14*** | ***292*** | ***42,567*** | ***165*** | ***30,856*** | ***73,880*** |

## ບໍລິສັດເອກະຊົນເກັບກູ້ ລບຕ ຂອງພາຍໃນ ແລະ ຕ່າງປະເທດ:

### ການກວດກູ້ເນື້ອທີ່

| ບໍລິສັດ | ດິນກະສິກຳ (ຮຕ) | ດິນພັດທະນາ (ຮຕ) | ລວມທັງໝົດ (ຮຕ) | ບົມໃຫ່ຍ | ລະເບີດ ລູກຫວ່ານ | ລະເບີດ ຝັງດິນ | ລບຕ ຊະນິດອື່ນໆ | *ລວມ* |
|---|---|---|---|---|---|---|---|---|
| ອາສາ | - | 8 | 8 | - | - | - | - | - |
| ພີເທັດດີ | 207 | 0 | 207 | 0 | 0 | 0 | 7 | 7 |
| ເອັດສ໌ບີເທັດ | 551.53 | 17 | 568.8 | 2 | 656 | 0 | 30 | 688 |
| ບີເອັດສ໌ແອວ | 0 | 295.90 | 295.90 | 0 | 178 | 0 | 211 | 389 |
| ເອັມເອັມຈີ | 0 | 219.94 | 219.94 | 18 | 826 | 0 | 2176 | 3,020 |
| ມິວເຊີດສ໌ | 0 | 295.8 | 295.8 | 30 | 1,154 | 0 | 2,594 | 3,778 |
| ແປັກເທັກ | 0 | 30 | 30 | 18 | 837 | 1 | 642 | 1,498 |
| *ລວມ:* | ***758.53*** | ***867.3*** | ***1,625.9*** | ***68*** | ***3,651*** | ***1*** | ***5,660*** | ***9,380*** |

| ບໍລິສັດ | ດິນກະສິກຳ (ຮຕ) | ດິນພັດທະນາ (ຮຕ) | ລວມທັງໝົດ (ຮຕ) | ບົມໃຫ່ຍ | ລະເບີດ ລູກຫວ່ານ | ລະເບີດ ຝັງດິນ | ລບຕ ຊະນິດອື່ນໆ | *ລວມ* |
|---|---|---|---|---|---|---|---|---|
| ລວມບໍລິສັດ | 758.53 | 867.33 | 1,625.86 | 68 | 3,651 | 1 | 5,660 | ***9,380*** |
| *ລວມ:* | ***758.53*** | ***867.33*** | ***1,625.86*** | ***68*** | ***3,651*** | ***1*** | ***5,660*** | ***9,380*** |

### ສະຫຼຸບລວມທັງໝົດຈຳນວນ ລບຕ ທີ່ພົບເຫັນ/ທຳລາຍ ແລະ ຈຳນວນເນື້ອທີ່ກວດກູ້/ປົດປ່ອຍ ໂດຍຜ່ານການສຳຫຼວດທາງດ້ານວິຊາການ ແລະ ການກວດກູ້

| | ດິນກະສິກຳ (ຮຕ) | ດິນພັດທະນາ (ຮຕ) | ລວມທັງໝົດ (ຮຕ) | | ລະເບີດ ລູກຫວ່ານ | ລະເບີດ ຝັງດິນ | ລບຕ ຊະນິດອື່ນໆ | *ລວມ* |
|---|---|---|---|---|---|---|---|---|
| ລວມທັງໝົດ | 4,684.96 | 1,355.05 | 6,040.01 | 360 | 46,218 | 166 | 36,516 | 83,260 |
| *ລວມທັງໝົດ:* | ***4,684.96*** | ***1,355.05*** | ***6,040.01*** | ***360*** | ***46,218*** | ***166*** | ***36,516*** | ***83,260*** |

### ອົງການປະຕິບັດງານທາງດ້ານການສຶກສາຄວາມສ່ຽງຈາກ ລບຕ

| ອົງການ | ຈຳນວນບ້ານ ແລະ ໂຮງຮຽນ | ເດັກນ້ອຍ | ຜູ້ໃຫ່ຍ | *ລວມ* |
|---|---|---|---|---|
| ຄກລ | 614 | 69,081 | 86,281 | ***155,362*** |
| ເທັດໄອ | 110 | 7,670 | 6,057 | ***13,727*** |
| ແມັກ | 101 | 1,917 | 3,783 | ***5,700*** |
| ໂຊດີ | 52 | 8,114 | 2,320 | ***10,434*** |
| ເວີອີດູເຄເຊີ້ນ | 1,962 | 182,345 | 6,237 | ***188,582*** |
| *ລວມ:* | ***2,839*** | ***269,127*** | ***104,678*** | ***373,805*** |

## ຈຳນວນບຸກຄະລາກອນທັງໝົດໃນຂະແໜງການແກ້ໄຂບັນຫາ ລບຕ ໃນປີ 2012

| ອົງການ | ພະນັກງານຢູ່ຫ້ອງການ | | | | ພະນັກງານປະຕິບັດງານ | | | | *ລວມ:* |
|---|---|---|---|---|---|---|---|---|---|
| | *ລາວ* | | *ຕ່າງປະເທດ* | | *ລາວ* | | *ຕ່າງປະເທດ* | | |
| | *ຊາຍ* | *ຍິງ* | *ຊາຍ* | *ຍິງ* | *ຊາຍ* | *ຍິງ* | *ຊາຍ* | *ຍິງ* | |
| ຄຊກລ | 17 | 12 | 2 | 1 | 9 | 5 | 2 | 1 | ***49*** |
| ຄກລ | 93 | 32 | 3 | 1 | 824 | 165 | 1 | 0 | ***1119*** |
| ເອັນພີເອ | 34 | 14 | 3 | 0 | 140 | 66 | 4 | 0 | ***261*** |
| ແມັກ | 22 | 10 | 2 | 0 | 261 | 88 | 4 | 0 | ***387*** |
| ເຫັດໄອ | 8 | 5 | 2 | 1 | 46 | 19 | 1 | 0 | ***82*** |
| ໂຊດີ | 11 | 7 | 1 | 0 | 112 | 19 | 1 | 0 | ***151*** |
| ເຣໂລຫຼາດ | 12 | 3 | 0 | 0 | 40 | 7 | 2 | 1 | ***65*** |
| ເຈມັດ | 5 | 3 | 1 | 3 | 6 | 0 | 2 | 0 | ***20*** |
| ອາສາ | 1 | 1 | 0 | 0 | 5 | 0 | 0 | 0 | ***7*** |
| ພີເອັດສ໌ດີ | 4 | 3 | 0 | 0 | 47 | 13 | 0 | 0 | ***67*** |
| ເອັດສ໌ບີເທັດ | 1 | 1 | 0 | 0 | 39 | 5 | 0 | 0 | ***46*** |
| ລາວບີເອັດສ໌ແອວ | 3 | 1 | 1 | 0 | 51 | 4 | 0 | 0 | ***60*** |
| ແບັກເທັກ | 3 | 3 | 1 | 1 | 150 | 0 | 2 | 0 | ***160*** |
| ມິວເຊີດສ໌ | 2 | 12 | 4 | 2 | 332 | 221 | 15 | 0 | ***588*** |
| ເອັມເອັມຈີ | 5 | 7 | 4 | 0 | 119 | 248 | 6 | 0 | ***389*** |
| ເວີອີດູເຄເຊີ້ນ | 2 | 4 | 1 | 0 | 6 | 4 | 0 | 5 | ***22*** |
| ເອເອອາ | 0 | 0 | 0 | 0 | 9 | 1 | 0 | 2 | ***12*** |
| ຊີອາເອັດສ໌ | 3 | 1 | 0 | 0 | 5 | 2 | 0 | 2 | ***13*** |
| ຊີເອັມອາ* | - | - | - | - | - | - | - | - | ***0*** |
| ໂຄບ | 3 | 2 | 0 | 1 | 6 | 2 | 0 | 3 | ***17*** |
| ຄິວແອວເອ | 0 | 0 | 0 | 0 | 2 | 2 | 0 | 0 | ***4*** |
| *ລວມ:* | ***229*** | ***121*** | ***25*** | ***10*** | ***2,209*** | ***871*** | ***40*** | ***14*** | ***3,519*** |

* ຂາດການສະໜອງຂໍ້ມູນ

## ລາຍງານສະພາບການເງິນໃນຂະແໜງການ ລບຕ:

## ອົງການປະຕິບັດງານເກັບກູ້ ລບຕ ເພື່ອມະນຸດສະທຳ - ປະຈຳປີ 2012 (ໂດລາສະຫະລັດ)

| ຊື່ອົງການ | ເງິນຊ່ວຍເຫຼືອທີ່ໄດ້ຮັບໃນປີ 2012 | ຄ່າໃຊ້ຈ່າຍໃນປີ 2012 |
|---|---:|---:|
| ຄກລ | 7,151,123 | 7,883,265 |
| ເອັນພີເອ | 4,300,000 | 4,300,000 |
| ແມັກ | 3,299,501 | 3,299,501 |
| ເຫັດໄອ | 1,087,267 | 1,087,267 |
| ໄຊດີ | 831,500 | 831,500 |
| ເຮໂລທຼາດ | 1,585,000 | 1,056,386 |
| ເຈມັດ | 1,061,763 | 1,061,763 |
| *ລວມ* | ***19,316,154*** | ***19,519,682*** |

## ບໍລິສັດເອກະຊົນເກັບກູ້ ລບຕ ຂອງພາຍໃນ ແລະ ຕ່າງປະເທດ - ປະຈຳປີ 2012 (ໂດລາສະຫະລັດ)

| ຊື່ບໍລິສັດ | ເງິນຊ່ວຍເຫຼືອທີ່ໄດ້ຮັບໃນປີ 2012 | ຄ່າໃຊ້ຈ່າຍໃນປີ 2012 |
|---|---:|---:|
| ອາສາ | 123,125 | 123,125 |
| ພີເອັດສ໌ດີ | **ຂາດການສະໜອງຂໍ້ມູນ** | **ຂາດການສະໜອງຂໍ້ມູນ** |
| ເອັດສ໌ບີເຫັດ | 307,311 | 307,311 |
| ລາວບີເອັດສ໌ແອວ | 385,950 | 385,950 |
| ແບັກເທັກ | **ຂາດການສະໜອງຂໍ້ມູນ** | **ຂາດການສະໜອງຂໍ້ມູນ** |
| ມິວເຊີດສ໌ | *3,026,351* | *3,026,351* |
| ເອັມເອັມຈີ | 4,652,135 | 4,652,135 |
| *ລວມ* | ***8,494,872*** | ***8,494,872*** |

## ອົງການປະຕິບັດງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ - ປະຈຳປີ 2012 (ໂດລາສະຫະລັດ)

| ຊື່ອົງການ | ເງິນທຶນໃນປີ 2012 | ຄ່າໃຊ້ຈ່າຍໃນປີ 2012 |
|---|---:|---:|
| ໂຄບ | 837,000 | 837,000 |
| ເວີອິດູເຄເຊິ້ນ | 211,148 | 213,221 |
| ຊີອາເອັດສ໌ | 136,750 | 14,079 |
| ເອເອອາ | 180,000 | 180,000 |
| ຄີວແອວເອ | 79,655 | 16,436 |
| ຊີເອັມອາ | ຂາດການສະໜອງຂໍ້ມູນ | ຂາດການສະໜອງຂໍ້ມູນ |
| *ລວມ* | ***1,444,553*** | ***1,260,736*** |

| | | |
|---|---:|---:|
| ຄຊກລ (ຜ່ານ ສປຊ) | 1,158,436 | 965,333 |
| ຄຊກລ (ຜ່ານ ບໍລິສັດອາມໍກຼຸບ) | 29,859 | 122,397 |
| ຄຊກລ (ຜ່ານ ບໍລິສັດສະເຕີລິ້ງ) | 85,706 | 23,050 |

| | | |
|---|---:|---:|
| *ລວມທັງໝົດ* | ***30,529,580*** | ***30,386,069*** |

## ສະພາບຕົວຈິງ ລບຕ ຕົກຄ້າງ ແລະ ຕົວເລກສະຖິຕິ

- ສປປ ລາວ ເປັນປະເທດທີ່ຖືກຜົນກະທົບຢ່າງໜັກໜ່ວງທີ່ສຸດຈາກລະເບີດ, ທຽບໃສ່ຫົວຄົນໃນປະຫວັດສາດ
- 25% ຂອງຈຳນວນບ້ານ ຢູ່ໃນ ສປປ ລາວ ໄດ້ຮັບຜົນກະທົບຈາກ ລບຕ
- 14 ໃນ 17 ແຂວງໃນທົ່ວປະເທດໄດ້ຮັບມີຜົນກະທົບຈາກ ລບຕ
- ລະເບີດຈຳນວນຫຼາຍກວ່າ 2 ລ້ານໂຕນ ໄດ້ຖິ້ມລົງໃສ່ຜືນແຜນດິນຂອງ ສປປ ລາວ ໃນລະຫວ່າງປີ 1964 ຫາ 1973
- ມີຖ້ຽວບິນຖິ້ມລະເບີດໃສ່ ສປປ ລາວ ຈຳນວນ 580,000 ຖ້ຽວ
- ລະເບີດລູກຫວ່ານແມ່ນມີຫຼາຍທີ່ສຸດຂອງຈຳນວນ ລບຕ ທີ່ຕົກຄ້າງ
- ລະເບີດລູກຫວ່ານຫຼາຍກວ່າ 270 ລ້ານໜ່ວຍ ໄດ້ຖອກເທລົງໃສ່ຜືນແຜນດິນຂອງ ສປປ ລາວ
- ຄາດຄະເນ 30% ແມ່ນຍັງບໍ່ທັນແຕກ
- ພາຍຫຼັງສົງຄາມສິ້ນສຸດລົງ ລະເບີດລູກຫວ່ານ ປະມານ 80 ລ້ານໜ່ວຍແມ່ນຍັງບໍ່ທັນແຕກຕົກຄ້າງຢູ່ ສປປ ລາວ
- ນັບແຕ່ປີ 1964 ມີປະຊາຊົນລາວບັນດາເຜົ່າຫຼາຍກວ່າ 50,000 ຄົນ ໄດ້ເສຍຊີວິດ ແລະ ຮັບບາດເຈັບ
- ມີຈຳນວນຜູ້ຖືກເຄາະຮ້າຍຈາກ ລບຕ 56 ຄົນ ໃນປີ 2012
- ໃນທົດສະຫວັດຫຼ້າສຸດຜ່ານມານີ້ ຫຼາຍກວ່າ 40% ຂອງຈຳນວນຜູ້ຖືກເຄາະຮ້າຍທັງໝົດແມ່ນເປັນເດັກນ້ອຍ
- ໃນທົດສະຫວັດຫຼ້າສຸດຜ່ານມານີ້ ຫຼາຍກວ່າ 30% ຂອງຈຳນວນຜູ້ຖືກເຄາະຮ້າຍຈາກ ລບຕ ແມ່ນເກີດມາຈາກລະເບີດລູກຫວ່ານ

## ລະເບີດບໍ່ທັນແຕກ (ລບຕ) ແມ່ນຫຍັງ?

ລະເບີດບໍ່ທັນແຕກ ຫຼື ລບຕ ແມ່ນອາວຸດທີ່ໄດ້ພາດແຕກ ເມື່ອຖືກຍິງອອກ, ຕົກລົງ, ຍິງສົ່ງ ຫຼື ຟັງອອກ, ຍັງມີຄວາມສ່ຽງທີ່ຈະລະເບີດຂຶ້ນ. ການຕົກຄ້າງຂອງ ລບຕ ໃນ ສປປ ລາວ ປະກອບດ້ວຍບົມໃຫຍ່, ຈະຫຼວດ, ໝາກແຕກ, ລູກປືນໃຫຍ່, ລູກປືນຄົກ, ລະເບີດຝັງດິນ ແລະ ລະເບີດລູກຫວ່ານ.

ລະເບີດລູກຫວ່ານ ແມ່ນອາວຸດທີ່ປະກອບດ້ວຍຮາງກະປາງ ແລະ ອອກແບບເພື່ອແຈກ ຫຼື ປົດປ່ອຍບົມບີອອກ. ແຕ່ລະໜ່ວຍໜັກບໍ່ເກີນ 20 ກິໂລກຣາມ. ບັນດາລະເບີດລູກນ້ອຍໆເຫຼົ່ານີ້ ແມ່ນເປັນທີ່ຮູ້ຈັກກັນດີໃນທົ່ວ ສປປ ລາວ ທີ່ເອີ້ນກັນວ່າ "ລະເບີດລູກຫວ່ານ" ຖືກຖິ້ມລົງຈາກຍົນ ຫຼື ຍິງສົ່ງຈາກໜ້າດິນເຖິງອາກາດ, ໃນລະດັບທີ່ມັນຢູ່ສະເດັນລະເບີດລູກຫວ່ານອອກຢູ່ເທິງພື້ນທີ່ກວ້າງ. ບັນດາລະເບີດລູກຫວ່ານທີ່ຖິ້ມລົງໃສ່ ສປປ ລາວ ມີອັດຕາພາດທາແຕກສູງໂດຍໄດ້ຖືກປະປ່ອຍ ໃຫ້ຕົກຄ້າງ (ລບຕ) ໄວ້ 30% ໂດຍປະມານ, ຊຶ່ງຖືກຫວ່ານຢາຍທົ່ວພື້ນທີ່ກວ້າງຂວາງ. ເມື່ອໃດພວກມັນຖືກແຕະຕ້ອງ, ລົບກວນ, ເຖິງແມ່ນວ່າຈະຜ່ານມາແລ້ວຫຼາຍທົດສະວັດແລ້ວກໍ່ຕາມ, ບັນດາລະເບີດລູກຫວ່ານ ແລະ ລບຕ ຊະນິດອື່ນເຫຼົ່ານັ້ນກໍ່ສາມາດລະເບີດຂຶ້ນໄດ້, ໂດຍເຮັດໃຫ້ປະຊາຊົນບາດເຈັບ ແລະ ເສຍຊີວິດໃນເວລາທີ່ພວກເຂົາດຳເນີນກິດຈະກຳປະຈຳວັນໃນແຕ່ລະມື້.

ປະຈຸບັນນີ້, ສປປ ລາວ ເປັນໜຶ່ງໃນບັນດາປະເທດທີ່ຖືກກະທົບຈາກລະເບີດລູກຫວ່ານຮ້າຍແຮງກວ່າໝູ່ໃນໂລກ, ໂດຍ 25% ຂອງ 10,000 ບ້ານໃນທົ່ວປະເທດມີການຕົກຄ້າງຂອງບັນດາອາວຸດເສດເຫຼືອປາງສົງຄາມເຫຼົ່ານີ້. ຕະຫຼອດໄລຍະເວລາ 9 ປີ, ມີລະເບີດລູກຫວ່ານກວ່າ 270 ລ້ານໜ່ວຍ ໄດ້ຖືກຖິ້ມລົງໃສ່ຜືນແຜ່ນດິນຂອງ ສປປ ລາວ, ສາມາດຄາດກະໄດ້ວ່າປະມານ 80 ລ້ານໜ່ວຍຍັງບໍ່ທັນແຕກ ແລະ ຕົກຄ້າງຢູ່ໃນສະພາບທີ່ສາມາດລະເບີດຂຶ້ນໄດ້ ແລະ ຢັ່ງຢາຍໃນທົ່ວປະເທດ. ນອກນັ້ນ, ຍັງມີບົມໃຫຍ່ຫຼາຍກວ່າສີ່ລ້ານໜ່ວຍ ທີ່ຖືກຖິ້ມລົງໃນສະໜາມຮົບອັນກວ້າງໃຫຍ່ ແລະ ເຊື່ອງຊ້ອນຢູ່ຕາມພູມລຳເນົາຕ່າງໆຂອງປະເທດ.



ຮູບຖ່າຍ: ບໍລິສັດສະໂຕລາເຮັນໂຊ

# ພາບລວມຂອງ ຄຊກລ ກິດຈະກຳໃນປີ 2012:

ປີ 2012 ແມ່ນປີທີ່ມີການປະຕິບັດວຽກງານຢ່າງຫ້າວຫັນ, ມີການປ່ຽນແປງຫຼາຍຢ່າງ ແລະ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເອົາຈິງເອົາຈັງ, ຊຶ່ງປະກອບມີດັ່ງລຸ່ມນີ້:

- ໄດ້ຮັບຮອງ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດວ່າດ້ວຍການແກ້ໄຂບັນຫາ ລບຕ "ເສັ້ນທາງກ້າວສູ່ຄວາມປອດໄພ II", ຊຶ່ງແຜນຍຸດທະສາດສະບັບດັ່ງກ່າວນີ້ ແມ່ນມີການເຊື່ອມໂຍງຢ່າງໃກ້ຊິດຕິດແທດກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ແລະ ບັນດາເປົ້າໝາຍສະຫັດສະວັດດ້ານການພັດທະນາຕ່າງໆອີກດ້ວຍ.

- ປະທານ ຄຊກລ ໄດ້ມີການຮັບຮອງທີ່ຕັ້ງ, ພາລະບົດບາດ ແລະ ການເຄື່ອນໄຫວຂອງ ຄຊກລ ສະບັບໃໝ່, ຊຶ່ງເອກະສານດັ່ງກ່າວນີ້ ແມ່ນຈະເຮັດໃຫ້ການປະສານງານກັນລະຫວ່າງ ຄຊກລ ສູນກາງ, ຫ້ອງການປະສານງານ ຄຊກລ ຂັ້ນແຂວງ ແລະ ພາກສ່ວນກ່ຽວຂ້ອງໃນທົ່ວຂະແໜງການແກ້ໄຂບັນຫາ ລບຕ ໄດ້ເຂົ້າໃຈແຈ້ງທີ່ຕັ້ງ, ພາລະບົດບາດ ແລະ ການເຄື່ອນໄຫວຂອງ ຄຊກລ ໄດ້ດີຂຶ້ນກວ່າເກົ່າ.

- ໄດ້ເຮັດວຽກຢ່າງໃກ້ຊິດຕິດແທດກັບລັດຖະບານລາວເພື່ອຊຸກຍູ້ໃຫ້ລັດຖະບານລາວປະກອບທຶນສົມທົບເຂົ້າໃນວຽກງານແກ້ໄຂບັນຫາ ລບຕ. ແຕ່ເຖິງຢ່າງໃດກໍ່ຕາມ ທຶນສົມທົບດັ່ງກ່າວນັ້ນ ກໍ່ຕ້ອງອີງຕາມງົບປະມານທີ່ມີຂອງລັດຖະບານວ່າຈະສະໜອງໃຫ້ໄດ້ເທົ່າໃດໃນແຕ່ລະປີ.

- ຄຊກລ ໄດ້ຈັດກອງປະຊຸມປຶກສາຫາລື ກ່ຽວກັບການວາງແຜນການເກັບກູ້ລະເບີດບໍ່ທັນແຕກ ເພື່ອຮັບໃຊ້ໂຄງການພັດທະນາເສດຖະກິດ-ສັງຄົມ ສຳລັບແຂວງພາກເໜືອຂຶ້ນໃນເດືອນທັນວາ 2012, ທີ່ແຂວງຫຼວງພະບາງ.

- ຄຊກລ ໄດ້ຮັບຕ້ອນການມາຢ້ຽມຢາມຂອງອົງການຊີມາຂອງປະເທດລາດຊະອານາຈັກກຳປູເຈຍ (ມີບົດບາດທຽບເທົ່າຄືກັບ ຄຊກລ).

- ພ້ອມນັ້ນ, ຄຊກລ ກໍ່ໄດ້ເດີນທາງໄປຢ້ຽມຢາມຄືນອົງການຊີມາ ແລະ ຊີແມັກຂອງປະເທດລາດສະອານາຈັກກຳປູເຈຍ ໂດຍທຶນສະໜັບສະໜູນຈາກບໍລິສັດສະເຕີລິ້ງ (ເປັນທຶນສະໜັບສະໜູນຂອງກະຊວງການຕ່າງປະເທດສະຫະລັດອາເມລິກາ).

- ໄດ້ສ້າງເອກະສານໂຄງການຊ່ວຍເຫຼືອໃໝ່ຈາກ ສປຊ ໃຫ້ແກ່ ຄຊກລ ສຳລັບປີ 2013-2015, ຊຶ່ງເອກະສານສະບັບນີ້ ຈະເປັນບ່ອນອີງພື້ນຖານໃຫ້ແກ່ອົງການ ສປຊ ເພື່ອສະໜັບສະໜູນໃນການຈັດຕັ້ງປະຕິບັດກິດຈະກຳຕ່າງໃນຂະແໜງການແກ້ໄຂບັນຫາ ລບຕ. ພ້ອມນັ້ນ, ເນື້ອໃນຕົ້ນຕໍເອກະສານ ໂຄງການສະບັບໃໝ່ນີ້ ແມ່ນໄດ້ເນັ້ນໃສ່ການສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນການຈັດຕັ້ງຂອງລັດຖະບານ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດວ່າດ້ວຍການແກ້ໄຂບັນຫາ ລບຕ "ເສັ້ນທາງກ້າວສູ່ຄວາມປອດໄພ 2" ແລະ ແຜນການຫຼາຍປີຂອງຂະແໜງການແກ້ໄຂບັນຫາ ລບຕ ທີ່ກຳລັງປັບປຸງຢູ່ປະຈຸບັນນີ້.

ໃນປີ 2012 ຈຳນວນຜູ້ຖືກເຄາະຮ້າຍຈາກ ລບຕ ແມ່ນໄດ້ຫຼຸດລົງ, ທຽບໃສ່ໄລຍະເວລາ 4 ປີຜ່ານມາ ສາເຫດແມ່ນຍ້ອນມີການດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງ ແລະ ຄວາມອັນຕະລາຍຈາກ ລບຕ ໃນກຸ່ມເປົ້າໝາຍທີ່ມີຄວາມສ່ຽງ ໃຫ້ຮັບຮູ້ເຖິງຄວາມສ່ຽງ ແລະ ຄວາມອັນຕະລາຍຈາກ ລບຕ ຫຼາຍຂຶ້ນ ແລະ ໄດ້ຮັບຜົນດີຂຶ້ນກວ່າເກົ່າ. ພ້ອມນັ້ນ, ກໍ່ໄດ້ສືບຕໍ່ປັບປຸງແຜນຍຸດທະສາດວ່າດ້ວຍການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ການກວດກູ້ ລບຕ ອອກຈາກພື້ນທີ່ທຳການຜະລິດຂອງປະຊາຊົນລາວບັນດາເຜົ່າເຮັດໃຫ້ມີຄວາມປອດໄພໃນເວລານຳໃຊ້, ຊຶ່ງທັງໝົດນີ້ແມ່ນໄດ້ປະກອບສ່ວນເຮັດໃຫ້ຈຳນວນຜູ້ຖືກເຄາະຮ້າຍຈາກ ລບຕ ຫຼຸດລົງຈາກ 302 ຄົນໃນປີ 2008 ລົງເຫຼືອ 56 ຄົນໃນປີ 2012, ໃນຈຳນວນດັ່ງກ່າວນີ້ມີຜູ້ເສຍຊີວິດຈຳນວນ 15 ຄົນ.

ໃນປີ 2012 ບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ ໃນທົ່ວຂະແໜງການ ສາມາດເກັບກູ້ ແລະ ທຳລາຍ ລບຕ ທີ່ຕົກຄ້າງໄດ້ທັງໝົດຈຳນວນ 83,260 ໜ່ວຍ (ມີລະເບີດລູກຫວ່ານຈຳນວນ 46,218 ໜ່ວຍ) ແລະ ສາມາດກວດກູ້ເນື້ອທີ່ທັງໝົດໄດ້ຫຼາຍກວ່າ 6,031.88 ເຮັກຕາ (ເນື້ອທີ່ຈຳນວນ 5,441.64 ເຮັກຕາແມ່ນຜ່ານການກວດກູ້ຢ່າງເຕັມສ່ວນ ແລະ ອີກ 590.20 ເຮັກຕາແມ່ນຜ່ານການປົດປ່ອຍໂດຍການສຳຫຼວດທາງດ້ານວິຊາການ). ນອກຈາກນັ້ນ, ກໍ່ໄດ້ດຳເນີນການສຳຫຼວດໄດ້ທັງໝົດຢູ່ໃນ 555 ບ້ານ.

ໂດຍການເຮັດໜ້າທີ່ໃນການປະສານງານ, ຄຸ້ມຄອງ ແລະ ຕິດຕາມການປະຕິບັດງານຂອງບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ ໃນທົ່ວຂະແໜງການ, ຄຊກລ ແມ່ນສາມາດປະກອບສ່ວນເຂົ້າໃນການເຄື່ອນໄຫວວຽກງານແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ ໄດ້ຢ່າງເຕັມຄວາມອາດສາມາດ ແລະ ສາມາດຍາດໄດ້ຜົນສຳເລັດຫຼາຍຢ່າງ.

## ກິດຈະກຳຂອງແຕ່ລະໜ່ວຍງານ ໃນຫ້ອງການ ຄຊກລ ໃນປີ 2012

ຄຊກລ ມີຄວາມປິຕິຍິນດີເປັນຢ່າງຍິ່ງ ທີ່ໄດ້ເປັນກຽດລາຍງານກ່ຽວກັບຜົນສຳເລັດອັນພົ້ນເດັ່ນຫຼາຍຢ່າງພ້ອມດ້ວຍກິດຈະກຳຕ່າງໆຂອງ ຄຊກລ ທີ່ໄດ້ຈັດຕັ້ງປະຕິບັດໃນປີ 2012.

### ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ:

ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໄດ້ສືບຕໍ່ດຳເນີນໂຄງການທົດລອງ "ສ້າງລະບົບຕິດຕາມຜູ້ລອດຊີວິດຈາກ ລບຕ" ເພື່ອເກັບກຳຂໍ້ມູນຜູ້ລອດຊີວິດຈາກ ລບຕ ແລະ ຕິດຕາມການສະໜອງການບໍລິການໃຫ້ແກ່ເຂົາເຈົ້າ. ລະບົບດັ່ງກ່າວແມ່ນໄດ້ຕິດຕັ້ງສຳເລັດແລ້ວຢູ່ໃນ 10 ແຂວງທີ່ມີ ລບຕ ຕົກຄ້າງໃນທົ່ວປະເທດ, ຊຶ່ງຄາດວ່າຈະເລີ່ມມີການປ້ອນຂໍ້ມູນຈາກການເກັບກຳໄດ້ເຂົ້າໄວ້ໃນຖານຂໍ້ມູນໃນປີ 2013. ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຍັງໄດ້ສົມທົບກັບອົງການເວີອິດູເຄຊັ້ນ ໃຫ້ການສະໜັບສະໜູນທາງດ້ານການເງິນແກ່ຜູ້ທີ່ລອດຊີວິດຈາກ ລບຕ ຈຳນວນ 58 ຄົນ ຢູ່ໃນ 6 ແຂວງ ທີ່ມີ ລບຕ ຕົກຄ້າງ. ນອກຈາກນັ້ນ, ກໍ່ໄດ້ປະສານສົມທົບກັບກະຊວງສາທາລະນະສຸກຮັບເອົາການການຊ່ວຍເຫຼືອຈາກ ສປ ຈີນ ສຳລັບອຸປະກອນການແພດເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ອີກດ້ວຍ.

ສຳລັບຮ່າງແຜນຍຸດທະສາດຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ແມ່ນໄດ້ສຳເລັດແລ້ວ, ຊຶ່ງປະຈຸບັນນີ້ແມ່ນກຳລັງລໍຖ້າຄຳຄິດຄຳເຫັນຈາກຄະນະກຳມະການ ຄຊກລ. ໃນປີ 2012 ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໄດ້ຈັດກອງປະຊຸມວິຊາການຮ່ວມກັບບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ ເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະ ປຶກສາຫາລືກ່ຽວກັບວຽກງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ທັງໝົດ 4 ຄັ້ງ. ນອກຈາກນັ້ນ, ອົງການອອດສເອດ ກໍ່ໄດ້ສະໜອງຊ່ຽວຊານທີ່ປຶກສາດ້ານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ມາປະຈຳຢູ່ໜ່ວຍງານດັ່ງກ່າວ ເພື່ອໃຫ້ຄຳປຶກສາດ້ານຕ່າງໆ, ຊຶ່ງຜູ້ກ່ຽວເອງໄດ້ເລີ່ມຕົ້ນເຮັດວຽກໃນເດືອນພຶດສະພາ 2012 ເປັນຕົ້ນມາ.

## ໜ່ວຍງານກວດກູ້ ລບຕ:

ໃນປີ 2012 ໜ່ວຍງານກວດກູ້ ລບຕ ໄດ້ຈັດກອງປະຊຸມວິຊາການຮ່ວມກັບບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ ເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະ ປຶກສາຫາລືກ່ຽວກັບວຽກງານກວດກູ້ລະເບີດບໍ່ທັນແຕກທັງໝົດຂຶ້ນ 3 ຄັ້ງ. ນອກຈາກນັ້ນ, ພະນັກງານກ່ຽວຂ້ອງໃນໜ່ວຍງານດັ່ງກ່າວ ຍັງໄດ້ເຂົ້າຮ່ວມກອງປະຊຸມສາກົນ 2 ຄັ້ງຄື: ກອງປະຊຸມການຮ່ວມມືເຂດພາກພື້ນໃຕ້-ໃຕ້ ທີ່ຈັດຂຶ້ນຢູ່ປະເທດຢີ່ປຸ່ນ ແລະ ກອງປະຊຸມສຳມະນາກ່ຽວກັບເຕັກໂນໂລຊີໃນການເກັບກູ້ ລບຕ ທີ່ຈັດຂຶ້ນຢູ່ປະເທດສະວິດເຊີແລນ. ຄຽງຄູ່ກັນນັ້ນ, ໜ່ວຍງານກວດກູ້ ລບຕ ຍັງໄດ້ສົມທົບກັບສູນເກັບກູ້ລະເບີດຝັງດິນເພື່ອມະນຸດສະທຳຂອງເຈນີວາ ດຳເນີນການປະເມີນຜົນກ່ຽວກັບປະສິດທິຜົນຂອງການເກັບກູ້ ແລະ ການສຳຫຼວດ ລບຕ ຢູ່ໃນ ສປປ ລາວ ອີກດ້ວຍ. ຜົນສຳເລັດອັນພົ້ນເດັ່ນອີກຢ່າງໜຶ່ງແມ່ນ ໜ່ວຍງານກວດກູ້ ຍັງໄດ້ຈັດກອງປະຊຸມຝຶກອົບຮົມກ່ຽວກັບມາດຕະຖານແຫ່ງຊາດວ່າດ້ວຍການແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ ທີ່ຈັດຂຶ້ນໃນທ້າຍ ປີ 2012, ທີ່ນະຄອນຫຼວງວຽງຈັນ. ສຳລັບວຽກວິຊາສະເພາະທີ່ເຄື່ອນໄຫວເປັນປະຈຳ, ໜ່ວຍງານກວດກູ້ ກໍ່ໄດ້ລົງຕິດຕາມຊຸກຍູ້ການເຄື່ອນໄຫວວຽກງານຂອງບັນດາອົງການປະຕິບັດງານທີ່ເຮັດວຽກຢູ່ໃນ 10 ແຂວງທີ່ມີ ລບຕ ຕົກຄ້າງເພື່ອຮັບປະກັນໃຫ້ການດຳເນີນງານແກ້ໄຂບັນຫາ ລບຕ ສອດຄ່ອງຕາມມາດຕະຖານແຫ່ງຊາດ.

ນອກຈາກຜົນສຳເລັດທີ່ກ່າວມາຂ້າງເທິງແລ້ວ, ໜ່ວຍງານເກັບກູ້ ລບຕ ຍັງໄດ້ຈັດກອງປະຊຸມປຶກສາຫາລື ກ່ຽວກັບການສ້າງແຜນການເກັບກູ້ ລບຕ ຮັບໃຊ້ໂຄງການພັດທະນາເສດຖະກິດ-ສັງຄົມຂຶ້ນໃນທ້າຍ ປີ 2012, ຊຶ່ງຈຸດປະສົງຂອງກອງປະຊຸມດັ່ງກ່າວ ແມ່ນເພື່ອປຶກສາຫາລືກ່ຽວກັບການສ້າງແຜນການເກັບກູ້ ລບຕ ເພື່ອຮັບໃຊ້ໂຄງການພັດທະນາເສດຖະກິດ-ສັງຄົມ ສຳລັບແຂວງພາກເໜືອ ໂດຍສາມາດສັງລວມຜົນໄດ້ຮັບຄືບັນດາຜູ້ເຂົ້າຮ່ວມກອງປະຊຸມທັງໝົດ ໄດ້ໂອກາະພາບເລື່ອງສະໜອງຂໍ້ມູນພື້ນທີ່ ລບຕ ຕົກຄ້າງຢູ່ໂຄງການພັດທະນາຕ່າງໆທີ່ນອນຢູ່ໃນແຂວງຂອງຕົນໃຫ້ແກ່ ຄຊກລ. ສຳລັບປີ 2013 ໜ່ວຍງານເກັບກູ້ ລບຕ ຈະສືບຕໍ່ຈັດກອງປະຊຸມໃນລັກສະນະດຽວກັນຢູ່ພາກກາງ ແລະ ພາກໃຕ້.

## ໜ່ວຍງານຄົ້ນຄ້ວາ:

ໃນປີ 2012 ໜ່ວຍງານຄົ້ນຄ້ວາ ໄດ້ສືບຕໍ່ໂຄງການສຳຫຼວດພື້ນທີ່ບູລິມະສິດທີ່ມີ ລບຕ ຕົກຄ້າງຢູ່ຂັ້ນເມືອງ. ພາຍຫຼັງດຳເນີນການສຳຫຼວດມາໄດ້ໄລຍະໜຶ່ງ ຈຶ່ງມີຄວາມຮຽກຮ້ອງຕ້ອງການໃຫ້ມີການທົບທວນຄືນກ່ຽວກັບວິທີການດຳເນີນງານເພື່ອປັບປຸງໃຫ້ມີຄວາມແທດເໝາະ ແລະ ດີຂຶ້ນໃຫ້ໄດ້ຫຼາຍທີ່ສຸດເພື່ອທີ່ຈະໄດ້ນຳໄປໃຊ້ເຂົ້າໃນວຽກງານສຳຫຼວດໃນອານາຄົດ ນັ້ນກໍ່ຄື ການສຳຫຼວດແບບວິຊາການ ແລະ ການສຳຫຼວດທົ່ວໄປ. ໂຄງການທົດລອງດັ່ງກ່າວ ແມ່ນໄດ້ຖືກມອບໂອນມາໃຫ້ໜ່ວຍງານກວດກູ້ ລບຕ ເປັນຜູ້ຮັບຜິດຊອບແທນໃນເດືອນພະຈິກ 2012 ເນື່ອງຈາກວ່າວຽກງານດັ່ງກ່າວນີ້ຕ້ອງອາໄສຜູ້ທີ່ມີປະສົບການວິຊາສະເພາະຊັ້ນສູງ ເພື່ອດຳເນີນການປະເມີນຜົນໂຄງການດັ່ງກ່າວເປັນແຕ່ລະໄລຍະໂດຍທຽບໃສ່ບົດຮຽນທີ່ຖອດຖອນໄດ້ ເພື່ອນຳມາປັບປຸງວິທີການສຳຫຼວດໃຫ້ມີປະສິດທິຜົນຫຼາຍຂຶ້ນກວ່າເກົ່າ.

## ໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ:

ໃນປີ 2012 ໜ່ວຍຍງານຄຸ້ມຄອງຂໍ້ມູນຂ່າວສານໄດ້ສຸມໃສ່ການປ້ອນຂໍ້ມູນລະເບີດບໍ່ທັນແຕກທີ່ໄດ້ຈາກການລາຍງານຂອງບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ ເຂົ້າໃນຖານຂໍ້ມູນລະເບີດບໍ່ທັນແຕກ(ອິມສມາ). ນອກຈາກນັ້ນ, ໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ ຍັງໄດ້ສັງລວມຂໍ້ມູນພື້ນທີ່ ລບຕ ຕົກຄ້າງໃນເຂດພື້ນທີ່ໂຄງການພັດທະນາທີ່ໄດ້ມາຈາກບັນດາແຂວງສະໜອງຂໍ້ມູນໃຫ້ ຄຊກລ, ຊຶ່ງຂໍ້ມູນດັ່ງກ່າວນີ້ ແມ່ນຈະນຳໃຊ້ເຂົ້າໃນການວາງແຜນເກັບກູ້ ລບຕ ໃຫ້ຮັບໃຊ້ບັນດາໂຄງການພັດທະນາຕ່າງໆຂອງລັດຖະບານໃນອານາຄົດ. ໃນເດືອນຕຸລາ, ພະນັກງານວິຊາການປະຈຳໜ່ວຍງານ ໄດ້ເຂົ້າຮ່ວມກອງປະຊຸມສຳມະນາກ່ຽວກັບການນຳໃຊ້ລະບົບຖານຂໍ້ມູນລະເບີດບໍ່ທັນແຕກ (ອິມສມາ) ຢູ່ປະເທດສະວິດສະແລນ ໂດຍການສະໜັບສະໜູນຂອງອົງການ ສປຊ ແລະ ສູນເກັບກູ້ລະເບີດຝັງດິນເພື່ອມະນຸດສະທຳຂອງເຈນີວາ.

## ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ:

ໃນປີ 2012 ໜ່ວຍງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໄດ້ຈັດກອງປະຊຸມສຳມະນາຂຶ້ນທັງໝົດ 4 ຄັ້ງຄື: ຄັ້ງທຳອິດແມ່ນກອງປະຊຸມສຳມະນາກ່ຽວກັບຜົນໄດ້ຮັບຂອງການສຳຫຼວດທາງດ້ານຄວາມຮູ້, ທັດສະນະຄະຕິ ແລະ ການປະພຶດທີ່ຈັດຂຶ້ນໃນເດືອນມັງກອນ; ຄັ້ງທີສອງ ແລະ ສາມແມ່ນກອງປະຊຸມກ່ຽວກັບບັນຫາບົດບາດຍິງ-ຊາຍເຂົ້າໃນວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ, ແລະ ຄັ້ງທີສີ່ ແມ່ນກອງປະຊຸມທົບທວນຄືນ ເພື່ອປັບປຸງສື່ອຸປະກອນທີ່ນຳໃຊ້ເຂົ້າໃນໂຄສະນາສຶກສາຄວາມອັນຕະລາຍຈາກ ລບຕ ທີ່ຈັດຂຶ້ນໃນເດືອນກັນຍາ ໂດຍປະກອບມີຜູ້ເຂົ້າຮ່ວມຈາກບັນດາອົງການປະຕິບັດກ່ຽວຂ້ອງ, ພະນັກງານຈາກກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ ແລະ ກະຊວງສຶກສາທິການ ແລະ ກິລາ. ນອກຈາກນັ້ນ, ໜ່ວຍງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຍັງໄດ້ລົງຕິດຕາມ ແລະ ປະເມີນຜົນວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຂອງບັນດາອົງການປະຕິບັດງານເພື່ອເຮັດແນວໃດໃຫ້ການເຮັດວຽກຂອງໜ່ວຍງານທາງດ້ານການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ມີການປັບປຸງ, ສາມາດກຳບັນຫາ ແລະ ສິ່ງທ້າທາຍຕ່າງໆຂອງບັນດາອົງການປະຕິບັດງານໂຄສະນາທີ່ປະເຊີນຢູ່ໃນເວລາເຮັດວຽກຕົວຈິງຢູ່ສະໜາມເພື່ອນຳມາປັບປຸງແກ້ໄຂໃຫ້ດີຂຶ້ນກວ່າເກົ່າ ໂດຍສະເພາະແມ່ນໄດ້ສຸມໃສ່ການປັບປຸງຄືນຂໍ້ຄວາມໂຄສະນາຄືນໃໝ່ໃຫ້ມີຄວາມເໝາະສົມ ແລະ ຖືກກຸ່ມເປົ້າໝາຍໂຄສະນາ ເນື່ອງຈາກວ່າຜົນຈາກການວິເຄາະພົບວ່າ ສາເຫດຕົ້ນຕໍຂອງການເກີດອຸປະຕິເຫດແມ່ນເກີດມາຈາກ "ການດັງໄຟ". ພ້ອມນັ້ນ, ອົງການແມັກ ກໍ່ໄດ້ໃຫ້ການສະໜັບສະໜູນໃນການຜະລິດອຸປະກອນໂຄສະນາສຶກສາຄວາມສ່ຽງຈາກ ລບຕ ອີກດ້ວຍ.

### ໜ່ວຍງານປະຊາສຳພັນ:

ໃນປີ 2012 ໜ່ວຍງານປະຊາສຳພັນ ໄດ້ອຳນວຍຄວາມສະດວກໃນການຈັດກອງປະຊຸມ ແລະ ງານຕ່າງໆຫຼາຍຄັ້ງເປັນຕົ້ນແມ່ນກອງປະຊຸມປະຈຳປີຂະແໜງການແກ້ໄຂບັນຫາ ລບຕ ທີ່ຈັດຂຶ້ນໃນເດືອນກັນຍາ; ພິທີລະລຶກເຖິງວັນທີ 4 ເມສາ ວັນສາກົນໂຄສະນາຕ້ານລະເບີດບໍ່ທັນແຕກ ແລະ ພິທີສະເຫຼີມສະຫຼອງວັນທີ 1 ສິງຫາ ວັນມີຜົນບັງຄັບໃຊ້ສົນທິສັນຍາສາກົນວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ. ນອກຈາກນັ້ນ, ໃນລະຫວ່າງເດືອນກັນຍາ ເຖິງ ພະຈິກ 2012 ໜ່ວຍງານປະຊາສຳພັນຍັງໄດ້ເຂົ້າຮ່ວມວາງສະແດງກ່ຽວກັບຜົນຮ້າຍຂອງລະເບີດບໍ່ທັນແຕກຢູ່ໃນກອງປະຊຸມຮ່ວມມືລະດັບສູງຕ່າງໆຫຼາຍຄັ້ງ ເປັນຕົ້ນແມ່ນກອງປະຊຸມສຸດຍອດອາຊີ-ເອີລົບ ຄັ້ງທີ 9 ທີ່ ສປປ ລາວ ໄດ້ຮັບກຽດເປັນເຈົ້າພາບ ເຮັດໃຫ້ອຸປະກອນສື່ໂຄສະນາກ່ຽວກັບຜົນຮ້າຍຂອງ ລບຕ ຫຼາຍໆຢ່າງໄດ້ຖືກຜະລິດຂຶ້ນ ແລະ ແຈກຢາຍ ເພື່ອໂຄສະນາເຜີຍແຜ່ໃຫ້ຜູ້ແທນເຂົ້າຮ່ວມກອງປະຊຸມຕ່າງໆທັງພາຍໃນ ແລະ ຕ່າງປະເທດ ໄດ້ຮັບຊາບກ່ຽວກັບຜົນຮ້າຍຂອງ ລບຕ ຢູ່ໃນ ສປປ ລາວ ອີກດ້ວຍ.

ໃນເດືອນສິງຫາຜ່ານມານີ້, ຫ້ອງການ ຄຊກລ ໄດ້ສົມທົບກັບກະຊວງການຕ່າງປະເທດ ຮັບຮອງເອົາກາເຄື່ອງໝາຍສຳລັບເປົ້າໝາຍສະຫັດສະວັດດ້ານການພັດທະນາ ອັນດັບ 9 ວ່າດ້ວຍການຫຼຸດຜ່ອນຜົນກະທົບຈາກ ລບຕ ຢູ່ສປປລາວ ຢ່າງເປັນທາງການ, ຊຶ່ງໜ່ວຍງານປະຊາສຳພັນເອງ ກໍ່ໄດ້ມີການໂຄສະນາເຜີຍແຜ່ຂໍ້ມູນແລະ ອຸປະກອນໂຄສະນາຢ່າງກວ້າງຂວາງ.

ໃນປີ 2012, ຫຼາຍກວ່າ 40 ຫົວຂໍ້ຂ່າວກ່ຽວກັບບັນຫາ ລບຕ ແລະ ຜົນສຳເລັດຕ່າງໆຂອງການປະຕິບັດວຽກງານແກ້ໄຂບັນຫາ ລບຕ ໃນທົ່ວຂະແໜງການ ໄດ້ຖືກເຜີຍແຜ່ໂຄສະນາທາງໜັງສືພິມທ້ອງຖິ່ນ (ວຽງຈັນທາມສ ແລະ ໜັງສືພິມລາວຕ່າງໆ).

ສຳລັບປຶ້ມບົດລາຍງານຂອງຂະແໜງການ ລບຕ ປີ 2011 ໄດ້ຖືກຕີພິມອອກ ແລະ ແຈກຢາຍ ໃນເດືອນກັນຍາ 2012. ພ້ອມນັ້ນ, ໃນເດືອນກໍລະກົດ 2012 ໜ່ວຍງານປະຊາສຳພັນຍັງໄດ້ຮັບເອົາຊ່ຽວຊານທີ່ປຶກສາທາງດ້ານການສື່ສານພົວພັນໂດຍການສະໜັບສະໜູນຈາກອົງການອອດສເອດ ອີກດ້ວຍ.

### ໜ່ວຍງານແຜນການ:

ໜ້າທີ່ຮັບຜິດຊອບຫຼັກຂອງໜ່ວຍງານແຜນການແມ່ນຕິດຕາມການຈັດຕັ້ງປະຕິບັດແຜນການປະຈຳປີຂອງ ຄຊກລ. ນອກຈາກນັ້ນ, ຍັງເຮັດໜ້າທີ່ໃນການສັງລວມບົດລາຍງານປະຈຳເດືອນ ແລະ ປະຈຳໄຕມາດ ເພື່ອລາຍງານໃຫ້ແກ່ ສປຊ ອີກດ້ວຍ. ສຳລັບການສ້າງ ແລະ ສັງລວມບົດລາຍງານປະຈຳໄຕມາດແຕ່ລະຄັ້ງ ແມ່ນໄດ້ຮັບການສະໜັບສະໜູນຈາກຊ່ຽວຊານທີ່ປຶກສາປະຈຳໜ່ວຍງານແຜນການ ແລະ ການເງິນຂອງ ສປຊ. ນອກຈາກນັ້ນ, ໜ່ວຍງານແຜນການ ໄດ້ຍື່ນສະເໜີແຜນການປະຈຳປີ 2013 ຂອງ ຄຊກລ ໃຫ້ແກ່ອົງການ ສປຊ ເພື່ອທົບທວນໃນເດືອນທັນວາ 2013.

ໂດຍໄດ້ຮັບການສະໜັບສະໜູນຈາກອົງການ ສປຊ, ໜ່ວຍງານແຜນການ ໄດ້ຈັດກອງປະຊຸມຂຶ້ນສາມຄັ້ງຄື: ກອງປະຊຸມຄະນະຊີ້ນຳວຽກງານແກ້ໄຂບັນຫາ ລບຕ, ກອງປະຊຸມທົບທວນຄືນປະຈຳປີຮ່ວມກັບ ສປຊ ແລະ ປະເທດຜູ້ໃຫ້ທຶນ/ກອງປະຊຸມຄະນະຊີ້ນຳກອງທຶນຊ່ວຍເຫຼືອລ້າ ແລະ ກອງປະຊຸມຂະແໜງການແກ້ໄຂບັນຫາ ລບຕ.

### ໜ່ວຍງານກວດກາຄຸ້ມຄອງຄຸນນະພາບ:

ໃນປີ 2012 ໜ່ວຍງານນີ້ໄດ້ສຸມໃສ່ປັບປຸງມາດຕະຖານແຫ່ງຊາດວ່າດ້ວຍການແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ. ໂດຍຜ່ານຂະບວນການທົບທວນຄືນ, ຈັດກອງປະຊຸມປຶກສາຫາລືຮ່ວມກັບຄູ່ຮ່ວມງານທີ່ກ່ຽວຂ້ອງຫຼາຍຄັ້ງຫຼາຍຕ່າວແລ້ວ ກ່ຽວກັບເນື້ອໃນ ແລະກໍ່ມີການດັດແກ້ປັບປຸງຄືນໃໝ່ ເພື່ອໃຫ້ມີຄວາມແທດເໝາະກັບສະພາບຕົວຈິງຂອງ ສປປ ລາວ. ປະຈຸບັນນີ້, ເອກະສານດັ່ງກາວກຳລັງລໍຖ້າການອານຸມັດຮັບຮອງຈາກຄະນະກຳມະການ ຄຊກລ.

ຄຽງຄູ່ກັນນັ້ນ, ໜ່ວຍງານນີ້ ຍັງໄດ້ເຮັດວຽກຢ່າງໃກ້ຊິດຕິດແທດກັບໜ່ວຍງານກວດກູ້ ລບຕ ໃນການດຳເນີນກອງປະຊຸມທົບທວນຄືນມາດຕະຖານການຝຶກອົບຮົມ ທີ່ຈັດຂຶ້ນໃນເດືອນທັນວາ 2012. ຜົນສຳເລັດອີກຢ່າງໜຶ່ງແມ່ນໄດ້ສຳເລັດການສ້າງຕັ້ງໜ່ວຍງານກວດກາຄຸ້ມຄອງຄຸນນະພາບຂຶ້ນ 1 ໜ່ວຍງານ ເພື່ອດຳເນີນການກວດກາຄຸນນະພາບການເຮັດວຽກຂອງບັນດາອົງການປະຕິບັດງານ ແລະ ລົງສືບສວນຫາສາເຫດຂອງການເກີດອຸປະຕິເຫດໃນແຕ່ລະຄັ້ງ. ໃນປີ 2013 ໜ່ວຍງານຍັງໄດ້ວາງແຜນຈະສ້າງທີມງານກວດກາຄຸ້ມຄອງຄຸນນະພາບຕື່ມອີກໜ່ວຍງານໜຶ່ງ. ນອກຈາກນັ້ນ, ໜ່ວຍງານນີ້ ຍັງໄດ້ທົບທວນ ແລະ ອອກໜັງສືຢັ້ງຢືນຮັບຮອງການດຳເນີນງານໄລຍະ 1 ປີ ໃຫ້ແກ່ທີກອົງການປະຕິບັດງານ, ອອກໜັງສືຢັ້ງຢືນຮັບຮອງແບບຊົ່ວຄາວໄລຍະ 6 ເດືອນ ໃຫ້ແກ່ສາມອົງການປະຕິບັດງານໃໝ່ ແລະ ອອກໜັງສືຢັ້ງຢືນຮັບຮອງຖາວອນໃຫ້ແກ່ ຄກລ.

## ລາຍງານກ່ຽວກັບການເຊື່ອມສານບົດບາດຍິງ-ຊາຍ:

ໃນປີ 2011, ຄຊກລ ໄດ້ດຳເນີນນະໂຍບາຍໃນການຮັກສະໜັກພະນັກງານທີ່ເປັນແມ່ຍິງເຂົ້າໃສ່ຕຳແໜ່ງສຳຄັນຕ່າງໆ. ປະຈຸບັນນີ້ 3 ຕຳແໜ່ງທີ່ເປັນຫົວໜ້າໜ່ວຍງານແມ່ນເປັນເພດຍິງໝົດ (ປະມານຫນຶ່ງສ່ວນສາມຂອງຫົວໜ້າໜ່ວຍງານທັງໝົດໃນຫ້ອງການ ຄຊກລ). ໂດຍສືບຕໍ່ສຸມໃສ່ການປັບປຸງໃຫ້ມີຄວາມເທົ່າທຽມກັນຂອງພະນັກງານ, ທາງໜ່ວຍງານບຸກຄະລາກອນກໍ່ໄດ້ມີການຮັບສະໜັກເອົາພະນັກງານທີ່ເປັນເພດຍິງໃໝ່ອີກຈຳນວນ 7 ຄົນ ໃນຈຳນວນພະນັກງານທີ່ຮັບສະໜັກໃໝ່ທັງໝົດ 15 ຄົນ ໃນປີ 2012.

ໃນປີ 2012, ຄວາມສຳຄັນທາງດ້ານເພດຍິງ ແມ່ນໄດ້ຖືກນຳເຂົ້າມາເປັນປັດໃຈສຳຄັນໃນດຳເນີນກິດຈະກຳຕ່າງໆລຸ່ມນີ້:

- ການສຳຫຼວດກ່ຽວກັບຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳ (ແຄັບ), ຖານເກັບກຳຂໍ້ມູນຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ລະບົບຕິດຕາມຜູ້ລອດຊີວິດຈາກ ລບຕ ທັງໝົດແມ່ນໄດ້ມີການຈັດແບ່ງຂໍ້ມູນລະອຽດຕາມອາຍຸ ແລະ ເພດ.
- ໂຄງການການສຳຫຼວດພື້ນທີ່ບູລິມະສິດ ລບຕ ຕົກຄ້າງຢູ່ຂັ້ນເມືອງ: ແມ່ນສືບຕໍ່ປະຕິບັດຕາມຜົນທີ່ໄດ້ຮັບຈາກການປະເມີນຜົນກະທົບພາຍຫຼັງການເກັບກູ້ (ພີຊີໄອເອ) ຄື: "ເພດຍິງ ແລະ ເພດຊາຍ ແມ່ນໄດ້ຮັບຜົນກະທົບທີ່ແຕກຕ່າງກັນເນື່ອງຈາກວ່າ ມັນຂຶ້ນຢູ່ກັບປະເພດຂອງການນຳໃຊ້ທີ່ດິນ

ພາຍຫຼັງການເກັບກູ້” ຕົວຢ່າງ: ຜົນກະທົບພາຍຫຼັງການກວດກູ້ ລບຕ ທີ່ເພດຍິງໄດ້ຮັບແມ່ນການສ້າງເສັ້ນທາງໄປຕະຫຼາດ ເພື່ອນຳເອົາພືດຜັກກະສິກຳໄປຂາຍໄດ້ຢ່າງສະດວກສະບາຍຂຶ້ນກວ່າເກົ່າ ແລະ ອື່ນໆ. ນອກຈາກນັ້ນ, ຢູ່ໃນໂຄງການການສຳຫຼວດພື້ນທີ່ບູລິມະສິດ ລບຕ ຕົກຄ້າງຢູ່ຊັ້ນເມືອງ ຍັງໄດ້ຮັບປະກັນວ່າ ເພດຍິງຕ້ອງໄດ້ເຂົ້າມາມີສ່ວນຮ່ວມນຳກັນໃນຂະບວນການກະກຽມແຜນການເກັບກູ້ ລບຕ ຢູ່ຊັ້ນເມືອງ.

- ຕາມການສຳຫຼວດກ່ຽວກັບຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳ (ແຄັບ) ສັງເກດເຫັນວ່າ ຜູ້ຍິງຄວາມເທົ່າທຽມກັນໃນການເຂົ້າຮ່ວມຢູ່ໃນວຽກງານການໂຄສະນາກ່ຽວກັບຜົນຮ້າຍຂອງ ລບຕ. ນອກຈາກນັ້ນ, ໃນປີ 2012 ຄຊກລ ຍັງໄດ້ຈັດການຝຶກອົບຮົມຂຶ້ນ 2 ຄັ້ງ ກ່ຽວກັບການເຊື່ອມສານບົດບາດຍິງ-ຊາຍ ເຂົ້າໃນວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ທີ່ແຂວງສະຫວັນນະເຂດ ແລະ ເມືອງວັງວຽງ.

## ຄູ່ຮ່ວມງານຕ່າງໆ:

ຕະຫຼອດປີ 2012, ສົນທິສັນຍາວ່າດ້ວຍການຕ້ານລະເບີດລູກຫວ່ານແມ່ນກອບແຜນວຽກທີ່ສຳຄັນຕົ້ນຕໍສຳລັບ ສປປ ລາວ ແລະ ບັນດາຄູ່ຮ່ວມງານຕ່າງໆ.

ໃນເດືອນເມສາ, ຜູ້ແທນຝ່າຍລາວທັງໝົດ 5 ທ່ານ (3 ທ່ານຈາກກະຊວງການຕ່າງປະເທດ, ທ່ານພູຊຽງ ຈັນທະສິມບູນ ຈາກຫ້ອງການ ຄຊກລ ແລະ ທ່ານ ບຸນປອນ ໄຊຍະເສນ ຈາກ ຄກລ), ຊ່ຽວຊານຕ່າງປະເທດ 2 ທ່ານ ແລະ 2 ທ່ານຈາກອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ໄດ້ເຂົ້າຮ່ວມກອງປະຊຸມກາງສະໄໝຂອງສົນທິສັນຍາວ່າດ້ວຍການຕ້ານລະເບີດລູກຫວ່ານຢູ່ເຈນີວາ ປະເທດສະວິດເຊີແລນ. ຢູ່ໃນເວທີດັ່ງກ່າວ ສປປ ລາວ ໄດ້ເປັນປະເທດທີ່ມີບົດບາດສຳຄັນຫຼາຍ ໂດຍສະເພາະແມ່ນຜູ້ແທນລາວໄດ້ມີການກ່າວຄຳເຫັນຕ່າງໆໃສ່ກອງປະຊຸມແຕ່ລະຕອນ. ພ້ອມນັ້ນ, ກໍ່ຍັງໄດ້ເປັນປະທານຮ່ວມກອງປະຊຸມກ່ຽວກັບວຽກງານກວດກູ້ ລບຕ ແລະ ວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຮ່ວມກັບປະເທດໄອແລນ ອີກດ້ວຍ.

ຄຊກລ ໄດ້ສືບຕໍ່ຮັບການສະໜັບສະໜູນທາງດ້ານການເງິນຈາກປະເທດອິດສະຕູາລີ, ໄອແລນ, ສະວິດເຊີແລນ, ສປຊ ແລະ ອັງກິດ (ໂດຍຜ່ານກອງທຶນຊ່ວຍເຫຼືອລ້າ ທີ່ຄຸ້ມຄອງໂດຍ ສປຊ). ພ້ອມດຽວນັ້ນ, ຄູ່ຮ່ວມງານທີ່ສຳຄັນອີກທ່ານໜຶ່ງ ກໍ່ແມ່ນສະຫະລັດອາເມລິກາ ໂດຍສະໜັບສະໜູນທຶນຊ່ວຍເຫຼືອຜ່ານບໍລິສັດສະເຕີລິ້ງ ແລະ ບໍລິສັດອາມໍກຣູບຂອງອາເມລິກາເໜືອ.

# ລາຍງານສະພາບການເງິນຂອງ ຄຊກລ

ການສະໜັບສະໜູນທາງດ້ານການເງິນໃຫ້ແກ່ ຄຊກລ ແລະ ການໃຊ້ຈ່າຍໃນປີ 2012.

| ຜູ້ໃຫ້ທຶນ | ເງິນຊ່ວຍເຫຼືອທີ່ໄດ້ຮັບໃນປີ 2012 | ຄ່າໃຊ້ຈ່າຍໃນປີ 2012 |
|---|---:|---:|
| ສປຊ | 1,158,436 | 965,333 |
| ບໍລິສັດອານໍກຼຸບ | 29,859 | 122,397 |
| ບໍລິສັດສະເຕີລິ້ງ | 85,706 | 23,050 |
| ແມັກ | 70,074 | 36,332 |
| *ລວມໃນປີ 2012* | 1,344,075 | 1,147,111 |

ທຶນສະໜັບສະໜູນໂດຍຜ່ານ ສປຊ - ແຍກອອກເປັນແຕ່ລະປະເທດຜູ້ໃຫ້ທຶນໃນປີ 2012 (ໂດລາສະຫະລັດ):

| ຜູ້ໃຫ້ທຶນ | ເງິນຊ່ວຍເຫຼືອທີ່ໄດ້ຮັບໃນປີ 2012 | ຄ່າໃຊ້ຈ່າຍໃນປີ 2012 |
|---|---:|---:|
| ອົດສະຕຼາລີ | | 364,408 |
| ສະວິດເຊີແລນ | 300,000 | 304,096 |
| ດີຟິດ (ຢູເຄ) | 158,857 | 92,015 |
| ກອງທຶນປົກກະຕິຂອງ ສປຊ | 80,000 | 79,950 |
| ສະຫະພາບເອີລົບ | 217,160 | 71,775 |
| ໄອແລນ | 402,419 | 37,716 |
| ນິວຊີແລນ | | 15,372 |
| *ລວມໃນປີ 2012* | ***1,158,436*** | ***965,333*** |

ທຶນສະໜັບສະໜູນຂອງປະເທດຜູ້ໃຫ້ທຶນໃຫ້ແກ່ ຄຊກລ ໂດຍຜ່ານ ສປຊ, ແຕ່ປີ 2003-2012 (ໂດລາສະຫະລັດ):

| ຜູ້ໃຫ້ທຶນ | ເງິນຊ່ວຍເຫຼືອທີ່ໄດ້ຮັບໃນປີ 2012 | ຄ່າໃຊ້ຈ່າຍໃນປີ 2012 |
|---|---:|---:|
| ສະວິດເຊີແລນ | 300,000 | 1,960,000 |
| ກອງທຶນປົກກະຕິຂອງ ສປຊ | 80,000 | 1,894,629 |
| ອົດສະຕຼາລີ | | 1,823,303 |
| ໄອແລນ | 402,419 | 902,419 |
| ດີຟິດ (ຢູເຄ) | 158,857 | 635,699 |
| ນິວຊີແລນ | | 450,907 |
| ສະຫະພາບເອີລົບ | 217,160 | 217,160 |
| ສະຫະລັດອາເມລິກາ | | 95,238 |
| ການາດາ | | 81,161 |
| ຝຼັ່ງ | | 54,867 |
| *ລວມ* | ***1,158,436*** | ***8,115,383*** |



# ພິເສດ
# ບົດລາຍງານ

*ຮູບຖ່າຍ: ບໍລິສັດສະໂຕລາເອັນໂຊ*

# ການກວດກູ້ ລບຕ ຢູ່ເມືອງ ບົວລະພາ

ອົງການໂລກປອດຈາກລະເບີດຝັງດິນ (ເວີວິດຕ້າວມາຍ) ແລະ ກອງທຶນຊ່ວຍເຫຼືອຂອງສະວິດ ໄດ້ສະໜັບສະໜູນການກວດກູ້ ລບຕ ຢູ່ທາງພາກຕາເວັນອອກສຽງເໜືອຂອງແຂວງຄໍາມ່ວນ, ສປປ ລາວ ເລີ່ມແຕ່ປີ 2008 ເປັນຕົ້ນມາ. ເມືອງບົວລະພາ ມີຊາຍແດນຕິດກັບປະເທດ ສສ ຫວຽດນາມ ແລະ ເປັນເມືອງທີ່ທຸກຍາກທີ່ສຸດ ແລະ ເປັນເມືອງທີ່ຖືໄດ້ວ່າ ໄດ້ຮັບຜົນກະທົບຢ່າງໜັກໜ່ວງທີ່ສຸດຈາກ ລບຕ ໃນແຂວງຄໍາມ່ວນ. ໃນຊ່ວງໄລຍະສົງຄາມຫວຽດນາມ ແມ່ນໄດ້ມີການສ້າງເສັ້ນທາງໂຮຈິມິນຕັດຜ່ານ ຈຶ່ງເປັນສາເຫດໃຫ້ມີການຖິ້ມລະເບີດຂອງສະຫະລັດອາເມລິກາຢ່າງໜັກໜ່ວງໃສ່ເຂດພື້ນທີ່ດັ່ງກ່າວຕະຫຼອດໄລຍະເວລາ 6 ປີ.

ເຂດພື້ນທີ່ດັ່ງກ່າວ ແມ່ນຖືກລະເບີດຖິ້ມໃສ່ຢ່າງໜັກໜ່ວງ ອັນເຮັດໃຫ້ປະຊາຊົນທັງໝົດຕ້ອງໄດ້ພາກັນອົບພະຍົບອອກຈາກເມືອງນີ້ ເພື່ອໄປລີ້ບລີ້ຢູ່ບ່ອນອື່ນທີ່ປອດໄພ, ສ່ວນຜູ້ທີ່ບໍ່ຢາກປະເຮືອນຊານບ້ານຊ່ອງຂອງຕົນເອງໄວ້ ກໍ່ໄດ້ພາກັນໄປລີ້ຢູ່ໃນຖໍ້າທີ່ຢູ່ໃກ້ແຖບນັ້ນ. ໃນປີ 2012, ເຂດພື້ນທີ່ດັ່ງກ່າວ ຖືໄດ້ວ່າຍັງມີລະເບີດເສດເຫຼືອປາງສົງຄາມຕົກຄ້າງສູງຢູ່ ແລະ ສ່ວນຫຼາຍກໍ່ແມ່ນລະເບີດລູກຫວ່ານ. ໃນລະຫວ່າງຍ່າງເລາະເບິ່ງຕາມບໍລິເວນພື້ນທີ່ຕ່າງໆ ກໍ່ເຮັດໃຫ້ທີມງານຂອງເວີວິດຕ້າວມາຍ ສາມາດມະໂນພາບອອກມາໄດ້ເລີຍວ່າ ລະເບີດທີ່ຖິ້ມລົງມາໃສ່ຜາຫີນກາວລາວໆກັບສຽງຟ້າຜ່ານັ້ນ ໄດ້ເຮັດໃຫ້ທິວທັດທໍາມະຊາດຢູ່ເຂດເສັ້ນທາງໂຮຈິມິນ ຖືກທໍາລາຍບໍ່ແມ່ນໜ້ອຍ.

ໃນເດືອນທັນວາ 2012, ທີມງານກວດກາຕິດຕາມຂອງອົງການເວີວິດຕ້າວມາຍ ໄດ້ເດີນທາງໄປແຂວງຄໍາມ່ວນ ເພື່ອພົບປະກັບ ຄກລ ໃນນາມເປັນຜູ້ໃຫ້ທຶນໜຶ່ງທີ່ໃຫ້ການສະໜັບສະໜູນ ເພື່ອປະເມີນເບິ່ງຜົນຄວາມຄືບໜ້າໃນການເກັບກູ້ ລບຕ. ທີມງານຕິດຕາມກວດກາປະກອບມີ ທ່ານ ຟິວບິນ ແລະ ທ່ານນາງ ແຄດທລິນ ສວິດ ໄດ້ພົບປະກັບອໍານວຍການໃຫຍ່ຂອງ ຄກລ ແລະ ຫົວໜ້າປະສານງານ ຄກລ ແຂວງຄໍາມ່ວນ ເພື່ອປຶກສາຫາລືກ່ຽວກັບຜົນສໍາເລັດ ແລະ ສິ່ງທ້າທາຍຕ່າງໆໃນການດໍາເນີນວຽກງານກວດກູ້ ລບຕ ໃນປີ 2012. ພ້ອມນັ້ນ, ທີມງານກວດກາຕິດຕາມ ຍັງໄດ້ໄປຢ້ຽມຢາມສະໜາມກວດກູ້ຂອງ ຄກລ ອີກດ້ວຍ.



*ແມ່ລູກອ່ອນຄົນໜຶ່ງກໍາລັງຍ່າງໄປຫຼົບຢູ່ສະຖານທີ່ປອດໄພ ບ່ອນທີ່ທີມງານກວດກູ້ຂອງ ຄກລ ໄດ້ມີການກະກຽມໄວ້ໃຫ້ ກ່ອນຈະມີການທໍາລາຍ ລບຕ ຢູ່ທີ່ບ້ານນາສະລົມ, ເມືອງບົວລະພາ.*



*ບ້ານແຫ່ງໜຶ່ງຢູ່ເມືອງບົວລະພາ ທີ່ເປັນຕົວຢ່າງບົ່ງບອກເຖິງ 'ການດໍາລົງຊີວິດທີ່ຕິດພັນກັບ ລບຕ', ໂດຍການນໍາເອົາເສດຊາກເຫຼັກຂອງລະເບີດກະປາງນໍາໃຊ້ເປັນອຸປະກອນຕ່າງໆ. ຢູ່ໃນບ້ານແຫ່ງນີ້ ເຄິ່ງໜຶ່ງຂອງເສດຊາກເຫຼັກຂອງລະເບີດກະປາງ ແມ່ນຖືກນໍາໃຊ້ເປັນບ່ອນປູກຜັກ.*

ສະໜາມກວດກູ້ແຫ່ງທີ່ສອງ ທີ່ຢູ່ບ້ານນາສະລົມ ແມ່ນໄດ້ໃຊ້ເປັນສະຖານທີ່ໃຫ້ທີມງານກວດກາຕິດຕາມຂອງອົງການເວີວິດຕ້າວມາຍ ໄດ້ລົງມາຢ້ຽມຢາມ ເພື່ອໃຫ້ມາເຫັນກັບຕາການດໍາເນີນວຽກງານກວດກູ້ ລບຕ ຢູ່ເມືອງບົວລະພາ. ການນໍາໃຊ້ລົດໄຖນາເຂົ້າໄປບຸກເບີກພື້ນທີ່ປ່າຕຶບໜາ ເພື່ອເປັນການເປີດທາງເຂົ້າໄປຫາພື້ນທີ່ໆຈະມີການກໍ່ສ້າງພື້ນຖານໂຄງລ່າງຂອງລັດຖະບານນັ້ນ ແມ່ນໄດ້ຖືກຢຸດສະງັກ ເນື່ອງຈາກວ່າ ພົບເຫັນ ລບຕ ເປັນຈໍານວນຫຼວງຫຼາຍຕົກຄ້າງຢູ່. ຄກລ ໄດ້ຖືກເອີ້ນຕົວໃຫ້ເຂົ້າໄປເຮັດການສໍາຫຼວດ ລບຕ ທີ່ຕົກຄ້າງ ແລະ ໄດ້ພົບລະເບີດບົມໃຫຍ່ໜັກ 500 ປອນ ແລະ ລບຕ 3 ປະເພດ ລວມທັງໝົດ 80 ໜ່ວຍ.

ຫຼັງຈາກນັ້ນ, ຄກລ ກໍ່ໄດ້ປະສານງານເອົາທີມງານກວດກູ້ອື່ນໆ ມາສົມທົບເພີ່ມ ເພື່ອຊ່ວຍກັນເຄື່ອນຍ້າຍ ແລະ ທໍາລາຍ. ໂດຍການຊ່ວຍເຫຼືອຈາກ ຄກລ ໃນຄັ້ງນັ້ນ, ຈຶ່ງເຮັດໃຫ້ ຄກລ ໄດ້ສືບຕໍ່ເຂົ້າໄປເຮັດການກວດກູ້ ລບຕ ເພື່ອຮັບໃຊ້ໃຫ້ແກ່ການພັດທະນາພື້ນຖານໂຄງລ່າງຂອງຊຸມຊົນ ລວມມີການກໍ່ສ້າງສຸກສາລາ, ໂຮງຮຽນມັດທະຍົມ ແລະ ຕະຫຼາດ. ບໍ່ມີການພັດທະນາໂຄງລ່າງພື້ນຖານໃດໃນເຂດນີ້ສາມາດເລີ່ມຕົ້ນຂຶ້ນໄດ້ ຖ້າປັດສະຈາກການກວດກູ້ ລບຕ ອອກກ່ອນ ແລະ ການສືບຕໍ່ສະໜັບສະໜູນຂອງອົງການເວີວິດຕ້າວມາຍ ເຂົ້າໃນການກວດກູ້ ລບຕ ແມ່ນຖືໄດ້ວ່າມີຄວາມສໍາຄັນທີ່ສຸດ.

ໃນຕໍ່ໜ້ານີ້, ສໍາລັບການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ; ລັດຖະບານລາວ ວາງແຜນຈະສ້າງສິ່ງອໍານວຍ

ຄວາມສະດວກຂຶ້ນຫຼາຍຢ່າງຢູ່ທີ່ນາສະລຶມ ເປັນຕົ້ນແມ່ນ ສຸກສາລາ, ສິ່ງອຳນວຍຄວາມສະດວກທາງດ້ານການສຶກສາ ແລະ ການຄ້າຂາຍຕ່າງໆ. ນອກຈາກນັ້ນ, ກໍ່ຍັງມີແຜນການທີ່ຈະກໍ່ສ້າງເສັ້ນທາງລົດໄຟແຕ່ເໜືອຮອດໃຕ້ ໂດຍຜ່ານບັນດາເມືອງທີ່ຢູ່ເຂດພາກຕາເວັນອອກຊ່ຽງເໜືອຂອງແຂວງຄຳມ່ວນ ເພື່ອປ່ຽນແທນການນຳໃຊ້ເສັ້ນທາງທີ່ອາດໃຊ້ເວລາດົນ ແລະ ບໍ່ສະດວກ. ພ້ອມນັ້ນ, ກໍ່ເພື່ອເປັນການກະຕຸກຊຸກຍູ້ການພັດທະນາການຄ້າຈາກປະເທດ ສສ ຫວຽດນາມ ທີ່ມາຫາປະເທດໄທ ໂດຍຜ່ານ ສປປ ລາວ.

ລະດັບການຕົກຄ້າງ ລບຕ ທີ່ສູງຢູ່ບັນດາແຂວງທາງພາກຕາເວັນອອກຊ່ຽງເໜືອຂອງລາວ ແມ່ນເປັນສິ່ງກີດຂວາງການພັດທະນາ ແລະ ພື້ນທີ່ສ່ວນຫຼາຍແມ່ນມີຄວາມຈຳເປັນຕ້ອງໄດ້ມີການກວດກູ້ ລບຕ ອອກຈາກພື້ນທີ່ໃຫ້ມີຄວາມປອດໄພກ່ອນເລີ່ມມີການກໍ່ສ້າງຂຶ້ນ. ປະຈຸບັນນີ້, ສປປ ລາວ ຍັງມີຄວາມຕ້ອງທຶນຊ່ວຍເຫຼືອເຂົ້າໃນການກວດກູ້ ລບຕ ຫຼາຍຂຶ້ນຕື່ມ ແລະ ອົງການເວີວິດຕາວມາຍ ກໍ່ຈະສືບຕໍ່ສະໜັບສະໜູນທຶນການຊ່ວຍເຫຼືອດັ່ງກ່າວອີກຕໍ່ໄປໃນອານາຄົດ.



ຮູບຂ້າງເທິງ: ທິວທັດທຳມະຊາດຂອງໜ້າຜາຫີນກາວຢູ່ເມືອງບົວລະພາ ທີ່ປະຊາຊົນຫວຽດນາມ ນຳເອົາໄປເຮັດເສັ້ນທາງ "ໂຮຈິມິນ'. ຜາຫີນກາວດັ່ງກ່າວນີ້ ແມ່ນຖືກລະເບີດຖິ້ມລົງໃສ່ຢ່າງໜັກໜ່ວງ ແລະ ຖືໄດ້ວ່າເປັນ ເຂດທີ່ຍັງມີ ລບຕ ຕົກຄ້າງສູງ ໃນປະຈຸບັນ.



ຮູບຂ້າງເທິງ: ທີມງານຕິດຕາມກວດກາຂອງອົງການເວີວິດຕ້າວມາຍ ທ່ານນາງ ແຄັດ ສວິດ ໂອ້ລົມກັບແມ່ລູກອ່ອນຄົນໜຶ່ງ ຢູ່ບ້ານນາສະລຶມ ໃນຂະນະກຳລັງຍ່າງໄປສະຖານທີ່ປອດໄພເພື່ອອອກຈາກສະໜາມທຳລາຍ ລບຕ.



'ລະເບີດລູກຫວ່ານຕົກຢູ່ຂ້າງຕົ້ນໄມ້' ຢູ່ໃນສະໜາມກວດກູ້ ທີ່ບ້ານນາສະລຶມ, ຊຶ່ງລະເບີດດັ່ງກ່າວນີ້ ແມ່ນປະຊາຊົນພົບເຫັນ ແລ້ວຍ້າຍມາວາງໄວ້ຢູ່ທາງຂ້າງຕົ້ນໄມ້.



*ພິທີຕັດແຖບຜ້າເນື່ອງໃນພິທີສະເຫຼີມສະຫຼອງວັນທີ 1 ສິງຫາ ວັນມີຜົນບັງຄັບໃຊ້ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ.*

# ກອງປະຊຸມສຸດຍອດອາເຊັມ

ກອງປະຊຸມສຸດຍອດອາເຊັມຈັດຂຶ້ນໃນລະຫວ່າງວັນທີ 5-6 ພະຈິກ 2012, ທີ່ນະຄອນຫຼວງວຽງຈັນ. ກອງປະຊຸມດັ່ງກ່າວໄດ້ນຳເອົາບັນດາຜູ້ນຳຂັ້ນສູງຂອງປະເທດຕ່າງໆຈາກບັນດາປະເທດເອີລົບ ແລະ ອາຊີ ເຂົ້າຮ່ວມປຶກສາຫາລືກັນກ່ຽວກັບບັນຫາຕ່າງໆຂອງສາກົນ ແລະ ເພື່ອເຮັດແນວໃດໃຫ້ສອງທະວີບດັ່ງກ່າວນີ້ ມີການສ້າງສາຍສຳພັນການຮ່ວມມືຮ່ວມກັນ.

ຈຸດປະສົງສຳຄັນຂອງກອງປະຊຸມສຸດຍອດອາເຊັມແມ່ນເນັ້ນໜັກໃສ່ຫົວຂໍ້ 'ເພື່ອນເພື່ອສັນຕິພາບ, ຄູ່ຮ່ວມງານເພື່ອຄວາມຮັ່ງມີ' ທາງດ້ານເສດຖະກິດ ແລະ ການເງິນ. ການປຶກສາຫາລືກັນໃນກອງປະຊຸມມື້ທີສອງແມ່ນສຸມໃສ່ການຮ່ວມມືກັນແກ້ໄຂບັນຫາສິ່ງທ້າທາຍຕ່າງໆຂອງໂລກເຊັ່ນ: ການປ່ຽນແປງຂອງດິນຟ້າອາກາດ ແລະ ບັນດາເປົ້າໝາຍສະຫັດສະວັດ ດ້ານການພັດທະນາຕ່າງໆ. ນອກຈາກນັ້ນ, ກໍ່ໄດ້ມີການປຶກສາຫາລືກັນກ່ຽວກັບບັນຫາລະເບີດນິວເຄຼຍຢູ່ປະເທດອີຣານ ແລະ ສະພາບການທີ່ເກີດຂຶ້ນຢູ່ປະເທດຊີເຣຍ, ຊຶ່ງບັນດາຜູ້ແທນເຂົ້າຮ່ວມກອງປະຊຸມທັງໝົດ ກໍ່ໄດ້ສະແດງການສະໜັບສະໜູນເພື່ອແກ້ໄຂບັນຫາວິກິດການຕ່າງໆເພື່ອຄວາມສັນຕິພາບ.

ວາລະກອງປະຊຸມໃນຕອນສຸດທ້າຍແມ່ນໄດ້ມີການປຶກສາຫາລືກັນກ່ຽວກັບການຮ່ວມມືທາງດ້ານວຽກງານວັດທະນະທຳ-ສັງຄົມ, ການແລກປ່ຽນກັນທາງດ້ານການສຶກສາ, ບັນຫາການອົບພະຍົບ ແລະ ບັນຫາການສົ່ງເສີມສິດທິມະນຸດ.

ຄຊກລ ແລະ ຄກລ, ໃນນາມຕາງໜ້າຂະແໜງການ ລບຕ ຢູ່ໃນ ສປປ ລາວ ຖືໄດ້ວ່າມີຜົນສຳເລັດຢ່າງຈິບງາມທີ່ໄດ້ເຂົ້າໄປຮ່ວມໃນການວາງສະແດງກ່ຽວກັບຜົນຮ້າຍຂອງ ລບຕ ຢູ່ໃນກອງປະຊຸມທີ່ມີຄວາມໝາຍຄວາມສຳຄັນໃນຄັ້ງນີ້, ສະແດງອອກມີບັນດາຜູ້ແທນ, ສື່ມວນຊົນຕ່າງປະເທດ ແລະ ຜູ້ຕາງໜ້າຈາກບັນດາປະເທດຕ່າງໆ ເຂົ້າຢ້ຽມຊົມ ແລະ ມີການສອບຖາມກ່ຽວກັບບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ ເປັນຈຳນວນຫຼວງຫຼາຍ.

ຄຊກລ ແລະ ຄກລ ແມ່ນພາກສ່ວນນ້ອຍໜຶ່ງໃນນາມອົງການຈັດຕັ້ງຂອງລັດຖະບານລາວ ໄດ້ຖືກເຊື້ອເຊີນໃຫ້ເຂົ້າຮ່ວມວາງສະແດງກ່ຽວກັບບັນຫາ ລບຕ ຢູ່ໃນກອງປະຊຸມລະດັບສູງດັ່ງກ່າວນີ້.

ນອກຈາກນັ້ນ, ຂະແໜງການແກ້ໄຂບັນຫາ ລບຕ ຍັງໄດ້ມີໂອກາດເຂົ້າຮ່ວມວາງສະແດງຢູ່ໃນກອງປະຊຸມອາຊີ-ເອີລົບ ເວທີສົນທະນາພາກປະຊາຊົນ, ກອງປະຊຸມລັດຖະສະພາ ອາຊີ-ເອີລົບ ແລະ ກອງປະຊຸມໂຕະມົນປະຈຳປີຂອງ ສປປ ລາວ ຮ່ວມກັບບັນດາຄູ່ຮ່ວມງານຕ່າງໆ ທີ່ຈັດຂຶ້ນໃນວັນທີ 23 ພະຈິກ 2012 ອີກດ້ວຍ.

ສິ່ງທີ່ເນັ້ນໜັກໃນການນຳສະເໜີກ່ຽວກັບບັນຫາ ລບຕ ເນື່ອງໃນໂອກາດກອງປະຊຸມລະດັບສູງ ກໍ່ເພື່ອຮັບປະກັນໃຫ້ມີການໂຄສະນາເຜີຍແຜ່ໃຫ້ຮູ້ກ່ຽວກັບຜູ້ຖືກເຄາະຮ້າຍຈາກ ລບຕ ຢູ່ ສປປ ລາວ ແລະ ສິ່ງທ້າທາຍຕ່າງໆຂອງ ລບຕ ທີ່ຍັງສືບຕໍ່ສົ່ງຜົນກະທົບໃສ່ປະຊາຊົນລາວບັນດາເຜົ່າ.




*ຜູ້ແທນເຂົ້າຮ່ວມກອງປະຊຸມສຸດຍອດອາເຊັມ ຈາກບັນດາປະເທດອາຊີ ແລະ ເອີລົບ ຢ້ຽມຢາມການວາງສະແດງກ່ຽວກັບ ລບຕ ຢູ່ໃນກອງປະຊຸມສຸດຍອດອາເຊັມ ເພື່ອຮຽນຮູ້ກ່ຽວກັບບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ.*



# ເປົ້າໝາຍສະຫັດສະວັດ ດ້ານການພັດທະນາ ອັນດັບ 9

*ຮູບຂ້າງເທິງ: ນັກຮຽນມັດທະຍົມນໍປາຍ ຢ້ຽມຊົມການວາງສະແດງ ກ່ຽວກັບ ລບຕ ເນື່ອງໃນໂອກາດການປະກາດໃຊ້ກາສັນຍາລັກເປົ້າໝາຍສະຫັດສະວັດດ້ານການພັດທະນາ ອັນດັບ 9 ໃນພິທີສະເຫຼີມສະຫຼອງຄົບຮອບ 2 ປີ ວັນທີ່ຜົນບັງຄັບໃຊ້ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ທີ່ຈັດຂຶ້ນທີ່ຫໍວັດທະນະທໍາແຫ່ງຊາດ.*

ໂດຍເຫັນຄວາມສໍາຄັນຂອງບັນຫາ ລບຕ ທີ່ໄດ້ມີການເຊື່ອມໂຍງກັບວຽກງານແກ້ໄຂຄວາມທຸກຍາກ; ໃນປີ 2010 ລັດຖະບານລາວ ໄດ້ໃຫ້ຄໍາໝັ້ນສັນຍາເພື່ອເຮັດສໍາເລັດເປົ້າໝາຍສະຫັດສະວັດດ້ານການພັດທະນາອັນໃໝ່ຄື: ເປົ້າໝາຍສະຫັດສະວັດດ້ານການພັດທະນາ ອັນດັບ 9 ເພື່ອຫຼຸດຜ່ອນຜົນກະທົບຈາກ ລບຕ, ຊຶ່ງມີສະເພາະແຕ່ ສປປ ລາວ ແລະ ປະເທດເພື່ອນບ້ານຄືລາດຊະອານາຈັດກໍາປູເຈຍ ເທົ່ານັ້ນ ທີ່ມີເປົ້າໝາຍອັນດັບ 9 ທີ່ເປັນເປົ້າໝາຍສະເພາະ ເນື່ອງຈາກວ່າເປັນປະເທດທີ່ໄດ້ຮັບຜົນກະທົບຈາກ ລບຕ ແລະ ລະເບີດຝັງດິນຄືກັນ.

ເປົ້າໝາຍສະຫັດສະວັດດ້ານການພັດທະນາ ອັນດັບ 9 ປະກອບມີ 3 ຄາດໝາຍຄື:

1. ຮັບປະກັນກວດກູ້ ລບຕ ອອກຈາກເນື້ອທີ່ບູລິມະສິດ/ດິນກະສິກໍາຕ່າງໆໃຫ້ສໍາເລັດພາຍໃນປີ 2020.
2. ຫລຸດຜ່ອນຈໍານວນຜູ້ຖືກເຄາະຮ້າຍຈາກອຸປະຕິເຫດ ລບຕ ໃຫ້ໄດ້ຫຼາຍທີ່ສຸດ.
3. ຮັບປະກັນການຕອບສະໜອງຄວາມຕ້ອງການດ້ານການປິ່ນປົວທາງການແພດ ແລະ ຟື້ນຟູ ໄດ້ຢ່າງທົ່ວເຖິງໃຫ້ແກ່ຜູ້ລອດຊີວິດຈາກ ລບຕ ໂດຍສອດຄ່ອງກັບພັນທະທີ່ລະບຸໄວ້ໃນສົນທິສັນຍາວ່າດ້ວຍການຕ້ານລະເບີດລູກຫວ່ານ.

ກະຊວງການຕ່າງປະເທດ ໄດ້ຮັບຮອງເອົາກາເຄື່ອງໝາຍສໍາລັບເປົ້າໝາຍສະຫັດສະວັດ ອັນດັບ 9 ຢ່າງເປັນທາງການໃນວັນທີ 1 ສິງຫາ 2012. ພ້ອມນັ້ນ, ຄຸຊກລ ສົມທົບກັບອົງການ ສປຊ ກໍ່ໄດ້ມີການໂຄສະນາເຜີຍແຜ່ກາເຄື່ອງໝາຍດັ່ງກາວຢ່າງກວາງຂວາງໃນໂອກາດງານຕ່າງໆ, ລວມທັງຢູ່ໃນກອງປະຊຸມສຸດຍອດອາເຊັ່ນ ອີກດ້ວຍ.




ການແຂ່ງຂັນອອກແບບກາເຄື່ອງໝາຍດັ່ງກ່າວນີ້ ແມ່ນເພື່ອໂຄສະນາເຜີຍແຜ່ໃຫ້ມີການຮັບຮູ້ກັນ ແລະ ບັນດານັກອອກແບບກໍ່ໄດ້ມີການສົ່ງຜົນງານຂອງຕົນເຂົ້າມາປະກວດຢ່າງຫຼວງຫຼາຍ. ກາເຄື່ອງໝາຍທີ່ໄດ້ຮັບລາງວັນຊະນະເລີດ ແມ່ນມີລັກສະນະສະທ້ອນໃຫ້ເຫັນບັນຫາລະເບີດເບີດບໍ່ທັນແຕກໄດ້ເປັນຢ່າງດີ ແລະ ຮູບແບບຂອງກາເຄື່ອງໝາຍດັ່ງກ່າວນີ້ ກໍ່ສອດຄ່ອງກັບກາເຄື່ອງໝາຍເປົ້າໝາຍສະຫັດສະວັດແຕ່ 1 ເຖິງ 8 ອີກດ້ວຍ.

# ຜືນປ່າແຫ່ງເມັດເຂົ້າ: ບໍລິສັດເອກະຊົນເກັບກູ້ ລບຕ ແລະ ການພັດທະນາການປູກໄມ້ແບບມີການກະເສດ

ບໍລິສັດສະໂຕລາເອັນໄຊ ໄດ້ຄົ້ນພົບຮູບແບບການຮ່ວມມືກັບທ້ອງຖິ່ນແບບຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ. ໃນປີ 2007, ບໍລິສັດສະໂຕລາເອັນໄຊ ໄດ້ເລີ່ມໂຄງການປູກໄມ້ແບບມີການກະເສດຂຶ້ນເປັນຄັ້ງທຳອິດ ໂດຍການປູກເຂົ້າ ແລະ ພືດທາງການກະເສດ ໃສ່ພື້ນທີ່ດິນທີ່ມີການກວດກູ້ ລບຕ ອອກແລ້ວ.

ໂຄງການປູກໄມ້ແບບມີການກະເສດແມ່ນຕັ້ງຢູ່ແຂວງສາລະວັນ ແລະ ສະຫວັນນະເຂດ, ທາງພາກໃຕ້ຂອງ ສປປ ລາວ. ສຳລັບໂຄງການທີ່ຕັ້ງຢູ່ບໍລິເວນແຖບເສັ້ນທາງໂຮ່ຈິ່ມິນນັ້ນແມ່ນຈະໄດ້ຂະຫຍາຍໄປສູ່ສະຖານທີ່ອື່ນຕື່ມອີກ, ບ່ອນທີ່ບໍ່ມີ ລບຕ ຕົກຄ້າງ, ແຕ່ເບິ່ງແລ້ວຄືຊິເປັນໄປໄດ້ຍາກ. ເຖິງຢ່າງໃດກໍ່ຕາມ, ທາງບໍລິສັດກໍ່ໄດ້ເບິ່ງເຫັນໂອກາດໃນການພັດທະນາແບບກວມລວມ ແລະ ຮູບແບບການພັດທະນາໃຫ້ມີຄວາມຍືນຍົງ, ມີຜົນປະໂຫຍດໃຫ້ແກ່ປະຊາຊົນ, ບໍລິສັດ ແລະ ເປັນການປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຂອງລັດຖະບານອີກດ້ວຍ.

## ປ່ຽນສິ່ງທ້າທາຍໃຫ້ເປັນໂອກາດ

ດັ່ງທີ່ຮູ້ວ່າ ການປະຕິບັດງານຢູ່ໃນເຂດພື້ນທີ່ ລບຕ ຕົກຄ້າງສູງແມ່ນເປັນສິ່ງທ້າທາຍ, ແຕ່ເຖິງຢ່າງໃດກໍ່ຕາມ, ມັນກໍ່ເປັນໂອກາດທີ່ພວກເຮົາຈະໄດ້ "ເຮັດສິ່ງດີໆໃຫ້ແກ່ປະຊາຊົນ" ທີ່ອາໄສໃນເຂດພື້ນທີ່ດັ່ງກ່າວ. ປະຈຸບັນນີ້, ຊຸມຊົນທ້ອງຖິ່ນດັ່ງກ່າວຍັງຖືກໄພຂົ່ມຂູ່ຈາກຜົນກະທົບທີ່ມາຈາກສົງຄາມຫວຽດນາມ.

ໃນການເລີ່ມຕົ້ນໂຄງການແຕ່ລະຄັ້ງ, ສະໂຕລາເອັນໄຊກໍ່ໄດ້ໃຫ້ຄຳໝັ້ນສັນຍາໃນການກວດກູ້ ລບຕ ອອກຈາກພື້ນທີ່ກ່ອນທຸກຄັ້ງ ແລະ ຄຳໝັ້ນສັນຍາທີ່ໃຫ້ໄວ້ດັ່ງກ່າວກໍ່ຍັງບໍ່ປ່ຽນແປງ. ໃນທ້າຍເດືອນທັນວາ 2012, ສະໂຕລາເອັນໄຊ ໄດ້ໃຊ້ງົບປະມານເຂົ້າໃນການກວດກູ້ເນື້ອທີ່ຫຼາຍກວ່າ 1,100 ເຮັກຕາຢູ່ໃນ ສປປ ລາວ.

ຊາວນາຢູ່ທ້ອງຖິ່ນໃນເຂດນີ້ສ່ວນຫຼາຍແມ່ນພາກັນປູກເຂົ້າ ແລະ ພືດຊະນິດອື່ນໆແບບເຄື່ອນທີ່, ຊຶ່ງເປັນສາເຫດໃຫ້ໄດ້ເຂົ້າເຂົ້າກິນບໍ່ພຽງພໍ. ເປົ້າໝາຍໂຄງການຢູ່ໃນເມືອງນີ້ແມ່ນຢູ່ຫ່າງໄກ ແລະ ໂຄງການກໍ່ຕັ້ງຢູ່ເຂດທີ່ມີປະຊາຊົນທີ່ທຸກຍາກທີ່ສຸດໃນ ສປປ ລາວ. ອົງການອາຫານໂລກ ຊີ້ໃຫ້ເຫັນວ່າ ເມືອງດັ່ງກ່າວ ມີລະດັບການຄ້ຳປະກັນທາງສະບຽງອາຫານທີ່ບໍ່ໝັ້ນຄົງສູງ. ໂອກາດໃນການຈ້າງງານປະຊາຊົນໃຫ້ມາປູກເຂົ້າໃຫ້ໄດ້ຢ່າງພຽງພໍແມ່ນບໍ່ມີ ແລະ ມີຄວາມລຳບາກໃນການຊົດເສີຍເປັນເງິນສົດໃຫ້ເຂົາເຈົ້າ ເພື່ອນຳໄປຊື້ເຂົ້າກິນ ແທນທີ່ຈະຫັນມາປູກກິນດ້ວຍຕົນເອງ. ນອກຈາກນັ້ນ, ປະຊາຊົນໃນເຂດດັ່ງກ່າວກໍ່ຍັງພົບກັບບັນຫາ ລບຕ ຢ່າງຮ້າຍແຮງອີກດ້ວຍ.

## ຕົວຢ່າງທຸລະກິດແບບກວມລວມ ແລະ ມີຄວາມຍືນຍົງຢູ່ ສປປ ລາວ

ບໍລິສັດສະໂຕລາເອັນໄຊ ແມ່ນບໍລິສັດເປັນທີ່ຮູ້ກັນດີໃນໂລກໃນເລື່ອງຂອງການດຳເນີນທຸລະກິດແບບມີຄວາມຮັບຜິດຊອບ. ສຳລັບບໍລິສັດສະໂຕລາເອັນໄຊທີ່ຢູ່ ສປປ ລາວ ກໍ່ໄດ້ມີການເຄື່ອນໄຫວການດຳເນີນທຸລະກິດແບບປະສົມປະສານກັບພັດທະນາເຊັ່ນດຽວກັນ. ໂຄງການທີ່ດຳເນີນຢູ່ໃນ ສປປ ລາວ ແມ່ນຊີ້ນຳໂດຍບໍລິສັດຮັບຜິດຊອບການຮ່ວມມືທາງສັງຄົມທາງດ້ານຫຼັກການ ແລະ ເນັ້ນໜັກໃສ່ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃນເຂດທີ່ມີໂຄງການ. ຕົວຢ່າງການດຳເນີນທຸລະກິດແບບກວມລວມ ແລະ ມີຄວາມຍືນຍົງແມ່ນໄດ້ມີການປັບປຸງໂດຍອີງໃສ່ການສຳຫຼວດທາງດ້ານເສດຖະກິດ-ສັງຄົມຢູ່ພາຍໃນປະເທດ ແລະ ການປະເມີນແບບອິດສະຫຼະຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ (ອີເອັດໄອເອ), ຊຶ່ງການປະເມີນດັ່ງກ່າວນີ້ແມ່ນດຳເນີນໂດຍ ໄອຢູຊີເອັນ, ຢູເອັນດີພີ, ແລະ ມະຫາວິທະຍາໄລກະສິກຳຂອງສະວີເດັນ.

ການສຶກສາໄດ້ກຳນົດຄວາມຕ້ອງການຂອງການພັດທະນາຫຼາຍຢ່າງເພື່ອນຳເຂົ້າໄປແກ້ໄຂໃນໂຄງການ. ການຄ້ຳປະກັນສະບຽງອາຫານແມ່ນສະແດງອອກມາກ່ອນໝູ່ໃນຜົນຂອງການສຶກສາວ່າເປັນບັນຫາຕົ້ນຕໍໃນເຂດພື້ນທີ່ດຳເນີນໂຄງການ, ຊຶ່ງການປູກໄມ້ແບບມີການກະເສດ ກໍ່ແມ່ນໜຶ່ງໂຄງການທີ່ໄດ້ຖືກປັບປຸງຂຶ້ນມາເພື່ອແນໃສ່ປັບປຸງທາງດ້ານສະຫວັດດີການຂອງຊຸມຊົນທ້ອງຖິ່ນ, ມີການເພີ່ມຜົນຜະລິດເຂົ້າ, ພືດອາຫານຕ່າງໆລວມທັງ ຜົນຜະລິດທາງໄມ້ ອີກດ້ວຍ.



*ແບບຢ່າງການປູກໄມ້ແບບມີການກະເສດຂອງບໍລິສັດສະໂຕລາ ເອັນໄຊ ຢູ່ເມືອງຕະໂອຍ, ແຂວງສາລະວັນ.*

## ຕົວຢ່າງຂອງສະໂຕລາເອັນໂຊໃນການປູກໄມ້ແບບມີການກະເສດ ແລະ ການຄໍ້າປະກັນສະບຽງອາຫານ-ການດໍາເນີນທຸລະກິດແບບມີຄວາມຮັບຜິດຊອບ

ແນວຄວາມຄິດຕົ້ນຕໍຂອງແບບຢ່າງການປູກໄມ້ແບບມີການກະເສດນັ້ນມັນແມ່ນພື້ນຖານຂອງການນໍາໃຊ້ພື້ນທີ່ຫວ່າງຕາມແລວປູກຕົ້ນໄມ້ໃຫ້ເປັນປະໂຫຍດ ໂດຍການອະນຸຍາດໃຫ້ປະຊາຊົນສາມາດເຂົ້າໄປປູກເຂົ້າ ແລະ ພືດທາງກະສິກໍາອື່ນໆໃສ່ບໍລິເວນຕາມບ່ອນວ່າງຂອງຕົ້ນໄມ້. ການນໍາໃຊ້ທີ່ດິນແບບນີ້ແມ່ນສາມາດກໍ່ໃຫ້ເກີດຜົນປະໂຫຍດໃນແງ່ຜົນຜະລິດຂອງການປູກໄມ້ໃຫ້ແກ່ບໍລິສັດ ແລະ ຊາວນາອີກດ້ວຍ. ສໍາລັບການຄໍ້າປະກັນສະບຽງອາຫານກໍ່ແມ່ນການສົ່ງເສີມອີກດ້ານໜຶ່ງຜ່ານການນໍາໃຊ້ແຮງງານຂອງປະຊາຊົນເຂົ້າໃນການເຮັດວຽກ ເພື່ອສ້າງລາຍໄດ້ແບບເງິນສົດໃຫ້ແກ່ຊາວນາ ເປັນຕົ້ນແມ່ນ ການຖາງປ່າ, ການປູກຕົ້ນໄມ້, ການກໍາຈັດສັດຕູພືດ ແລະ ວຽກອື່ນໆຂອງບໍລິສັດ.

ນອກຈາກນັ້ນ, ບໍລິສັດຍັງໄດ້ສະໜັບສະໜູນຊາວນາ ໂດຍການກວດກູ້ ລບຕ, ກະກຽມດິນ ແລະ ໃຫ້ຄໍາແນະນໍາທາງດ້ານວິຊາການ ເປັນຕົ້ນແມ່ນ ການປູກເຂົ້າໃຫ້ໄດ້ຮັບຜົນຜະລິດສູງ ໂດຍສົມທຽບໃຫ້ເຫັນກັບການປູກເຂົ້າແບບດັ້ງເດີມ. ຮູບແບບການປູກໄມ້ແບບມີການກະເສດນີ້ ແມ່ນໄດ້ຮັບຜົນດີຫຼາຍທາງດ້ານການສະໜອງສະບຽງອາຫານໃຫ້ແກ່ຊາວບ້ານຜູ້ທີ່ລອງເຮັດຕາມຮູບແບບດັ່ງກ່າວນີ້.ຜ່ານການນໍາໃຊ້ຮູບແບບດັ່ງກ່າວເຮັດໃຫ້ປະສິດທິພາບຂອງການເຮັດນາເພີ່ມຂຶ້ນ, ຊຶ່ງເຮັດໃຫ້ຊາວນານໍາໃຊ້ເນື້ອທີ່ໃນການປູກເຂົ້າໜ້ອຍລົງ, ໃຊ້ເວລາໜ້ອຍລົງ, ແຕ່ຈໍານວນຜົນຜະລິດແມ່ນຍັງໄດ້ຈໍານວນເທົ່າກັນ, ທຽບໃສ່ການປູກເຂົ້າແບບດັ້ງເດີມທີ່ເຄີຍເຮັດມາ.

ບໍລິສັດ ໄດ້ແບ່ງດິນອອກເປັນຫ້ອງສໍາລັບປູກໄມ້ ແລະ ແບ່ງພື້ນທີ່ອື່ນໆອອກເປັນຫຼາຍໆຕອນ ເພື່ອວາງແຜນໄວ້ປູກໄມ້ເພີ່ມເຕີມໃນຊຸມປີຕໍ່ໜ້າ. ຫຼັງຈາກນັ້ນ, ກໍ່ໄດ້ອະນຸຍາດໃຫ້ຊາວນາເຂົ້າມາປູກເຂົ້າໃສ່ບໍລິເວນແລວປູກຕົ້ນໄມ້ ແລະ ສາມາດສ້າງລາຍໄດ້ໃຫ້ແກ່ປະຊາຊົນໃນທຸກໆປີ. ການພັດທະນາໃຫ້ຊາວນາເຂົ້າມາປູກເຂົ້າໃນພື້ນທີ່ແມ່ນໄດ້ມີການປັບປຸງຢູ່ຕະຫຼອດ ເພື່ອຮັບປະກັນໃຫ້ຊາວນາມີຄວາມຫ້າວຫັນເຂົ້າມາມີສ່ວນຮ່ວມໃນໂຄງການ ແລະ ເພື່ອຮັບປະກັນຄວາມຍືນຍົງ.

ຊາວນາສາມາດປູກພືດຕ່າງໆໄດ້ເຊັ່ນ: ເຂົ້າ, ຫວາຍ, ມັນຕົ້ນ, ສາລີ ແລະ ໝາກຖົ່ວ ແລະ ອື່ນໆ ໃສ່ລະຫວ່າງກາງແລວປູກຕົ້ນໄມ້ໃນໄລຍະເວລາ 2 ປີ ແລະ ສາມາດນໍາໃຊ້ດິນດັ່ງກ່າວສໍາລັບເປັນບ່ອນລ້ຽງງົວຄວາຍໄດ້ ຈົນກວ່າຮອດເວລາເກັບກ່ຽວຜົນຜະລິດ, ຫຼັງຈາກການເກັບກ່ຽວຜົນຜະລິດໃໝ່ ແລະ ການລ້ຽງສັດແລ້ວ, ຕາມທໍາມະດາແລ້ວ ກໍ່ສາມາດເຮັດໄດ້ຮອດປີທີເຈັດ.

ສະໂຕລາເອັນໂຊ ໄດ້ສໍາເລັດການຝຶກອົບຮົມຫຼາຍຢ່າງໃຫ້ແກ່ຊາວນາ. ພ້ອມນັ້ນ, ກໍ່ໄດ້ສືບຕໍ່ຝຶກອົບຮົມໃຫ້ແກ່ຊາວນາໃນການປັບປຸງເຕັກນິກໃນການເຮັດກະສິກໍາ. ຜົນທີ່ໄດ້ຮັບແມ່ນຈະເຮັດໃຫ້ຊາວນາໄດ້ຮັບຜົນຜະລິດຫຼາຍຂຶ້ນກວ່າເກົ່າ ແລະ ທາງບໍລິສັດເອງກໍ່ໄດ້ສະໜັບສະໜູນໃນການຊອກຫາຕະຫຼາດໃຫ້ ເພື່ອໃຫ້ປະຊາຊົນສາມາດນໍາຜົນຜະລິດຕ່າງໆໄປຂາຍໄດ້. ນອກຈາກນັ້ນ, ສະໂຕລາເອັນໂຊ ຍັງໄດ້ນໍາໃຊ້ເງິນຂອງຕົນເອງໃນການສ້າງຕັ້ງກອງທຶນພັດທະນາໝູ່ບ້ານ ເພື່ອສະໜັບສະໜູນໃຫ້ແກ່ຊາວບ້ານສ້າງໂຮງຮຽນ, ເຮັດໃຫ້ຊາວບ້ານມີໄຟຟ້າໃຊ້, ສະໜັບສະໜູນຊາວບ້ານໃນການລ້ຽງສັດ, ສ້າງນໍ້າລິນ ແລະ ການປັບປຸງອື່ນໆ.



*ບໍລິສັດເອັດສ໌ບີເທັດ ເຮັດວຽກຮ່ວມກັບສະໂຕລາເອັນໂຊ ໃນການກວດກູ້ ລບຕ ອອກຈາກພື້ນທີ່ຂອງໂຄງການ.*

## ການກວດກາ ລບຕ ແລະ ບໍລິສັດເອັດບີເທັດ – ການດໍາເນີນທຸລະກິດແບບມີຄວາມຮັບຜິດຊອບ

ເຂດຊົນນະບົດທີ່ມີອັດຕາຄວາມທຸກຍາກສູງ ສ່ວນຫຼາຍແມ່ນມີ ລບຕ ຕົກຄ້າງ. ພາຍຫຼັງມີການກວດກູ້ ລບຕ ອອກຈາກພື້ນທີ່ແລ້ວ, ໂຄງການຈຶ່ງຈະສາມາດປູກຕົ້ນໄມ້ໃສ່ໄດ້ ແລະ ຊາວນາເອງກໍ່ຈຶ່ງສາມາດເຂົ້າໄປປູກເຂົ້າໃສ່ໄດ້ເຊັ່ນດຽວກັນ- ແນໃສ່ເພື່ອສ້າງຄວາມປອດໄພໃຫ້ແກ່ຊາວບ້ານ ແລະ ກໍາມະກອນທີ່ເຮັດວຽກຢູ່ເຂດພື້ນທີ່ປູກຕົ້ນໄມ້. ສະນັ້ນ, ເນື້ອທີ່ທີ່ມີຄວາມປອດໄພ ແລະ ເປັນດິນທີ່ອຸດົມສົມບູນແມ່ນຈະສາມາດນໍາໃຊ້ເຂົ້າໃນການຜະລິດຕົ້ນໄມ້ ແລະ ພືດພັນທັນຍາຫານຕ່າງໆໄດ້ດີ.

ຕັ້ງແຕ່ປີ 2007 ເປັນຕົ້ນມາ, ສະໂຕລາເອັນໂຊ ໄດ້ເຮັດສັນຍາກັບບໍລິສັດເກັບກູ້ ລບຕ ເພື່ອເຮັດການກວດກູ້ ລບຕ ອອກຈາກພື້ນທີ່ໂຄງການຂອງຕົນຕະຫຼອດມາ. ໃນປະຈຸບັນນີ້, ຄູ່ຮ່ວມສັນຍາໃນການກວດກູ້ ລບຕ ຂອງສະໂຕລາເອັນໂຊ ກໍ່ແມ່ນບໍລິສັດເອັດສ໌ບີເທັດກວດກູ້ ລບຕ ຈໍາກັດ. ບໍລິສັດເອັດສ໌ບີເທັດແມ່ນບໍລິສັດເອກະຊົນເກັບກູ້ລບຕ ຂອງລາວທີ່ມາຈາກແຂວງຊຽງຂວາງ. ບໍລິສັດສ້າງຕັ້ງຂຶ້ນໃນປີ 2010 ໂດຍທ່ານສົມພັນ ສີບຸນເຮືອງ ເປັນເຈົ້າຂອງ ແລະ ເລີ່ມມີສະໂຕລາເອັນໂຊເປັນລູກຄ້າລາຍໃຫຍ່ຕັ້ງແຕ່ນັ້ນມາ.

ປະຈຸບັນນີ້,ສະໂຕລາເອັນໂຊກໍາລັງນໍາໃຊ້ງົບປະມານຂອງຕົນເອງເຂົ້າໃນການກວດກູ້ ລບຕ, ຊຶ່ງງົບປະມານດັ່ງກ່າວແມ່ນບໍ່ໄດ້ນໍາໃຊ້ເງິນຂອງປະເທດຜູ້ໃຫ້ທຶນ ຫຼື ອົງການເອັນຈີໂອແຕ່ຢ່າງໃດ. ສາມາດເວົ້າໄດ້ວ່າ ຕົ້ນໄມ້ແມ່ນສ້າງຄວາມປອດໄພໃຫ້ແກ່ຊາວນາ, ສ້າງລາຍໄດ້ ແລະ ການຄໍ້າປະກັນສະບຽງອາຫານໃຫ້ແກ່ເຂົາເຈົ້າ, ເປັນສິ່ງທີ່ຈະນໍາເອົາເຂົາເຈົ້າຫຼຸດພົ້ນອອກຈາກຄວາມທຸກຍາກທີ່ຍັງບໍ່ທັນສາມາດໜີພົ້ນໄດ້ຈັກເທື່ອ ຖ້າຍັງມີ ລບຕ ຕົກຄ້າງຢູ່. ໃນທ້າຍປີ 2013 ນີ້, ສະໂຕລາເອັນໂຊ ຈະໄດ້ນໍາໃຊ້ງົບປະມານເຂົ້າໃນການກວດກູ້ ລບຕ ອອກຈາກພື້ນທີ່ 2,200 ເຮັກຕາ.



*ຮູບຂ້າງເທິງ: ແມ່ຍິງຢູ່ທ້ອງຖິ່ນກໍາລັງເກັບກ່ຽວພືດຂອງຕົນທີ່ປູກຢູ່ລະຫວ່າງກາງແລວປູກຕົ້ນໄມ້.*

*ຮູບດ້ານລຸ່ມ: ລະດູບານໃໝ່ພ້ອມກັບແຜ່ນດິນທີ່ປອດໄພຢູ່ໃນເຂດພື້ນທີ່ໂຄງການຂອງສະໂຕລາເອັນໂຊ.*

## ບໍລິສັດເອກະຊົນກວດກູ້ ລບຕ ແລະ ການພັດທະ ການປູກຕົ້ນໄມ້ແບບມີການກະເສດ

ການຮ່ວມມືກັນທາງດ້ານທຸລະກິດລະຫວ່າງບໍລິສັດເອັດສ໌ບິເທັດ ແລະ ບໍລິສັດສະໂຕລາເອັນໂຊ ແມ່ນມີການດໍາເນີນງານທີ່ຈະແຈ້ງ ສະແດງອອກຄື ບໍລິສັດເອກະຊົນເກັບກູ້ ລບຕ ແລະ ການດໍາເນີນວຽກງານພັດທະນາທຸລະກິດແມ່ນມີການເຄື່ອນໄຫວຮ່ວມກັນໄດ້ເປັນຢ່າງດີ ໂດຍສະເພາະແມ່ນ ການປັບປຸງຊີວິດການເປັນຢູ່ທັງໝົດຂອງປະຊາຊົນທີ່ອາໄສຢູ່ໃນເຂດພື້ນທີ່ດັ່ງກາວ.

ສະໂຕລາເອັນໂຊ ມີພະນັກງານຄົນລາວທັງໝົດ 70 ຄົນ, ຕົ້ນຕໍແມ່ນນັກພືດສາດ, ພະນັກງານປ່າໄມ້ ແລະ ຊ່ຽວຊານທາງດ້ານການຮັກສາສະພາບຄວາມຍືນຍົງ. ນອກຈາກນັ້ນ, ບໍລິສັດເອັດສ໌ບິເທັດ ຍັງໄດ້ຮັບສະໝັກພະນັກງານຄົນລາວຫຼາຍກວ່າ 45 ຄົນໃນຕໍາແໜ່ງນັກກວດກູ້, ຫົວໜ້າທີມ ແລະ ຜູ້ຊີ້ນໍາວຽກກວດກູ້. ຈໍານວນດັ່ງກາວນີ້ ຍັງຈະເພີ່ມຂຶ້ນອີກສາມ ຫຼື ສີ່ເທົ່າຕົວ ໃນເວລາທີ່ມີການຂະຫຍາຍໂຄງການຕື່ມອີກ. ພ້ອມນັ້ນ, ກໍ່ຈະໄດ້ມີການສ້າງເອົາປະຊາຊົນໃຫ້ເປັນພະນັກງານຖາວອນ ເພື່ອເປັນການປະກອບສ່ວນເຂົ້າໃນການສ້າງຊຸມຊົນ ແລະ ເສດຖະກິດຂອງຊາດໃຫ້ມີຄວາມເຂັ້ມແຂງ.

ຈົນຮອດມື້ນີ້, ມີໝູ່ບ້ານຫຼາຍກວ່າ 40 ແຫ່ງຢູ່ໃນສາມເມືອງແມ່ນໄດ້ຮັບຜົນປະໂຫຍດໂດຍກົງຈາກການກວດກູ້ ລບຕ ຂອງບໍລິສັດເອັດສ໌ບິເທັດ. ສະໂຕລາເອັນໂຊ ຈະສືບຕໍ່ຝຶກອົບຮົມໃຫ້ແກ່ຊາວບ້ານໃນການປັບປຸງເຕັກນິກໃນການເຮັດກະສິກໍາ ແລະ ແລກປ່ຽນຄວາມຮູ້-ວິທີການດໍາເນີນຮ່ວມກັນ. ສໍາລັບບໍລິສັດເອັດສ໌ບິເທັດ ກໍ່ຈະສືບຕໍ່ກວດກູ້ ລບຕ ອອກຈາກພື້ນທີ່ຕໍ່ໄປ. ສ່ວນຊາວນາກໍ່ຈະໃຫ້ສືບຕໍ່ປັບປຸງຄວາມຮູ້ ແລະ ເຕັກນິກໃນການເຮັດກະສິກໍາຂອງຕົນເອງ ແລະ ໃຫ້ສາມາດເຂົ້າເຖິງການນໍາໃຊ້ທີ່ດິນພາຍຫຼັງການກວດກູ້ ລບຕ ອອກແລ້ວ- ໂດຍທີ່ປະຊາຊົນບໍ່ຕ້ອງເຄື່ອນຍ້າຍ ລບຕ ດ້ວຍຕົນເອງອີກຕໍ່ໄປແລ້ວ.




ຮູບຖ່າຍ: ຄກລ

# ອົງການປະຕິບັດງານ ເກັບກູ້ ລບຕ ເພື່ອ ມະນຸດສະທຳ

## ອົງການປະຕິບັດງານເກັບກູ້ ລບຕ ເພື່ອມະນຸດສະທຳ

1. ອົງການສາກົນເພື່ອຊ່ວຍເຫຼືອຄົນພິການ (ເຫັດໄອ)
2. ອົງການເກັບກູ້ລະເບີດເຈມັດ (ເຈມັດ)
3. ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ)
4. ອົງການເກັບກູ້ລະເບີດແມັກ (ແມັກ)
5. ອົງການຊ່ວຍເຫຼືອລ້າຂອງປະຊາຊົນນ໋ອກແວ (ເອັນພີເອ)
6. ອົງການຮ່ວມໃຈບໍລິການສາກົນ (ໂຊດີ)
7. ອົງການເຮໂລທຼາດ

## ບໍລິສັດເອກະຊົນເກັບກູ້ ລບຕ ຂອງພາຍໃນ ແລະ ຕ່າງປະເທດ

1. ບໍລິສັດອາສາ (ອາສາ)
2. ບໍລິສັດແບັກເທັກ (ແບັກເທັກ)
3. ບໍລິສັດລາວບີເອັດສ໌ແອວ (ລາວບີເອັດສ໌ແອວ)
4. ເອັນເອັນຈີລ້ານຊ້າງມິນເນີໂຣນ (ເອັນເອັນຈີ)
5. ບໍລິສັດມິວເຊີດສ໌ (ມິວເຊີດສ໌)
6. ບໍລິສັດພົນສັກດາ (ພີເອັດສ໌ດີ)
7. ບໍລິສັດສີບຸນເຮືອງ (ເອັດສ໌ບີເຫັດ)

# ອົງການປະຕິບັດງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ

1. ສະມາຄົມຊ່ວຍເຫຼືອ ແລະ ບັນເທົາທຸກ (ເອເອອາ)
2. ອົງການບັນເທົາທຸກຂອງກາໂຕລິກ (ຊີອາເອັດສ໌)
3. ອົງການຊ່ວຍເຫຼືອທາງດ້ານອົງຄະທຽມ ແລະ ເຄື່ອງຄ້ຳຊູ (ໂຄບ)
4. ສະມາຄົມຊ່ວຍເຫຼືອເພື່ອປັບປຸງຄຸນນະພາບຊີວິດຂອງຜູ້ເສຍອົງຄະ ແລະ ຜູ້ຖືກເຄາະຮ້າຍຈາກ ລບຕ (ຄິວແອວເອ)
5. ອົງການສຶກສາໂລກ (ເວີອິດູເຄເຊັ້ນ)

# ບົດລາຍງານ ກອງປະຊຸມກຸ່ມວິຊາການ ວຽກງານກວດກູ້ ລບຕ

ກອງປະຊຸມວິຊາການວຽກງານກວດກູ້ ລບຕ ແມ່ນຈັດຂຶ້ນທຸກໆ ສາມເດືອນ ໂດຍການເປັນປະທານຂອງຮອງຫົວໜ້າຫ້ອງການ ຝ່າຍປະຕິບັດງານ. ສໍາລັບຜູ້ເຂົ້າຮ່ວມກອງປະຊຸມປະກອບມີບັນດາອົງການປະຕິບັດງານເກັບກູ້ ລບຕ ທີ່ຕັ້ງຢູ່ ສປປ ລາວ. ກອງປະຊຸມດັ່ງກ່າວນີ້ ແມ່ນເປີດກວ້າງສໍາລັບພາກສ່ວນທີ່ມີຄວາມສົນໃຈໃຫ້ເຂົ້າຮ່ວມ ເພື່ອປຶກສາຫາລືຮ່ວມກັນກ່ຽວກັບບັນຫາຕ່າງໆທາງດ້ານເຕັກນິກ, ການນໍາໃຊ້ເນື້ອທີ່ດິນ ແລະ ການກໍານົດບູລິມະສິດຕ່າງໆ.

ໜ້າທີ່ຮັບຜິດຊອບຂອງກອງປະຊຸມວິຊາການວຽກງານກວດກູ້ ລບຕ ກວມເອົາຂົງເຂດວຽກງານມາດຕະຖານແຫ່ງຊາດ, ຄຸ້ມຄອງຂໍ້ມູນຂ່າວສານ, ການພັດທະນານະໂຍບາຍ ແລະ ບູລິມະສິດ, ປະຕິບັດແຜນຍຸດທະສາດໃຫ້ມີຄວາມຄືບໜ້າ ແລະ ຊະບວນການວາງແຜນວຽກຕ່າງໆ. ນອກຈາກນັ້ນ, ກອງປະຊຸມດັ່ງກ່າວນີ້ ຍັງສະໜອງການປຶກສາຫາລືກັນກັບບັນດາອົງການປະຕິບັດງານກ່ຽວກັບບັນຫາຕ່າງໆທີ່ ຄຊກລ ເຫັນວ່າມີຄວາມໜ້າສົນໃຈ, ມີການສົນທະນາແບບວິຊາການ ແລະ ການໂອລົມກັບແບບຊອງໜ້າ.

ໃນຊ່ວງປີ 2012, ກອງປະຊຸມວິຊາການວຽກງານກວດກູ້ ລບຕ ໄດ້ຈັດຂຶ້ນ 3 ຄັ້ງ ແລະ ຄັ້ງທີ 4 ວາງແຜນວ່າຈະຈັດຂຶ້ນໃນເດືອນທັນວາ ແຕ່ໄດ້ຖືກປ່ຽນແທນມາຈັດເປັນກອງປະຊຸມສະເພາະ 2 ຢ່າງພ້ອມກັນ, ຊຶ່ງເນື້ອໃນຂອງກອງປະຊຸມທີ 1 ແມ່ນເພື່ອປຶກສາຫາລືແລກປ່ຽນຂໍ້ມູນຂ່າວສານກັບບັນດາຊ່ຽວຊານທໍາລາຍ ລບຕ ຂັ້ນ 4 ໃນທົ່ວປະເທດ ແລະ ກອງປະຊຸມທີ 2 ແມ່ນການທົບທວນຄືນມາດຕະຖານການຝຶກອົບຮົມແຫ່ງຊາດ.

ສັງລວມແລ້ວ, ກອງປະຊຸມວິຊາການວຽກງານກວດກູ້ ລບຕ ໄດ້ມີການປຶກສາຫາລື ແລະ ລວມເອົາບັນດາວຽກງານທີ່ມີຫົວຂໍ້ຕ່າງໆ: ການລາຍງານຜົນຄວາມຄືບໜ້າຂອງການດໍາເນີນກິດຈະກໍາແບບອີເລັກໂຕຼນິກຜ່ານລະບົບອິມສ໌ມາ, ປຶກສາຫາລືກັນກ່ຽວກັບການທົດລອງເຄື່ອງກົນຈັກໜັກ, ເຕັກນິກໃນການຕັດລະເບີດບົມໃຫຍ່, ບັນຫາອຸປະຕິເຫດເກີດຂຶ້ນ ຍ້ອນການທໍາລາຍລະເບີດລູກຫວ່ານທີ່ມີຟິວແຕກຊ້າ, ການສົນທະນາກ່ຽວກັບວິທີການສໍາຫຼວດ, ການຝຶກອົບຮົມ ແລະ ການຮ່ວມທຶນກັນເພື່ອຈັດການຝຶກອົບຮົມ, ການຮັບເອົາອົງການປະຕິບັດງານໃໝ່ ແລະການຂະຫຍາຍກໍາລັງ. ນອກຈາກນັ້ນ, ສິ່ງທີ່ເປັນການປ່ຽນແປງຂອງວຽກງານກວດກູ້ ລບຕ ໃນປີ 2012 ແມ່ນການກໍານົດບູລິມະສິດການກວດກູ້ ລບຕ ເພື່ອຮັບໃຊ້ບູລິມະສິດພັດທະນາຕ່າງໆຂອງລັດຖະບານ ໂດຍການປະສານສົມທົບກັບຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູງກາງ ໂດຍໄດ້ມີການຈັດກອງປະຊຸມສໍາມະນາຂຶ້ນ ເພື່ອປຶກສາຫາລືຮ່ວມກັນກ່ຽວກັບການສໍາຫຼວດໃນຕໍ່ໜ້າ ແລະ ການວາງແຜນຮ່ວມກັນກ່ຽວກັບການກວດກູ້ ລບຕ ໃຫ້ຮັບໃຊ້ຈຸດສຸມພັດທະນາຕ່າງໆຂອງລັດຖະບານ ແລະ ການກໍານົດບູລິມະສິດການກວດກູ້ ລບຕ ໂດຍອີງໃສ່ຫຼັກຖານລບຕຕົກຄ້າງ. ການສຸມໃສ່ກ່ຽວກັບການສໍາຫຼວດນີ້ ແມ່ນຈະສືບຕໍ່ສົນທະນາປຶກສາຫາລືກັນຢູ່ໃນກອງປະຊຸມວິຊາການວຽກງານກວດກູ້ ລບຕ ໃນປີ 2013.

# ອົງການປະຕິບັດງານກວດກູ້ ລບຕ ເພື່ອມະນຸດສະທຳ

## ອົງການສາກົນເພື່ອຊ່ວຍເຫຼືອຄົນພິການ (ເຫັດໄອ)

### ອົງການສາກົນເພື່ອຊ່ວຍເຫຼືອຄົນພິການ.

ຕັ້ງແຕ່ປີ 1996 ເປັນຕົ້ນມາ, ອົງການສາກົນເພື່ອຊ່ວຍເຫຼືອຄົນພິການໄດ້ເລີ່ມຈັດຕັ້ງປະຕິບັດວຽກງານຢູ່ໃນຂະແໜງການແກ້ໄຂບັນຫາ ແລະ ໄດ້ເລີ່ມເຄື່ອນໄຫວວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ, ດຳເນີນການກວດກູ້ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ. ຕັ້ງແຕ່ປີ 2010, ອົງການເຫັດໄອ ຍັງໄດ້ສະໜັບສະໜູນກຸ່ມຕ້ານລະເບີດລູກຫວ່ານ, ຊຶ່ງເປັນກຸ່ມທີ່ປະກອບດ້ວຍຜູ້ລອດຊີວິດຈາກ ລບຕ ຈຳນວນ 8 ຄົນ ທີ່ເຮັດໜ້າທີ່ໂຄສະນາສົ່ງເສີມຍາວາດ້ວຍການເກືອດຫ້າມລະເບີດລູກຫວ່ານ.

### ກິດຈະກຳໃນປີ 2012:

ອົງການເຫັດໄອ ແມ່ນດຳເນີນວຽກງານຢູ່ແຂວງສະຫັວນນະເຂດ ຢູ່ເມືອງນອງ, ວິລະບູລີ ແລະ ເຊໂປນ.

ໃນປີ 2012, ອົງການເຫັດໄອ ໄດ້ດຳເນີນການກວດກູ້ ລບຕ, ວຽກງານທຳລາຍເຄື່ອນທີ່, ວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ, ວຽກງານປະສານຊຸມຊົນ ແລະ ໂຄງການທົດລອງສຳຫຼວດພື້ນທີ່ບູລິມະສິດ ລບຕ ຕົກຄ້າງຂັ້ນເມືອງຢູ່ເມືອງນອງ ທີ່ເປັນສະຖານທີ່ດຳເນີນໂຄງການທົດລອງດັ່ງກາວ. ນອກຈາກນັ້ນ, ອົງການເຫັດໄອ ກໍ່ຍັງໄດ້ສືບຕໍ່ສະໜັບສະໜູນກຸ່ມຕ້ານລະເບີດລູກຫວ່ານຢູ່ ສປປ ລາວ ອີກດ້ວຍ.

### ໂຄງການທົດລອງສຳຫຼວດພື້ນທີ່ບູລິມະສິດ ລບຕ ຕົກຄ້າງຢູ່ຂັ້ນເມືອງ.

ໃນເດືອນທັນວາ 2012, ພວກເຮົາໄດ້ສຳເລັດໂຄງການທົດລອງສຳຫຼວດພື້ນທີ່ບູລິມະສິດ ລບຕ ຕົກຄ້າງຢູ່ຂັ້ນເມືອງຢູ່ທີ່ເມືອງນອງ ໂດຍມີທີມງານທຳລາຍເຄື່ອນທີ່ໃຫ້ການສະໜັບສະໜູນທີມງານສຳຫຼວດຂອງພວກເຮົາ ເພື່ອດຳເນີນການທຳລາຍລະເບີດທີ່ພົບເຫັນຕາມການລາຍງານ ໃນເວລາທີ່ລົງເຮັດການສຳຫຼວດຢູ່ຕາມບ້ານຕ່າງໆ.

### ການປະຕິບັດງານການເກັບກູ້-ການກວດກູ້ ແລະ ທຳລາຍເຄື່ອນທີ່

ການຂຶ້ນແຜນການປະຈຳປີເພື່ອດຳເນີນການກວດກູ້ ລບຕ ແມ່ນອີງໃສ່ການຮ້ອງຂໍຈາກອຳນາດການປົກຄອງຂັ້ນທ້ອງຖິ່ນ ແລະ ຄູ່ຮ່ວມພັດທະນາ ເຊັ່ນ: ກອງທຶນຫຼຸດຜ່ອນຄວາມທຸກຍາກ ແລະອົງການເວວຮັງເກີຮິບ, ເຊິ່ງຈຸດປະສົງຕົ້ນຕໍຂອງການກວດກູ້ ລບຕ ກໍ່ປະກອບມີຫຼາຍເປົ້າໝາຍ ເປັນຕົ້ນແມ່ນ ເພື່ອປັບປຸງພື້ນຖານໂຄງລ່າງ, ການສ້າງຖະໜົນຫົນທາງ (ເພື່ອລຳລຽງອາຫານ ແລະ ສິນຄ້າ), ສ້າງສຸກສາລາ ແລະ ໂຮງຮຽນໃໝ່. ນອກຈາກນັ້ນ, ກໍ່ຍັງມີການກວດກູ້ ລບຕ ສຳລັບວຽກງານກະສິກຳ (ການຂະຫຍາຍພື້ນທີ່ປູກ




*ພະນະທ່ານ ບຸນເຮືອງ ດວງພະຈັນ ລັດຖະມົນຕີປະຈຳ ຫລບ, ປະທານ ຄຊກລ ລົງຢ້ຽມຢາມອົງການເຫັດໄອ ໃນເດືອນມີນາ 2012.*

ເຂົ້າ ແລະ ລ້ຽງສັດ) ເພື່ອເຮັດໃຫ້ການຄ້ຳປະກັນອາຫານຢູ່ທ້ອງຖິ່ນມີຄວາມເຂັ້ມແຂງ.

ການປະຕິບັດໜ້າວຽກທຳລາຍເຄື່ອນທີ່ຕາມແຜນການປະຈຳປີ ແມ່ນໄດ້ມີການດັດປັບໃຫ້ເຂົ້າມາສະໜັບສະໜູນວຽກການສຳຫຼວດຂັ້ນເມືອງ. ພ້ອມດຽວກັນນັ້ນ, ອົງການເຫັດໄອ ຍັງໄດ້ຈັດຕັ້ງທີມງານທຳລາຍເຄື່ອນທີ່ຂຶ້ນມາເພື່ອສະໜັບໃນການດຳເນີນວຽກງານສຳຫຼວດເພື່ອຕອບສະໜອງໃນເວລາທີ່ມີການລາຍງານໃຫ້ໄປເກັບກູ້ລະເບີດແບບສຸກເສີນຕະຫຼອດເດືອນອີກດ້ວຍ.



*ທ່ານ ໄມເຄີນ ກອບພິນ, ອຸປະທູດຂອງສະຫະພາບເອີລົບ ລົງຢ້ຽມຢາມສະໂມສອນເດັກນ້ອຍຢູ່ໂຮງຮຽນແຫ່ງໜຶ່ງ ທີ່ເມືອງເຊໂປນ, ໃນເດືອນມີນາ 2012.*




*ການພົບປະກັບທ່ານ ແຟງໂກສິດ ໂຮແລນເດ, ປະທານປະເທດຂອງຝຣັ່ງ ເພື່ອຂໍລາຍເຊັນຂອງທ່ານລົງໃສ່ປຶ້ມຂອງອົງການເຫັດໄອ ກ່ຽວກັບລະເບີດລູກຫວ່ານ- ໃນເດືອນພະຈິກ 2012.*
*ຮູບຖ່າຍ: ເຊກັນ ໂຮວີ*

## ກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ການປະສານງານກັບຊຸມຊົນ.

ສຳລັບວຽກງານນີ້ ທີມງານໂຄສະນາສຶກສາຄວາມສ່ຽງຈາກ ລບຕຂອງອົງການເຫັດໄອໄດ້ດຳເນີນກິດຈະກຳຢູ່ໃນ20ບ້ານ ຕາມທີ່ໄດ້ວາງແຜນໄວ້. ນອກຈາກນັ້ນ, ອົງການເຫັດໄອ ຍັງໄດ້ດຳເນີນກິດຈະກຳທີ່ເອີ້ນວ່າ: “ສະໂມສອນປອດໄພສຳລັບເດັກນ້ອຍ” ຢູ່ໃນໂຮງຮຽນຕ່າງໆ. ພ້ອມນັ້ນ, ກໍ່ໄດ້ມີການດຳເນີນວຽກງານສຳຫຼວດກ່ຽວກັບຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳກ່ຽວກັບ ລບຕ ຂອງນັກຮຽນໄປນຳອີກດ້ວຍ.

## ສະໜັບສະໜູນຫ້ອງການປະສານງານ ຄຊກລ ຢູ່ແຂວງສະຫວັນນະເຂດ.

ໃນປີ 2012 ອົງການເຫັດໄອ ໄດ້ສືບຕໍ່ສະໜັບສະໜູນຫ້ອງການປະສານງານ ຄຊກລ ຢູ່ແຂວງສະຫວັນນະເຂດ ຜ່ານການຕິດຕາມ ແລະ ມີການພົບປະກັນຢ່າງເປັນປະຈຳກັບຫ້ອງການປະສານງານ ຄຊກລ ຂັ້ນແຂວງສະຫວັນນະເຂດ ເຮັດໃຫ້ມີການປະສານງານພົວພັນກັນຢ່າງໃກ້ສິດ.

## ກຸ່ມໂຄສະນາຕ້ານລະເບີດລູກຫວ່ານ.

ຕະຫຼອດປີ 2012, ກຸ່ມໂຄສະນາຕ້ານລະເບີດລູກຫວ່ານໄດ້ດຳເນີນກິດຈະກຳໂຄສະນາຫຼາຍຢ່າງເພື່ອໂຄສະນາກ່ຽວກັບສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ. ຢູ່ຂັ້ນແຂວງກໍ່ໄດ້ມີການຈັດງານໂຄສະນາຂຶ້ນທັງໝົດ 4 ຄັ້ງ ຢູ່ແຂວງສະຫວັນນະເຂດ, ຄຳມ່ວນ, ບໍລິຄຳໄຊ ແລະ ຊຽງຂວາງ.

ກິດຈະກຳ “ໃຫ້ຢືມຂາຂອງທ່ານ” ຕັ້ງຂຶ້ນໃນເດືອນເມສາ ເພື່ອໃຫ້ເຂົ້າມາເປັນສ່ວນໜຶ່ງໃນການເຄື່ອນໄຫວກິດຈະກຳໃນວັນສາກົນໂຄສະນາເພື່ອຕ້ານລະເບີດ ແລະ ງານສະເຫຼີມສະຫຼອງຄົບຮອບ 2 ປີ ການກໍ່ຕັ້ງກຸ່ມໂຄສະນາຕ້ານລະເບີດລູກຫວ່ານ ທີ່ສ້າງຕັ້ງຂຶ້ນໃນວັນທີ 1 ສິງຫາ 2012 ເນື່ອງໃນໂອກາດພິທີສະເຫຼີມສະຫຼອງວັນມີຜົນບັງຄັບໃຊ້ສົນທິສັນຍາຕ້ານລະເບີດລູກຫວ່ານ. ຄຽງຄູ່ກັນນັ້ນ, ກຸ່ມໂຄສະນາຕ້ານລະເບີດລູກຫວ່ານ ຍັງໄດ້ເຂົ້າຮ່ວມກອງປະຊຸມລັດພາຄີຄັ້ງທີ 3 ຂອງສົນທິສັນຍາຕ້ານລະເບີດລູກຫວ່ານຢູ່ໂອດສະໂລ, ປະເທດນອກແວ ອີກດ້ວຍ. ໃນລະຫວ່າງການເຂົ້າຮ່ວມນັ້ນ, ທ້າວ ທຸມມີ ສີລໍາພັນ ກໍ່ໄດ້ຂຶ້ນກ່າວປະກອບຄຳເຫັນກ່ຽວກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໃນນາມຕາງໜ້າໃຫ້ບັນດາຜູ້ລອດຊີວິດຈາກ ລບຕ ໃນທົ່ວໂລກ.

ນອກຈາກນັ້ນ, ກຸ່ມໂຄສະນາຕ້ານລະເບີດລູກຫວ່ານ ຍັງໄດ້ພົບປະກັບຜູ້ແທນຂັ້ນສູງທີ່ມາຈາກຫຼາຍປະເທດໃນຊ່ວງໄລຍະກອງປະຊຸມສຸດຍອດ ອາຊີ-ເອີລົບ ຄັ້ງທີ 9 ທີ່ຈັດຂຶ້ນໃນເດືອນພະຈິກ, 2012, ນະຄອນຫຼວງວຽງຈັນ ອີກດ້ວຍ.

## ຜົນສຳເລັດຕົ້ນຕໍໃນປີ 2012:

ໃນປີ 2012, ອົງການເຫັດໄອໄດ້ຮັບທຶນການຊ່ວຍເຫຼືອເພື່ອຂະຫຍາຍທີມງານກວດກູ້ ລບຕ ແລະ ເລີ່ມຈັດຕັ້ງປະຕິບັດທີມງານສຳຫຼວດລະເບີດລູກຫວ່ານ.

## ການກວດກູ້ ແລະ ການສຳຫຼວດ.

ອົງການເຫັດໄອ ໄດ້ສຳເລັດໂຄງການທົດລອງສຳຫຼວດພື້ນທີ່ບູລິມະສິດ ລບຕ ຕົກຄ້າງຂັ້ນເມືອງຢູ່ເມືອງນອງ ໂດຍສຳເລັດການສຳຫຼວດຢູ່ 88 ບ້ານ, ລວມມີ 2,849 ຄອບຄົວທີ່ຖືກສຳພາດ, 393 ໜ້າວຽກກວດກູ້ສຸກເສີນໄດ້ສຳເລັດຕາມການຮ້ອງຂໍ, 901 ລາຍງານພື້ນທີ່ອັນຕະລາຍແມ່ນສຳເລັດ, 937 ກ່ຽວກັບ ລບຕ ທີ່ພົບເຫັນແລ້ວລາຍງານໃຫ້ແກ່ທີມງານທຳລາຍເຄື່ອນທີ່ເພື່ອໄປທຳລາຍແມ່ນສຳເລັດ. ນອກຈາກນັ້ນ, ບ້ານທີ່ຖືກສຳຫຼວດກໍ່ໄດ້ສຳເລັດການແຕ້ມແຜນທີ່ໄວ້ອີກດ້ວຍ.

ຫຼາຍກວ່າ 32 ເຮັກຕາ ຢູ່ໃນ 20 ບ້ານ ໄດ້ສຳເລັດການກວດກູ້, ປະກອບມີຜູ້ໄດ້ຜົນປະໂຫຍດທັງໝົດ 5,575 ຄົນ. ໄດ້ສຳເລັດການປະເມີນຜົນພາຍຫຼັງການກວດກູ້ທັງໝົດ 79 ຄັ້ງ, ຕີລາຄາ 91.14 ສ່ວນຮ້ອຍ ຂອງພື້ນທີ່ທີ່ຖືກກວດກູ້ໂດຍອົງການເຫັດໄອແມ່ນຖືກນຳໃຊ້ພາຍຫຼັງການກວດກູ້. ນອກຈາກນັ້ນ, ທີມງານທຳລາຍເຄື່ອນທີ່ ຍັງໄດ້ດຳເນີນການກວດກູ້ ລບຕ ໃນ 62 ບ້ານ, ສາມາດທຳລາຍ ລບຕ ໄດ້ຈຳນວນທັງໝົດ 1,587 ໜ່ວຍ.

## ກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ການປະສານງານກັບຊຸມຊົນ.

- ໃນປີ 2012, ອົງການເຫັດໄອ ໄດ້ຈັດກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແບບເຄື່ອນທີ່ ຈຳນວນ 21 ຄັ້ງ, ລົງຢ້ຽມຢາມແຕ່ລະຄົວເຮືອນຈຳນວນ 78 ຄົວເຮືອນ ເພື່ອສຶກສາວິທີການໃຫ້ແກ່ ພໍ່ແມ່ ເພື່ອນຳໄປສອນລູກຫຼານຂອງຕົນກ່ຽວກັບຄວາມອັນຕະລາຍຂອງ ລບຕ. ພ້ອມນັ້ນ, ກໍ່ໄດ້ເຮັດການໂຄສະນາຂໍ້ຄວາມແບບຮູບພາບ 24 ຄັ້ງ ຜ່ານທາງແຜ່ນພັບ. ລວມທັງໝົດ 78 ກິດຈະກຳການປະສານງານຊຸມຊົນທີ່ໄດ້ເຮັດສຳເລັດ.
- ໄດ້ລົງຢ້ຽມຢາມບ້ານທັງໝົດ 40 ບ້ານ ຢູ່ໃນ 3 ເມືອງເປົ້າໝາຍ.




*ກຸ່ມໂຄສະນາຕ້ານລະເບີດລູກຫວ່ານ ກຳລັງເຮັດກິດຈະກຳໃຫ້ຢືມຂາຂອງທ່ານ ໃນພິທີລະລຶກ ເຖິງ 4 ເມສາ 2012 ວັນສາກົນໂຄສະນາຕ້ານລະເບີດ.*

- ໄດ້ດຳເນີນກິດຈະກຳ "ສະໂມສອນປອດໄພສຳລັບເດັກນ້ອຍ" ຕາມໂຮງຮຽນຢູ່ 20 ບ້ານ.
- ອາສາສະໝັກບ້ານໄດ້ເຂົ້າຮ່ວມການຝຶກອົບຮົມທົບທວນຄືນ.
- ມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 13,727 ຄົນ (ມີຜູ້ໃຫ່ຍຈຳນວນ 6,057 ແລະ ເດັກນ້ອຍຈຳນວນ 7,670).

## ຂ່າວດີ: ກຸ່ມໂຄສະນາຕ້ານລະເບີດລູກຫວ່ານໄດ້ພົບປະກັບການນຳຂອງບັນດາປະເທດຕ່າງໆ

ໃນປີ 2012, ກຸ່ມໂຄສະນາຕ້ານລະເບີດລູກຫວ່ານໄດ້ເຂົ້າຮ່ວມກອງປະຊຸມ ແລະ ພົບປະກັບຜູ້ແທນລະດັບສູງຕ່າງໆໃນທົ່ວໂລກ, ອັນເປັນໂອກາດທີ່ດີໃນການໂຄສະນາກ່ຽວກັບບັນຫາ ລບຕ ແລະ ເປັນການລະດົມຂົນຂວາຍການສະໜັບສະໜູນເຂົ້າໃນວຽກງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໃຫ້ຫຼາຍຂຶ້ນກວ່າເກົ່າ. ໃນເດືອນກໍລະກົດ, ກຸ່ມໂຄສະນາຕ້ານລະເບີດລູກຫວ່ານ ທ້າວ ພົງສະຫວັນ ໄດ້ພົບກັບລັດຖະມົນຕີວ່າການກະຊວງການຕ່າງປະເທດ ທ່ານນາງເຮລາຣີ ຄຼິນຕັນ ແລະ ໄດ້ສະເໜີຕໍ່ເພິ່ນຊ່ວຍຜັກດັນໃຫ້ລັດຖະບານສະຫະລັດອາເມລິກາ ສືບຕໍ່ສະໜັບສະໜູນການກວດກູ້ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ. ໃນລະຫວ່າງກອງປະຊຸມລັດພາຄີຄັ້ງທີ 3 ຂອງສົນທິສັນຍາຕ້ານລະເບີດລູກຫວ່ານ ທີ່ເມືອງ ໂອດສະໂລ, ປະເທດນອກແວ, ທ້າວ ທູມມີ ກໍ່ໄດ້ມີໂອກາດພົບປະກັບລັດຖະມົນຕີວ່າການກະຊວງການຕ່າງປະເທດນອກແວ. ພ້ອມນັ້ນ, ໃນຊ່ວງໄລຍະກອງປະຊຸມສຸດຍອດອາຊີ-ເອີລົບຄັ້ງທີ 9, ທີ່ຈັດຂຶ້ນໃນເດືອນພະຈິກ, ນະຄອນຫຼວງວຽງຈັນ; ກຸ່ມໂຄສະນາຕ້ານລະເບີດລູກຫວ່ານກໍ່ໄດ້ມີໂອກາດພົບປະກັບການນຳຂັ້ນສູງຂອງປະເທດຕ່າງໆຄື: ລັດຖະມົນຕີວ່າດ້ວຍການຮ່ວມມືຂອງເບວຢ້ຽມ, ລັດຖະມົນວ່າການກະຊວງການຕ່າງປະເທດຂອງອັງກິດ, ເຢຍລະມັນ ແລະ ຝຣັ່ງ. ພ້ອມດຽວນັ້ນ, ຫົວໜ້າອົງການເຫັດໄອ ກໍ່ໄດ້ມີໂອກາດພົບປະກັບປະທານປະເທດຂອງຝຣັ່ງ, ຊຶ່ງເພິ່ນແມ່ນຜູ້ທີ່ລົງລາຍເຊັນໃສ່ປື້ມກ່ຽວກັບການຕໍ່ສູ້ກັບ ລບຕ ຂອງອົງການເຫັດໄອ ອີກດ້ວຍ.



*ທ້າວ ທູມມີ ສີລຳພັນ ໄດ້ປະກອບຄຳເຫັນກ່ຽວກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຢູ່ໃນກອງປະຊຸມສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ, ທີ່ເມືອງໂອດສະໂລ, ເດືອນກັນຍາ, 2012. ຮູບຖ່າຍໂດຍ: ສີວັນ ໄກເກຍ/ອົງການເຫັດໄອ*

ທ້າວ ພົງສະຫວັດ ມະນີທອງ, ຜູ້ລອດຊີວິດຈາກ ລບຕ ຂອງລາວ ແລະ ສະມາຊິກກຸ່ມໂຄສະນາຕ້ານລະເບີດລູກຫວ່ານແຕ່ປີ 2010, ໂອ້ລົມກັບລັດຖະມົນຕີວ່າການກະຊວງການຕ່າງປະເທດສະຫະລັດອາເມລິກາ ທ່ານນາງ ເຮລາຣີ ຄຼິນຕັນ ໃນເດືອນກໍລະກົດ, 2012:

"ຂ້ອຍຢາກເຫັນລັດຖະບານທັງໝົດຮ່ວມກັນຕ້ານລະເບີດລູກຫວ່ານ, ຂ້ອຍຢາກເຫັນ ລບຕ ຕົກຄ້າງຢູ່ລາວ ໄດ້ຖືກກວດກູ້ອອກໝົດ ແລະ ຜູ້ລອດຊີວິດຈາກ ລບຕ ທັງໝົດກໍ່ໄດ້ຮັບການຊ່ວຍເຫຼືອ".



*ລັດຖະມົນຕີວ່າການກະຊວງການຕ່າງປະເທດສະຫະລັດອາເມລິກາ ທ່ານນາງ ເຮລາຣີ ຄຼິນຕັນ ໂອ້ລົມກັບກຸ່ມໂຄສະນາຕ້ານລະເບີດລູກຫວ່ານ ທ້າວ ພົງສະຫວັດ ມະນີທອງ. ຮູບພາຍໂດຍ: ເບູນເດນ ສ໌ມີອາໂລສ໌ກີ*

## ວຽກຈຸດສຸມໃນປີ 2013:

ອົງການເຫັດໄອ ໄດ້ຮັບທຶນສະໜັບສະໜູນໃໝ່ຈາກລັດຖະບານເນເທີແລນ ເພື່ອຂະຫຍາຍຄວາມອາດສາມາດໃນການກວດກູ້ ແລະ ການຈັດຕັ້ງປະຕິບັດວຽກງານສຳຫຼວດທາງດ້ານວິຊາການ. ພ້ອມນັ້ນ, ກໍ່ຈະໄດ້ນຳໃຊ້ເຕັກນິກວິທີການແບບໃໝ່ເຂົ້າໃນວຽກງານໂຄສະສະນາສຶກສາຄວາມສ່ຽງຈາກ ລບຕ ອີກດ້ວຍ. ສ່ວນໂຄງການທົດລອງສຳຫຼວດພື້ນທີ່ບູລິມະສິດ ລບຕ ຕົກຄ້າງຂັ້ນເມືອງ ກໍ່ໄດ້ດຳເນີນຢູ່ເມືອງເຊໂປນ ແລະ ວິລະບູລີ.

ນອກຈາກນັ້ນ, ທຶນສະໜັບສະໜູນໃໝ່ກໍ່ຈະເຂົ້າມາອົງການເຫັດໄອ ເພື່ອເລີ່ມໃຫ້ການຊ່ວຍເຫຼືອແກ່ຜູ້ຖືກເຄາະຮ້າຍຈາກ ລບຕ, ຊຶ່ງຈຸດປະສົງແມ່ນແນໃສ່ປັບປຸງທາງດ້ານເສດຖະກິດຂອງຜູ້ລອດຊີວິດຈາກ ລບຕ ແລະ ຄົນເສຍອົງຄະອື່ນໆ ຢູ່ເມືອງເຊໂປນ ແລະ ເມືອງນອງ ແຂວງສະຫັວນນະເຂດ.

ໃນປີ 2013, ກຸ່ມໂຄສະນາຕ້ານລະເບີດລູກຫວ່ານ ຈະສືບຕໍ່ໂຄສະນາລະດົມຂົນຂວາຍເພື່ອຕ້ານລະເບີດ ລວມທັງ ຂົນຂວາຍການສະໜັບສະໜູນເຂົ້າໃສ່ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຢູ່ພາຍໃນປະເທດ ແລະ ສາກົນ ໃຫ້ຫຼາຍຂຶ້ນ.

## ຜູ້ໄດ້ຮັບຜົນປະໂຫຍດ:

ຜູ້ໄດ້ຮັບຜົນປະໂຫຍດລວມມີທັງໝົດ 15,000 ຄົນ ຈາກ 40 ບ້ານຢູ່ໃນເມືອງນອງ, ເຊໂປນ ແລະ ວິລະບູລີ ແຂວງສະຫວັນນະເຂດ, ຊຶ່ງທັງໝົດນັ້ນ, ແມ່ນໄດ້ຮັບຜົນປະໂຫຍດໂດຍກົງຈາກການໂຄສະນາສຶກສາຄວາມສ່ຽງຈາກ ລບຕ, ການກວດກູ້ ແລະ ທຳລາຍ ລບຕ ໂດຍການສະໜັບສະໜູນຂອງ:

- ອຳນາດການປົດຄອງທ້ອງຖິ່ນ
- ກອງທຶນຫຼຸດຜ່ອນຄວາມທຸກຍາກ
- ອົງການພັດທະນາຂອງເວວຮັງເກີຮິບ

ອຳນາດການປົກຄອງທ້ອງຖິ່ນຈະເປັນຜູ້ພິຈາລະນາຄູ່ຮ່ວມງານຕ່າງໆທີ່ຈະເຮັດວຽກຮ່ວມນຳພວກເພິ່ນ ເພື່ອຄຳນຶງເຖິງຜົນປະໂຫຍດຕ່າງໆທີ່ທ້ອງຖິ່ນຈະໄດ້ຮັບ ໂດຍມີການປຶກສາຫາລືທຳ

ຄວາມເຂົ້າໃຈຮ່ວມກັນ ເພື່ອກໍານົດພື້ນທີ່ຜົນກະທົບຈາກລະເບີດບໍ່ທັນແຕກທີ່ຕົກຄ້າງ, ປະເມີນຜົນກະທົບ ແລະ ກໍານົດບູລິມະສິດການພັດທະນາຂອງເມືອງ ໃຫ້ແກ່ຄູ່ຮ່ວມປະຕິບັດງານໄດ້ຮັບຊາບ, ຊຶ່ງຈະເຮັດໄດ້ແນວນັ້ນ ຕ້ອງໄດ້ເຊື່ອມສານເຂົ້າກັບແຜນພັດທະນາຂອງເມືອງນັ້ນໆ.

ຄຊກລ ໃນນາມເປັນຄູ່ຮ່ວມງານເຊັ່ນດຽວກັນ ກໍ່ຈະພິຈາລະນາກຸ່ມເປົ້າໝາຍໃນການດໍາເນີນງານ ກໍ່ຄື ເສີມສ້າງຄວາມອາດສາມາດຂອງພະນັກງານປະສານງານ ຄຊກລ ຢູ່ຂັ້ນແຂວງ ໃຫ້ມີຄວາມເຂັ້ມແຂງໃນການປະສານງານ ແລະ ຕິດຕາມກວດກາການດໍາເນີນວຽກງານແກ້ໄຂບັນຫາ ລບຕ ຢູ່ແຂວງສະຫວັນນະເຂດ. ພ້ອມດຽວກັນນັ້ນ, ຄຊກລ ຍັງຈະໄດ້ຮັບຜົນປະໂຫຍດຈາກໂຄງການທົດລອງສໍາຫຼວດຕ່າງໆ ທີ່ຈະເປັນການຖອດຖອນບົດຮຽນໃນທົ່ວຂະແໜງການແກ້ໄຂບັນຫາ ລບຕ ອີກດ້ວຍ.

ອໍານາດການປົກຄອງຂັ້ນເມືອງ, ກອງທຶນຫຼຸດຜ່ອນຄວາມທຸກຈົນ ແລະ ໂຄງການພັດທະນາຂອງເວວທັງເກີຣີນ ຈະພິຈາລະນາຜູ້ທີ່



*ເຄື່ອງກວດຫາລະເບີດຂອງອົງການເຮັດໄອ*
*ພາບຖ່າຍໂດຍ: ນິໂຄລາດ ແອັກເຊວໂຣດ*

ຈະໄດ້ຮັບຜົນປະໂຫຍດ, ເຊິ່ງກໍ່ແມ່ນປະຊາຊົນຜູ້ທີ່ມີດິນດອນຕອນຫຍ້າ ທີ່ຕ້ອງການຈະກວດກູ້ ລບຕ ອອກຈາກພື້ນທີ່ ເພື່ອໃຫ້ສາມາດເຮັດການພັດທະນາຕ່າງໆໄດ້ ໂດຍປັດສະຈາກຜົນກະທົບຈາກ ລບຕ ຕົກຄ້າງຢູ່ໃນພື້ນທີ່ຂອງເຂົາເຈົ້າ.

## ເຂດພື້ນທີ່ປະຕິບັດງານ:

| *ກິດຈະກໍາ* | *ສະຖານທີ່ຈັດຕັ້ງປະຕິບັດກິດຈະກໍາ* |
|---|---|
| ການກວດກູ້ເນື້ອທີ່ | ແຂວງສະຫວັນນະເຂດ: ເມືອງນອງ, ເຊໂປນ ແລະ ວິລະບູລີ |
| ການສໍາຫຼວດ ແລະ ການທໍາລາຍເຄື່ອນທີ່ | ແຂວງສະຫວັນນະເຂດ: ເມືອງນອງ, ເຊໂປນ ແລະ ວິລະບູລີ |
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ແຂວງສະຫວັນນະເຂດ: ເມືອງນອງ, ເຊໂປນ ແລະ ວິລະບູລີ |
| ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ | (ກຸ່ມຕ້ານລະເບີດລູກຫວ່ານ) ແຂວງສະຫວັນນະເຂດ, ຄໍາມ່ວນ, ບໍລິຄໍາໄຊ ແລະ ຊຽງຂວາງ |

## ສະພາບການເງິນ:

**ຄ່າໃຊ້ຈ່າຍໃນປີ 2012 (ໂດລາສະຫະລັດ)**

| ***ລາຍລະອຽດ*** | *ຈໍານວນເງິນ (ໂດລາສະຫະລັດ)* |
|---|---:|
| ຄ່າໃຊ້ຈ່າຍສໍາລັບບຸກຄະລາກອນ | 679,069 |
| ຄ່າໃຊ້ຈ່າຍສໍາລັບການປະຕິບັດງານ | 357,680 |
| ຄ່າໃຊ້ຈ່າຍສໍາລັບການປະຕິບັດງານພິເສດ | 0 |
| ຄ່າໃຊ້ຈ່າຍສໍາລັບຊື້ອຸປະກອນ-ຊັບສິນຄົງທີ່ | 0 |
| ຄ່າໃຊ້ຈ່າຍສໍາລັບຊື້ອຸປະກອນ-ຊັບສິນບໍ່ຄົງທີ່ | 50,518 |
| *ລວມ* | ***1,087,267*** |

## ການປະກອບສ່ວນຂອງຜູ້ໃຫ້ທຶນ ໃນປີ 2012 (ໂດລາສະຫະລັດ)

| ***ຜູ້ໃຫ້ທຶນ*** | ***ເງິນທີ່ໄດ້ຮັບໃນປີ 2012 (ໂດລາສະຫະລັດ)*** |
|---|---:|
| ສະຫະພາບຢູລົບ | 502,512 |
| ກະຊວງການຕ່າງປະເທດຂອງລຸກຊໍາບວກ | 171,655 |
| ກະຊວງການຕ່າງປະເທດຂອງອິດຕາລີ | 43,588 |
| ບູຊາ | 200,842 |
| ກະຊວງການຕ່າງປະເທດຂອງລຸກຊໍາບວກ | 37,446 |
| ທຶນຂອງອົງການເອງ | 131,224 |
| *ລວມ* | ***1,087,267*** |

# ອົງການເກັບກູ້ລະເບີດເຈມັດ (ເຈມັດ)

## ກິດຈະກຳໃນປີ 2012:

**ການເກັບກູ້ ລບຕ ຢູ່ແຂວງຈຳປາສັກ ແລະ ສາລະວັນ**

ໃນເດືອນກໍລະກົດ 2012, ອົງການເຈມັດ ໄດ້ເລີ່ມດຳເນີນງານການກວດກູ້ ລບຕ ໃນເນື້ອທີ່ດິນກະສິກຳຢູ່ເມືອງປາກຊອງ ໂດຍປະກອບມີ: ກວດກູ້ ແລະ ທຳລາຍ ໃນເນື້ອທີ່ປູກປ່າ ແລະ ເນື້ອທີ່ຂອງໂຄງການ ຈຳນວນ 200 ເຮັກຕາ, ໃນນັ້ນ (8.9 ເຮັກຕາ ແມ່ນຢູ່ເມືອງເລົ່າງາມ).

**ການເກັບກູ້ ລບຕ ຢູ່ແຂວງອັດຕະປື (ໄລຍະ II)**

ເປົ້າໝາຍທັງໝົດຂອງອົງການເຈມັດ ໃນການກວດກູ້ ລບຕ ຢູ່ແຂວງອັດຕະປື ກໍ່ເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນ, ຊຶ່ງຜ່ານການຈັດຕັ້ງປະຕິບັດ ພວກເຮົາກໍ່ໄດ້ຮັບຜົນສຳເລັດຕາມ 4 ເປົ້າໝາຍທີ່ວາງໄວ້ຄື:

1. ສະໜັບສະໜູນຄ່າໃຊ້ຈ່າຍສຳລັບການປະຕິບັດງານໃຫ້ແກ່ ຄກລ ຢູ່ແຂວງອັດຕະປື ເພື່ອປະຕິບັດໜ້າວຽກດັ່ງລຸ່ມນີ້:

- ການກວດກູ້ ລບຕ
- ປັບປຸງທັກສະໃນການທຳລາຍລບຕໂດຍຜ່ານການຝຶກອົບຮົມທາງດ້ານວິຊາການ
- ສ້າງຄວາມອາດສາມາດທາງດ້ານການເງິນ

2. ສະໜອງຊ່ຽວຊານທີ່ປຶກສາ ເພື່ອສະໜັບສະໜູນ ຄກລ ຢູ່ແຂວງອັດຕະປື

- ຊ່ຽວຊານທີ່ປຶກສາ ໃຫ້ຄຳແນະນຳແກ່ຜູ້ປະສານງານ ຄກລ ແຂວງອັດຕະປື, ຮອງຜູ້ປະສານງານ ຫຼື ຊ່ຽວຊານທຳລາຍ ລບຕ ຂັ້ນສູງທີ່ເປັນຄົນລາວ ໃນການປະຕິບັດງານໃຫ້ມີປະສິດທິຜົນ.
- ຊ່ຽວຊານທີ່ປຶກສາ ປັບປຸງເຕັກນິກການທຳລາຍລບຕໃຫ້ແກ່ຊ່ຽວຊານທຳລາຍ ລບຕ ຂັ້ນສູງຄົນລາວ, ຫົວໜ້າທີມ ແລະ ນັກກວດກູ້ ລບຕ ຢູ່ແຂວງອັດຕະປື.

3.ປົດປ່ອຍເນື້ອທີ່ດິນກະສິກຳ ເພື່ອຊ່ວຍໃນການຫຼຸດຜ່ອນຄວາມທຸກຍາກ ໂດຍສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມຂອງແຂວງອັດຕະປື.

4. ສ້າງສາຍພົວພັນໃຫ້ມີຄວາມເຂັ້ມແຂງ ລະຫວ່າງ ປະຊາຊົນຍີ່ປຸ່ນ ແລະ ປະຊາຊົນລາວ ລວມທັງ ເຈມັດ ແລະ ຄກລ.

## ຜົນສຳເລັດຕົ້ນຕໍໃນປີ 2012:

**ການເກັບກູ້ ລບຕ ຢູ່ແຂວງຈຳປາສັກ ແລະ ສາລະວັນ**

ພາຍຫຼັງດຳເນີນການກວດກູ້ ລບຕ ຢູ່ສະໜາມ ມາເປັນເວລາ 4 ເດືອນ, ສິ້ນສຸດການເຮັດວຽກໃນເດືອນພະຈິກ 2012, ເຈມັດ ສາມາດກວດກູ້ ລບຕ ອອກຈາກເນື້ອທີ່ໄດ້ຈຳນວນ 45.1 ເຮັກຕາ. ເຖິງຢ່າງໃດກໍ່ຕາມ, ເຈມັດ ຈະສືບຕໍ່ສູ້ຊົນໃຫ້ໄດ້ 55 ເຮັກຕາ ຕາມເປົ້າໝາຍ ໃນຊ່ວງລະດູຝົນປີ 2013 ນີ້.

- ສຳເລັດການຖາງປ່າໃນເນື້ອທີ່ກຽມຈະເຮັດການກູ້: ສຳເລັດ 50 ເຮັກຕາ ຂອງແຜນການ 65 ເຮັກຕາ (77%)
- ສຳເລັດການກວດກູ້ເນື້ອທີ່ໄດ້ 45.1 ເຮັກຕາ ຂອງແຜນການ 55 ເຮັກຕາ (82%)

**ເຈມັດ ຍັງໄດ້ສະໜອງຊ່ຽວຊານທີ່ປຶກສາ ເພື່ອສິດສອນພະນັກພາກສະໜາມຂອງ ຄກລ ໂດຍປະກອບມີດັ່ງລຸ່ມນີ້:**

1. ສິດສອນ ແລະ ໃຫ້ຄຳແນະນຳໃນການບໍລິຫານຄຸ້ມຄອງການວຽກງານກວດກູ້ ລບຕ ຄື:

- ຂັ້ນຕອນໃນການປະຕິບັດງານເພື່ອຮັບປະກັນຄວາມປອດໄພ
- ຂັ້ນຕອນໃນການຄວບຄຸມ ແລະ ການບໍລິຫານຄຸ້ມຄອງ
- ສ້າງຂັ້ນຕອນຄວາມປອດໄພໃນເວລາດຳເນີນການກວດກູ້
- ແນະນຳວິທີການນຳໃຊ້ເຄື່ອງມືໃນການວາງແຜນ ເຊັ່ນ: ການນຳໃຊ້ກະດານເຄື່ອນໄຫວກິດຈະກຳ

2. ສິດສອນເຕັກນິກວິຊາການຢູ່ສະໜາມ:

- ການຖາງປ່າໃຫ້ມີຄວາມປອດໄພ
- ແນະນຳວິທີພິຈາລະນະເບິ່ງສະໜາມກວດກູ້ທີ່ຢູ່ໃກ້ກັບບ້ານເຮືອນປະຊາຊົນ ວ່າຕ້ອງເຮັດແນວໃດ
- ກະກຽມວຽກທົ່ວໄປໃນເວລາດຳເນີນການກວດກູ້
- ຕິດປ້າຍໂຄງຮ່າງການຈັດຕັ້ງໃສ່ບ່ອນທີ່ມີການປະຕິບັດງານ

3. ສິດສອນເຕັກນິກໃນການກວດກູ້:

- ການຄວບຄຸມ ແລະ ການເລືອກໃຊ້ເຄື່ອງກວດໃຫ້ຖືກຕ້ອງ
- ການຄົ້ນຫາບ່ອນທີ່ສົງໃສ ພາຍຫຼັງທີ່ໃຊ້ເຄື່ອງກວດ

**ການເກັບກູ້ ລບຕ ຢູ່ແຂວງອັດຕະປື**

1. ການກວດກູ້ ລບຕ: ສາມາດກວດກູ້ເນື້ອທີ່ໄດ້ 116 ເຮັກຕາ, ຊຶ່ງເປັນການປະກອບສ່ວນເຂົ້າໃນການໃນປັບປຸງເງື່ອນໄຂການດໍາລົງຊີວິດຊອງປະຊາຊົນ ແລະ ເປັນການສ້າງຄວາມປອດໄພໃຫ້ແກ່ປະຊາຊົນທີ່ດໍາລົງຊີວິດໃນເຂດພື້ນທີ່ ລບຕ ຕົກຄ້າງ.

2. ທັກສະໃນການກວດກູ້ລບຕ: ຈຸດປະສົງຂອງການຝຶກອົບຮົມແມ່ນເພື່ອທົດສອບຄວາມຮູ້ ແລະ ຄວາມສາມາດຂອງທີມງານໂດຍນໍາໃຊ້ເຕັກນິກວິຊາການທີ່ຮຽນມາ ໃນການສືບສວນຄົ້ນຫາ ລບຕ ໃນເຂດພື້ນທີ່ໆມີການຕົກຄ້າງຕົວຈິງ. ພ້ອມນັ້ນ, ກໍ່ເປັນການປະເມີນເບິ່ງຜົນໄດ້ຮັບຂອງການຝຶກອົບຮົມອີກດ້ວຍ.

3. ການຝຶກອົບຮົມກ່ຽວກັບວຽກງານໂຄສະນາສຶກສາຊຸມຊົນ: ຜ່ານການຝຶກອົບຮົມ,ປະຈຸບັນນີ້ທີມງານກໍ່ສາມາດນໍາໃຊ້ເຄື່ອງສາຍໄດ້, ສາມາດນໍາໃຊ້ຄອມພິວເຕີ້ ແລະ ໂປຼແກຼມອື່ນໆ ເພື່ອຊ່ວຍໃຫ້ຜູ້ຊົມເຂົ້າໃຈຂໍ້ຄວາມໂຄສະນາໄດ້ງ່າຍຂຶ້ນ.

## ຂ່າວດີ:

- ມີການສ້າງວຽກເຮັດງານທໍາໃຫ້ແກ່ປະຊາຊົນຢູ່ແຂວງຈໍາປາສັກ ແລະ ສາລະວັນ ໂດຍການຈ້າງປະຊາຊົນຢູ່ທ້ອງຖິ່ນໃຫ້ຊ່ວຍໃນການຖາງປ່າ ເພື່ອອໍານວຍຄວາມສະດວກໃຫ້ແກ່ທີມງານສາມາດເຂົ້າໄປ ແລະ ນໍາເອົາອຸປະກອນຮັບໃຊ້ຕ່າງໆເຂົ້າໄປຍັງສະຖານທີ່ກວດກູ້ໄດ້.
- ເຈມັດ ໄດ້ສໍາເລັດການສິດສອນບົດຮຽນຕ່າງໆໃຫ້ແກ່ ຄກລ ຢູ່ແຂວງ ອັດຕະປື ໂດຍການສະໜັບສະໜູນຂອງກອງທຶນນິບປອນ. ນອກຈາກນັ້ນ, ໃນເດືອນມີນາ 2012, ເຈມັດ ກໍ່ໄດ້ມອບລົດ ຈໍານວນ 2 ຄັນ ໃຫ້ແກ່ ຄກລ ແຂວງອັດຕະປືອີກດ້ວຍ, ສິ່ງນີ້ ເຈມັດ ຂໍສະແດງຄວາມຂອບໃຈມາຍັງສະໂມສອນໄລອອນສາກົນ ທີ່ໄດ້ໃຫ້ການສະໜັບສະໜູນ ຄກລ ແຂວງອັດຕະປື.

## ວຽກຈຸດສຸມໃນປີ 2013:

ເຈມັດ ຈະສືບຕໍ່ເຮັດວຽກຮ່ວມກັບອໍານາດການປົກຄອງຂັ້ນແຂວງ, ເມືອງ ແລະ ເຈົ້າຂອງດິນ ເພື່ອດໍາເນີນການກວດກູ້ຢູ່ໃນເຂດພື້ນທີ່ໆຍັງບໍ່ທັນໄດ້ກວດກູ້ ລບຕ ຢູ່ແຂວງຈໍາປາສັກ ແລະ ສາລະວັນ.

ກ່ອນທີ່ທີມງານກວດກູ້ຈະເລີ່ມຕົ້ນກວດກູ້ ລບຕ ນັ້ນ, ຕ້ອງໄດ້ມີການຖາງປ່າອອກກ່ອນ. ໃນປີ 2013, ເຈມັດ ຈະສືບຕໍ່ຈ້າງປະຊາຊົນທ້ອງຖິ່ນຢູ່ແຂວງຈໍາປາສັກ ແລະ ສາລະວັນ ເພື່ອຊ່ວຍໃນການຖາງປ່າໃນເຂດພື້ນທີ່ໆຈະເຮັດການກວດກູ້, ຊຶ່ງວຽກອັນໃຫຍ່ໆແມ່ນຈະເຮັດໃຫ້ສໍາເລັດໃນຊ່ວງລະດູຝົນນີ້.

## ຄູ່ຮ່ວມປະຕິບັດງານ:

ໃນປີ 2012, ເຈມັດ ໄດ້ສ້າງສາຍສໍາພັນທີ່ແໜ້ນແຟ້ນກັບ ຄກລ ແຂວງອັດຕະປື ແລະ ໄດ້ເຮັດວຽກຮ່ວມກັບບໍລິສັດເອກະຊົນເກັບກູ້ ລບຕ ຢູ່ທາງພາກໃຕ້ຂອງລາວ. ມີຜູ້ທີ່ໄດ້ຮັບຜົນປະໂຫຍດຈາກການດໍາເນີນງານຂອງເຈມັດ ຈໍານວນທັງໝົດ 6,416 ຄົນ ຢູ່ໃນ 5 ບ້ານ, ຊຶ່ງປະຈຸບັນນີ້ ເຂົາເຈົ້າກໍ່ສາມາດທໍາການຜະລິດໄດ້ໂດຍປັດສະຈາກໄພຂົ່ມຂູ່ຂອງ ລບຕ ອີກຕໍ່ໄປ.

## ບຸກຄະລາກອນໃນປີ 2012:

| *ປະຈໍາຢູ່ຫ້ອງການ* | | | | *ປະຈໍາຢູ່ຝ່າຍປະຕິບັດງານ* | | | |
|---|---|---|---|---|---|---|---|
| *ລາວ* | | *ຕ່າງປະເທດ* | | *ລາວ* | | *ຕ່າງປະເທດ* | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 5 | 3 | 1 | 3 | 6 | 0 | 2 | 0 |

## ຕົວເລກສະຖິຕິໃນປີ 2012:

**ການກວດກູ້:**

| *ການກວດກູ້ (ເຮັກຕາ)* | | |
|---|---|---|
| *ເນື້ອທີ່ກະສິກໍາ* | *ເນື້ອທີ່ພັດທະນາ* | *ລວມ* |
| ລວມຢູ່ໃນຕົວເລກຂອງ ຄກລ | ລວມຢູ່ໃນຕົວເລກຂອງ ຄກລ | 45.1 |

## ພື້ນທີ່ການປະຕິບັດງານ:

| ກິດຈະກໍາ | ສະຖານທີ່ຈັດຕັ້ງປະຕິບັດກິດຈະກໍາ |
|---|---|
| ການກວດກູ້ເນື້ອທີ່ | ເມືອງປາກຊ່ອງ, ແຂວງຈໍາປາສັກ ແລະ ແຂວງອັດຕະປື |

## ການປະກອບສ່ວນຂອງຜູ້ໃຫ້ທຶນໃນປີ 2012: (ໂດລາສະຫະລັດ)

ອີງການເຈມັດ ໄດ້ຮັບທຶນສະໜັບສະໜູນຈາກເງິນບໍລິຈາກຂອງປະຊາຊົນຍີ່ປຸ່ນ ກະຊວງການຕ່າງປະເທດຍີ່ປຸ່ນ ໃນປີ 2012.

# ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ)

## ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ)

ຄກລ ແມ່ນອົງການປະຕິບັດງານແກ້ໄຂບັນຫາ ລບຕ ລະດັບຊາດ ໃນ ສປປ ລາວ. ປະຕິບັດງານຢູ່ 9 ແຂວງທີ່ໄດ້ຮັບຜົນກະທົບຈາກ ລບຕ ໃນທົ່ວປະເທດ, ມີໜ້າທີ່ໃນການກວດກູ້ ລບຕ ອອກຈາກເນື້ອທີ່ດິນກະສິກໍາ ແລະ ຈຸດປະສົງໃນການນໍາໃຊ້ເນື້ອທີ່ດິນຕ່າງໆ ຂອງຊຸມຊົນເຊັ່ນ: ສ້າງໂຮງຮຽນ, ໂຮງໝໍ, ວັດວາອາຮາມ, ຈຸດທີ່ຈະເຮັດນ້ຳລິນ) ແລະ ສໍາລັບກິດຈະກໍາພັດທະນາຕ່າງໆ. ນອກຈາກນັ້ນ, ຄກລ ຍັງດໍາເນີນວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໂດຍປະກອບມີ (ການໂຄສະນາຢູ່ໃນຊຸມຊົນ) ທີ່ມີຜົນກະທົບຈາກ ລບຕ ໃຫ້ຮັບຮູ້ກ່ຽວກັບຜົນຮ້າຍຂອງ ລບຕ. ລັດຖະບານລາວສ້າງຕັ້ງ ຄກລ ຂຶ້ນໃນປີ 1996 ໂດຍການສະໜັບສະໜູນຈາກອົງການ ສປຊ, ອົງການຢູນີເຊບ ແລະ ບັນດາປະເທດຜູ້ໃຫ້ທຶນ. ປະຈຸບັນນີ້, ຄກລ ມີພະນັກງານທັງໝົດປະມານ 1,100 ຄົນ, ຊຶ່ງປະຕິບັດໜ້າທີ່ທາງດ້ານການກວດກູ້ ລບຕ ຫຼາຍຢ່າງ ຄື: 1). ດໍາເນີນການປົດປ່ອຍເນື້ອທີ່ດິນຜ່ານການກວດກູ້ ແລະ ການສໍາຫຼວດທາງດ້ານວິຊາການ; 2). ດໍາເນີນການກວດກູ້ ລບຕ ແບບເຄື່ອນທີ່ (ທໍາລາຍ ລບຕ ທີ່ພົບເຫັນແບບສຸກເສີນ); 3). ດໍາເນີນການສໍາຫຼວດແບບທົ່ວໄປ ແລະ 4). ດໍາເນີນການໂຄສະນາສຶກສາຄວາມສ່ຽງຈາກ ລບຕ.

## ກິດຈະກໍາໃນປີ 2012:

ໃນປີ 2012 ຄກລ ສາມາດປົດປ່ອຍເນື້ອທີ່ໄດ້ 3,199 ເຮັກຕາ ໂດຍຜ່ານການກວດກູ້ ແລະ ການສໍາຫຼວດທາງດ້ານວິຊາການ, ຊຶ່ງປະກອບມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 516,410 ຄົນ. ນອກຈາກນັ້ນ, ຄກລ ຍັງສາມາດທໍາລາຍ ລບຕ ໄດ້ຈໍານວນ 49,189 ໜ່ວຍ, ໃນນັ້ນ ມີລະເບີດລູກຫວ່ານ 23,266 ໜ່ວຍ ເທົ່າກັບ 47 ສ່ວນຮ້ອຍ, ທຽບໃສ່ຈໍານວນ ລບຕ ທັງໝົດທີ່ຖືກທໍາລາຍ. ການເຄື່ອນຍ້າຍ ຫຼື ທໍາລາຍ ລບຕ ກໍ່ເພື່ອເປັນການເພີ່ມຄວາມປອດໄພໃຫ້ແກ່ປະຊາຊົນທີ່ດໍາລົງຊີວິດຢູ່ຊຸມຊົນທີ່ໄດ້ຮັບຜົນກະທົບຈາກ ລບຕ ແລະ ເຮັດໃຫ້ເນື້ອທີ່ມີຄວາມປອດໄພ ເພື່ອໃຫ້ປະຊາຊົນສາມາດຂະຫຍາຍພື້ນທີ່ທໍາການຜະລິດ ແລະ ເຮັດກິດຈະກໍາພັດທະນາເສດຖະກິດ-ສັງຄົມອື່ນໆໄດ້ຫຼາຍຂຶ້ນກວ່າເກົ່າ.

ຄກລ ໄດ້ດໍາເນີນກິດຈະກໍາໂຄສະນາສຶກສາຄວາມສ່ຽງຈາກ ລບຕ ເພື່ອເພີ່ມການໂຄສະນາເຜີຍແຜ່ໃຫ້ແກ່ປະຊາຊົນທີ່ດໍາລົງຊີວິດຢູ່ພື້ນທີ່ໄດ້ຮັບຜົນກະທົບໄດ້ຮັບຮູ້ກ່ຽວກັບຄວາມອັນຕະລາຍຂອງ ລບຕ ແລະ ປ່ຽນແປງພຶດຕິກໍາຂອງ "ກຸ່ມທີ່ມີຄວາມສ່ຽງສູງ". 614 ກິຈະກໍາໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໄດ້ຮັບການຈັດຕັ້ງປະຕິບັດໂດຍອາສາສະໝັກບ້ານ ແລະ ມີຜູ້ທີ່ໄດ້ຮັບຜົນປະໂຫຍດຈໍານວນ 155,362 ຄົນ, ໃນຈໍານວນດັ່ງກ່າວ ມີເດັກນ້ອຍຈໍານວນ 69,081 ຄົນ. ສິ່ງທີ່ກ່າວມາຂ້າງເທິງນັ້ນ ແມ່ນເປົ້າໝາຍທີ່ຕັ້ງໄວ້ໃນປີ 2012 ແລະ ໄດ້ສໍາເລັດຕາມຄາດໝາຍ.

ກິດຈະກໍາໂຄສະນາສຶກາຊຸມຊົນແມ່ນມີການເຊື່ອມໂຍງກັນຢ່າງໃກ້ສິດກັບວຽກງານສໍາຫຼວດ ໂດຍອະນຸຍາດໃຫ້ຊາວບ້ານເຂົ້າມາຊ່ວຍທີມງານສໍາຫຼວດໃນການກໍານົດພື້ນທີ່ຕົກຄ້າງຂອງລະເບີດບໍ່ທັນແຕກ. ນອກຈາກນັ້ນ, ທີມງານທໍາລາຍ ລບຕ ແບບເຄື່ອນທີ່ຍັງສາມາດດໍາເນີນວຽກງານທໍາລາຍ ລບຕ ແບບເຄື່ອນທີ່ ໄດ້ຈໍານວນ 1,672 ໜ້າວຽກຢູ່ໃນ 1,151 ບ້ານ, ສາມາດທໍາລາຍລະເບີດໄດ້ຈໍານວນທັງໝົດ 20,342 ໜ່ວຍ, ໃນນັ້ນ ມີລະເບີດລູກຫວ່ານຈໍານວນ 8,754 ໜ່ວຍ, ຊຶ່ງພາຍຫຼັງໄດ້ຮັບການຮ້ອງຂໍແລ້ວກໍ່ລົງໄປທໍາລາຍ ລບຕ ແບບສຸກເສີນໃຫ້ພາຍໃນ 2 ອາທິດ.



*ບົມໃຫຍ່ທີ່ກໍາລັງລໍຖ້າເຄື່ອນຍ້າຍໄປສະໜາມທໍາລາຍ ຢູ່ແຂວງສາລະວັນ.*

ຄວາມພະຍາຍາມທັງໝົດນັ້ນ ກໍ່ເພື່ອເປັນການປະກອບສ່ວນເຂົ້າໃນການຫຼຸດຈໍານວນຜູ້ເສຍຊີວິດ ແລະ ໄດ້ຮັບບາດເຈັບຈາກ ລບຕ ລົງໃນແຕ່ລະປີ ຈາກ 302 ຄົນ ລົງເຫຼືອ 56 ຄົນ ຕະຫຼອດຊ່ວງໄລຍະ 5 ປີ ແຕ່ 2008-2012[1]. ໃນປີ 2012 ຈໍານວນຜູ້ເສຍຊີວິດ ແລະ ໄດ້ຮັບບາດເຈັບຈາກ ລບຕ ໄດ້ຫຼຸດລົງທຽບໃສ່ປີ 2011 ແມ່ນຫຼຸດລົງ 47 ສ່ວນຮ້ອຍ.

ການເຄື່ອນໄຫວວຽກງານຂອງ ຄກລ ແມ່ນບໍ່ສະເພາະແຕ່ປະກອບສ່ວນເຂົ້າໃນການສ້າງຄວາມປອດໄພໃຫ້ແກ່ປະຊາຊົນທີ່ດໍາລົງຊີວິດໃນເຂດທີ່ມີ ລບຕ ຕົກຄ້າງເທົ່ານັ້ນ, ແຕ່ມັນຍັງເປັນການເພີ່ມໂອກາດໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງບັນດາເມືອງທີ່ມີຄວາມທຸກຍາກທີ່ສຸດ ອີກດ້ວຍ. ນອກຈາກການກວດກູ້ ລບຕ ສໍາລັບເນື້ອທີ່ກະສິກໍາແລ້ວ, ຄກລ ຍັງໄດ້ເຄື່ອນໄຫວວຽກງານກວດກູ້ ລບຕ ເພື່ອຮັບໃຊ້ໃຫ້ແກ່ໂຄງການພັດທະນາຕ່າງໆຂອງລັດຖະບານ, ໂຄງການພັດທະນາຕ່າງໆຂອງອົງການ ເອັນຈີໂອ ໃນການປັບປຸງໂຄງລ່າງພື້ນຖານ ເປັນຕົ້ນແມ່ນ ການສ້າງລະບົບຊົນລະປະທານ, ໂຮງຮຽນ, ໂຮງໝໍ, ສຸກສາລາ, ໂຄງການນ້ຳລິນ, ຖະໜົນຫົນທາງ ແລະ ການພັດທະນາອື່ນໆ. ການປະຕິບັດວຽກງານຂອງ ຄກລ ແມ່ນສອດຄ່ອງກັບແຜນຍຸດທະສາດຂອງລັດຖະບານໃນການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII ຂອງລັດຖະບານ.

ນອກຈາກນັ້ນ, ຄກລ ຍັງໄດ້ສະໜັບສະໜູນການກວດກູ້ ລບຕ ໃຫ້ແກ່ບັນດາໂຄງການພັດທະນາອື່ນໆ ໂດຍບໍ່ໄດ້ຄິດໄລ່ເງິນ, ຊຶ່ງໂຄງການພັດທະນາຕ່າງໆທີ່ ຄກລ ໄດ້ສະໜັບສະໜູນປະກອບມີ: ອົງການໄຈກາ, ອົງການແຄສາກົນ, ອົງການເວີວິເຊັ້ນ, ອົງການຢູນີເຊບ ແລະ ອື່ນໆ), ຊຶ່ງລວມເນື້ອທີ່ທັງໝົດທີ່ກວດກູ້ແມ່ນ 167 ເຮັກຕາ ໂດຍມີຜູ້ໄດ້ຮັບຜົນປະໂຫຍດຈໍານວນ 127,607 ຄົນ ຈາກການກວດກູ້ ລບຕ ໃນຊ່ວງປີ 2012. ຄກລ ດໍາເນີນການກວດກູ້ ລບຕ ແບບບໍ່ຫວັງຜົນກໍາໄລ ໃຫ້ແກ່ໂຄງການພັດທະນາຕ່າງໆ ກໍ່ເພື່ອເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ. ຄກລ ບໍ່ໄດ້ດໍາເນີນການກວດກູ້ ລບຕ ເພື່ອຮັບໃຊ້ໂຄງການລົງທຶນ ຫຼື ໂຄງການສະແຫວງຫາຜົນກໍາໄລແຕ່ຢ່າງໃດ.

## ຜົນສໍາເລັດຕົ້ນຕໍໃນປີ 2012:

[1] ຂໍ້ມູນຂອງວັນທີ 15 ກຸມພາ 2013, ຄຊກລ.



*ທີມງານໂຄສະນາສຶກສາຊຸມຊົນ ກຳລັງສິດສອນກ່ຽວກັບຄວາມອັນຕະລາຍຂອງ ລບຕ ໃຫ້ແກ່ນັກຮຽນຢູ່ຊັ້ນປະຖົມສຶກສາ.*

ຜົນສຳເລັດອັນໃຫຍ່ຫຼວງອີກຢ່າງໜຶ່ງຂອງ ຄກລ ໃນປີ 2012 ນັ້ນກໍ່ຄືການເຮັດໃຫ້ຈຳນວນຜູ້ເສຍຊີວິດ ແລະ ໄດ້ຮັບບາດເຈັບຈາກ ລບຕ ຈາກ 302 ຄົນໃນປີ 2008 ຫຼຸດລົງມາເປັນ 56 ຄົນໃນປີ 2012, ທຽບໃສ່ຈຳນວນໃນປີ 2011 ແມ່ນຫຼຸດລົງ 47 ສ່ວນຮ້ອຍ.

ຄກລ ສາມາດປົດປ່ອຍເນື້ອທີ່ໄດ້ 3,199 ເຮັກຕາ ໂດຍຜ່ານການກວດກູ້ ແລະ ການສຳຫຼວດທາງເຕັກນິກ ໂດຍມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 516,410 ຄົນ. ໃນປີ 2012, ຄກລ ສາມາດທຳລາຍ ລບຕ ໄດ້ຈຳນວນ 49,189 ໜ່ວຍ, ໃນນັ້ນ ມີລູກລະເບີດລູກຫວ່ານຈຳນວນ 23,266 ໜ່ວຍ ໂດຍຜ່ານການກວດກູ້, ການສຳຫຼວດທາງດ້ານວິຊາການ ແລະ ການທຳລາຍເຄື່ອນທີ່.

ຄກລ ໄດ້ດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ເພື່ອເພີ່ມການໂຄສະນາເຜີຍແຜ່ໃຫ້ແກ່ປະຊາຊົນທີ່ດຳລົງຊີວິດຢູ່ພື້ນທີ່ໄດ້ຮັບຜົນກະທົບ ໄດ້ຮັບຮູ້ກ່ຽວກັບຄວາມອັນຕະລາຍຂອງ ລບຕ ແລະ ປ່ຽນແປງພຶດຕິກຳຂອງ "ກຸ່ມທີ່ມີຄວາມສ່ຽງສູງ". 614 ກິຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໄດ້ຮັບການຈັດຕັ້ງປະຕິບັດໂດຍອາສາສະໝັກບ້ານ ແລະ ມີຜູ້ທີ່ໄດ້ຮັບຜົນປະໂຫຍດຈຳນວນ 155,362 ຄົນ, ໃນຈຳນວນດັ່ງກ່າວ ມີເດັກນ້ອຍຈຳນວນ 69,081 ຄົນ. ສິ່ງທີ່ກ່າວມາຂ້າງເທິງນັ້ນ ແມ່ນເປົ້າໝາຍທີ່ຕັ້ງໄວ້ໃນປີ 2012.

ຄກລ ມີຄວາມດີໃຈຫຼາຍ ທີ່ສາມາດຕອບຮັບໄດ້ຕາມການຮ້ອງຂໍໃນການໄປທຳລາຍ ລບຕ ແບບເຄື່ອນທີ່ໃຫ້ປະຊາຊົນໂດຍໃຊ້ເວລາສະເລ່ຍບໍ່ເກີນ 2 ອາທິດ, ສາມາດຕອບຮັບການທຳລາຍ ລບຕ ແບບສຸກເສີນໄດ້ທັງໝົດຈຳນວນ 1,672 ໜ້າວຽກໃນປີ 2012. ນອກຈາກນັ້ນ, ກໍ່ຍັງໄດ້ມີການທົບທວນຄືນທັງໝົດກ່ຽວກັບມາດຕະຖານການປະຕິບັດງານຂອງ ຄກລ ອີກດ້ວຍ. ການທົບທວນຄືນດັ່ງກ່າວນີ້ແມ່ນເຮັດໂດຍ ຄຊກລ. ຫຼັງຈາກນັ້ນ, ກໍ່ໄດ້ມີອອກໜັງສືຢັ້ງຢືນຮັບຮອງການປະຕິບັດງານແກ້ໄຂບັນຫາ ລບຕ ໃຫ້ແກ່ ຄກລ ໃນເດືອນກຸມພາ 2012.

ເພື່ອເປັນການປັບປຸງຄວາມອາດສາມາດໃນການຄຸ້ມຄອງການເງິນ, ຄກລ ຈຶ່ງໄດ້ມີການນຳເອົາລະບົບການຄຸ້ມຄອງການເງິນແບບໃໝ່ເຂົ້າມານຳໃຊ້ໃນຕົ້ນປີ 2012. ລະບົບດັ່ງກ່າວນີ້ ມີຊື່ວ່າ "ແອັກແພັກ", ຊຶ່ງຊ່ວຍໃຫ້ ຄກລ ສາມາດຄວບຄຸມແຫຼ່ງທຶນ, ສາມາດຕິດຕາມທຸກການນຳໃຊ້ທຶນໄດ້ຢ່າງຖືກຕ້ອງ ລວມທັງທຶນທີ່ສະໜັບສະໜູນຈາກ ສປຊ ແລະ ທຶນສະໜັບສະໜູນສອງຝ່າຍ.

## ຂ່າວດີ: ອົງການ ໄຈກາ ສະໜັບສະໜູນວັດຖຸອຸປະກອນໃໝ່ໃຫ້ແກ່ ຄກລ

ຄກລ ໄດ້ຕົກລົງເຫັນດີຮ່ວມກັບອົງການ ໄຈກາ ໃນການສະໜອງຈັດຊື້ວັດຖຸອຸປະກອນໃໝ່ໃຫ້ແກ່ ຄກລ ໂດຍປະກອບມີ ພາຫະນະຮັບໃຊ້, ເຄື່ອງກວດລະເບີດ, ຄອມພິວເຕີ້, ເຄື່ອງຈີພີເອັດສ໌ ແລະ ອຸປະກອນອື່ນໆ ລວມມູນຄ່າປະມານ 11 ລ້ານໂດລາສະຫະລັດ. ວັດຖຸອຸປະກອນດັ່ງກ່າວນີ້ ຈະຊ່ວຍເຮັດໃຫ້ການດຳເນີນກິດຈະກຳຕ່າງໆຂອງຄກລ ໄດ້ໄວຂຶ້ນຢ່າງມີປະສິດທິຜົນ ແລະ ຈະຊ່ວຍຫຼຸດຄ່າໃຊ້ຈ່າຍໃນການບົວລະບັດຮັກສາລົງຕື່ມນຳອີກ.

ນອກຈາກນັ້ນ, ຄກລ ຍັງໄດ້ຈັດການຝຶກອົບຮົມກ່ຽວກັບການນຳໃຊ້ລະບົບໄອທີໃຫ້ແກ່ພະນັກງານໃນທຸກໆແຂວງ ໂດຍໄດ້ຮັບການຮ່ວມມື ແລະ ການສະໜັບສະໜູນຈາກອົງການ ໄຈກາ. ຜ່ານການຝຶກອົບຮົມເຮັດໃຫ້ພະນັກງານ ຄກລ ມີຄວາມຮູ້ພື້ນຖານ ແລະ ທັກສະໃນການນຳໃຊ້ຄອມພິວເຕີ້, ຊຶ່ງຊ່ວຍໃຫ້ການເຮັດວຽກຂອງເຂົາເຈົ້າມີປະສິດທິຜົນຫຼາຍຂຶ້ນກວ່າເກົ່າ.

ຄກລ ແລະ ອົງການຊີແມັກ (ສູນເກັບກູ້ລະເບີດຂອງກຳປູເຈຍ) ໄດ້ເລີ່ມຈັດຕັ້ງປະຕິບັດໂຄງການຮ່ວມມື ທີ່ມີຊື່ວ່າ ຊາວ-ຊາວ ໂຄບເພີເລເຊິ້ນ ໂດຍການສະໜັບສະໜູນຂອງອົງການ ໄຈກາ. ທັງສອງອົງການ ໄດ້ຮ່ວມກັນປຶກສາຫາລື ເພື່ອວາງແຜນຈັດກອງປະຊຸມວິຊາການຂຶ້ນ 6 ຄັ້ງ ຢູ່ ສປປ ລາວ ແລະ ກຳປູເຈຍ ໃນຊ່ວງໄລຍະແຕ່ປີ 2012 ເຖິງ 2014. ຈຸດປະສົງຂອງກອງປະຊຸມດັ່ງກ່າວ ແມ່ນແນໃສ່ເພື່ອແລກປ່ຽນທັກສະ, ຄວາມຮູ້ ແລະ ປະສົບການກ່ຽວກັບວຽກງານແກ້ໄຂບັນຫາ ລບຕ ໃນໄລຍະຜ່ານມາຂອງສອງອົງການ ເພື່ອໃຫ້ສາມາດນຳໄປຜັນຂະຫຍາຍເຂົ້າໃນຈັດຕັ້ງປະຕິບັດວຽກງານຂອງຕົນໃຫ້ສຳເລັດຕາມຈຸດປະສົງຄາດໝາຍຂອງແຕ່ລະອົງການ. ໃນປີ 2012 ໄດ້ມີການຈັດກອງປະຊຸມຝຶກອົບຮົມຂຶ້ນແລ້ວ 2 ຄັ້ງ ໂດຍມີຜູ້ເຂົ້າຮ່ວມຝຶກອົບຮົມຈາກ ຄກລ ທັງໝົດ 30 ຄົນ.

## ວຽກຈຸດສຸມໃນປີ 2013:

ຄກລ ຈະສືບຕໍ່ເຄື່ອນໄຫວວຽກງານຢູ່ 9 ແຂວງທີ່ມີຜົນກະທົບ ລບຕ ໃນປີ 2013, ຈະສືບຕໍ່ສະໜັບສະໜູນຊຸມຊົນຕ່າງໆໂດຍສອດຄ່ອງກັບກອບແຜນບູລິມະສິດຂອງຊາດທີ່ກຳນົດໄວ້ໃນແຜນຍຸດທະສາດ, ເສັ້ນທາງກ້າວສູ່ຄວາມປອດໄພ II.

ຫຼາກໆກິດຈະກຳທີ່ຈັດຕັ້ງປະຕິບັດ ກໍ່ເພື່ອສະໜັບສະໜູນໃນການສ້າງຄວາມປອດໄພໃຫ້ແກ່ປະຊາຊົນ ໃຫ້ສາມາດດຳເນີນການພັດທະນາຕ່າງໆ ແລະ ການລຶບລ້າງຄວາມທຸກຍາກ. ກິດຈະກຳຕ່າງໆທີ່ໄດ້ປະຕິບັດນັ້ນ ປະກອບມີ ວຽກແຜນການ ແລະ ວຽກບໍລິຫານຄຸ້ມຄອງການປະຕິບັດງານ, ວຽກບໍລິຫານຄຸ້ມຄອງການເງິນ ແລະ ຖານຂໍ້ມູນ, ວຽກສະໜອງຈັດຊື້, ວຽກຄຸ້ມຄອງຄຸນນະພາບ ເພື່ອສະໜັບສະໜູນການປະຕິບັດງານໃຫ້ມີຄວາມປອດໄພ ແລະ ມີປະສິດທິຜົນ. ພ້ອມນັ້ນ, ກໍ່ມີການຝຶກອົບຮົມເພື່ອປັບປຸງຄວາມອາດສາມາດໃນການປະຕິບັດງານຂອງ ຄກລ ອີກດ້ວຍ.

ຄກລ ຈະສືບຕໍ່ດຳເນີນວຽກງານຢູ່ໃນ 64 ເມືອງ ໃນ 9 ແຂວງທີ່ມີຜົນກະທົບຈາກ ລບຕ, ຊຶ່ງໃນນັ້ນ ມີເມືອງທີ່ທຸກຍາກທີ່ສຸດ 37 ເມືອງ, ຈະລົງເຄື່ອນໄຫວກິດຈະກຳໂຄສະນາສຶກສາຊຸມຊົນຢູ່ 639 ຄັ້ງ ໂດຍທີມງານໂຄສະນາ ແລະ ອາສາສະໝັກບ້ານ. ນອກຈາກນັ້ນ, ຄກລ ຈະດຳເນີນການສຳຫຼວດທົ່ວໄປ 1,817 ໜ້າວຽກ ແລະ ຄາດກະວ່າຈະໃຫ້ສຳເລັດໜ້າວຽກທຳລາຍ ລບຕ

ແບບເຄື່ອນທີ່ໃຫ້ໄດ້1,550 ໜ້າວຽກ,ຈະປົດປ່ອຍເນື້ອທີ່ດິນໃຫ້ໄດ້ 3,167 ເຮັກຕາ ໂດຍຜ່ານການກວດກູ້ ແລະ ການສຳຫຼວດທາງດ້ານວິຊາການ ເພື່ອສະໜັບສະໜູນໃຫ້ແກ່ການພັດທະນາ ແລະ ການລຶບລ້າງຄວາມທຸກຍາກຢູ່ໃນ ສປປ ລາວ.

## ຄູ່ຮ່ວມປະຕິບັດງານ:

- ບໍລິສັດອາມໍກຼູບຂອງອາເມລິກາເໜືອ (ຈົນຮອດເດືອນເມສາ 2012)
- ບໍລິສັດສະເຕີລິ້ງ
- ອົງການເກັບກູ້ລະເບີດເຈນັດ
- ອົງການເກັບກູ້ລະເບີດແມັກ

## ໂຄງການພັດທະນາຕ່າງໆທີ່ ຄກລ ສະໜັບສະໜູນ:

ຄກລ ດຳເນີນການກວດກູ້ລບຕແບບບໍ່ຫວັງຜົນກຳໄລເພື່ອສະໜັບສະໜູນໂຄງການພັດທະນາຕ່າງໆນັ້ນ ກໍ່ເພື່ອເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ. ຄກລ ບໍ່ໄດ້ດຳເນີນການກວດກູ້ ລບຕ ຮັບໃຊ້ໂຄງການລົງທຶນ ຫຼື ໂຄງການສະແຫວງຫາຜົນກຳໄລແຕ່ຢ່າງໃດ.

- ອົງການເວີວິເຊັ້ນ
- ອົງການໄອອາຣ໌ດີ ໄອຟາດ
- ອົງການແຄສາກົນ
- ກອງທຶນຫຼຸດຜ່ອນຄວາມທຸກຍາກ
- ອົງການຢູນີເຊບ
- ອົງການໄຈກາ
- ອົງການອີເອັບພ໌ເອ-ເອັບພ໌ທີໄອ
- ໂຮງຮຽນເດັກນ້ອຍນໍອກແວ
- ອົງການອາດູາ



*ຊາຍຄົນໜຶ່ງ ບອກຈຸດທີ່ລາວພົບເຫັນ ລບຕ ຢູ່ໃນສວນປູກໝາກນັດຂອງລາວ ໃຫ້ແກ່ທີມງານສຳຫຼວດຂອງ ຄກລ ຢູ່ແຂວງຫຼວງພະບາງ.*



*ນັກເກັບກູ້ລະເບີດຍິງ ກະກຽມສະໜາມເພື່ອທຳລາຍ ລບຕ.*

## ບຸກຄະລາກອນໃນປີ 2012:

| *ປະຈຳຢູ່ຫ້ອງການ* | | | | *ປະຈຳຢູ່ຝ່າຍປະຕິບັດງານ* | | | |
|---|---|---|---|---|---|---|---|
| *ລາວ* | | *ຕ່າງປະເທດ* | | *ລາວ* | | *ຕ່າງປະເທດ* | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 93 | 32 | 3 | 1 | 824 | 165 | 1 | 0 |

## ຕົວເລກສະຖິຕິໃນປີ 2012:

| *ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ການໂຄສະນາສຶກສາຊຸມຊົນ* | | *ການສຳຫຼວດ* | | *ການທຳລາຍເຄື່ອນທີ່* | |
|---|---|---|---|---|---|
| ຈ/ນ ບ້ານລົງຢ້ຽມຢາມ | ຜູ້ໄດ້ຮັບຜົນປະໂຫຍດ | ຈ/ນ ບ້ານ | ຈ/ນ ຄັ້ງຢ້ຽມຢາມ | ຈ/ນ ບ້ານ | ຈ/ນ ຄັ້ງຢ້ຽມຢາມ |
| 614 | 155,362 | 1,422 | 2,200 | 1,151 | 1,672 |

### ການກວດກູ້:

| *ຜ່ານການກວດກູ້ (ເຮັກຕາ)* | | | *ຜ່ານການສຳຫຼວດທາງດ້ານວິຊາການ (ເຮັກຕາ)* | | |
|---|---|---|---|---|---|
| ເນື້ອທີ່ກະສິກຳ | ເນື້ອທີ່ພັດທະນາ | ລວມເນື້ອທີ່ທັງໝົດ | ເນື້ອທີ່ກະສິກຳ | ເນື້ອທີ່ພັດທະນາ | ລວມເນື້ອທີ່ທັງໝົດ |
| 2,318.6520 | 290.3269 | 2,608.9788 | 507.5332 | 82.0505 | 589.5837 |

## ລບຕ ທີ່ພົບເຫັນ, ຍົກຍ້າຍ ແລະ ທຳລາຍ

| ລບຕ ທີ່ຖືກຍົກຍ້າຍ/ທຳລາຍ | | | | | |
|---|---|---|---|---|---|
| ໜ້າວຽກ | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ |
| ທຳລາຍເຄື່ອນທີ່ | 179 | 8,754 | 146 | 11,263 | 20,342 |
| ການກວດກູ້ | 54 | 14,484 | 18 | 14,070 | 28,626 |
| ການສຳຫຼວດທາງດ້ານວິຊາການ | 0 | 28 | 1 | 192 | 221 |
| *ລວມ* | ***233*** | ***23,266*** | ***165*** | ***25,525*** | ***49,189*** |

## ການຝຶກອົບຮົມ

| *ຫຼັກສູດ* | *ຈຳນວນຄັ້ງທີ່ຈັດຂຶ້ນ* | *ຈຳນວນຜູ້ເຂົ້າຮ່ວມ* |
|---|---|---|
| ການກວດກູ້ | 3 | 90 |
| ການສຳຫຼວດ | 1 | 25 |
| ວິຊາແພດ | 2 | 16 |
| ການໂຄສະນາສຶກສາຊຸມຊົນ | 2 | 25 |
| ຫົວໜ້າທີມ | 1 | 23 |
| ທົບທວນຄືນວິຊາແພດ | 1 | 10 |
| *ລວມ* | ***10*** | ***189*** |

## ພື້ນທີ່ການປະຕິບັດງານ:

1. ຫຼວງພະບາງ 12 ເມືອງ ວຽກໂຄສະນາສຶກສາຊຸມຊົນ, ສຳຫຼວດ, ທຳລາຍເຄື່ອນທີ່, ກວດກູ້ ແລະ ສຳຫຼວດທາງດ້ານວິຊາການ
2. ຫົວພັນ 8 ເມືອງ ວຽກໂຄສະນາສຶກສາຊຸມຊົນ, ສຳຫຼວດ, ທຳລາຍເຄື່ອນທີ່, ກວດກູ້ ແລະ ສຳຫຼວດທາງດ້ານວິຊາການ
3. ຊຽງຂວາງ 5 ເມືອງ ວຽກໂຄສະນາສຶກສາຊຸມຊົນ, ສຳຫຼວດ, ທຳລາຍເຄື່ອນທີ່, ກວດກູ້ ແລະ ສຳຫຼວດທາງດ້ານວິຊາການ
4. ຄຳມ່ວນ 4 ເມືອງ ວຽກໂຄສະນາສຶກສາຊຸມຊົນ, ສຳຫຼວດ, ທຳລາຍເຄື່ອນທີ່, ກວດກູ້ ແລະ ສຳຫຼວດທາງດ້ານວິຊາການ
5. ສະຫວັນນະເຂດ 9 ເມືອງ ວຽກໂຄສະນາສຶກສາຊຸມຊົນ, ສຳຫຼວດ, ທຳລາຍເຄື່ອນທີ່, ກວດກູ້ ແລະ ສຳຫຼວດທາງດ້ານວິຊາການ
6. ຈຳປາສັກ 7 ເມືອງ ວຽກໂຄສະນາສຶກສາຊຸມຊົນ, ສຳຫຼວດ, ທຳລາຍເຄື່ອນທີ່, ກວດກູ້ ແລະ ສຳຫຼວດທາງດ້ານວິຊາການ
7. ສາລະວັນ 4 ເມືອງ ວຽກໂຄສະນາສຶກສາຊຸມຊົນ, ສຳຫຼວດ, ທຳລາຍເຄື່ອນທີ່, ກວດກູ້ ແລະ ສຳຫຼວດທາງດ້ານວິຊາການ
8. ເຊກອງ 10 ເມືອງ ວຽກໂຄສະນາສຶກສາຊຸມຊົນ, ສຳຫຼວດ, ທຳລາຍເຄື່ອນທີ່, ກວດກູ້ ແລະ ສຳຫຼວດທາງດ້ານວິຊາການ
9. ອັດຕະປື 5 ເມືອງ ວຽກໂຄສະນາສຶກສາຊຸມຊົນ, ສຳຫຼວດ, ທຳລາຍເຄື່ອນທີ່, ກວດກູ້ ແລະ ສຳຫຼວດທາງດ້ານວິຊາການ

## ສະພາບການເງິນ:

**ຄ່າໃຊ້ຈ່າຍໃນປີ 2012: (ໂດລາສະຫະລັດ)[2]**

[2] ຄ່າໃຊ້ຈ່າຍຄາດຄະເນ ສຳລັບປີ 2012

| *ລາຍລະອຽດ* | *ຈຳນວນເງິນ (ໂດລາສະຫະລັດ)* |
|---|---|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 4,405,833.16 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 1,975,582.23 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | 453,287.34 |
| ຄ່າໃຊ້ຈ່າຍສຳລັບຊື້ອຸປະກອນ-ຊັບສິນຄົງທີ່ | 551,632.97 |
| ຄ່າໃຊ້ຈ່າຍສຳລັບຊື້ອຸປະກອນ-ຊັບສິນບໍ່ຄົງທີ່ | 496,929.29 |
| *ລວມ* | ***7,883,264.99*** |

## ການປະກອບສ່ວນຂອງຜູ້ໃຫ້ທຶນໃນປີ 2012: (ໂດລາສະຫະລັດ)

***ສັງລວມຮອດວັນທີ 31 ທັນວາ 2012**

| *ຜູ້ໃຫ້ທຶນ* | *ເງິນທີ່ໄດ້ຮັບ* | *ໝາຍເຫດ* |
|---|---|---|
| ***ທຶນທີ່ຜ່ານອົງການສປຊ (ກ)*** | | |
| ນິວຊີແລນ | 1,889,330.00 | ຊຽງຂວາງ |
| ເຢຍລະມັນ | 341,168.13 | ຫຼວງພະບາງ |
| ອອດສ໌ເຕຣດ໌ | 1,085,125.00 | ອັນ-ເອຍມາກ |
| ອັງກິດ | 34,724.00 | ສູນຝຶກອົບຮົມ |
| ສະວິດເຊີແລນ | 700,000.00 | ອັນ-ເອຍມາກ |
| ລຸກຊຳບວກ | 183,823.53 | ອັນ-ເອຍມາກ |
| ເກົາຫຼີໃຕ້ | 15,000.00 | ອັນ-ເອຍມາກ |
| ທຶນປົກກະຕິຂອງ ສປຊ | 350,000.00 | |
| ***ລວມທຶນທີ່ຜ່ານອົງການ ສປຊ*** | ***4,599,170.66*** | |

| *ຜູ້ໃຫ້ທຶນ* | *ເງິນທີ່ໄດ້ຮັບ* | *ໝາຍເຫດ* |
|---|---|---|
| ***ທຶນຜ່ານສອງຝ່າຍ (ຂ)*** | | |
| ອາເມລິກາ/ໂດຍຜ່ານບໍລິສັດອາມໍກຼຸບ | 288,747.90 | ແຂວງສະຫັວນນະເຂດ ແລະ ຈຳປາສັກ |
| ອາເມລິກາ/ໂດຍຜ່ານບໍລິສັດອາມໍກຼຸບ | 337,130.00 | ສະຖານທີ່ພັກເຊົາ ແລະ ວັດຖຸອຸປະກອນ |
| ອາເມລິກາ/ໂດຍຜ່ານບໍລິສັດສະເຕີລິ້ງ | 789,250.00 | ແຂວງສະຫັວນນະເຂດ ແລະ ຈຳປາສັກ |
| ໂປແລນ | 11,719.00 | |
| ກອງທຶນໂລກປອດລະເບີດຝັງດິນ | 150,000.00 | |
| ຍີ່ປຸ່ນ | 786,516.00 | |
| ເຈມັດ | 188,589.41 | |
| ***ລວມທຶນຜ່ານສອງຝ່າຍ*** | ***2,551,952.31*** | |
| ***ລວມ (ກ) + (ຂ)*** | ***7,151,122.97*** | |

saves lives builds futures

# ອົງການເກັບກູ້ລະເບີດແມັກ (ແມັກ)

## ກິດຈະກຳໃນປີ 2012:

ອົງການແມັກ ໄດ້ເລີ່ມປະຕິບັດວຽກງານຢູ່ ສປປ ລາວ ຕັ້ງແຕ່ປີ 1994 ເປັນຕົ້ນມາ. ຕະຫຼອດໄລຍະເວລາດັ່ງກ່າວ ອົງການແມັກ ໄດ້ມີຜົນສຳເລັດຫຼາຍຢ່າງໃນການດຳເນີນວຽກງານກວດກູ້ ແລະ ມີສາຍພົວພັນທີ່ດີໃນການເຮັດວຽກຮ່ວມລັດຖະບານ ແລະ ອຳນາດການປົກຄອງທຸກໆຂັ້ນຢູ່ໃນສປປລາວ.ຜົນໄດ້ຮັບຕ່າງໆ ທີ່ປະຕິບັດມາໃນປີ 2012 ສະແດງອອກຄື ສາມາດກວດກູ້ ລບຕ ອອກຈາກເນື້ອທີ່ໄດ້ຫຼາຍກວ່າ 8,000,000 ຕາແມັດ, ສາມາດທຳລາຍ ລບຕ ທີ່ພົບເຫັນໄດ້ຈຳນວນ 13,035 ໜ່ວຍ ຢູ່ໃນບັນດາເມືອງເປົ້າໝາຍຂອງແຂວງຄຳມ່ວນ ແລະ ຊຽງຂວາງ.

ອົງການແມັກ ໄດ້ດຳເນີນກິດຈະກຳປະສານງານຊຸມຊົນ ເພື່ອຮັບປະກັນໃຫ້ປະຊາຊົນທັງໝົດຢູ່ໃນຊຸມຊົນ ໄດ້ມີສ່ວນຮ່ວມກັບອົງການແມັກໃນການດຳເນີນການກວດກູ້ ລບຕ. ການເລືອກເອົາຊຸມຊົນໃດໜຶ່ງເປັນບ່ອນຈັດຕັ້ງປະຕິບັດໂຄງການນັ້ນ, ອົງການແມັກ ກໍ່ໄດ້ມີການປຶກສາຫາລືກັບອຳນາດການປົກຄອງຂັ້ນບ້ານ, ເມືອງ ແລະ ແຂວງ ເພື່ອຮັບປະກັນວ່າ ພື້ນທີ່ຕ່າງໆທີ່ເປັນເປົ້າໝາຍນັ້ນ ແມ່ນນອນຢູ່ໃນແຜນພັດທະນາແຫ່ງຊາດ. ອີກຢ່າງໜຶ່ງ, ໃນເວລາທີ່ອົງການແມັກ ລະດົມເອົາຊາວບ້ານເຂົ້າມາມີສ່ວນຮ່ວມໃນວຽກງານນັ້ນ, ທີມງານກວດກູ້ ກໍ່ຈະເຮັດວຽກຢ່າງໃກ້ສິດຕິດແທດກັບປະຊາຊົນເພື່ອຮ່ວມກັນກຳນົດເຂດທີ່ມີ ລບຕ ຕົກຄ້າງ, ຊຶ່ງວິທີການເຮັດວຽກຂອງອົງການແມັກ ແມ່ນເລີ່ມຈາກການສຳພາດຄົວເຮືອນ ແລະ ຈັດແບ່ງເປັນກຸ່ມສົນທະນາກ່ຽວກັບຄວາມຕ້ອງການ ແລະ ຄວາມຮູ້ຂອງເຂົາເຈົ້າກ່ຽວກັບການຕົກຄ້າງຂອງ ລບຕ ທີ່ສົ່ງຜົນກະທົບໃສ່ການດຳລົງຊີວິດປະຈຳວັນ. ຫຼາຍກວ່າ 2,000 ໜ້າວຽກສຳຫຼວດໄດ້ຖືກດຳເນີນຢູ່ໃນ 670 ບ້ານ ໃນປີ 2012.

ອີງໃສ່ຂໍ້ມູນທີ່ເກັບກຳໄດ້ໃນລະຫວ່າງການເຄື່ອນໄຫວວຽກງານກວດກູ້, 858 ໜ້າວຽກກວດກູ້ໄດ້ຖືກຈັດຕັ້ງປະຕິບັດໂດຍທີມງານກວດກູ້ ລບຕ ຂອງອົງການແມັກ 12 ທີມງານ. 1,255 ໜ້າວຽກທຳລາຍເຄື່ອນທີ່ແມ່ນເຮັດສຳເລັດໂດຍທີມງານທຳລາຍເຄື່ອນທີ່ຂອງອົງການແມັກ, ສາມາດທຳລາຍ ລບຕ ໄດ້ທັງໝົດຈຳນວນ 2,745 ໜ່ວຍ.





ມີຜູ້ທີ່ໄດ້ຮັບຜົນປະໂຫຍດທັງໝົດ 59,509 ຄົນ ຈາກການດຳເນີນງານຂອງອົງການແມັກ ໃນປີ 2012. ກຸ່ມຄົນເຫຼົ່ານີ້ ສ່ວນຫຼາຍແມ່ນບຸກຄົນ ຫຼື ຊຸມຊົນຕ່າງໆທີ່ເປັນເຈົ້າຂອງດິນທີ່ໄດ້ຮັບການກວດກູ້ ຫຼື ໄດ້ຮັບຜົນປະໂຫຍດໂດຍກົງຈາກການດຳເນີນກິດຈະກຳທາງດ້ານການພັດທະນາຕ່າງໆທີ່ຢູ່ໃນຂອບເຂດພື້ນທີ່ດັ່ງກ່າວ. ນອກຈາກນັ້ນ, ຍັງມີປະຊາຊົນທີ່ອາໄສຢູ່ໃນຊຸມຊົນອ້ອມຂ້າງອື່ນໆ ຈຳນວນ 108,519 ໄດ້ຮັບຜົນປະໂຫຍດຈາກການທີ່ມີຊີວິດທີ່ປອດໄພຂຶ້ນ ແລະ ສາມາດເຂົ້າເຖິງການບໍລິການອື່ນໆ ໄດ້ພາຍຫຼັງອົງການແມັກໄດ້ເຮັດການກວດກູ້ ລບຕ ອອກຈາກພື້ນທີ່ຮຽບຮ້ອຍແລ້ວ.

ນອກຈາກການກວດກູ້, ອົງການແມັກ ຍັງໄດ້ດຳເນີນການໂຄສະສະນາສຶກສາຄວາມສ່ຽງຈາກ ລບຕ ໃຫ້ແກ່ຊຸມຊົນກ່ຽວກັບຄວາມຕ້ອງການຂັ້ນພື້ນຖານຂອງຊີວິດອີກດ້ວຍ. ຕະຫຼອດປີ, ມີປະຊາຊົນຫຼາຍກວ່າ 5,700 ຄົນ ໄດ້ເຂົ້າຮ່ວມກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ, ຊຶ່ງລວມທັງໝົດ 101 ໜ້າວຽກທີ່ໄດ້ຈັດຕັ້ງປະຕິບັດ.

ໃນປີ 2012, ອົງການແມັກ ຍັງໄດ້ປະກອບທຶນສະໜັບສະໜູນໃຫ້ແກ່ໂຄງການພັດທະນາຈຳນວນໜຶ່ງ ເພື່ອນຳໄປຈັດຕັ້ງປະຕິບັດກິດຈະກຳຂອງຕົນ ເປັນຕົ້ນແມ່ນ ອົງການເວີອິດູເຄເຊັ້ນ ໃນການຮັກສາສຸກຂະພາບຂອງຄົນທຸກ ແລະ ສ່ວນໜຶ່ງກໍ່ສະໜັບສະໜູນໃຫ້ແກ່ອຳນາດການປົກຄອງຂັ້ນເມືອງຢູ່ແຂວງຊຽງຂວາງ ແລະ ຄຳມ່ວນ. ສິ່ງດັ່ງກ່າວ ສາມາດຈັດຕັ້ງປະຕິບັດຂຶ້ນໄດ້ ກໍ່ຍ້ອນໄດ້ຮັບທຶນສະໜັບສະໜູນຈາກບໍລິສັດໄທບາໂຄອິມເພີເຣວ ແລະ ໂກຼກຼຸບ.

## ຜົນສຳເລັດຕົ້ນຕໍໃນປີ 2012:

ໃນເດືອນມິຖຸນາ 2012, ອົງການແມັກ ໄດ້ນຳສະເໜີເຕັກໂນໂລຊີໃໝ່ເຂົ້າໃນການກວດກູ້ຂອງພວກເຮົາ. ຜົນໄດ້ຮັບຈາກເຕັກໂນໂລຊີດັ່ງກ່າວນີ້ ເຮັດໃຫ້ພວກເຮົາສາມາດນຳເອົາບົດຮຽນທີ່ຖອດຖອນໄດ້ ມາປັບປຸງເຂົ້າໃນວິທີການເຮັດວຽກຂອງເຂົາເຈົ້າໃຫ້ດີຂຶ້ນກວ່າເກົ່າ. ປະຈຸບັນນີ້ອົງການແມັກ ສາມາດນຳໃຊ້ທີມເຂົ້າໃນການປະຕິບັດງານຕາມພື້ນທີ່ເປົ້າໝາຍຂອງຕົນໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ເຮັດໃຫ້ການກວດກູ້ ລບຕ ມີຄວາມຖືກຕ້ອງ ແລະ ໄວຂຶ້ນຫຼາຍກວ່າເກົ່າ. ວິທີການໃໝ່ນີ້ໝາຍຄວາມວ່າ

ອົງໃສ່ວິທີການທີ່ໄດ້ເຮັດມາແຕ່ລະຂັ້ນຕອນ ແລະ ຜ່ານການຕິດຕາມຢ່າງໃກ້ສິດຕິດແທດກ່ຽວກັບການປະເມີນຜົນເບິ່ງຄວາມສ່ຽງ, ອົງການແມັກ ປະຈຸບັນນີ້ ສາມາດຍົກເລີກພື້ນທີ່ໃນເມື່ອກ່ອນທີ່ມີຄວາມສົງໃສຜິດພາດວ່າມີ ລບຕ ຕົກຄ້າງ ໄດ້ຢ່າງຖືກຕ້ອງແລ້ວ. ຂັ້ນຕອນໃໝ່ນີ້ ເຮັດໃຫ້ທີມງານກວດກູ້ຂອງອົງການແມັກມາສາດກວດກູ້ພື້ນທີ່ໄດ້ຈໍານວນຫຼາຍຂຶ້ນກວ່າເກົ່າ ໃນພື້ນທີ່ໆຮູ້ແລ້ວວ່າມີ ລບຕ ຕົກຄ້າງ. ເນື້ອທີ່ຫຼາຍກວ່າເຄິ່ງລ້ານຕາແມັດໄດ້ຖືກຍົກເລີກການກວດກູ້ໂດຍອົງການແມັກ ໃນຊ່ວງໄລຍະ 6 ເດືອນປີ 2012 ແລະ ຄາດຄະເນວ່າ ຕົວເລກດັ່ງກ່າວນີ້ຈະເພີ່ມຂຶ້ນຕື່ມໃນປີ 2013.



ມາຮອດປີ 2012, ອົງການແມັກ ສາມາດຍົກເລີກພື້ນທີ່ກວດກູ້ ລບຕ ໄດ້ຫຼາຍກວ່າ 40,000,000 ຕາແມັດ ໃນຕະຫຼອດຊ່ວງໄລຍະເວລາ 7 ປີ ຕັ້ງແຕ່ປີ 2004 ເປັນຕົ້ນມາ. ຕະຫຼອດຊ່ວງໄລຍະດັ່ງກ່າວ, ມີ ລບຕ ຈໍານວນ 165,000 ໜ່ວຍ ໄດ້ຖືກທໍາລາຍໂດຍທີມງານກວດກູ້ຂອງອົງການແມັກ. ປະຊາຊົນຫຼາຍກວ່າເຄິ່ງລ້ານແມ່ນໄດ້ຮັບຜົນປະໂຫຍດຈາກການດໍາເນີນກິດຈະກໍາຂອງອົງການແມັກ. ສິ່ງດັ່ງກ່າວທັງໝົດນີ້ ແມ່ນວິທີການທົດສອບທີ່ໄດ້ຮັບປະສິດທິຜົນດີ ເຮັດໃຫ້ອົງການແມັກ ນໍາໄປໃຊ້ເຂົ້າໃນການປະຕິບັດງານ ແລະ ເຮັດໃຫ້ອົງການແມັກ ປະສົບຜົນສໍາເລັດໃນການເຮັດວຽກກັບລັດຖະບານ ແລະ ອົງການປະຕິບັດງານແກ້ໄຂບັນຫາ ລບຕ ອື່ນໆ.

ອົງການແມັກ ຍາມໃດກໍ່ສະໜັບສະໜູນ ແລະ ສົ່ງເສີມໃຫ້ປັບປຸງຄວາມອາດສາມາດຂອງຄົນລາວ ໃນການຄຸ້ມຄອງ ແລະ ດໍາເນີນການກວດກູ້ ລບຕ. ເພື່ອສືບຕໍ່ວຽກງານດັ່ງກ່າວໃນປີ 2012, ອົງການແມັກໄດ້ສະໜອງທຶນສະໜັບສະໜູນທາງດ້ານການບໍລິຫານໃຫ້ແກ່ຫ້ອງການປະສານງານ ຄຊກລ ຂັ້ນແຂວງຊຽງຂວາງ.

ນອກຈາກນັ້ນ, ທຶນດັ່ງກ່າວນີ້ ຍັງໄດ້ສະໜັບສະໜູນໃຫ້ແກ່ໜ່ວຍງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຂອງຫ້ອງການ ຄຊກລ ໃນການຜະລິດອຸປະກອນໂຄສະນາ ແລະ ໄດ້ຝຶກອົບຮົມການນໍາໃຊ້ໃຫ້ແກ່ບັນດາອົງການປະຕິບັດງານ ອີກດ້ວຍ. ພ້ອມນັ້ນ, ກໍ່ຍັງມີທຶນອີກຈໍານວນໜຶ່ງທີ່ໄດ້ສະໜອງໃຫ້ແກ່ ຄຊກລ ເພື່ອນໍາໄປໃຊ້ເຂົ້າໃນການຝຶກອົບຮົມ ໃຫ້ແກ່ພະນັກງານກ່ຽວກັບວົງຈອນການຄຸ້ມຄອງບໍລິການໂຄງການ.

## ຂ່າວດີ: ນັກກວດກູ້ ລບຕ ເພດຍິງ ເຮັດການທໍາລາຍ

ການຕົກຄ້າງຂອງ ລບຕ ຢູ່ໃນເຂດພື້ນທີ່ຊົນນະບົດໃນ ສປປ ລາວ ແມ່ນສາງສິ່ງກີດຂວາງທາງດ້ານການຄໍ້າປະກັນສະບຽງອາຫານ ແລະ ການສ້າງຄວາມຍືນຍົງໄລຍະຍາວໃນການດໍາລົງຊີວິດຂອງປະຊາຊົນລາວບັນດາເຜົ່າ. ບັນຫາເຫຼົ່ານັ້ນຄື ປະຊາຊົນທີ່ດໍາລົງຊີວິດຢູ່ໃນເຂດພື້ນທີ່ ລບຕ ຕົກຄ້າງ ແມ່ນດໍາລົງຊີວິດໂດຍປັດສະຈາກພື້ນຖານທາງດ້ານການດໍາລົງຊີວິດ.

ແຂວງຊຽງຂວາງ ເປັນແຂວງທີ່ສອງທີ່ໄດ້ຮັບຜົນກະທົບຈາກ ລບຕ ຕົກຄ້າງໃນທົ່ວປະເທດ ແລະ ມີປະຊາຊົນຢູ່ໃນແຂວງ 42 ສ່ວນຮ້ອຍແມ່ນທຸກຍາກ. ບັນຫາສອງຢ່າງນີ້ ແມ່ນມີການເຊື່ອມໂຍງກັນຢ່າງໃກ້ສິດຕິດແທດ, ຖ້າ ລບຕ ຍັງບໍ່ທັນໄດ້ຮັບການເກັບກູ້ອອກ, ມັນກໍ່ຍັງຈະສືບຕໍ່ເຮັດໃຫ້ປະຊາຊົນທຸກຍາກ, ອຶດຫິວ ແລະ ຈໍາກັດໂອກາດທີ່ຈະຍົກລະດັບຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ດີຂຶ້ນໄດ້.

ນາງ ເພັງ (ເບິ່ງທີ່ຮູບ) ອາໄສຢູ່ບ້ານຫ້ວຍດອກຄໍາ ໃນແຂວງຊຽງຂວາງ. ລາວມາຈາກຊຸມຊົນທີ່ຢູ່ເຂດຊົນນະບົດ ບ່ອນທີ່ມີແຕ່ການເຮັດນາ, ສ່ວນຜົນຜະລິດທີ່ເຫຼືອກິນເລັກນ້ອຍ ກໍ່ໄດ້ນໍາໄປຂາຍຢູ່ໃນຕະຫຼາດຊຸມຊົນ. ນາງ ເພັງ ແຕ່ງງານແລ້ວ ແລະ ມີລູກທັງໝົດ 3 ຄົນ, ໃນນັ້ນ ມີຜູ້ຍິງ 2 ຄົນ ແລະ ຊາຍໜຶ່ງຄົນ. ລາວເວົ້າວ່າ: "ໃນເມື່ອກ່ອນ ຂ້ອຍເຄີຍເປັນຊາວນາ ແລະ ຖານະຄອບຄົວຂອງຂ້ອຍໃນຕອນນັ້ນກໍ່ບໍ່ຄ່ອຍຈະດີປານໃດ. ພວກເຮົາປູກເຂົ້າກິນໄດ້ພຽງໜ້ອຍດຽວຍ້ອນວ່າ ເນື້ອທີ່ດິນທໍາການຜະລິດທີ່ມີນັ້ນແມ່ນມີ ລບຕ ຕົກຄ້າງ. ຕະຫຼອດເວລາ ຂ້ອຍດໍາລົງຊີວິດຢູ່ກັບຄວາມຢ້ານກົວທີ່ວ່າ ມື້ໃດມື້ໜຶ່ງ ລູກຂອງຂ້ອຍ ແລະ ຜົວ ອາດຈະໄດ້ຮັບບາດເຈັບ ຫຼື ເສຍຊີວິດ ຍ້ອນ ລບຕ".



*ພາຍຖ່າຍ: ເຊນ ຊູຕັນ/ອົງການແມັກ*

ຫຼັງຈາກທີ່ອົງການແມັກ ໄດ້ເຂົ້າໄປເຮັດການກວດກູ້ ລບຕ ອອກຈາກເນື້ອທີ່ດິນຂອງລາວແລ້ວ, ນາງເພັງ ກໍ່ໄດ້ເຂົ້າຮ່ວມເຮັດວຽກນໍາອົງການແມັກໂດຍເປັນນັກເກັບກູ້. ສາມາດເວົ້າໄດ້ວ່າ ນາງ ເພັງ ແມ່ນເປັນພະນັກງານທີ່ມີຄວາມເສຍສະຫຼະ ແລະ ມີຄວາມມຸ່ງໝັ້ນ ຈຶ່ງເຮັດໃຫ້ລາວໄດ້ຖືກລະບຸຊື່ໃຫ້ເຂົ້າຮ່ວມຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ເພີ່ມເຕີມຫຼາຍຄັ້ງ.



ຫຼັງຈາກເຮັດວຽກກັບອົງການແມັກໄດ້ປີໜຶ່ງຜ່ານມາ, ນາງ ເພັງ ກໍ່ໄດ້ກາຍເປັນຫົວໜ້າທີມກວດກູ້ເພດຍິງຢູ່ແຂວງຊຽງຂວາງ. "ບາງເທື່ອ ຂ້ອຍກໍ່ຮູ້ສຶກອິດເມື່ອຍຫຼາຍທີ່ເຮັດວຽກຢູ່ສະໜາມໝົດມື້, ແຕ່ຂ້ອຍກໍ່ຮູ້ສຶກພູມໃຈ ທີ່ໄດ້ເປັນຫົວໜ້າທີມກວດກູ້ເພດຍິງ ແລະ ຂ້ອຍກໍ່ຄິດວ່າ ຂ້ອຍເອງກໍ່ເຮັດໜ້າທີ່ໄດ້ດີທີ່ສຸດ ຕາມໜ້າທີ່ວຽກງານທີ່ຖືກມອບໝາຍໃຫ້ສຳເລັດຜົນໝົດທຸກຢ່າງ. ຂ້ອຍໃຊ້ເງິນຈາກການເຮັດວຽກຊື້ສິ່ງຂອງທີ່ຕ້ອງການຫຼາຍຢ່າງ ເປັນຕົ້ນແມ່ນ ຊື້ດິນນາຕອນໜຶ່ງໄວ້ສຳລັບປູກເຂົ້າ, ດິນຕອນໜຶ່ງໄວ້ສຳລັບສວນຄົວໃກ້ເຮືອນ, ສາມາດປຸກເຮືອນ ແລະ ຈ່າຍເງິນເຂົ້າໃນການສຶກສາໃຫ້ແກ່ລູກຂອງຂ້ອຍ".

## ວຽກຈຸດສຸມໃນປີ 2013:

ໃນປີ 2013, ອົງການແມັກ ຈະສືບຕໍ່ນຳສະເໜີບັນດາເຕັກໂນໂລຊີໃໝ່ໆເຂົ້າມານຳໃຊ້ເຂົ້າໃນການປະຕິບັດງານຂອງພວກເຮົາ ເພື່ອຊ່ວຍໃຫ້ການດຳເນີນງານມີປະສິດທິພາບ ແລະ ປະສິດທິຜົນຂຶ້ນກວ່າເກົ່າ. ປະຈຸບັນນີ້, ພວກເຮົາກຳລັງສຶກສາເບິ່ງຄວາມເປັນໄປໄດ້ໃນການນຳໃຊ້ເຄື່ອງກົນຈັກທຳລາຍ ລບຕ ເຂົ້າມານຳໃຊ້ເຂົ້າໃນການປະຕິບັດງານຂອງພວກເຮົາ. ພ້ອມນັ້ນ, ກໍ່ຈະນຳສະເໜີກ່ຽວກັບເຄື່ອງກວດລະເບີດແບບໃໝ່ ທີ່ຈະຊ່ວຍປັບປຸງຄວາມອາດສາມາດໃນການຄົ້ນຫາ ລບຕ ຂອງພວກເຮົາໃຫ້ໄວຂຶ້ນ.

ນອກຈາກນັ້ນ, ໃນປີ 2013, ອົງການແມັກ ຈະສືບຕໍ່ເຮັດວຽກຮ່ວມກັບບັນດາອົງການພັດທະນາຕ່າງໆ ລວມທັງ ອຳນາດການປົກຄອງຂັ້ນແຂວງ, ເມືອງ ແລະ ບັນດາອົງການ ເອັນຈີໂອ ຕ່າງໆ ເພື່ອຮັບປະກັນວ່າ ເນື້ອທີ່ດິນທີ່ພວກເຮົາໄດ້ກວດກູ້ ລບຕ ອອກແລ້ວນັ້ນ ໄດ້ຖືກນຳໃຊ້ເຂົ້າໃນວຽກງານພັດທະນາ.

## ຄູ່ຮ່ວມພັດທະນາຕ່າງໆ:

ຜູ້ທີ່ໄດ້ຮັບຜົນປະໂຫຍດຕົ້ນຕໍຈາກອົງການແມັກ ແມ່ນບັນດາບັນດາຊຸມຊົນທີ່ມີຄວາມທຸກຍາກທີ່ສຸດໃນປະເທດ. ຄວາມທຸກຍາກທີ່ມີຢູ່ເໜືອພື້ນຖານເສດຖະກິດທີ່ປະຊາຊົນມີນັ້ນ ສົ່ງຜົນໃຫ້ມີການເຊື່ອມໂຍງກັບການທີ່ເຮັດໃຫ້ມີລາຍໄດ້ທີ່ບໍ່ຍືນຍົງ ແລະ ມີຄວາມຈຳກັດໃນການເຂົ້າເຖິງການບໍລິການຕ່າງໆເຊັ່ນ ສາທາລະນະສຸກ, ການສຶກສາ, ນ້ຳສະອາດ ແລະ ສຸກຂະອະນາໄມ ລວມໄປເຖິງ ຂໍ້ຈຳກັດທາງດ້ານພື້ນຖານໂຄງລ່າງເຊັ່ນ ການເຊື່ອມຕໍ່ໄຟຟ້າໃຊ້ ແລະ ເສັ້ນທາງ. ຜົນກະທົບຈາກ ລບຕ ຖືກຄາດແມ່ນປັດໃຈຕົ້ນຕໍທີ່ພາໃຫ້ມີຂໍ້ຈຳກັດ ແລະ ຂາດໂອກາດໃນການເຂົ້າເຖິງບັນດາພື້ນຖານຕ່າງໆຂ້າງເທິງນັ້ນ ໂດຍ ສະເພາະແມ່ນຊຸມຊົນທີ່ຢູ່ເຂດຊົນນະບົດ. ອົງການແມັກຈະສືບຕໍ່ເຮັດວຽກຮ່ວມກັບລັດຖະບານລາວໃນທຸກໆຂັ້ນຕັ້ງແຕ່ສູນກາງລົງຮອດຂັ້ນບ້ານ ລວມທັງບັນດາອົງການ ເອັນຈີໂອ ອື່ນໆ ແລະ ຊຸມຊົນຕ່າງໆ ເພື່ອຮັບປະກັນໃຫ້ສິ່ງກີດຂວາງຕ່າງໆໄດ້ຖືກທຳລາຍ ແລະ ບໍ່ສືບຕໍ່ຕໍ່ເຂັ່ນຂ້າຊີວິດຂອງປະຊາຊົນຫຼາຍລ້ານຄົນໃນທົ່ວປະເທດ.

## ບຸກຄະລາກອນໃນປີ 2012:

| *ປະຈຳຢູ່ຫ້ອງການ* | | | | *ປະຈຳຢູ່ຝ່າຍປະຕິບັດງານ* | | | |
|---|---|---|---|---|---|---|---|
| *ລາວ* | | *ຕ່າງປະເທດ* | | *ລາວ* | | *ຕ່າງປະເທດ* | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 22 | 10 | 2 | 0 | 261 | 88 | 4 | 0 |

## ຕົວເລກສະຖິຕິໃນປີ 2012:

| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ການໂຄສະນາສຶກສາຊຸມຊົນ | | ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈຳນວນຜູ້ທີ່ໄດ້ຮັບການຊ່ວຍເຫຼືອ | | ການສຳຫຼວດ | | ການທຳລາຍເຄື່ອນທີ່ | |
|---|---|---|---|---|---|---|---|
| ຈ/ນ ບ້ານ | ຜູ້ໄດ້ຮັບ ຜົນປະໂຫຍດ | ທາງດ້ານ ການເງິນ | ທາງດ້ານ ການແພດ | ຈ/ນ ບ້ານ | ຈ/ນ ຄັ້ງຢັ້ງຢາມ | ຈ/ນ ບ້ານ | ຈ/ນ ຄັ້ງຢັ້ງຢາມ |
| 101 | 5,700 ຊາຍ 2,879 ແລະ ຍິງ 2,821 | 0 | 1 | 284 | 858 | | 1,255 |

### ການກວດກູ້:

| ຜ່ານການກວດກູ້ (ເຮັກຕາ) | | | ຜ່ານການສຳຫຼວດທາງດ້ານວິຊາການ (ເຮັກຕາ) | | |
|---|---|---|---|---|---|
| ເນື້ອທີ່ກະສິກຳ | ເນື້ອທີ່ພັດທະນາ | ລວມເນື້ອທີ່ທັງໝົດ | ເນື້ອທີ່ກະສິກຳ | ເນື້ອທີ່ພັດທະນາ | ລວມເນື້ອທີ່ທັງໝົດ |
| | | 820.9 | | | 820.9 |

## ລບຕ ທີ່ພົບເຫັນ, ຍົກຍ້າຍ ແລະ ທຳລາຍ:

| ລບຕ ທີ່ຖືກຍົກຍ້າຍ/ທຳລາຍ | | | | | |
|---|---|---|---|---|---|
| ໜ້າວຽກ | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ |
| Roving | 5 | 1,947 | | 793 | 2,745 |
| Clearance | 5 | 8,528 | | 1,756 | 10,289 |
| ***Total*** | ***10*** | ***10,475*** | | ***2,549*** | ***13,034*** |

## ພື້ນທີ່ການປະຕິບັດງານ:

| ກິດຈະກຳ | ສະຖານທີ່ຈັດຕັ້ງປະຕິບັດກິດຈະກຳ |
|---|---|
| ການກວດກູ້ເນື້ອທີ່ | ເມືອງໜອງແຮດ, ຄູນ, ຜາໄຊ ແລະ ທ່າໂທມ ແຂວງຊຽງຂວາງ ເມືອງຍົມມະລາດ, ບົວລະພາ, ໄຊບົວທອງ ແລະ ມະຫາໄຊ ແຂວງຄຳມ່ວນ |
| ການສຳຫຼວດ ແລະ ການທຳລາຍເຄື່ອນທີ່ | ເມືອງໜອງແຮດ, ຄູນ, ຜາໄຊ ແລະ ທ່າໂທມ ແຂວງຊຽງຂວາງ ເມືອງຍົມມະລາດ, ບົວລະພາ, ໄຊບົວທອງ ແລະ ມະຫາໄຊ ແຂວງຄຳມ່ວນ |
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ເມືອງໜອງແຮດ, ຄູນ, ຜາໄຊ ແລະ ທ່າໂທມ ແຂວງຊຽງຂວາງ ເມືອງຍົມມະລາດ, ບົວລະພາ, ໄຊບົວທອງ ແລະ ມະຫາໄຊ ແຂວງຄຳມ່ວນ |

## ສະພາບການເງິນ:

### ຄ່າໃຊ້ຈ່າຍໃນປີ 2012: (ໂດລາສະຫະລັດ)

| ລາຍລະອຽດ | ຈຳນວນ (ໂດລາສະຫະລັດ) |
|---|---|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 2,353,786 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 399,933 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | 185,167 |
| ຄ່າໃຊ້ຈ່າຍສຳລັບຊື້ອຸປະກອນ-ຊັບສິນຄົງທີ່ | 339,403 |
| ຄ່າໃຊ້ຈ່າຍສຳລັບຊື້ອຸປະກອນ-ຊັບສິນບໍ່ຄົງທີ່ | 21,213 |
| *ລວມ* | ***3,299,501*** |

## ການປະກອບສ່ວນຂອງຜູ້ໃຫ້ທຶນ ໃນປີ 2012: (ໂດລາສະຫະລັດ)

| *ຜູ້ໃຫ້ທຶນ* | *ເງິນທີ່ໄດ້ຮັບໃນປີ 2012 (ໂດລາສະຫະລັດ)* |
|---|---:|
| ກອງທຶນອໍຕາດິດ | 78 |
| ອີມເພີເຣວ ໄທບາໂຄ | 16,482 |
| ສະຫະພາບຢູລົບ | 396,597 |
| ຢູເຄດີຟີດ | 1,733,655 |
| ໄຟເບີເທັກ | 2,286 |
| ແມັກອາເມລິກາ/ກະຊວງການຕ່າງປະເທດ ຫ້ອງການຫຼຸດຜ່ອນອາວຸດ ແລະ ການສູ້ຮົບ | 1,150,403 |
| ***ລວມ*** | ***3,299,501*** |

## ການໂອນທຶນຊ່ວຍເຫຼືອເພື່ອສະໜັບສະໜູນແກ່ວຽກງານຕ່າງໆ:

**ເປັນທຶນຊ່ວຍເຫຼືອທີ່ໂອນໃຫ້ແກ່ອົງການປະຕິບັດງານອື່ນໆ**

| *ຊື່ອົງການ ທີ່ໄດ້ມີການໂອນເງິນຊ່ວຍເຫຼືອໃຫ້* | *ຈຳນວນເງິນ (ໂດລາສະຫະລັດ)* |
|---|---:|
| ຄຊກລ | 125,277 |
| ຄກລ | 39,698 |
| ***ລວມ*** | ***164,975*** |

# ອົງການຊ່ວຍເຫຼືອລ້າຂອງປະຊາຊົນນ໋ອກແວ (ເອັນພີເອ)

## ກິດຈະກໍາໃນປີ 2012:

ອົງການເອັນພີເອ ໄດ້ດໍາເນີນວຽກງານໃຫ່ຍ 3 ຢ່າງຕົ້ນຕໍຄື: ການສໍາຫຼວດ(ລວມມີການສໍາຫຼວດທົ່ວໄປ ແລະການສໍາຫຼວດທາງດ້ານວິຊາການ), ການກວດກູ້ ແລະ ທໍາລາຍເຄື່ອນທີ່. ວຽກຕົ້ນໃນປີ 2012 ແມ່ນໄດ້ສຸມໃສ່ເຮັດການສໍາຫຼວດລະເບີດລູກຫວ່ານເພື່ອປົດປ່ອຍພື້ນທີ່ໃຫ້ໄດ້ຢ່າງເຕັມສ່ວນ, ຊຶ່ງວຽກງານດັ່ງກ່າວນີ້ແມ່ນເລີ່ມຈັດຕັ້ງປະຕິບັດມາຕັ້ງແຕ່ປີ 2010. ການສໍາຫຼວດລະເບີດລູກຫວ່ານເພື່ອປົດປ່ອຍພື້ນທີ່ແມ່ນພື້ນຖານການສໍາຫຼວດທີ່ໄດ້ດັດປັບເອົາມານໍາໃຊ້ເຂົ້າໃນການສໍາຫຼວດພື້ນທີ່ລະເບີດລູກຫວ່ານຕົກຄ້າງຢູ່ໃນ ສປປ ລາວ. ວິທີການສໍາຫຼວດລະເບີດລູກຫວ່ານເພື່ອປົດປ່ອຍພື້ນທີ່ ລວມມີການສໍາຫຼວດແບບທົ່ວໄປຢູ່ໃນແຕ່ລະບ້ານຢູ່ 3 ແຂວງ ເພື່ອກໍານົດການຕົກຄ້າງຂອງ ລບຕ ຊະນິດຕ່າງໆ ລວມທັງລະເບີດລູກຫວ່ານດ້ວຍ.

ນອກຈາກນັ້ນ, ອົງການເອັນພີເອຍັງໄດ້ດໍາເນີນການຝຶກອົບຮົມຫຼາຍຄັ້ງໃຫ້ແກ່ພະນັກງານໃນປີ 2012, ວຽກງານດັ່ງກ່າວນີ້ແມ່ນຈະຊ່ວຍເພີ່ມປະສົບການຂອງອົງການເອັນພີເອ ໄດ້ຫຼາຍຂຶ້ນກວ່າເກົ່າ.

## ຜົນສໍາເລັດຕົ້ນຕໍໃນປີ 2012:

ຜົນສໍາເລັດຂອງອົງການເອັນພີເອ ໃນປີ 2012 ແມ່ນເປັນທີ່ໜ້າຊື່ນຊົມ ເນື່ອງຈາກວ່າ ພວກເຮົາໄດ້ເຮັດການສໍາຫຼວດພື້ນທີ່ຫຼາຍກວ່າ 11 ກິໂລຕາແມັດ ຢູ່ແຂວງເຊກອງ, ສາລະວັນ ແລະ ອັດຕະປື. ໄດ້ກໍານົດເພື່ອຢັ້ງຢືນພື້ນທີ່ໆມີຄວາມອັນຕະລາຍ 89 ພື້ນທີ່ ລວມທັງໝົດ 6 ກິໂລຕາແມັດ. ໃນລະຫວ່າງເຮັດການສໍາຫຼວດລະເບີດລູກຫວ່ານເພື່ອປົດປ່ອຍພື້ນທີ່, ອົງການເອັນພີເອ ສາມາດທໍາລາຍ ລບຕ ໄດ້ຈໍານວນ 2,300 ໜ່ວຍ. ນອກຈາກນັ້ນ, ອົງການເອັນພີເອ ຍັງສາມາດກວດກູ້ ລບຕ ອອກຈາກພື້ນທີ່ໄດ້ທັງໝົດໄດ້ຈໍານວນ 1.6 ລ້ານຕາແມັດ, ຊຶ່ງເປັນເນື້ອທີ່ກະສິກໍາທັງໝົດ ແລະ ມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 2,000 ຄົນ.

ນອກຈາກນັ້ນ, ອົງການເອັນພີເອ ຍັງໄດ້ຂະຫຍາຍກໍາລັງງານກວດກູ້ຂຶ້ນຕື່ມອີກຫຼາຍກວ່າ 300 ຄົນ ໃນປີ 2012. ໃນທ້າຍປີ 2012 ອົງການເອັນພີເອ ມີທີມກວດກູ້ແບບປະສົມທັງໝົດ 15 ທີມ ຢູ່ໃນ 3 ແຂວງ.

## ວຽກຈຸດສຸມໃນປີ 2013:

ວຽກຈຸດສຸມໃນປີ 2013 ຂອງອົງການເອັນພີ ແມ່ນຈະສືບຕໍ່ດໍາເນີນການສໍາຫຼວດ. ພ້ອມນັ້ນ, ການສໍາຫຼວດລະເບີດລູກຫວ່ານເພື່ອປົດປ່ອຍເນື້ອທີ່ ກໍ່ຈະສືບຕໍ່ດໍາເນີນ ເນື່ອງຈາກວ່າມັນແມ່ນວິທີການ ແລະ ຜະລິດຕະພັນອັນຕົ້ນຕໍຂອງອົງການ. ນອກຈາກນັ້ນ, ອົງການເອັນພີເອ ກໍ່ຈະສືບຕໍ່ປະຕິບັດຄໍາໝັ້ນສັນຍາທີ່ໃຫ້ໄວ້ເພື່ອຊ່ວຍແກ້ໄຂບັນຫາ ລບຕ ຕົກຄ້າງຢູ່ ສປປ ລາວ ແລະ ຄາດຄະເນວ່າ ທຶນສະໜັບສະໜູນເພີ່ມຈະເຂົ້າມາອົງການຕື່ມອີກໃນປີ 2013.

## ຄູ່ຮ່ວມປະຕິບັດງານຕ່າງໆ:

- ຄຊກລ
- ຄກລ
- ອົງການແຄສາກົນ
- ອໍານາດການປົກຄອງຂັ້ນແຂວງ ແລະ ເມືອງ

### ຂ່າວດີ: ການກໍານົດເພື່ອຢັ້ງຢືນພື້ນທີ່ໆມີຄວາມອັນຕະລາຍ

ຂ່າວດີຂອງອົງການເອັນພີເອ ກໍ່ຍັງແມ່ນເລື່ອງການນໍາສະເໜີ ແລະ ປະສິດທິຜົນຂອງການນໍາໃຊ້ວິທີການສໍາຫຼວດລະເບີດລູກຫວ່ານເພື່ອປົດປ່ອຍເນື້ອທີ່. ປະຈຸບັນນີ້, ອົງການເອັນພີເອ ໄດ້ເຮັດການກໍານົດເພື່ອຢັ້ງຢືນພື້ນທີ່ໆມີຄວາມສ່ຽງແລ້ວຫຼາຍກວ່າ 200 ພື້ນທີ່ ແລະ ໄດ້ລາຍງານໃຫ້ແກ່ ຄຊກລ ເອົາເຂົ້າໄວ້ໃນຖານຂໍ້ມູນ ລບຕ ເປັນທີ່ຮຽບຮ້ອຍແລ້ວ.

ເປັນຄັ້ງທໍາອິດທີ່ມີການເອົາຂໍ້ມູນກ່ຽວການກໍານົດເພື່ອຢັ້ງຢືນພື້ນທີ່ໆມີຄວາມອັນຕະລາຍເຂົ້າໄວ້ໃນລະບົບຖານຂໍ້ມູນ ລບຕ. ຄຊກລ ສາມາດນໍາໃຊ້ຂໍ້ມູນດັ່ງກ່າວ ເພື່ອກໍານົດເປັນບູລິມະສິດ ແລະ ມອບໃຫ້ອົງການປະຕິບັດງານໄປເກັບກູ້ໄດ້.

## ບຸກຄະລາກອນໃນປີ 2012:

| *ປະຈໍາຢູ່ຫ້ອງການ* | | | | *ປະຈໍາຢູ່ຝ່າຍປະຕິບັດງານ* | | | |
|---|---|---|---|---|---|---|---|
| *ລາວ* | | *ຕ່າງປະເທດ* | | *ລາວ* | | *ຕ່າງປະເທດ* | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 34 | 14 | 3 | 0 | 140 | 66 | 4 | 0 |
| ***Total*** | | | | ***261*** | | | |

## ຕົວເລກສະຖິຕິໃນປີ 2012:

**ການກວດກູ້:**

| ***ການກວດກູ້ (ເຮັກຕາ)*** | | |
|---|---|---|
| ***ເນື້ອທີ່ກະສິກໍາ*** | ***ເນື້ອທີ່ພັດທະນາ*** | ***ລວມ*** |
| 101.2 | 0.5 | 155.7 |

## ລບຕ ທີ່ພົບເຫັນ, ຍົກຍ້າຍ ແລະ ທຳລາຍ:

| ລບຕ ທີ່ຖືກຍົກຍ້າຍ/ທຳລາຍ | | | | | |
|---|---|---|---|---|---|
| *ໜ້າວຽກ* | *ບົມໃຫຍ່* | *ລະເບີດລູກຫວ່ານ* | *ລະເບີດຝັງດິນ* | *ລບຕ ຊະນິດອື່ນໆ* | *ລວມ* |
| ການທຳລາຍເຄື່ອນທີ່ | 0 | 2,103 | 0 | 465 | 2,568 |
| ການກວດກູ້ | 0 | 2,228 | 0 | 142 | 2,370 |
| ການສຳຫວດທາງດ້ານວິຊາການ | 0 | 2,015 | 0 | 140 | 2,286 |
| ***ລວມ*** | ***0*** | ***6,346*** | ***0*** | ***747*** | ***7,224*** |

## ພື້ນທີ່ການປະຕິບັດງານ:

| *ກິດຈະກຳ* | *ສະຖານທີ່ຈັດຕັ້ງປະຕິບັດກິດຈະກຳ* |
|---|---|
| ການກວດກູ້ພື້ນທີ່ | ແຂວງສາລະວັນ, ເຊກອງ ແລະ ອັດຕະປື |
| ການສຳຫຼວດ ແລະ ການທຳລາຍເຄື່ອນທີ່ | ແຂວງສາລະວັນ, ເຊກອງ ແລະ ອັດຕະປື |

## ສະພາບການເງິນ:

**ຄ່າໃຊ້ຈ່າຍໃນປີ 2012: (ໂດລາສະຫະລັດ)**

| *ລາຍລະອຽດ* | *ຈຳນວນ (ໂດລາສະຫະລັດ)* |
|---|---|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 1,700,000 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 1,500,000 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | ບໍ່ໄດ້ນຳໃຊ້ |
| ຄ່າໃຊ້ຈ່າຍສຳລັບຊື້ອຸປະກອນ-ຊັບສິນຄົງທີ່ | 600,000 |
| ຄ່າໃຊ້ຈ່າຍສຳລັບຊື້ອຸປະກອນ-ຊັບສິນບໍ່ຄົງທີ່ | 500,000 |
| *ລວມ* | ***4,300,000*** |

## ການປະກອບສ່ວນຂອງຜູ້ໃຫ້ທຶນ ໃນປີ 2012: (ໂດລາສະຫະລັດ)

| *ຜູ້ໃຫ້ທຶນ* | *ເງິນທີ່ໄດ້ຮັບໃນປີ 2012 (ໂດລາສະຫະລັດ)* |
|---|---|
| ກະຊວງການຕ່າງປະເທດນໍອກແວ | 2,000,000 |
| ນິວເຊີແລນ | 1,400,000 |
| ກະຊວງການຕ່າງປະເທດສະຫະລັດອາເມລິກາ | 900,000 |
| ***ລວມ*** | ***4,300,000*** |

# SODI! ບໍລິສັດຮ່ວມໃຈບໍລິການສາກົນ (ໂຊດີ)

## ກິດຈະກໍາໃນປີ 2012:

ອົງການໂຊດີ ຕັ້ງຢູ່ເມືອງຄໍາເກີດ, ແຂວງບໍລິຄໍາໄຊ. ມີຫ້ອງການໃຫຍ່ປະຈໍາຢູ່ວຽງຈັນ ແລະ ຫ້ອງການປະຕິບັດງານຢູ່ເມືອງຄໍາເກີດ. ປະຈຸບັນນີ້, ໂຄງການເກັບກູ້ ລບຕ ຂອງອົງການໂຊດີ ປະກອບມີວຽກງານບໍລິຫານ, ວຽກງານການເງິນ ແລະ ສະໜອງຈັດຊື້ ເພື່ອສະໜັບສະໜູນໃຫ້ແກ່:

- 3 ທີມກວດກູ້ ລບຕ ໃນເຂດພື້ນທີ່ສະໜາມສູ້ຮົບເກົ່າ
- 2 ທີມທໍາລາຍເຄື່ອນທີ່ (1ທີມກວດກູ້ນ້ອຍ ແລະ 1 ທີມທໍາລາຍເຄື່ນທີ່)
- 1 ທີມສໍາຫຼວດ ແລະ
- 1 ທີມງານກວດກູ້/ທີມງານໂຄສະນາສຶກສາຄວາມສ່ຽງ

ອີງໃສ່ແຜນການປະຈໍາປີ 2012 ຂອງອົງການໂຊດີ, ວຽກຈຸດສຸມຕົ້ນຕໍຂອງທີມງານກວດກູ້ ລບຕ ໃນເຂດພື້ນທີ່ສະໜາມສູ້ຮົບເກົ່າແມ່ນສຸມໃສ່ກວດກູ້ ລບຕ ໃນບ້ານທີ່ມີ ລບຕ ຕົກຄ້າງສູງຢູ່ໃນເມືອງຄໍາເກີດ ຄື:

- ໃນບ້ານກວນຈັນ ແລະ ບ້ານນາເດື່ອ, ຊຶ່ງເປັນສະຖານທີ່ຂອງອົງການໂຊດີ ກໍາລັງສືບຕໍ່ດໍາເນີນໂຄງການພັດທະນາຢູ່
- ເຂດໝູ່ບ້ານຕາມສາຍທາງເລກທີ 8ເອ ໄປຮອດສາຍແດນ ເຊັ່ນ ບ້ານຫຼັກ 5 ແລະ ບ້ານນອງ
- ເຂດພື້ນທີ່ບໍລິເວນອ້ອມແອ້ມໃຈກາງເມືອງຄໍາເກີດ
- ເຂດໝູ່ບ້ານຕາມເສັ້ນທາງ 8ບີ ແຕ່ເມືອງຄໍາເກີດເຖິງເມືອງນາກາຍ ແຂວງ ຄໍາມ່ວນ ເຊັ່ນ ບ້ານບານ, ໂພນໄຊ ແລະ ໂຄໄຫ

ອີງຕາມແຜນການປະຈໍາປີ 2012, ເຂດພື້ນທີ່ບູລິມະສິດການກວດກູ້ ລບຕ ຢູ່ຕາມຊຸມຊົນຕ່າງໆປະກອບມີ:

- ພື້ນທີ່ກະສິກໍາ
- ໂຮງຮຽນ
- ບໍລິເວນເຮືອນຊານບ້ານຊ່ອງຂອງປະຊາຊົນ
- ເຂດຍ້າຍຖິ່ນຖານໃໝ່
- ພື້ນຖານໂຄງລ່າງ ເຊັ່ນ: ເຂດພື້ນທີ່ປູກຕະຫຼາດໃໝ່ ແລະ ສະຖານນີລົດເມ ຢູ່ເມືອງຄໍາເກີດ

ນອກຈາກນັ້ນ, ວຽກປະຈໍາຂອງທີມງານກວດກູ້ ລບຕ ໃນເຂດພື້ນທີ່ສະໜາມສູ້ຮົບ ແລະ ທີມງານທໍາລາຍເຄື່ອນທີ່ ຍັງເຮັດສໍາເລັດວຽກງານຕາມແຜນການທີ່ກໍານົດໄວ້ຢູ່ເມືອງຄໍາເກີດ ແລະ ເມືອງອື່ນໆອີກເຊັ່ນ ເມືອງວຽງທອງ ແລະ ປາກກະດິງ. ທັງສາມເມືອງນີ້ ແມ່ນດໍາເນີນການກວດກູ້ ລບຕ ໂດຍອົງການໂຊດີ ແນໃສ່ເພື່ອຫຼຸດຜ່ອນຄວາມສ່ຽງຈາກ ລບຕ ໃຫ້ແກ່ປະຊາຊົນທີ່ດໍາລົງຊີວິດໃນເຂດພື້ນທີ່ດັ່ງກ່າວ.

ນອກຈາກນັ້ນ, ທີມງານທໍາລາຍເຄື່ອນທີ່ ຍັງໄດ້ຕອບຮັບການກວດ ກູ້ ລບຕ ແບບສຸກເສີນບ່ອນທີ່ພົບເຫັນ ລບຕ ຕົກຄ້າງຢູ່ເທິງໜ້າດິນ ໂດຍສະເພາະແມ່ນຢູ່ໃນເຂດບ່ອນຫຼິ້ນຂອງເດັກນ້ອຍ ແລະ ເຂດພື້ນທີ່ຂອງປະຊາຊົນທໍາມາຫາກິນ.

ພ້ອມນັ້ນ, ກໍ່ໄດ້ດໍາເນີນວຽກງານສໍາຫຼວດຢູ່ຕາມເຂດພື້ນທີ່ ລບຕ ຕົກຄ້າງສູງ ເພື່ອຕອບສະໜອງຕາມຄວາມຕ້ອງການຂອງປະຊາຊົນ ແລະ ເພື່ອສະໜັບສະໜູນໃຫ້ແກ່ທີມງານທໍາລາຍເຄື່ອນທີ່ໆເຄື່ອນໄຫວວຽກງານຢູ່ໃນເມືອງຄໍາເກີດ ແລະ ປາກກະດິງ ອີກດ້ວຍ.

ເປົ້າໝາຍຕົ້ນຕໍຂອງທີມງານກວດກູ້/ທີມງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແມ່ນສະໜອງການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃຫ້ແກ່ເດັກນ້ອຍ ແລະ ປະຊາຊົນຢູ່ໃນຊຸມຊົນຕ່າງໆ ເພື່ອໃຫ້ເຂົາເຈົ້າຮັບຮູ້ກ່ຽວກັບຄວາມອັນຕະລາຍຂອງ ລບຕ ແລະ ເຮັດແນວໃດເພື່ອໃຫ້ມີຄວາມປອດໄພ (ເຮັດແນວໃດໃນການເຮັດຫຼັກໝາຍໃຫ້ມີຄວາມປອດໄພ ແລະ ວິທີການລາຍງານຕໍ່ໃຫ້ອົງການໂຊດີ). ນອກຈາກນັ້ນ, ໜ່ວຍງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຍັງໄດ້ເກັບກໍາຂໍ້ມູນ ລບຕ ຕົກຄ້າງ ເພື່ອເປັນຂໍ້ມູນສະໜັບສະໜູນໃຫ້ແກ່ທີມງານສໍາຫຼວດ. ທຸກໆບ້ານທີ່ມີໜ່ວຍງານກວດກູ້/ໜ່ວຍງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ລົງເຄື່ອນໄຫວກິດຈະກໍາ, ໜ່ວຍງານກໍ່ຈະຕິດໂພດສເຕີ້ກ່ຽວກັບຊະນິດຂອງ ລບຕ, ໂພດສເຕີ້ກ່ຽວກັບການປະພຶດທີ່ມີຄວາມສ່ຽງຕໍ່ ລບຕ ແລະ ໃບປິວເຜີຍແຜ່ຂໍ້ມູນທົ່ວໄປກ່ຽວກັບຄວາມປອດໄພ. ຢູ່ໃນສື່ໂຄສະນາດັ່ງກ່າວ ແມ່ນຈະມີເບີໂທລະສັບສາຍດ່ວນຂອງອົງການໂຊດີຢູ່ນໍາ, ຊຶ່ງຈະເຮັດໃຫ້ຊາວບ້ານສາມາດແຈ້ງຂໍ້ມູນໃຫ້ອົງການໂຊດີໄດ້ຮັບຊາບໂດຍທັນທີໃນເວລາທີ່ພວກເຂົາພົບເຫັນ ລບຕ ຫຼື ວັດຖຸທີ່ມີຄວາມອັນຕະລາຍຕົກຄ້າງຢູ່. ນອກຈາກນັ້ນ, ໜ່ວຍງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຍັງໄດ້ລົງຕິດຕາມ ແລະ ເຮັດການປະເມີນຜົນກະທົບພາຍຫຼັງເກັບກູ້ ລບຕ ແລະ ພາຍຫຼັງການມອບໂອນດິນ ເພື່ອໃຫ້ຮັບປະກັນວ່າ ເນື້ອທີ່ດິນທີ່ໄດ້ກວດກູ້ແລ້ວ ໄດ້ຖືກນໍາໃຊ້ຕາມເປົ້າໝາຍ.

ໜ່ວຍງານໂຄສະ ນາສຶກສາຄວາມສ່ຽງຈາກ ລບຕ ຍັງໄດ້ເຂົ້າຮ່ວມກອງປະຊຸມວິຊາການວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ເພື່ອແລກປ່ຽນບົດຮຽນກັບອົງການປະຕິບັດງານອື່ນໆ, ຊຶ່ງວຽກງານດັ່ງກ່າວນີ້ ກໍ່ແມ່ນພາກສ່ວນໜຶ່ງຂອງແຜນຍຸດທະສາດແຫ່ງຊາດ (ກອງປະຊຸມລັດພາຄີຄັ້ງທໍາອິດຂອງສົນທິສັນຍາວ່າດ້ວຍການຕ້ານລະເບີດລູກຫວ່ານຂອງ ສປປ ລາວ ໃນປີ 2010, ນະຄອນຫຼວງວຽງຈັນ.

ນອກຈາກນັ້ນ, ອົງການໂຊດີ ຍັງໄດ້ຈັດກອງປະຊຸມສໍາມະນາຮ່ວມກັບຄະນະກໍາມະການຊີ້ນໍາວຽກງານ ລບຕ ຂັ້ນເມືອງ ແລະ ແຂວງ ເພື່ອສະຫຼຸບລາຍງານກ່ຽວກັບການປະຕິບັດວຽກງານຂອງອົງການໂຊດີໃນປີ 2012. ກອງປະຊຸມດັ່ງກ່າວ ຈັດຂຶ້ນທີ່ເມືອງຄໍາເກີດ ແລະ ມີຜູ້ເຂົ້າຮ່ວມຈາກອໍານາດການປົກຄອງຂັ້ນບ້ານທຸກໆບ້ານເຂົ້າຮ່ວມນໍາ.

## ຜົນສໍາເລັດຕົ້ນຕໍໃນປີ 2012:

ໂຄງການກວດກູ້ ລບຕ ຂອງອົງການໂຊດີ ແມ່ນມີການຮ່ວມມືກັນຢ່າງໃກ້ສິດຕິດແທດກັບອໍານາດການປົກຄອງຂອງເມືອງຄໍາເກີດ ແລະ ອໍານາດການປົກຄອງຂັ້ນແຂວງບໍລິຄໍາໄຊ ເພື່ອເລັ່ງລັດການກວດກູ້ ລບຕ ເພື່ອປົດປ່ອຍພື້ນທີ່. ການປົດປ່ອຍພື້ນທີ່ນີ້ ບໍ່ສະເພາະສະໜັບສະໜູນໃນການຫຼຸດຜ່ອນຄວາມສ່ຽງໃຫ້ແກ່ຊຸມຊົນເທົ່ານັ້ນ, ແຕ່ຍັງສະໜັບສະໜູນໃຫ້ແກ່ແຜນພັດທະນາຂອງເມືອງ ແລະ ແຂວງອີກດ້ວຍ. ລັດຖະບານລາວ ໄດ້ຕັ້ງ

ຄາດໝາຍແຕ່ນີ້ຮອດປີ 2020 ແມ່ນຕ້ອງໃຫ້ສຳເລັດການຫຼຸດຜ່ອນຄວາມທຸກຍາກຢູ່ໃນສປປລາວ.ເພື່ອສະໜັບສະໜູນໃຫ້ວຽກງານດັ່ງກ່າວ, ໂຄງການກວດກູ້ ລບຕ ຂອງອົງການໂຊດີ ສາມາດປົດປ່ອຍເນື້ອທີ່ດິນໄດ້ດັ່ງລຸ່ມນີ້:

- ເນື້ອທີ່ດິນກະສິກຳ ຈຳນວນ 168 ເຮັກຕາ
- ເນື້ອທີ່ດິນພັດທະນາ ຈຳນວນ 39 ເຮັກຕາ ແລະ
- ມີຜູ້ທີ່ໄດ້ຮັບຜົນປະໂຫຍດຢ່າງໜ້ອຍ 2,957 ຄົນ

## ຂ່າວດີ: ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ເຮັດການໂຄສະນາໃຫ້ໂຮງຮຽນມີຄວາມປອດໄພ

ໃນວັນທີ 12 ກຸມພາ 2013, ລະເບີດບົມໃຫຍ່ໜັກ 500ປອນ ທີ່ພົບເຫັນຢູ່ເດີ່ນໂຮງຮຽນຢູ່ໃນຕົວເມືອງຫຼັກຊາວ. ເດັກນ້ອຍສອງຄົນກຳລັງແລ່ນຫຼິ້ນຢູ່ຕາມເດີ່ນໂຮງຮຽນ ໄດ້ປະກົດເຫັນບາງສິ່ງບາງຢ່າງແປກໆຢູ່ເດີ່ນ. ຫຼັງຈາກນັ້ນ, ເດັກນ້ອຍທັງສອງຄົນກໍຮີບຟ້າວໄປລາຍງານແກ່ຮອງອຳນວຍການໂຮງຮຽນໃຫ້ຮັບຊາບ. ທັນທີທັນໃດນັ້ນ, ຮອງອຳນວຍການໂຮງຮຽນກໍໄດ້ຮີບດ່ວນໄປແຈ້ງໃຫ້ອຳນາດການປົກຄອງຂັ້ນທ້ອງຖິ່ນ ແລະ ທີມງານສຳຫຼວດຂອງອົງການໂຊດີ ໃຫ້ຮັບຊາບ. ທັນທີທັນໃດນັ້ນ, ອົງການໂຊດີກໍໄປຮອດສະຖານທີ່ດັ່ງກ່າວພາຍໃນ 2-3 ນາທີ ແລະ ປິດລ້ອມສະຖານທີ່ດັ່ງກ່າວ. ທີມງານສຳຫຼວດຢືນຢັນວ່າ ສິ່ງຂອງທີ່ເດັກນ້ອຍພົບເຫັນນັ້ນແມ່ນລະເບີດ ເອັມເຄ64 ໜັກ 500 ປອນ, ທີ່ຖິ້ມລົງມາຈາກຍົນ. ຫຼັງຈາກນັ້ນ, ທີມສຳຫຼວດ ກໍໄດ້ອົບພະຍົບນັກຮຽນທີ່ເຫຼືອຢູ່ພາຍໃນໂຮງຮຽນອອກຈາກສະຖານທີ່ດັ່ງກ່າວໃນຂະນະດຽວກັນ, ຊ່ຽວຊານທຳລາຍລະເບີດຂັ້ນສູງ ກໍມາຮອດເພື່ອເຮັດການຊີ້ນຳໃນການເຄື່ອນຍ້າຍລະເບີດດັ່ງກ່າວໄປຍັງສະໜາມທຳລາຍ.

ສິ່ງນີ້ສະແດງໃຫ້ເຫັນວ່າ ເດັກນ້ອຍແມ່ນມີການປະພຶດທີ່ຖືກຕ້ອງ (ຍ້ອນວ່າມີທີມງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຂອງອົງການໂຊດີ ໄດ້ລົງໄປເຄື່ອນໄຫວຢູ່ໂຮງຮຽນ), ນອກຈາກນັ້ນ, ກໍຍ້ອນມີສາຍດ່ວນຂອງອົງການໂຊດີ 24 ຊົ່ວໂມງ ແລະ ການຕອບຮັບຢ່າງຮີບດ່ວນຈາກທີມສຳຫຼວດ ກໍແມ່ນຕົວຢ່າງທີ່ຊີ້ໃຫ້ເຫັນວ່າ ເຮັດແນວໃດໃຫ້ຊຸມຊົນທ້ອງຖິ່ນສາມາດລາຍງານໃຫ້ແກ່ທີມກວດກູ້ ລບຕ ໄດ້ຢ່າງທັນການ ເພື່ອໃຫ້ສາມາດນຳສິດຜົນປະໂຫຍດ ແລະ ຊີວິດການເປັນຢູ່ທີ່ດີຂຶ້ນ ໃຫ້ແກ່ເຂົາເຈົ້າ.



*ລະເບີດເອັມເຄ, ຢູ່ຫຼັກຊາວ. ຮູບຖ່າຍ: ອໍເຣວເຣນ ດາຍເວນ*

## ວຽກຈຸດສຸມໃນປີ 2013:

- ປົດປ່ອຍເນື້ອທີ່ດິນກະສິກຳ, ເນື້ອທີ່ຈັດສັນພູມລຳເນົາໃໝ່, ພື້ນຖານໂຄງລ່າງຢູ່ຊົນນະບົດ ແລະ ການພັດທະນາເສດຖະກິດ-ສັງຄົມ ຈຳນວນທັງໝົດ 2,417,000 ຕາແມັດ ຢູ່:
    - ບ້ານກອນຈັນ, ໂພນໄຊ, ນາພາວັນ, ທົ່ງຈະເລີນ, ໜອງພືງ, ນ້ຳປັນ, ສົມດົມ, ນ້ຳທີ ແລະ ຫຼັກຫາ ລວມເນື້ອທີ່ 2,141,000 ຕາແມັດ
    - ເນື້ອທີ່ 276,000 ຕາແມັດ ຢູ່ເດີ່ນຫຼິ້ນໂຮງຮຽນ ແລະ ເຂດພື້ນທີ່ກະສິກຳ, ພື້ນທີ່ປູກພືດ, ປ່າໄມ້ ແລະ ຈຸດປະສົງຕ່າງໆຂອງບ້ານ ຢູ່ໃນ 14 ບ້ານ ຢູ່ໃນເມືອງ
    - ເນື້ອທີ່ 287,000 ຕາແມັດ ແມ່ນໄດ້ສຳເລັດການກວດກູ້ໂດຍການສຳຫຼວດທາງດ້ານວິຊາການ ຫຼື ການກວດກູ້.
- ເຄື່ອນຍ້າຍ ລບຕ ອອກຈາກພື້ນທີ່ຢູ່ໃນ 17 ບ້ານ ຢູ່ໃນເມືອງຄຳເກີດ, 5 ບ້ານຢູ່ເມືອງປາກກະດິງ ແລະ 1 ບ້ານຢູ່ເມືອງວຽງທອງ ແລະ ບ້ານອື່ນໆຕາມການຮ້ອງຂໍຂອງປະຊາຊົນ ແລະ ອຳນາດການປົກຄອງຂັ້ນເມືອງ.
- ການສຶກສາຂອງປະຊາຊົນ ໂດຍສະເພາະແມ່ນເດັກນ້ອຍກ່ຽວກັບຄວາມສ່ຽງຈາກ ລບຕ, ການປະພຶດທີ່ຖືກຕ້ອງໃນເວລາພົບເຫັນ ລບຕ ແລະ ຈະຈຳແນກເບິ່ງຊະນິດຂອງ ລບຕ ໄດ້ແນວໃດ, ສິ່ງດັ່ງກ່າວນີ້ ແມ່ນຈະເຮັດໃຫ້ສຳເລັດໂດຍຜ່ານການເຄື່ອນໄຫວກິດຈະກຳໂຄສະນາຄວາມສ່ຽງຈາກ ລບຕ ຢູ່ຕາມໂຮງຮຽນ ແລະ ບ້ານທີ່ມີ ລບຕ ຕົກຄ້າງຈຳນວນ 26 ບ້ານຢູ່ເມືອງຄຳເກີດ, ວຽງທອງ ແລະ ປາກກະດິງ.
- ເຮັດການສຳຫຼວດຢູ່ໃນພື້ນທີ່ໃໝ່ເພື່ອປັບປຸງແຜນການປີ 2014 ສຳລັບການກວດກູ້ ລບຕ ໃນເຂດພື້ນໆທີ່ເປັນສະໜາມສູ້ຮົບເກົ່າ ແລະ ການທຳລາຍ ລບຕ.
- ເຮັດການສຳຫຼວດຂັ້ນ 1 (ໂດຍອີງໃສ່ວິທີການສຳຫຼວດພື້ນທີ່ບູລິມະສິດ ລບຕ ຕົກຄ້າງຂັ້ນເມືອງ) ຢູ່ໃນ 8 ບ້ານຢູ່ເມືອງຄຳເກີດ, 5 ບ້ານຢູ່ເມືອງປາກກະດິງ ແລະ 1 ບ້ານຢູ່ເມືອງວຽງທອງ.
- ປັບປຸງຄວາມອາດສາມາດໃຫ້ແກ່ນັກທຳລາຍລະເບີດໂດຍຜ່ານການຝຶກອົບຮົມກ່ຽວກັບນັກທຳລາຍ ລບຕ ຂັ້ນສູງ ທີ່ຈັດຂຶ້ນໂດຍ ຄຊກລ. ສຳລັບຄູຝຶກໃຫ້ແກ່ການຝຶກອົບຮົມດັ່ງກ່າວນີ້ຈະແມ່ນຊ່ຽວຊານຕ່າງປະເທດຂອງອົງການໂຊດີ.

### ຜົນໄດ້ຮັບຈາກການເຄື່ອນໄຫວວຽກງານ 4 ເປົ້າໝາຍຂອງອົງການໂຊດີ ປະກອບມີ:

- ການຫຼຸດລົງຂອງຄວາມສ່ຽງທີ່ເກີດຈາກອຸປະຕິເຫດ ລບຕ
- ປະກອບສ່ວນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກຢູ່ເມືອງຄຳເກີດ (ເປັນເມືອງທີ່ມີ ລບຕ ຕົກຄ້າງສູງຢູ່ໃນແຂວງບໍລິຄຳໄຊ) ໂດຍການກວດກູ້ ລບຕ ອອກຈາກເນື້ອທີ່ດິນກະສິກຳເພື່ອໃຫ້ສາມາດທຳການຜະລິດ.
- ເມືອງວຽງທອງ ແລະ ເມືອງປາກກະດິງ ຈະໄດ້ຮັບຜົນປະໂຫຍດຈາກກິດຈະກຳກວດກູ້ ລບຕ (ຕາມການຮ້ອງຂໍ) ລວມທັງກິດຈະກຳໂຄສະນາສຶກສາຄວາມສ່ຽງ.

## ຄູ່ຮ່ວມປະຕິບັດງານຕ່າງໆ:

ໂຄງການກວດກູ້ ລບຕ ຂອງອົງການໂຊດີ ໄດ້ສົມທົບກັບອຳນາດການປົກຄອງຂັ້ນແຂວງບໍລິຄຳໄຊ ແລະ ຄະນະກຳມະການຊີ້ນຳວຽກງານ ລບຕ ຂັ້ນເມືອງຄຳເກີດ, ວຽງທອງ ແລະ ປາກກະດິງ. ນອກຈາກນັ້ນ, ອົງການໂຊດີ ກໍ່ໄດ້ສະໜອງການກວດກູ້ ລບຕ, ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ໂຄງການພັດທະນາຈຳນວນໜຶ່ງຢູ່ບ້ານກວນຈັນ, ໂພນໄຊ, ນາພາວັນ, ທົ່ງຈະເລີນ, ໜອງພົງ, ນ້ຳປານ, ສີນຸດົມ, ນ້ຳຕິ ແລະ ຫຼັກຫ້າ ອີກດອຍ.

## ບຸກຄະລາກອນໃນປີ 2012:

| *ປະຈຳຢູ່ຫ້ອງການ* | | | | *ປະຈຳຢູ່ຝ່າຍປະຕິບັດງານ* | | | |
|---|---|---|---|---|---|---|---|
| *ລາວ* | | *ຕ່າງປະເທດ* | | *ລາວ* | | *ຕ່າງປະເທດ* | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 11 | 7 | 1 | 0 | 112 | 19 | 1 | 0 |

## ຕົວເລກສະຖິຕິໃນປີ 2012:

| | | *ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ* | | *ການສຳຫຼວດ* | | *ການທຳລາຍເຄື່ອນທີ່* | |
|---|---|---|---|---|---|---|---|
| ຈ/ນ ບ້ານ | ຜູ້ໄດ້ຮັບຜົນປະໂຫຍດ | ທາງດ້ານການເງິນ | ທາງດ້ານການແພດ | ຈ/ນ ບ້ານ | ຈ/ນ ຄັ້ງຢັ້ງມຢາມ | ຈ/ນ ບ້ານ | ຈ/ນ ຄັ້ງຢັ້ງມຢາມ |
| 52 | 10,434 | ບໍ່ໄດ້ນຳໃຊ້ | ບໍ່ໄດ້ນຳໃຊ | 35 | 184 | 27 | 171 |

## ການກວດກູ້:

| *ຜ່ານການກວດກູ້ (ເຮັກຕາ)* | | | *ຜ່ານການສຳຫຼວດທາງດ້ານວິຊາການ (ເຮັກຕາ)* | | |
|---|---|---|---|---|---|
| ເນື້ອທີ່ກະສິກຳ | | ລວມເນື້ອທີ່ທັງໝົດ | ເນື້ອທີ່ກະສິກຳ | | ລວມເນື້ອທີ່ທັງໝົດ |
| 168 | 39 | 207 | 0 | .4 | .4 |

## ລບຕ ທີ່ພົບເຫັນ, ຍົກຍ້າຍ ແລະ ທຳລາຍ:

| *ລບຕ ທີ່ຖືກຍົກຍ້າຍ/ທຳລາຍ* | | | | | |
|---|---|---|---|---|---|
| ***ໜ້າວຽກ*** | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ |
| ການທຳລາຍເຄື່ອນທີ່ | 13 | 360 | 0 | 76 | 449 |
| ການກວດກູ້ພື້ນທີ່ | 1 | 711 | 0 | 818 | 1,530 |
| ການສຳຫຼວດທາງດ້ານວິຊາການ | 13 | 349 | 0 | 44 | 406 |
| | ***27*** | ***1420*** | ***0*** | ***938*** | ***2,385*** |

## ພື້ນທີ່ໃນການປະຕິບັດງານ:

| *ກິດຈະກຳ* | *ສະຖານທີ່ຈັດຕັ້ງປະຕິບັດກິດຈະກຳ* |
|---|---|
| ການກວດກູ້ພື້ນທີ່ | ແຂວງບໍລິຄຳໄຊ, ເມືອງຄຳເກີດ |
| ການສຳຫຼວດ ແລະ ການທຳລາຍເຄື່ອນທີ່ | ແຂວງບໍລິຄຳໄຊ, ເມືອງຄຳເກີດ, ເມືອງວຽງທອງ ແລະ ປາກກະດິງ |
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ແຂວງບໍລິຄຳໄຊ, ເມືອງຄຳເກີດ, ເມືອງວຽງທອງ ແລະ ປາກກະດິງ |
| ວຽກອື່ນໆ | ການຊ່ວຍເຫຼືອເພື່ອການພັດທະນາ (ນ້ຳລິນ ແລະ ການສ້າງໂຮງຮຽນ) ຢູ່ແຂວງບໍລິຄຳໄຊ, ເມືອງຄຳເກີດ, ບ້ານນ່າເດື່ອ ແລະ ກວນຈັນ. |

## ສະພາບການເງິນ:

### ຄ່າໃຊ້ຈ່າຍໃນປີ 2012: (ໂດລາສະຫະລັດ)

| *ລາຍລະອຽດ* | *ຈຳນວນເງິນ (ໂດລາສະຫະລັດ)* |
|---|---:|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 531,000.00 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 148,000.00 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | ບໍ່ໄດ້ນຳໃຊ້ |
| ຄ່າໃຊ້ຈ່າຍສຳລັບຊື້ອຸປະກອນ-ຊັບສິນຄົງທີ່ | 152,500.00 |
| ***ລວມ*** | ***831,500.00*** |

## ການປະກອບສ່ວນຂອງຜູ້ໃຫ້ທຶນ ໃນປີ 2012: (ໂດລາສະຫະລັດ)

| *ຜູ້ໃຫ້ທຶນ* | *ເງິນທີ່ໄດ້ຮັບໃນປີ 2012 (ໂດລາສະຫະລັດ)* |
|---|---:|
| ກະຊວງການຕ່າງປະເທດເຢຍລະມັນ | 823,700.00 |
| ອົງການໂຊດີ (ເງິນບໍລິຈາກຂອງເອກະຊົນ) | 7,800.00 |
| ***ລວມ*** | ***831,500.00***[1] |

[1] ຄ່າໃຊ້ຈ່າຍລວມຂ້າງເທິງນັ້ນແມ່ນໄລຍະເວລາ 9 ເດືອນເທົ່ານັ້ນ ເນື່ອງຈາກວ່າ ອີງໃສ່ການຄິດໄລ່ຕາມສົກປີງົບປະມານ. ການສະຫຼຸບປະຈຳປີແມ່ນກຳລັງຢູ່ໃນການກວດສອບສຸດທ້າຍ.

THE HALO TRUST

# ອົງການເຮໂລທຼາດ (ເຮໂລ)

## ກິດຈະກຳໃນປີ 2012:

ອົງການເຮໂລຫຼາດ ໄດ້ໃຊ້ເວລາໃນປີ 2012 ເຮັດສຳເລັດການຂຶ້ນທະບຽນຂໍການດຳເນີນງານກວດກູ້ ລບຕ ຢູ່ ສປປ ລາວ. ເປົ້າໝາຍຂອງໂຄງການແມ່ນສຸມໃສ່ການດຳເນີນງານກວດກູ້ ລບຕ ຢູ່ເມືອງວິລະບູລີ ແລະ ເຊໂປນ ຢູ່ແຂວງສະຫັວນນະເຂດ-ແຂວງທີ່ໄດ້ຮັບຜົນກະທົບໜັກໜ່ວງທີ່ສຸດໃນ ສປປ ລາວ. ສອງເມືອງດັ່ງກາວນີ້ແມ່ນມີຊາຍແດນຕິດກັບຫວຽດນາມ ແລະ ໄດ້ຮັບຜົນກະທົບຈາກ ລບຕ ຕົກຄ້າງ ແລະ ເປັນບັນຫາທີ່ສຳຄັນຕົ້ນຕໍທີ່ສົ່ງຜົນກະທົບໃຫ້ແກ່ການພັດທະນາຢູ່ຊົນນະບົດທ້ອງຖິ່ນ.

ໃນຊ່ວງໄລຍະ 6 ເດືອນທ້າຍປີ 2012, ອົງການເຮໂລຫຼາດ ໄດ້ສຸມໃສ່ການສ້າງຫ້ອງການປະສານງານຢູ່ວຽງຈັນ, ຫ້ອງການປະຕິບັດງານໃຫຍ່ຢູ່ເມືອງເຊໂປນ, ໄດ້ມີການປຶກສາຫາລືກັບລັດຖະບານລາວກ່ຽວກັບເອກະສານໂຄງການ ແລະ ການເຊັນບົດບັນທຶກຄວາມເຂົ້າໃຈກັບ ຄຊກລ, ໄດ້ຍື່ນເອກະສານເຖິງ ຄຊກລ ເພື່ອຄົ້ນຄ້ວາອອກໜັງສືຢັ້ງຢືນຮັບຮອງການປະຕິບັດງານແກ້ໄຂບັນຫາ ລບຕ ຢູ່ໃນ ສປປ ລາວ, ໄດ້ປະກາດຮັບສະໝັກພະນັກງານ, ຝຶກອົບຮົມ ແລະ ສ້າງທີມກວດກູ້ຂຶ້ນ 3 ທີມ ແລະ ທີມສຳຫຼວດຂຶ້ນ 3 ທີມ/ນັກທຳລາຍລະເບີດ/ທີມໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ໄດ້ສັ່ງລວມການຈັດຊື້ວັດຖຸອຸປະກອນ, ປະກອບວັດຖຸອຸປະກອນທີ່ສຳຄັນຕ່າງໆໃຫ້ແກ່ທີມງານໃນເດືອນມັງກອນ 2013.

ປະຈຸບັນນີ້, ອົງການເຮໂລຫຼາດ ໄດ້ເລີ່ມເຄື່ອນໄຫວວຽກງານຢ່າງເຕັມສ່ວນແລ້ວ, ໃຫ້ຄຳໝັ້ນສັນຍາວ່າ ຈະນຳເອົາຜົນສຳເລັດທາງດ້ານການພັດທະນາໂດຍຜ່ານການກວດກູ້ ລບຕ ອອກຈາກເນື້ອທີ່ດິນມາສູ່ແຂວງສະຫັວນນະເຂດ.

## ຜົນສຳເລັດຕົ້ນຕໍໃນປີ 2012:

ອົງການເຮໂລຫຼາດ ໄດ້ຮັບໃບອະນຸຍາດການດຳເນີນງານຈາກກະຊວງການຕ່າງປະເທດໃນເດືອນກຸມພາ 2012 ແລະ ກໍ່ເລີ່ມໄດ້ຮັບທຶນຊ່ວຍເຫຼືອເຂົ້າມາ ແລະ ໄດ້ສ້າງທີມຄຸ້ມຄອງບໍລິຫານຂຶ້ນໃນເດືອນມິຖຸນາ.



*ອົງການເຮໂລຫຼາດ ດຳເນີນການປະເມີນຜົນຢູ່ຕາມບ້ານ.*



*ພະນັກງານຂອງອົງການເຮໂລຫຼາດ ຢູ່ປະເທດກຳປູເຈຍ ເຮັດວຽກຢ່າງໃກ້ສິດຕິດແທດກັບພະນັກງານລາວ ເພື່ອປັບປຸງຄວາມຮູ້ກ່ຽວກັບວິທີການສຳຫຼວດ.*

ຕະຫຼອດຊ່ວງໄລຍະເວລາທີ່ໄດ້ມີການປຶກສາຫາລືກັບ ຄຊກລ ແລະ ກະຊວງການຕ່າງປະເທດ, ຈຶ່ງເຮັດໃຫ້ບົດບັນທຶກຄວາມເຂົ້າໃຈຂອງອົງການເຮໂລຫຼາດ ຖືກອະນຸມັດຮັບຮອງໃນວັນທີ 4 ຕຸລາ. ຫຼັງຈາກນັ້ນ, ອົງການເຮໂລຫຼາດ ກໍ່ຮີບດ່ວນຍື່ນຂໍໜັງສືຢັ້ງຢືນຮັບຮອງການປະຕິບັດຈາກ ຄຊກລ ແລະ ກໍ່ໄດ້ຮັບໜັງສືຢັ້ງຢືນດັ່ງກ່າວໃນວັນທີ 14 ພະຈິກ.

ການປະກາດຮັບສະໝັກພະນັກງານ ແລະ ການຝຶກອົບຮົມຂອງອົງການເຮໂລຫຼາດໃຫ້ແກ່ພະນັກງານລາວຢູ່ເມືອງເຊໂປນ ແລະ ວິລະບູລີ ກໍ່ໄດ້ເລີ່ມຕົ້ນຂຶ້ນພາຍຫຼັງທີ່ບົດບັນທຶກຄວາມເຂົ້າໃຈໄດ້ຖືກເຊັນ. ໃນຊ່ວງໄລຍະການຄັດເລືອກ ແລະ ປະກາດຮັບສະໝັກເອົາພະນັກງານນັ້ນ, ທີມງານຄຸ້ມຄອງບໍລິຫານຂອງອົງການເຮໂລຫຼາດ ກໍ່ໄດ້ເຮັດວຽກຢ່າງໃກ້ສິດຕິດແທດກັບອຳນາດການປົກຄອງເມືອງ ເພື່ອໃຫ້ຮັບປະກັນວ່າ ຊຸມຊົນທ້ອງຖິ່ນໄດ້ເຂົ້າມາເປັນສ່ວນໜຶ່ງໃນການດຳເນີນກິດຈະກຳຕ່າງໆຂອງອົງການເຮໂລຫຼາດ ໂດຍການຮັບສະໝັກເອົາພະນັກງານຈາກຊຸມຊົນທີ່ໄດ້ຮັບຜົນກະທົບເຂົ້າມາເຮັດວຽກນຳ. ຫຼັງຈາກນັ້ນ, ການຝຶກອົບຮົມໃຫ້ພະນັກງານກໍ່ໄດ້ເລີ່ມຕົ້ນຂຶ້ນໃນເດືອນຕຸລາ ໂດຍປະກອບມີຫຼັກສູດຫຼາຍຢ່າງດັ່ງລຸ່ມນີ້:

- ການກວດກູ້ ລບຕ - ນຳພາໂດຍຫົວໜ້າຝ່າຍປະຕິບັດງານຂອງອົງການເຮໂລຫຼາດ
- ການຝຶກອົບຮົມກ່ຽວກັບນັກຂັບລົດ - ດຳເນີນໂດຍຊ່ຽວຊານທາງດ້ານການຂັບລົດຂອງອົງການເຮໂລຫຼາດ ແລະ ໂຮງຮຽນສອນຂັບລົດຢູ່ແຂວງສະຫັວນນະເຂດ
- ການປະຖົມພະຍາບານຂັ້ນພື້ນຖານ ແລະ ຂັ້ນສູງ- ສອນໂດຍປະທານຄະນະການແພດຂອງອົງການເຮໂລຫຼາດ ຈາກປະເທດອັງກິດ ແລະ ໄດ້ນຳໄປສິດສອນໃຫ້ພະນັກງານ 24 ຄົນ ແບບຕົວຕໍ່ຕົວເປັນທີ່ຮຽບຮ້ອຍແລ້ວ ເພື່ອປະກອບເປັນທີມທາງການແພດ
- ນັກເກັບກູ້ລະເບີດຂັ້ນພື້ນຖານ ແລະ ຂັ້ນສູງ(ອີໂອດີ) - ດຳເນີນໂດຍນັກທຳລາຍລະເບີດມືອາຊີບຂອງໂລກຂອງອົງການເຮໂລຫຼາດ. ພ້ອມນັ້ນ, ກໍ່ໄດ້ມີການກຳນົດເອົາຜູ້ທີ່ຮຽນເກັ່ງຈາກບັນດານັກຮຽນເຫຼົ່ານີ້ ເພື່ອເຂົ້າເປັນຫົວໜ້າທີມໃນອານາຄົດ.

ມາຮອດເດືອນທັນວາ 2012, ອົງການເຮໂລທຼາດ ມີພະນັກງານທີ່ຜ່ານການຝຶກອົບຮົມກ່ຽວກັບການຄຸ້ມຄອງບໍລິຫານວຽກງານກວດກູ້ ລບຕ ແລະ ວຽກງານສະໜັບສະໜູນມາແລ້ວຫຼາຍລະດັບຫຼາຍກວ່າ 65 ຄົນ. ມາຮອດທ້າຍປີ 2012, ອົງການເຮໂລທຼາດ ມີຄວາມພ້ອມແລ້ວ ທີ່ຈະເລີ່ມດຳເນີນກິດຈະກຳໃນໄລຍະຕໍ່ໄປຢູ່ສະໜາມໃນເດືອນມັງກອນ 2013.



*ນັກກວດກູ້ ລບຕ ຂອງອົງການເຮໂລທຼາດ ລົງເຄື່ອນໄຫວວຽກງານຢູ່ສະໜາມກວດກູ້ສະໜາມທຳອິດຢູ່ບ້ານນາກະພິງ*

## ຂ່າວດີ: ອົງການເຮໂລທຼາດ ຮ່ວມຕໍ່ສູ້ກັບ ລບຕ ຢູ່ໃນ ສປປ ລາວ

ໃນທ້າຍເດືອນທັນວາ 2012, ບ່ອນທຳອິດທີ່ທີມສຳຫຼວດຂອງອົງການເຮໂລທຼາດໄດ້ເລີ່ມ ເຄື່ອນໄຫວວຽກງານແມ່ນເຂດທີ່ໄດ້ຮັບຜົນກະທົບສູງຈາກລບຕນັ້ນກໍ່ຄືເຂດຊຸມຊົນບ້ານນາກະພຸງທີ່ເປັນເຂດຈັບສັນພູນລຳເນົາໃໝ່ຢູ່ທີ່ເມືອງວິລະບູລີ. ໃນລະຫວ່າງປີ 2013-2014 ຄາດຄະເນວ່າໝູ່ບ້ານດັ່ງກ່າວຈະຍົກຍ້າຍເອົາຄອບຄົວໃໝ່ຫຼາຍກວ່າ 40 ຄອບຄົວ ເຂົ້າມາອາໃສຢູ່ໃນບໍລິເວນດັ່ງກາວ ແລະ ຈະມີການສ້າງໂຮງຮຽນຫຼັງໃໝ່ ແລະ ນ້ຳສ້າງ ອີກນຳ. ເຖິງຢ່າງໃດກໍ່ຕາມ, ພື້ນທີ່ດັ່ງກ່າວນີ້ກໍ່ຍັງມີ ລບຕ ຕົກຄ້າງຢູ່. ການສຳຫຼວດໃຫ້ໄວ ແລະ ການກວດກູ້ ລບຕ ຕາມພື້ນທີ່ເປົ້າໝາຍແມ່ນຄວາມຕ້ອງການຕົ້ນຕໍ ເພື່ອປ້ອງກັນການເກີດອຸປະຕິເຫດຈາກ ລບຕ. ອົງການເຮໂລທຼາດ ໄດ້ຮັບການຮ້ອງຂໍຈາກອຳນາດການປົກຄອງເມືອງວິລະບູລີ ໃຫ້ດຳເນີນການສຳຫຼວດ ແລະ ເຮັດການປະເມີນພື້ນທີ່ຕາມຂອບເຂດບໍລິເວນບ້ານ ແລະ ເຂດພື້ນທີ່ລ້ຽງສັດຂອງໝູ່ບ້ານອ້ອມຂ້າງ, ກ່ອນຈະນຳເອົາທີມກວດກູ້ ລບຕ ລົງມາ. ຫຼັງຈາກນັ້ນ, ອົງການເຮໂລທຼາດ ກໍ່ໄດ້ເລີ່ມລົງມືກວດກູ້ ລບຕ ຢູ່ໃນເມືອງນາກະພຸງ ໃນເດືອນມັງກອນ 2013.

ນອກຈາກນັ້ນ, ອົງການເຮໂລທຼາດ ຍັງໄດ້ມີພົວພັນກັບອຳນາດການປົກຄອງເມືອງວິລະບູລີ ແລະ ເຊໂປນ ເພື່ອຮ່ວມກັນກຳນົດພື້ນເພີ່ມເຕີມໃນການກວດກູ້/ສຳຫຼວດ ລບຕ ເພື່ອສະໜັບສະສະໜູນທາງດ້ານມະນຸດສະທຳ ແລະ ບູລິມະສິດແຜນພັດທະນາຂອງເມືອງອີກດ້ວຍ. ບ້ານຕ່າງໆເຫຼົ່ານີ້ ແມ່ນຈະຖືກລົງຢ້ຽມຢາມໂດຍທີມສຳຫຼວດຂອງອົງການເຮໂລທຼາດເລີ່ມແຕ່ເດືອນມັງກອນຈົນຮອດທ້າຍປີ 2013.

## ວຽກຈຸດສຸມໃນປີ 2013:

ການຂໍອະນຸຍາດເພື່ອດຳເນີນງານກວດກູ້ ລບຕ ຢູ່ໃນ ສປປ ລາວ

ໃນປີ2012, ອົງການເຮໂລທຼາດໄດ້ສຸມໃສ່ກະກຽມການປະຕິບັດງານຂອງຕົນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ໃນປີ 2013. ວຽກງານສຳຫຼວດ, ນັກກວດກູ້ ແລະ ການກວດກູ້ ລບຕ ຈະເລີ່ມຕົ້ນສຸມໃສ່ສອງເມືອງທີ່ຢູ່ທາງພາກຕາເວັນອອກສຽງເໜືອນັ້ນກໍ່ຄື ເມືອງເຊໂປນ ແລະ ວິລະບູລີ ຂອງແຂວງສະຫວັນນະເຂດ. ເມືອງດັ່ງກ່າວ ຖືໄດ້ວ່າເປັນເມືອງທີ່ທຸກຍາກທີ່ສຸດອີງຕາມດັດສະນີການວັດແທກຄວາມທຸກຍາກແຫ່ງຊາດ ແລະ ກໍ່ເປັນເມືອງທີ່ມີອັດຕາຂອງອຸປະຕິເຫດຈາກ ລບຕ ເກີດຂຶ້ນສູງທີ່ສຸດແຫ່ງໜຶ່ງໃນປະເທດ.

ບັນຫາ ລບຕ ຕົກຄ້າງຢູ່ໃນ ສປປ ລາວ ບໍ່ສະເພາະແຕ່ຈະແກ້ໄຂຜ່ານການເລັ່ງລັດການສຳຫຼວດ, ມີການກຳນົດບູລິມະສິດໃນການກວດກູ້ ລບຕ ໃຫ້ຖືກຕ້ອງເທົ່ານັ້ນ, ແຕ່ສິ່ງສຳຄັນທີ່ສຸດແມ່ນການກວດກູ້ ລບຕ ໃຫ້ໄດ້ພື້ນທີ່ໆກວ້າງຂວາງ. ຫ້ອງການໃຫຍ່ເຮໂລທຼາດປະຈຳພາກພື້ນ ຢູ່ປະເທດສີລັງກາ ແລະ ກຳປູເຈຍ ມີພະນັກງານທ້ອງຖິ່ນຫຼາຍກວ່າ 1,000 ຄົນ ແລະ ຢູ່ອາບການິດສະຖານລວມທັງໝົດ 4,000 ຄົນ ແມ່ນກຳລັງດຳເນີນການກວດກູ້ ລບຕ. ລັດຖະບານລາວ ມີຄວາມຕ້ອງການຢາກເພີ່ມເນື້ອທີ່ການກວດກູ້ໃຫ້ຫຼາຍຂຶ້ນ ເພື່ອໃຫ້ສາມາດບັນລຸຕາມເປົ້າໝາຍສະຫັດສະວັດດ້ານການພັດທະນາ ອັນດັບ 9 (ຫຼຸດຜ່ອນຜົນກະທົບຈາກ ລບຕ). ອົງການເຮໂລທຼາດ ໃຫ້ຄຳໝັ້ນສັນຍາວ່າ ຈະຊອກຫາວິທີການແກ້ໄຂບັນຫາ ລບຕ ແລະ ທຶນຊ່ວຍເຫຼືອເພີ່ມເຕີມເພື່ອຂະຫຍາຍການປະຕິບັດງານໃຫ້ສົມຄູ່ກັບທຶນທີ່ໄດ້ຮັບມາ.

## ຄູ່ຮ່ວມປະຕິບັດງານຕ່າງໆ:

ອົງການເຮໂລທຼາດ ໄດ້ມີການປຶກສາຫາລືກ່ຽວກັບການຮ່ວມມືໃນການດຳເນີນງານກັບບັນດາອົງການ ເອັນຈີໂອຕ່າງໆທີ່ເຄື່ອນໄຫວຢູ່ໃກ້ຂອບເຂດພື້ນທີ່ການປະຕິບັດງານຂອງອົງການເຮໂລທຼາດ. ການປະສານສົມທົບກັນກັບຄູ່ຮ່ວມງານອື່ນໆປະກອບມີອົງການເວວທັງເກີຮິບ (ໃນແຕ່ກ່ອນເອີ້ນວ່າ ອົງການເຢີແມນອາກໂກແອັກເຊິ້ນ) ເປັນອົງການເອັນຈີໂອຂອງເຢຍລະມັນທີ່ດຳເນີນວຽກງານກ່ຽວກັບການພັດທະນາ ແລະ ການຄ້ຳປະກັນທາງດ້ານສະບຽງອາຫານຢູ່ຊົນນະບົດ ຢູ່ເມືອງເຊໂປນ. ອົງການເຮໂລທຼາດ ຈະສືບຕໍ່ສ້າງສາຍພົວພັນໃນການເຮັດວຽກຮ່ວມກັບບັນດາອົງການເອັນຈີໂອອື່ນໆ ເພື່ອຮັບປະກັນໃຫ້ ການສຳຫຼວດ ແລະ ການກວດກູ້ ລບຕ ໄດ້ມີການດຳເນີນຢ່າງຖືກຕ້ອງໃນບ່ອນທີ່ມີ ລບຕ ຕົກຄ້າງ ແລະ ກີດຂວາງການເຄື່ອນໄຫວວຽກງານທາງດ້ານມະນຸດສະທຳ.



*ທີມສຳຫຼວດຂອງອົງການເຮໂລທຼາດ ກຳລັງລວມລວບຂໍ້ມູນກ່ຽວກັບຜົນກະທົບຈາກລະເບີດລູກຫວ່ານ ແລະ ການນຳໃຊ້ເນື້ອທີ່ດິນ.*

## ບຸກຄະລາກອນໃນປີ 2012:

| ປະຈຳຢູ່ຫ້ອງການ | | | | ປະຈຳຢູ່ຝ່າຍປະຕິບັດງານ | | | |
|---|---|---|---|---|---|---|---|
| ລາວ | | ຕ່າງປະເທດ | | ລາວ | | ຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 12 | 3 | | | 40 | 7 | 2 | 1 |
| ***ລວມ*** | ***15*** | | ***0*** | | ***47*** | | ***3*** |

## ຕົວເລກສະຖິຕິໃນປີ 2012:

ຍັງບໍ່ທັນໄດ້ມີການປະຕິບັດງານເທື່ອໃນປີ 2012 ເນື່ອງຈາກວ່າ ອົງການເຮໂລຫຼາດໄດ້ສຸມໃສ່ການຝຶກອົບຮົມໃຫ້ທີມກວດກູ້.

## ພື້ນທີ່ການປະຕິບັດງານ:

| *ກິດຈະກຳ* | *ສະຖານທີ່ຈັດຕັ້ງປະຕິບັດກິດຈະກຳ* |
|---|---|
| ການກວດກູ້ພື້ນທີ່ | ເມືອງເຊໂປນ ແລະ ວິລະບູລີ ແຂວງສະຫັວນນະເຂດ |
| ການສຳຫຼວດ ແລະ ການທຳລາຍເຄື່ອນທີ່ | ເມືອງເຊໂປນ ແລະ ວິລະບູລີ ແຂວງສະຫັວນນະເຂດ |
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ເມືອງເຊໂປນ ແລະ ວິລະບູລີ ແຂວງສະຫັວນນະເຂດ |

## ສະພາບການເງິນ:

**ຄ່າໃຊ້ຈ່າຍໃນປີ 2012: (ໂດລາສະຫະລັດ)**

| *ລາຍລະອຽດ* | *ຈຳນວນເງິນ (ໂດລາສະຫະລັດ)* |
|---|---|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 187,231 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 226,736 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | 0 |
| ຄ່າໃຊ້ຈ່າຍສຳລັບຊື້ອຸປະກອນ-ຊັບສິນຄົງທີ່ | ລວມຢູ່ໃນຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ |
| ຄ່າໃຊ້ຈ່າຍສຳລັບຊື້ອຸປະກອນ-ຊັບສິນຄົງບໍ່ຄົງທີ່ | 642,419 |
| ***ລວມ*** | ***1,056,386*** |

## ການປະກອບສ່ວນຂອງຜູ້ໃຫ້ທຶນ ໃນປີ 2012 (ໂດລາສະຫະລັດ)

| *ຜູ້ໃຫ້ທຶນ* | *ເງິນທີ່ໄດ້ຮັບໃນປີ 2012 (ໂດລາສະຫະລັດ)* | *ຄ່າໃຊ້ຈ່າຍໃນປີ 2012* |
|---|---|---|
| ກະຊວງການຕ່າງປະເທດສະຫະລັດອາເມລິກາ* | 1,500,000 | 971,391 |
| ແຫຼບສ໌ຟັຮູແມນນິຕີ, ການາດາ | 75,000 | 74,985 |
| ກອງທຶນການກຸສົນ ແຈັກ ເດລອດສ໌ ເທເລີ້ | 10,000 | 10,000 |
| ***ລວມ*** | ***1,585,000*** | ***1,056,376*** |

*ໝາຍເຫດ: ທຶນຊ່ວຍເຫຼືອຂອງກະຊວງການຕ່າງປະເທດສະຫະລັດອາເມລິກາ ສະໜັບສະໜູນແຕ່ວັນທີ 1 ມິຖຸນາ 2013 ເຖິງ 31 ພຶດສະພາ 2013 ລວມທັງໝົດ 1,500,000 ລ້ານໂດລາສະຫະລັດ, ທຶນສ່ວນໃຫ່ຍແມ່ນໃຊ້ເຂົ້າໃນການຈັດຊື້ວັດຖຸອຸປະກອນຮັບໃຊ້ໂຄງການ.

# ບໍລິສັດເອກະຊົນເກັບກູ້ ລບຕ ພາຍໃນ ແລະ ຕ່າງປະເທດ

## ບໍລິສັດອາສາເກັບກູ້ລະເບີດ ຈໍາກັດ

### ກິດຈະກໍາໃນປີ 2012:

ໃນປີ 2012, ບໍລິສັດອາສາ ໄດ້ດໍາເນີນການສໍາຫຼວດ ແລະ ການກວດກູ້ ລບຕ ໃນຂອບເຂດພື້ນທີ່ການກໍ່ສ້າງຖານເສົາໄຟຟ້າແຮງສູງ 115 ກິໂລໂວນ ແລະ 500 ກິໂລໂວນ ຈາກຫຼວງພະບາງ-ຫີງສາ ແລະ ຫົງສາ-ຊຽງຮອນ ແຂວງໄຊຍະບູລີ. ນອກຈາກນັ້ນ, ອາສາ ຍັງໄດ້ດໍາເນີນການກວດກູ້ ລບຕ ໃນເຂດພື້ນທີ່ກໍ່ສ້າງສະຖານນີຈາຍໄຟຟ້າຫົງສາອີກດ້ວຍ.

### ຜົນສໍາເລັດຕົ້ນຕໍໃນປີ 2012:

- ບໍລິສັດອາສາ ໄດ້ສໍາເລັດການກວດກູ້ ລບຕ ໃນພື້ນທີ່ການກໍ່ສ້າງຖານເສົາໄຟຟ້າແຮງສູງ 115 ກິໂລໂວນ, ຂະໜາດ 6x6 ແມັດ, ລວມທັງໝົດ 896 ຂຸມ, ໃນເນື້ອທີ່ທັງໝົດ 32.256 ຕາແມັດ
- ບໍລິສັດອາສາ ໄດ້ສໍາເລັດການກວດກູ້ ລບຕ ໃນພື້ນທີ່ການກໍ່ສ້າງຖານເສົາໄຟຟ້າແຮງສູງ 500 ກິໂລໂວນ, 95 ຕົ້ນ, ຂະໜາດ 10x10 ແມັດ, ລວມທັງໝົດ 90 ຂຸມ, ໃນເນື້ອທີ່ທັງໝົດ 38.000 ຕາແມັດ
- ນອກຈາກນັ້ນ, ອາສາ ຍັງໄດ້ເຮັດການກວດກູ້ ລບຕ ໃນເຂດພື້ນທີ່ກໍ່ສ້າງສະຖານທີ່ຈ່າຍໄຟຟ້າຫົງສາ, ໃນເນື້ອທີ່ທັງໝົດ 990 ຕາແມັດ
- ໄດ້ເຮັດການກວດກູ້ ລບຕ ໃນເຂດພື້ນທີ່ກໍ່ສ້າງສະຖານທີ່ຈ່າຍໄຟຟ້າຫົງສາ, ໃນເນື້ອທີ່ທັງໝົດ 10.000 ຕາແມັດ

### ວຽກຈຸດສຸມໃນປີ 2013:

- ສືບຕໍ່ກວດກູ້ ລບຕ ໃນພື້ນທີ່ການກໍ່ສ້າງຖານເສົາໄຟຟ້າແຮງສູງ 115 ກິໂລໂວນ, 20 ຕົ້ນ, ຂະໜາດ 6x6 ແມັດ, ລວມທັງໝົດ 80 ຂຸມ, ໃນເນື້ອທີ່ທັງໝົດ 720 ຕາແມັດ
- ສືບຕໍ່ກວດກູ້ ລບຕ ໃນພື້ນທີ່ການກໍ່ສ້າງຖານເສົາໄຟຟ້າແຮງສູງ 500 ກິໂລໂວນ, 9 ຕົ້ນ, ຂະໜາດ 10x10 ແມັດ, ລວມທັງໝົດ 36 ຂຸມ, ໃນເນື້ອທີ່ທັງໝົດ 38.000 ຕາແມັດ
- ສືບຕໍ່ຕິດຕາມວຽກງານກໍ່ສ້າງສະໜາມກ໋ອບ ຢູ່ເມືອງຄໍາ ແຂວງຊຽງຂວາງ
- ສືບຕໍ່ເຮັດການກວດກູ້ໃນເຂດພື້ນທີ່ສໍາຫຼວດ ທີ່ຈະມີການກໍ່ສ້າງເຂື່ອນໄຟຟ້ານໍ້າງຽບ ຢູ່ແຂວງບໍລິຄໍາໄຊ

### ລູກຄ້າ:

- ບໍລິສັດຊຽນວິສະວະກໍາກໍ່ສ້າງ ຈໍາກັດ

### ບຸກຄະລາກອນໃນປີ 2012:

| *ປະຈໍາຢູ່ຫ້ອງການ* | | | | *ປະຈໍາຢູ່ຝ່າຍປະຕິບັດງານ* | | | |
|---|---|---|---|---|---|---|---|
| *ລາວ* | | *ຕ່າງປະເທດ* | | *ລາວ* | | *ຕ່າງປະເທດ* | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 1 | 1 | 0 | 0 | 5 | | | |
| ***ລວມ*** | ***7*** | | | | | | |

### ພື້ນທີ່ການປະຕິບັດງານ:

| *ກິດຈະກໍາ* | *ສະຖານທີ່ຈັດຕັ້ງປະຕິບັດກິດຈະກໍາ* |
|---|---|
| ການກວດກູ້ພື້ນທີ່ | ເມືອງຈອມເພັດ ແລະ ຊຽງເງິນ ແຂວງຫຼວງພະບາງ<br>ເມືອງຫົງສາ ແລະ ເງິນ ແຂວງໄຊຍະບູລີ |
| ການສໍາຫຼວດ | ເມືອງຈອມເພັດ ແລະ ຊຽງເງິນ ແຂວງຫຼວງພະບາງ<br>ເມືອງຫົງສາ ແລະ ເງິນ ແຂວງໄຊຍະບູລີ |

### ສະພາບການເງິນ: ຄ່າໃຊ້ຈ່າຍໃນປີ 2012: (ໂດລາສະຫະລັດ)

| *ລາຍລະອຽດ* | *ຈໍານວນເງິນ (ໂດລາສະຫະລັດ)* |
|---|---|
| ຄ່າໃຊ້ຈ່າຍສໍາລັບບຸກຄະລາກອນ | 73,500 |
| ຄ່າໃຊ້ຈ່າຍສໍາລັບການປະຕິບັດງານ | 3,675 |
| ຄ່າໃຊ້ຈ່າຍສໍາລັບການປະຕິບັດງານພິເສດ | 15,500 |
| ຄ່າໃຊ້ຈ່າຍສໍາລັບຊື້ອຸປະກອນ-ຊັບສິນຄົງທີ່ | 17,250 |
| ຄ່າໃຊ້ຈ່າຍສໍາລັບຊື້ອຸປະກອນ-ຊັບສິນຄົງບໍ່ຄົງທີ່ | 10,500 |
| ***ລວມ*** | ***123,125*** |

# ບໍລິສັດແບັກເທັກລາວ ເກັບກູ້ລະເບີດ ຈຳກັດ (ແບັກເທັກ)

## ກິດຈະກຳໃນປີ 2012:

1. ໄດ້ສະໜັບການກວດກູ້ ລບຕ ໃຫ້ແກ່ການດຳເນີນກິດຈະກຳໃນການສຳຫຼວດຂຸດຄົ້ນບໍ່ແຮ່ຂອງບໍລິສັດລາວຊານໄຊ ແລະ ບໍລິເວນເຂດຂຸດເຈາະເພື່ອເອົາຕົວຢ່າງຢູ່ແຂວງອັດຕະປື. ນອກຈາກນັ້ນ, ກໍ່ຍັງໄດ້ສະໜັບສະໜູນການກວດກູ້ ແລະ ທຳລາຍ ລບຕ ໃຫ້ແກ່ຊຸມຊົນທ້ອງຖິ່ນທີ່ອາໄສຢູ່ໃກ້ບໍລິເວນພື້ນທີ່ສຳຫຼວດບໍ່ແຮ່
2. ໄດ້ດຳເນີນການກວດກູ້ ລບຕ ໃນເຂດພື້ນທີ່ເຊາະເຈື່ອນແຕ່ເມືອງຍົມມະລາດຈົນຮອດເສັ້ນທາງນາກາຍຢູ່ໃນແຂວງຄຳມ່ວນ ໃຫ້ແກ່ບໍລິສັດ ໄທ-ອີຕາລີ ກໍ່ສ້າງ. ໃນຂອບເຂດບໍລິເວນດັ່ງກ່າວສ່ວນຫຼາຍແມ່ນເປັນປ່າຕຶບໜາ ແລະພົບລູກຫວ່ານ ແລະລະເບີດບິນໃຫຍ່ໜັກ750 ປອນຕົກຄ້າງຢູ່. ພື້ນທີ່ບາງບ່ອນກໍ່ເຄີຍໄດ້ຮັບການລາຍງານວ່າມີກວດກູ້ ລບຕ ມາກ່ອນແລ້ວ, ແຕ່ວ່າເຂດພື້ນທີ່ດັ່ງກ່າວໃນຊ່ວງລະດູຝົນແມ່ນມີຝົນຕົກລົງໃສ່ຢ່າງໜັກ ເຮັດໃຫ້ມີດິນເຊາະເຈື່ອນ ແລະ ມີລະເບີດພົ້ນອອກມາໃຫ້ເຫັນ
3. ໄດ້ດຳເນີນການກວດກູ້ ລບຕ ໃຫ້ແກ່ບໍລິສັດໄຟຟ້ານ້ຳເທີນ ທີ່ຈະເຮັດປັບປຸງສາຍສົ່ງໄຟຟ້າ/ເພື່ອປັບປຸງການດຳເນີນງານ
4. ໄດ້ສຳເລັດການກວດກູ້ໃຫ້ແກ່ໂຄງການຕ່າງໆ ເປັນຕົ້ນແມ່ນເສັ້ນທາງເຂົ້າຫາພື້ນທີ່ການສຳຫຼວດບໍ່ແຮ່ ແລະ ເສັ້ນທາງເຂົ້າຫາໂຄງການກໍ່ສ້າງເຂື່ອນໄຟຟ້າ

## ຜົນສຳເລັດໃນປີ 2012:

ບໍລິສັດແບັກເທັກແມ່ນໄດ້ດຳເນີນວຽກງານສຳເລັດຕາມແຜນການທີ່ວາງໄວ້ໃນປີ 2012 ເປັນຕົ້ນແມ່ນແຜນການລວມທົ່ວໄປກໍ່ສາມາດບັນລຸໄດ້, ມີການຂະຫຍາຍກິດຈະກຳ ແລະ ວຽກງານອື່ນໆກໍ່ໄດ້ຮັບຜົນສຳເລັດ.

## ວຽກຈຸດສຸມໃນປີ 2013:

ວຽກຈຸດສຸມໃນປີ 2013 ຂອງບໍລິສັດແບັກເທັກ ແມ່ນຈະສຸມໃສ່ກຳນົດ ແລະ ຝຶກອົບຮົມໃຫ້ພະນັກງານ ກ່ຽວກັບການນຳໃຊ້ຊຸດເຄື່ອງມືໃນປ້ອງກັນຕົວໃນເວລາເຮັດການກວດກູ້ ລບຕ ຢູ່ໃນເຂດພື້ນທີ່ການຂຸດຄົ້ນບໍ່ແຮ່.

## ບຸກຄະລາກອນໃນປີ 2012:

| ປະຈຳຢູ່ຫ້ອງການ | | | | ປະຈຳຢູ່ຝ່າຍປະຕິບັດງານ | | | |
|---|---|---|---|---|---|---|---|
| ລາວ | | ຕ່າງປະເທດ | | ລາວ | | ຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 3 | 3 | 1 | 1 | 150 | 0 | 2 | 0 |
| ລວມ | | | | | | | |

## ພື້ນທີ່ການປະຕິບັດງານ:

| ກິດຈະກຳ | ສະຖານທີ່ຈັດຕັ້ງປະຕິບັດກິດຈະກຳ |
|---|---|
| ການກວດກູ້ພື້ນທີ່ | ແຂວງຄຳມ່ວນ ແລະ ອັດຕະປື |

# ບໍລິສັດລາວບີເອັດສ໌ແອວ ເກັບກູ້ລະເບີດ ຈຳກັດ

## ກິດຈະກຳໃນປີ 2012:

**ໃນປີ 2012, ບໍລິສັດລາວບີເອັດແອວ ໄດ້ເຮັດສັນຍາໃນການດຳເນີນການກວດກູ້ ລບຕ ໃຫ້ແກ່:**

- ບໍລິສັດລາວບີເອັດແອວ ໄດ້ສືບຕໍ່ເຮັດວຽກຮ່ວມກັບບໍລິສັດໄຟຟ້າລາວ ເພື່ອດຳເນີນການກວດກູ້ ລບຕ ຕາມແລວຕີນເສົາຕາຄ່າຍສົ່ງໄຟຟ້າຢູ່ໃນ 7 ແຂວງ
- ບໍລິສັດລາວບີເອັດແອວ ໄດ້ເຮັດສັນຍາກັບບໍລິສັດວຽງຈັນກົນຈັກ ແລະ ວິສະວະກຳ ຈຳກັດ ແລະ ບໍລິສັດເຂື່ອນໄຟຟ້າເຊປຽນ-ເຊນ້ຳນ້ອຍ ເພື່ອດຳເນີນການກວດກູ້ ລບຕ ໃນເຂດພື້ນທີ່ການກໍ່ສ້າງຕ່າງໆ
- ບໍລິສັດລາວບີເອັດແອວ ໄດ້ເຮັດສັນຍາກັບບໍລິສັດລາວ-ຫວຽດ ຮ່ວມມືກໍ່ສ້າງຈຳກັດ ເພື່ອດຳເນີນການກວດກູ້ ລບຕ ໃນເຂດພື້ນທີ່ທາງເຂົ້າລະຫວ່າງ 3 ບ້ານຢູ່ໃນເມືອງບົວລະພາ ແຂວງຄຳມ່ວນ.
- ບໍລິສັດລາວບີເອັດແອວ ໄດ້ເຮັດວຽກຮ່ວມກັບບໍລິສັດໂອບາຢາຊິຂອງປະເທດຍີ່ປຸ່ນ ທີ່ດຳເນີນວຽກງານປັບປຸງເສັ້ນທາງເລກທີ 9 ຢູ່ແຂວງສະຫັວນນະເຂດ, ຊຶ່ງຢູ່ພາຍໃຕ້ການຊີ້ນຳຂອງກະຊວງຄົມມະນາຄົມ ແລະ ຂົນສົ່ງ

## ຜົນສຳເລັດຕົ້ນຕໍໃນປີ 2012:

**ຕະຫຼອດປີ 2012, ບໍລິສັດລາວບີເອັດແອວ ໄດ້ມີຜົນສຳເລັດຫຼາຍຢ່າງໃນການດຳເນີນວຽກງານກວດກູ້ລບຕ ໃຫ້ແກ່ບັນດາໂຄງການຕ່າງໆດັ່ງລຸ່ມນີ້:**

- ເນື້ອທີ່ຈຳນວນ 41 ເຮັກຕາໄດ້ຮັບການກວດກູ້ຢູ່ແຂວງຄຳມ່ວນ, 37 ເຮັກຕາຢູ່ແຂວງສະຫັວນນະເຂດ, 44 ເຮັກຕາຢູ່ແຂວງສາລະວັນ ແລະ 29 ເຮັກຕາຢູ່ແຂວງເຊກອງ ສຳລັບ "ໂຄງການຕິດຕັ້ງຕາຄ່າຍສົ່ງໄຟຟ້າ". ການກວດກູ້ດັ່ງກາວແມ່ນຍັງຈະສືບຕໍ່ໃນປີ 2013 ຢູ່ແຂວງຄຳມ່ວນ, ຈຳປາສັກ ແລະ ອັດຕະປື
- ເນື້ອທີ່ຈຳນວນ 78.9ເຮັກຕາ ໄດ້ຖືກກວດກູ້ໃຫ້ແກ່ບໍລິສັດເອັດສ໌ເຄ ອີແອນຊີ ຂອງເກົາຫຼີ ຢູ່ແຂວງຈຳປາສັກ ແລະ ອັດຕະປື ສຳລັບການກໍ່ສາງ "ເຂື່ອນໄຟຟ້າເຊປຽນ"
- ເນື້ອທີ່ຈຳນວນ 6 ເຮັກຕາ ໄດ້ຖືກກວດກູ້ໃຫ້ແກ່ບໍລິສັດວຽງຈັນກົນຈັກ ແລະ ວິສະວະກຳ ຈຳກັດ ໃນເຂດພື້ນທີ່ກໍ່ສາງເຂື່ອນໄຟຟ້າກະພື
- ເນື້ອທີ່ຈຳນວນ 20 ເຮັກຕາໄດ້ຖືກກວດກູ້ໃຫ້ແກ່ບໍລິສັດໂອບາຍາຊິຂອງປະເທດຍີ່ປຸ່ນໃນເຂດພື້ນທີ່ເສັ້ນທາງເລກທີ 9 ຢູ່ແຂວງສະຫັວນນະເຂດ

## ວຽກຈຸດສຸມໃນປີ 2013:

- ບໍລິສັດລາວບີເອັດແອວ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈກັບບໍລິສັດພັດທະນາໄທ-ອີຕາລີ ຈຳກັດ. ໃນປີ 2013, ບໍລິສັດລາວບີເອັດແອວ ຈະເລີ່ມດຳເນີນການກວດກູ້ ລບຕ ໃນເຂດພື້ນທີ່ກໍ່ສ້າງເສັ້ນທາງເລກທີ 18ເອ, ລວມໄລຍະທາງ 106 ກິໂລແມັດ ຈາກເມືອງປະທຸມພອນ ແຂວງຈຳປາສັກ ເຖິງເມືອງສາມັກຄີໄຊແຂວງອັດຕະປື
- ບໍລິສັດລາວບີເອັດແອວ ກຳລັງດຳເນີນການສຳຫຼວດ ລບຕ ໃຫ້ແກ່ບໍລິສັດວຽງຈັນກົນຈັກ ແລະ ວິສະວະກຳ ຈຳກັດ ໃນເຂດພື້ນທີ່ກຳລັງສ້າງເຂື່ອນໄຟຟ້າລຳພຳ ຢູ່ແຂວງເຊກອງ
- ບໍລິສັດລາວບີເອັດແອວ ກຳລັງດຳເນີນການສຳຫຼວດ ລບຕ ຕາມເຂດພື້ນທີ່ກໍ່ສ້າງເສັ້ນທາງເລກທີ 9 ຈາກແຂວງສະຫວັນນະເຂດ ຈົນເຖິງຊາຍແດນຫວຽດນາມ
- ນອກຈາກນັ້ນ, ບໍລິສັດລາວບີເອັດແອວ ຍັງຈະດຳເນີນການສຳຫຼວດໃນເຂດພື້ນທີ່ເສັ້ນທາງໃໝ່ ຈາກເມືອງເຊໂປນ ແຂວງສະຫວັນນະເຂດ ເຖິງເມືອງຕາໂອ້ຍ ແຂວງສາລະວັນ

## ລູກຄ້າ:

- ບໍລິສັດໄຟຟ້າລາວ
- ບໍລິສັດເອັດສ໌ເຄ ອີແອນຊີ
- ບໍລິສັດວຽງຈັນກົນຈັກ ແລະ ວິສະວະກຳ ຈຳກັດ
- ບໍລິສັດລາວ-ຫວຽດ ຮ່ວມມືກໍ່ສ້າງຈຳກັດ
- ບໍລິສັດໂອບາຍາຊິຂອງປະເທດຍີ່ປຸ່ນ ທີ່ດຳເນີນງານພາຍໃຕ້ການຊີ້ນຳຂອງກະຊວງຄົມມະນາຄົມ ແລະ ຂົນສົ່ງ

## ບຸກຄະລາກອນໃນປີ 2012:

| *ປະຈຳຢູ່ຫ້ອງການ* | | | | *ປະຈຳຢູ່ຝ່າຍປະຕິບັດງານ* | | | |
|---|---|---|---|---|---|---|---|
| *ລາວ* | | *ຕ່າງປະເທດ* | | *ລາວ* | | *ຕ່າງປະເທດ* | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 3 | 1 | 1 | | 51 | 4 | | |
| ***ລວມ*** | ***60*** | | | | | | |

## ພື້ນທີ່ການປະຕິບັດງານ:

| ***ກິດຈະກໍາ*** | ***ສະຖານທີ່ຈັດຕັ້ງປະຕິບັດກິດຈະກໍາ*** |
|---|---|
| ການກວດກູ້ພື້ນທີ່ | ແຂວງບໍລິຄໍາໄຊ, ຄໍາມ່ວນ, ສະຫັວນນະເຂດ, ສາລະວັນ, ເຊກອງ ແລະ ອັດຕະປື |
| ການສໍາຫຼວດ | ສະຫັວນນະເຂດ, ຈໍາປາສັກ, ສາລະວັນ, ເຊກອງ ແລະ ອັດຕະປື |

## ສະພາບການເງິນ:

### ຄ່າໃຊ້ຈ່າຍໃນປີ 2012: (ໂດລາສະຫະລັດ)

| ***ລາຍລະອຽດ*** | ***ຈໍານວນເງິນ (ໂດລາສະຫະລັດ)*** |
|---|---|
| ຄ່າໃຊ້ຈ່າຍສໍາລັບບຸກຄະລາກອນ | 147,950 |
| ຄ່າໃຊ້ຈ່າຍສໍາລັບການປະຕິບັດງານ | 30,000 |
| ຄ່າໃຊ້ຈ່າຍສໍາລັບການປະຕິບັດງານພິເສດ | 15,000 |
| ຄ່າໃຊ້ຈ່າຍສໍາລັບຊື້ອຸປະກອນ-ຊັບສິນຄົງທີ່ | 178,000 |
| ຄ່າໃຊ້ຈ່າຍສໍາລັບຊື້ອຸປະກອນ-ຊັບສິນຄົງບໍ່ຄົງທີ່ | 15,000 |
| ***ລວມ*** | ***385,950*** |

# ບໍລິສັດເອັມເອັມຈີລ້ານຊ້າງມິນເນີໂຣນ ເກັບກູ້ລະເບີດ

## ກິດຈະກຳໃນປີ 2012:

ພະແນກເກັບກູ້ ລບຕ ຂອງບໍລິສັດເອັມເອັມຈີລ້ານຊ້າງມິນເນີໂຣນ ໄດ້ເຮັດການສຳຫຼວດພື້ນທີ່ຈຳນວນ 830 ເຮັກຕາ, ລວມທັງໝົດໃຊ້ເວລາຢູ່ 1,500,643 ຊົ່ວໂມງ ແລະ ສາມາດທຳລາຍ ລບຕ ໄດ້ຈຳນວນ 2,917 ໜ່ວຍ ເພື່ອສະໜັບສະໜູນໃຫ້ແກ່ການດຳເນີນວຽກງານຂຸດຄົ້ນບໍ່ຄຳຂອງບໍລິສັດແລະ ໂຄງການພັດທະນາຊຸມຊົນທ້ອງຖິ່ນຢູ່ໃນບໍລິເວນດັ່ງກ່າວ.

(ໝາຍເຫດ) ຕົວເລກການສຳຫຼວດ ແມ່ນລວມເອົາຕົວເລກໃນເຂດທີ່ມີການກວດກູ້ຕາມຫຼຸມເຈາະນຳ.

## ຜົນສຳເລັດຕົ້ນຕໍໃນປີ 2012:

### ຜົນສຳເລັດທາງດ້ານຄວາມປອດໄພໃນປີ 2012

ການລາຍງານກ່ຽວກັບ" ອັດຕາຄວາມຖີ່ຂອງການບາດເຈັບໃນເວລາເຮັດວຽກ" ແມ່ນຫຼຸດລົງ ຈາກອັດຕາຄວາມຖີ່ 1.1 ໃນປີ 2011 ຫຼຸດລົງມາເປັນ 0.67 ໃນປີ 2012.

### ຜົນສຳເລັດໃນການສ້າງຄວາມອາດສາມາດໃຫ້ພະນັກງານທ້ອງຖິ່ນໃນປີ 2012 (ເບິ່ງທີ່ຕາຕະລາງ)

| ຫຼັກສູດ | ສະຖານທີ່ | ຈຳນວນຄົນ |
|---|---|---|
| ການນຳໃຊ້ເຄື່ອງກວດຫາເຫຼັກ ອີເອັມ61 | ການາດາ | 5 |
| ແພດຂັ້ນ 2 | ເຊໂປນ | 100 |
| ແພດຂັ້ນ 2 | ເຊໂປນ | 12 |
| ຂັບລົດ | | 17 |
| ພາສາອັງກິດ | ເຊໂປນ | 17 |
| ການນຳໃຊ້ຄອມພິວເຕີ້/ ຊອບແວ | ເຊໂປນ | 09 |
| ຮຽນຮູ້ກ່ຽວກັບຄວາມປອດໄພ | ເຊໂປນ | 393 |
| ການພັດທະນາຄວາມເປັນຊ່ຽວຊານທາງດ້ານແຜນງານ | ເຊໂປນ | 05 |
| ສອນກ່ຽວກັບການດຳລົງຊີວິດຢູ່ລາວ | ເຊໂປນ | 04 |
| ການນຳໃຊ້ໂປແກຼມຖານຂໍ້ມູນແອັກເຊັດສ໌ | ວຽງຈັນ | 04 |

ຜົນສຳເລັດທາງດ້ານຜົນຜະລິດທີ່ໄດ້ຮັບ (ມີການສືບຕໍ່ປັບປຸງ)

■ **ພະແນກເກັບກູ້ ລບຕ ຂອງບໍລິສັດເອັມເອັມຈີ-ການນຳໃຊ້**

ລະບົບລະບົບອີເອັມ61-ເອັມເຄ1ເອ-ເຫັດພີ ສ້າງຂຶ້ນໂດຍບໍລິສັດຈີໂອນິກ ຈຳກັດ, ຊຶ່ງມັນແມ່ນມາດຕະຖານເຄື່ອງມືໃນການບັນທຶກຂໍ້ມູນທີ່ມີຄວາມຊັດເຈນ ທີ່ມີການນຳໃຊ້ຫຼາຍໃນທົ່ວໂລກເພື່ອກວດຫາ ລບຕ, ໂດຍສະເພາະແມ່ນຢູ່ໃນດິນທີ່ມີທາດເຫຼັກເຈືອປົນ. ພະແນກເກັບກູ້ລະເບີດ ໄດ້ທົດລອງ ແລະ ສັ່ງຊື້ເຄື່ອງດັ່ງກ່າວເຂົ້າມາຮັບໃຊ້ວຽກງານໃນເດືອນກັນຍາ 2011. ນອກຈາກນັ້ນ, ທີມງານທາງທໍລະນີວິທະຍາທີ່ປະຈຳຢູ່ພະແນກເກັບກູ້ລະເບີດ ຍັງໄດ້ມີການປັບປຸງໂຄງຮ່າງພາຍນອກຂອງເຄື່ອງດັ່ງກ່າວໃຫ້ແທດເໝາະກັບສະພາບຕົວຈິງຂອງວຽກງານເພື່ອໃຫ້ສາມາດເພີ່ມການກວດກາໄດ້ເລິກຂຶ້ນກວ່າເກົ່າ ເປັນຕົ້ນແມ່ນເພີ່ມການກວດຈັບໃນເວລາທີ່ມີການເຄື່ອນໄຫວ.

■ **ການທົດລອງ:**

ການທົດສອບລະບົບເຄື່ອງດັ່ງກ່າວແມ່ນໄດ້ມີການດຳເນີນງານເປັນທີ່ຮຽບຮ້ອຍແລ້ວເພື່ອກຳນົດເບິ່ງການທຳງານຂອງເຄື່ອງທາງດ້ານຕົວຮັບ ແລະ ຕົວສົ່ງສັນຍານ ໃນເຂດພື້ນທີ່ໆມີເງື່ອນໄຂທາງດ້ານທໍລະນີສາດທີ່ແຕກຕ່າງກັນ. ສາຍລວດສັນຍານຕົວສົ່ງໂຕໃໝ່ແມ່ນໄດ້ມີການສັ່ງຊື້ເຂົ້າມາເພື່ອນຳມາປ່ຽນແທນສາຍລວດສັນຍາຕົວສົ່ງມາດຕະຖານທີ່ຕິດມາກັບເຄື່ອງ 1ແມັດ x0.5 ແມັດ ອັນເຮັດໃຫ້ຮູບຮ່າງໜ້າຕາຂອງລະບົບມີການປ່ຽນແປງເພື່ອໃຫ້ສາມາດຕິດຕັ້ງຢູ່ທາງດ້ານຫຼັງຂອງພາຫະນະໄດ້. ປະສົມປະສານກັບພື້ນທີ່ຢູ່ເທິງໜ້າທີ່ມີຄວາມກວ້າງ ລະບົບດັ່ງກ່າວຈຶ່ງໄດ້ຖືກອອກແບບມາໃຫ້ມີ 3 ຕົວຮັບສັນຍານໃຫ້ມີຄວາມໃກ້ກັບໜ້າດິນ ໂດຍສາມາດດັດປັບຕົວຮັບສັນຍາແບບຕ່ຳ ແລະ ສູງຢູ່ສູນກາງຄວບຄຸມຕາມມາດຕະຖານຄວາມສູງຈາກໜ້າດິນສູງປະມານ 0.45 ແມັດ, ຊຶ່ງມາດຕະຖານຊໍານີ້ ຖືວ່າເປັນການກວດຈັບທີ່ດີທີ່ສຸດ ເພາະມັນຈະສະດວກໃນເວລາທີ່ມີການກວດຈັບຕາມຄວາມເລິກ.

■ **ຜົນໄດ້ຮັບ:**

ລະບົບດັ່ງກ່າວ ໄດ້ມີການທົດລອງເປັນຄັ້ງທຳອິດຢູ່ໃນເຂດພື້ນທີ່ດິນມີທາດເຫຼັກເຈືອປົນຢູ່ທີ່ບ້ານພະບິງ ໃນຕົ້ນເດືອນພະຈິກ, ຊຶ່ງສາມາດກວດຈັບເປົ້າໝາຍໄດ້ຫຼາຍກວ່າ 3 ເທື່ອຂອງເຄື່ອງເອັມເຄ81, ໃນລະດັບຄວາມເລິກ 2.6 ແມັດ, ແນວຕັ້ງ, ຄວາມງຽງ 45 ອົງສາທາງດ້ານເທິງ ແລະ ທາງແນວນອນ. ລະບົບດັ່ງກາວແມນສາມາດກວດຈັບເປົ້າໝາຍໄດ້ຢ່າງງ່າຍດາຍ. ເມື່ອເຮົາປັບລະດັບໃຫ້ກວດຈັບເລິກຂຶ້ນຕື່ມທີ່ຄວາມເລິກ 2.75 ແມັດ ເຖິງ 3.25 ແມັດ ເຄື່ອງບໍ່ສະເພາະແຕ່ບໍ່ສາມາດກວດຈັບເປົ້າໝາຍໄດ້ເທົ່ານັ້ນ, ແຕ່ຍັງມີການສົ່ງສັນຍາແບບຜິດພຽນ ແລະ ຜິດປົກກະຕິນຳອີກດ້ວຍ. ການອານຜົນອອກມາແບບນີ້ແມ່ນເກີດມາຈາກ IP ຂອງເຄື່ອງໄດ້ຮັບຜົນກະທົບ ຫຼື ການທຳງານຂອງລະບົບທັງໝົດມີການຢຸດສະງັກ. ແຕເຖິງຢ່າງໃດກໍ່ຕາມ, ພວກເຮົາກໍ່ຈະບໍ່ຢຸດພຽງເທົ່ານີ້. ການທົດສອບໃນຄັ້ງຕໍ່ໄປ ແມ່ນຈະທົດສອບຢູ່ບໍລິເວນທີ່ມີຮອງນ້ຳ ແລະ ເປັນຂຸມ ຢູ່ທີ່ບ້ານພະບິງ, ນ້ຳໂຄກ ແລະ ທົ່ງພຽງ ໃນເຂດທີ່ມີທາດເຫຼັກເຈືອປົນ (ຕາມແຜນທີ່ຄາດຄະເນໄວ້) ແລະ ຕາມມາດຕະຖານຂອງເຄື່ອງອີເອັມ61-ເອັມເຄ1ເອ-ເຫັດພີ.




*ການສົມທຽບລະຫວ່າງ ການນຳໃຊ້ລະບົບກວດຈັບແມ່ເຫຼັກ ອີເອັມ61 ຂອງພະແນກເກັບກູ້ລະເບີດ (ຮູບຊ້າຍມື) ແລະ ຂໍ້ມູນທີ່ໄດ້ຈາກການນຳໃຊ້ລະບົບກວດຈັບເຄື່ອນແມ່ເຫຼັກ ເອັມເຄ81 (ຮູບຂວາມື) ຢູ່ເຂດພື້ນທີ່ໆມີທາດເຫຼັກເຈືອປົນ ໃນຄວາມເລິກ 2.5 ແມັດ ຕາມແລວນອນ*

## ຂ່າວດີ: ບໍລິສັດເອັມເອັມຈີກັບມາຈາກໂຮງຮຽນ

ພະນັກງານກວດກູ້ຄົນລາວໄດ້ຖືກສົ່ງໄປຮຽນທີ່ຈີໂອນິກໃນອົນຕາລີໂອ, ປະເທດການາດາ ກ່ຽວກັບການຝຶກອົບຮົມທາງດ້ານວິຊາການໃນການຕິດຕັ້ງ, ການເກັບກຳຂໍ້ມູນ ແລະ ການນຳໃຊ້ເຄື່ອງຈັກກວດຫາເຫຼັກລະບົບອີເອັມ61. ມັນເປັນຄັ້ງທຳອິດຂອງພະນັກງານທັງສາມຄົນທີ່ໄດ້ອອກຈາກ ສປປ ລາວ ເພື່ອໄປຮຽນຢູ່ຕ່າງປະເທດ. ພາຍຫຼັງສຳເລັດການຝຶກອົບຮົມ, ພວກເຂົາສາມາດຮຽນຮູ້ປະສົບການຫຼາຍຢ່າງຢູ່ທີ່ໂອນຕາຣີໂອ, ປະເທດການາດາ ແລະ ໄດ້ມີໂອກາດໄປເບິ່ງນ້ຳຕົກຕາດແອງກາຣາອີກດ້ວຍ. ພະນັກງານທັງສາມຄົນແມ່ນໄດ້ຮັບໃບຢັ້ງຢືນຮັບຮອງຈາກຈີໂອນິກ ແລະ ປະຈຸບັນນີ້, ກໍ່ໄດ້ລົງເຄື່ອນໄຫວຊີ້ນຳ ແລະ ໄດ້ຖ່າຍທອດຄວາມຮູ້ໃຫ້ແກ່ຜູ້ອື່ນໆຢູ່ພະແນກອີກດ້ວຍ.



*ບົວໄບ ລັດຕະນະ, ສິນທະລາ ແກ້ວມະນີວົງ ແລະ ຈັນເພັງ ຄູດໄພທູນ ກຳລັງຝຶກການນຳໃຊ້ລະບົບກວດຈັບແບບແມ່ເຫຼັກ ອີເອັມ61, ທີ່ໂອນຕາຣີໂອ, ການາດາ, 2012.*

*ພະແນກທໍລະນີສາດ, ບໍລິສັດເອັມເອັມຈີ*

## ວຽກຈຸດສຸມໃນປີ 2013:

- ເຮັດການຝຶກກ່ຽວກັບຄວາມປອດໄພ (ຕົວເລກໃຫ້ເປັນສູນຖ້າເປັນໄປໄດ້)
- ຈັດຕັ້ງປະຕິບັດເຄື່ອງກົນຈັດຕັດຫຍ້າ ແລະ ເຄື່ອງກົນຈັກທີ່ໃຊ້ເຂົ້າໃນການກະກຽມພື້ນທີ່ສຳລັບການກວດກູ້
- ດຳເນີນການວາງແຜນ ແລະປັບປຸງຄວາມອາດສາມາດໃຫ້ແກ່ພະນັກງານທ້ອງຖິ່ນ
- ເຊັນບົດບັນທຶກຄວາມເຂົ້າໃຈກັບກະຊວງປ້ອງກັນປະເທດ
- ສືບຕໍ່ດຳເນີນການປັບປຸງວຽກງານທີ່ສຳຄັນ
- ນຳໃຊ້ທຶນໜ້ອຍ ແຕ່ໃຫ້ໄດ້ຜົນຜະລິດຫຼາຍ

## ລູກຄ້າ:

ບໍລິສັດເອັມເອັມຈີລ້ານຊ້າງມິນເນີໂຮນ, ທຶນຂອງຕົນເອງ

## ບຸກຄະລາກອນໃນປີ 2012:

| ປະຈຳຢູ່ຫ້ອງການ | | | | ປະຈຳຢູ່ຝ່າຍປະຕິບັດງານ | | | |
|---|---|---|---|---|---|---|---|
| ລາວ | | ຕ່າງປະເທດ | | ລາວ | | ຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 5 | 7 | 4 | 0 | 119 | 248 | 6 | 0 |

## ຕົວເລກສະຖິຕິໃນປີ 2012:

| ການກວດກູ້ (ຕາແມັດ) | | |
|---|---|---|
| ເນື້ອທີ່ກະສິກຳ | ເນື້ອທີ່ພັດທະນາ | ລວມ |
| 0 | 2,199,456 | 2,199,456 |

*, ຕົວເລກດັ່ງກ່າວນີ້ ໄດ້ມີລາຍງານໃຫ້ ຄຊກລ ເອົາເຂົ້າໄວ້ໃນຖານຂໍ້ມູນເກັບກຳ ລບຕ ເປັນທີ່ຮຽບຮ້ອຍແລ້ວ. ຕົວເລກດັ່ງກ່າວນີ້ ແມ່ນບໍ່ໄດ້ລວມເອົາຕົວເລກທີ່ກວດກູ້ຕາມຫຼຸມຂຸດເຈາະບໍ່ແຮ່

## ລບຕ ທີ່ພົບເຫັນ, ຍົກຍ້າຍ ແລະ ທຳລາຍ:

| ລບຕ ທີ່ຖືກຍົກຍ້າຍ/ທຳລາຍ | | | | | |
|---|---|---|---|---|---|
| ໜ້າວຽກ | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ |
| Clearance | 18 | 826 | 0 | 2,176 | 3,020 |
| ***ລວມ*** | ***18*** | ***826*** | ***0*** | ***2,176*** | ***3,020*** |

## ພື້ນທີ່ການປະຕິບັດງານ:

| ກິດຈະກຳ | ສະຖານທີ່ຈັດຕັ້ງປະຕິບັດກິດຈະກຳ |
|---|---|
| ການກວດກູ້ພື້ນທີ່ | ເມືອງວິລະບູລີ ແຂວງສະຫວັນນະເຂດ |

## ສະພາບການເງິນ:

### ຄ່າໃຊ້ຈ່າຍໃນປີ 2012: (ໂດລາສະຫະລັດ)

| ລາຍລະອຽດ | ຈຳນວນເງິນ (ໂດລາສະຫະລັດ) |
|---|---|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 3,959,714 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 552,421 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | 75,000 |
| ຄ່າໃຊ້ຈ່າຍສຳລັບຊື້ອຸປະກອນ-ຊັບສິນຄົງທີ່ | ບໍ່ໄດ້ນຳໃຊ້ |
| ຄ່າໃຊ້ຈ່າຍສຳລັບຊື້ອຸປະກອນ-ຊັບສິນຄົງບໍ່ຄົງທີ່ | 65,000 |
| ***ລວມ*** | ***4,652,135*** |

# ບໍລິສັດມິວເຊີດສ໌ ເກັບກູ້ລະເບີດ

## ກິດຈະກຳໃນປີ 2012:

ໃນປີ 2012, ບໍລິສັດມິວມິວເຊີດສ໌ ໄດ້ມີການປ່ຽນໃບປະຕັງດຳເນີນທຸລະກິດໃໝ່ມາເປັນບໍລິສັດຈຳກັດແບບຜູ້ດຽວ ໂດຍໃສ່ຊື່ວ່າ ບໍລິສັດມິວເຊີດລາວ ເກັບກູ້ລະເບີດ ຈຳກັດພຽງຜູ້ດຽວ ຫຼື ເອີ້ນວ່າ (ມິວເຊີດສ໌). ມາຮອດປີ 2012, ກໍ່ຖືໄດ້ວ່າຄົບຮອບ 15 ປີພໍດີແຫ່ງການສິ້ນສຸດການດຳເນີນທຸລະກິດແບບຫຸ້ນສ່ວນລະຫວ່າງເອກະຊົນລາວ ຄື ບໍລິສັດພັດທະນາເຂດພູດອຍ ແລະ ບໍລິສັດມິວເຊີດສ໌ ຈຳກັດ. ພ້ອມນັ້ນ, ໃນປີ 2012, ກໍ່ແມ່ນຄົບຮອບ 19 ປີ ຂອງການດຳເນີນວຽກງານແກ້ໄຂບັນຫາ ລບຕ ຢູ່ໃນ ສປປ ລາວ.

ການຕັດສິນໃຈເພື່ອສິ້ນສຸດການດຳເນີນທຸລະກິດແບບຫຸ້ນສ່ວນແມ່ນໄດ້ມີການປຶກສາຫາລືກັນທັງສອງຝ່າຍ ແລະ ອີງໃສ່ບົນພື້ນຖານທີ່ຈິງໃຈຕໍ່ກັນໃນການແຍກຕົວອອກຈາກກັນໃນການດຳເນີນທຸລະກິດ. ສຳລັບມິວເຊີດສ໌ ແມ່ນມີຄວາມຕື່ນເຕັ້ນຫຼາຍ ປະກອບກັບຜົນສຳເລັດໃນໄລຍະ 15 ປີແຫ່ງການດຳເນີນທຸລະກິດແບບຫຸ້ນສ່ວນ, ຂໍສະແດງຄວາມຂອບໃຈມາຍັງບໍລິສັດພັດທະນາເຂດພູດອຍ, ຄຊກລ ແລະ ລັດຖະບານລາວ ທີ່ໄດ້ໃຫ້ການຊ່ວຍເຫຼືອ ແລະ ການສະໜັບສະໜູນທີ່ດີຕະຫຼອດມາ. ບັນດາພາກສ່ວນທີ່ກ່າວມາຂ້າງເທິງນີ້ ຖືໄດ້ວ່າເປັນພາກສ່ວນທີ່ມີຄວາມສຳຄັນ ເພາະໄດ້ຊ່ວຍເຮັດໃຫ້ບໍລິສັດມິວເຊີດສ໌ ໄດ້ຖືກຂະໜານນາມວ່າເປັນບໍລິສັດ "ເກັບກູ້ລະເບີດທີ່ດີຢ້ຽມຂອງອາຊີ".

ຢູ່ໃນ ສປປ ລາວ ກໍ່ໄດ້ມີຜົນສຳເລັດໃນການດຳເນີນວຽກງານກວດກູ້ ລບຕ ຫຼາຍກວ່າ 65 ໂຄງການ, ສາມາດກວດກູ້ເນື້ອທີ່ໄດ້ຫຼາຍກວ່າ 1,000 ເຮັກຕາ ແລະ ສາມາດທຳລາຍ ລບຕ ໄດ້ຫຼາຍກວ່າ 10,000 ໜ່ວຍ.

ການກວດກູ້ເນື້ອທີ່ ແມ່ນການສ້າງຄວາມສະດວກໃຫ້ແກ່ການດຳເນີນວຽກງານພັດທະນາໃຫ້ມີຄວາມປອດໄພຢູ່ພາຍໃນແຂວງທີ່ມີຄວາມທຸກຍາກ ເພື່ອຮັບປະກັນໃຫ້ຜົນປະໂຫຍດທັງໝົດໄດ້ລົງສູ່ປະຊາຊົນລາວບັນດາເຜົ່າໄດ້ຢ່າງທົ່ວເຖິງ. ໃນນາມເປັນໜຶ່ງບໍລິສັດເອກະຊົນເຕັມຕົວຮ້ອຍເປີເຊັນແລ້ວ, ບໍລິສັດມິວເຊີດ ກໍ່ສາມາດນຳເອົາສິດຜົນປະໂຫຍດມາໃຫ້ແກ່ ສປປ ລາວ ໄດ້ໂດຍປັດສະຈາກການນຳໃຊ້ທຶນຂອງຜູ້ໃຫ້ທຶນ.



*ການນຳໃຊ້ເຄື່ອງກວດເລິກຫາ ລບຕ ແບບການຄວບຄຸມຄວາມປອດໄພຢູ່ເຂດພື້ນທີ່ຊັນ*



*ການກວດເລິກຫາ ລບຕ ຢູ່ເຂດບໍ່ທອງແດງ ແລະ ບໍ່ຄຳ ຢູ່ພູຄຳ*

ວຽກງານດັ່ງກ່າວ ແມ່ນຈະຊ່ວຍບໍ່ໃຫ້ມີການນຳໃຊ້ທຶນຊ່ວຍເຫຼືອຈາກຜູ້ໃຫ້ທຶນຫຼາຍຂຶ້ນຕື່ມເຂົ້າໃນການກວດກູ້ ລບຕ ເພື່ອສະໜັບສະໜູນໃຫ້ແກ່ການດຳເນີນໂຄງການຂອງບັນດາອົງການ ເອັນຈີໂອ ທີ່ເຄື່ອນໄຫວວຽກງານຢູ່ ສປປ ລາວ.

ຕະຫຼອດປີ 2012, ບໍລິສັດມິວເຊີດສ໌ ສາມາດກວດກູ້ເນື້ອທີ່ໄດ້ 2,958,098 ຕາແມັດ ດ້ວຍຄວາມເລິກ 250mm ແລະ ເນື້ອທີ່ຈຳນວນ 2,708,449 ຕາແມັດ ດ້ວຍຄວາມເລິກ 2.5 ແມັດ ໃຫ້ແກ່:

1. ເຂດພື້ນທີ່ການສຳຫຼວດບໍ່ແຮ່
2. ເຂດບໍ່ແຮ່
3. ເຂດພື້ນທີ່ສຶກສາຄວາມເໝາະສົມໃນການຕິດຕັ້ງໝໍ້ແປງຈ່າຍໄຟຟ້າ ແລະ
4. ເຂດພື້ນທີ່ໂຄງການຂອງບໍລິສັດເອກະຊົນທີ່ສະໜັບສະໜູນການພັດທະນາຊຸມຊົນ

ມິວເຊີດສ໌ ສາມາດກວດກູ້ ແລະ ທຳລາຍ ລບຕ ໄດ້ຈຳນວນທັງໝົດ 1,778 ໜ່ວຍ, ໃນນັ້ນ ປະກອບມີທັງລະເບີດຕົກຕ່າງປາງສົງຄາມ ແລະ ລະເບີດລູກຫວ່ານຫຼາຍກວ່າສອງພັນໜ່ວຍ. ສິ່ງທີ່ເປັນໜ້າພໍໃຈສຳລັບບໍລິສັດມິວເຊີດສ໌ ແມ່ນການໄດ້ປະກອບສ່ວນການກວດກູ້ ລບຕ ໃຫ້ແກ່ຊຸມຊົນທ້ອງຖິ່ນຕ່າງໆ. ໂດຍການຈ່າຍເງິນເດືອນໃຫ້ພະນັກງານຢູ່ທ້ອງຖິ່ນທີ່ເຂົ້າມາເຮັດວຽກນຳ ແລະ ຄ່າໃຊ້ຈ່າຍອື່ນໆ ແມ່ນລວມທັງໝົດປະມານ 2 ລ້ານໂດລາສະຫະລັດ ທີ່ໄດ້ນຳໃຊ້ເຂົ້າໃນການກວດກູ້ ລບຕ ໂດຍກົງຢູ່ຊຸມຊົນຕ່າງໆ. ເຖິງຢ່າງໃດກໍ່ຕາມ, ນອກຈາກເງິນຄຳທີ່ໃຊ້ຈ່າຍໄປແລ້ວນັ້ນ, ມິວເຊີດສ໌ ຍັງໄດ້ສະໜອງການຝຶກອົບຮົມໄລຍະສັ້ນ, ສ້າງຄວາມປອດໄພ ແລະ ມີການໃຫ້ລາງວັນແກ່ພະນັກງານອີກດ້ວຍ.

ມິວເຊີດສ໌ ຍັງໄດ້ໃຫ້ຄຳໝັ້ນສັນວ່າ ຈະສືບຕໍ່ຫຼຸດຜ່ອນຄວາມອັນຕະລາຍຂອງລະເບີດເສດເຫຼືອປາງສົງຄາມທີ່ຍັງຕົກຄ້າງຢູ່ ສປປ ລາວ.



*ຊ່ວງການໂອ້ລົມກັນເລື່ອງຄວາມປອດໄພກ່ອນອອກໄປເຮັດວຽກຕອນເຊົ້າ.*

## ຜົນສຳເລັດຕົ້ນຕໍໃນປີ 2012:

ຫຼັງຈາກຜ່ານພົ້ນວິກິດການທາງດ້ານການເງິນ. ໃນສົກປີ 2011/2012 ໃນຊ່ວງລະດູແລ້ງແມ່ນຊ່ວງທີ່ທຸລະກິດຂອງມິວເຊີດສ໌ ໄດ້ມີການເຕີບໃຫຍ່ຂະຫຍາຍຕົວຢູ່ໃນ ສປປ ລາວ. ໃນຊ່ວງ 6 ເດືອນທ້າຍປີ 2012 ການຂະຫຍາຍຕົວທຸລະກິດແມ່ນເລີ່ມຄົງທີ່ ແລະ ເປັນໂອກາດໃຫ້ມິວເຊີດສ໌ ໄດ້ມີລູກຄ້າເພີ່ມຂຶ້ນ ແລະ ໄດ້ມີສິ່ງຜົນໃຫ້ມີການສົ່ງເສີມ ແລະ ປັບປຸງພະນັກງານຂອງພວກເຮົາໂດຍຜ່ານການຝຶກອົບຮົມ. ການຝຶກອົບຮົມ ແມ່ນໄດ້ດຳເນີນທັງຢູ່ພາຍໃນອົງກອນເອງ ແລະ ຝຶກຢູ່ທີ່ສູນຝຶກອົບຮົມທີ່ໄດ້ຮັບໜັງສືຢັ້ງຢືນຮັບຮອງ ແລະ ໄດ້ມາດຕະຖານຄັກແນ່.

ຕົວຢ່າງຂອງການຝຶກອົບຮົມທີ່ໄດ້ດຳເນີນໃນປີ 2012 ມີຄື:

1. ການປິ່ນປົວຮັກສາບາດແຜແບບສຸກເສີນ ແລະ ກ້າມເນື້ອ (ຝຶກໂດຍ ໄອຊີເອັດສ໌ເຫັດ)
2. ການປິ່ນປົວຮັກສາບາດແຜແບບສຸກເສີນ ແລະ ລະກ້າມເນື້ອ-ຕາມຄຸນນະວຸດທິ (ຝຶກໂດຍ ໄອຊີເອັດສ໌ເຫັດ) (ຝຶກໂດຍ ໄອຊີເອັດສ໌ເຫັດ)
3. ເຄື່ອງກວດຈັບດ້ວຍຄື້ນແມ່ເຫຼັກ (ພື້ນຖານ ແລະ ທວນຄືນ)
4. ການນຳໃຊ້ເຄື່ອງກວດ ມາຍແລບ3 (ພື້ນຖານ ແລະ ທວນຄືນ)
5. ນັກກວດກູ້ ຂັ້ນ 2
6. ການຖາງປ່າ
7. ພາສາອັງກິດ

ນອກຈາກນັ້ນ, ມິວເຊີດສ໌ ຍັງໄດ້ສືບຕໍ່ປັບປຸງມາດຕະຖານຂອງບໍລິສັດທາງດ້ານຊັບພະຍາກອນມະນຸດ, ສຸຂະພາບ, ຄວາມປອດໄພ, ສິ່ງແວດລ້ອມ ແລະ ການຝຶກອົບຮົມດີຂຶ້ນເທື່ອລະກ້າວອີກດ້ວຍ.

ໃນປີ 2011 ຜ່ານມາ, ພວກເຮົາໄດ້ອອກຈັນຍາບັນໃໝ່ໃນການດຳເນີນທຸລະກິຂອງບໍລິສັດໃຫ້ຄືກັນກັບບັນດາບໍລິສັດຂອງຢູລົບ ແລະ ຈະນຳເອົາມາໃຊ້ເຂົ້າໃນການປະຕິບັດງານຢູ່ແຕ່ລະບ່ອນໃນທົ່ວໂລກ. ນອກຈາກນັ້ນ, ກໍຍັງໄດ້ປັບປຸງຈັນຍາໃໝ່ດັ່ງກາວນີ້ໃຫ້ສອດຄ່ອງກັບມາດຕະຖານການດຳເນີນງານທີ່ດີທີ່




*ພິທີມອບໃບປະກາດກ່ຽວກັບການປິ່ນປົວຮັກສາບາດແຜໂດຍທ່ານ ດຣ ປອນ ຢູ່ທີ່ສູນຝຶກໄອຊີເອັດສ໌ເຫັດ.*

ສຸດຂອງໂລກ ແລະ ຈະນຳໄປໃຊ້ໃນການດຳເນີນງານຢູ່ໃນປະເທດຕ່າງໆອີກດ້ວຍ. ໃນປີ 2012, ພວກເຮົາໄດ້ຝຶກອົບຮົມໃຫ້ພະນັກງານທັງໝົດໃຫ້ຮຽນຮູ້ກ່ຽວກັບຈັນຍາບັນດັ່ງກາວ ແລະ ເຂົາເຈົ້າກໍ່ໄດ້ນຳເອົາໄປໃຊ້ເຂົ້າໃນການດຳເນີນງານ.

ກ່ຽວກັບອຸປະຕິເຫດທີ່ເກີດຂຶ້ນຕໍ່ສຸກຂະພາບ, ຄວາມປອດໄພ ແລະ ສິ່ງແວດລ້ອມ ແມ່ນໄດ້ບັນທຶກວ່າຢູ່ໃນລະດັບ 0.17 ຕໍ່ 1,000 ຄົນໃນປີ 2012. ຕົວເລກດັ່ງກາວແມ່ນຖືວ່າຢູ່ໃນລະດັບຕ່ຳ ແລະ ຍາມໃດ ມິວເຊີດສ໌ ກໍ່ໄດ້ພະຍາຍາມເຮັດ "ບໍ່ໃຫ້ມີເຫດການ ແລະ ອຸປະຕິເຫດ" ເກີດຂຶ້ນ.

### ຂ່າວດີ: ການປິ່ນປົວຮັກສາບາດແຜແບບໃໝ່

ໃນປີ 2012, ພວກເຮົາໄດ້ຝຶກອົບຮົມໃຫ້ແພດຈຳນວນ 18 ຄົນກ່ຽວກັບການປິ່ນປົວຮັກສາບາດແຜ ແລະ ຄັດເຟັ້ນໃໝ່ (ເພດຍິງ 16 ຄົນ ແລະ ຊາຍ 11 ຄົນ). ສຳລັບຄ່າໃຊ້ຈ່າຍແມ່ນໄດ້ອີງໃສ່ຄວາມຕ້ອງການສະເພາະແຕ່ການຝຶກອົບກ່ຽວກັບການປິ່ນປົວຮັກສາບາດແຜທີ່ມີມາດຕະຖານສູງເທົ່ານັ້ນ ແລະ ພວກເຮົາກໍ່ດີໃຈຫຼາຍທີ່ ໄອຊີເອັດສ໌ເຫັດ ໄດ້ມາເປັນຜູ້ຝຶກໃຫ້ເຮົາ. ການຝຶກອົບຮົມ ດຳເນີນເປັນເວລາ 8 ອາທິດ ແລະ ຕື່ມອີກ 1 ອາທິດ ສຳລັບນັກຮຽນທີ່ເສັງບໍ່ຜ່ານ ແລະ ຂາດຮຽນ ເພື່ອເປີດໂອກາດໃຫ້ມີການສອບເສັງຄືນໃໝ່.

ຜົນຈາກການຝຶກອົບຮົມເຮັດໃຫ້ ມິວເຊີດສ໌ ມີແພດປິ່ນປົວຮັກສາບາດແຜທີ່ໄດ້ຕາມ “ມາດຕະຖານຂອງໂລກ” ຈໍານວນ 27 ຄົນແລ້ວ. ບັນດາແພດປິ່ນປົວຮັກສາບາດແຜເຫຼົ່ານີ້ ແມ່ນໄດ້ຕາມມາດຕະຖານແຫ່ງຊາດໃນການແກ້ໄຂບັນຫາ ລບຕ ແລະ ຈະໄດ້ລົງໄປເຮັດວຽກຢູ່ສະໜາມໃນເຂດພື້ນທີ່ຫ່າງໄກສອກຫຼີກ ຫຼື ເຂດພື້ນທີ່ໆເຮົາພິຈາລະນາແລ້ວວ່າເປັນເຂດພິເສດ (ບໍ່ມີ ລບຕ) ກ່ຽວຂ້ອງເຖິງຄວາມອັນຕະລາຍ.

ພວກເຮົາຂໍສະແດງຄວາມຍິນດີກັບບັນດາແພດທັງໝົດຂອງພວກເຮົາທີ່ສາມາດຜ່ານການຝຶກອົບຮົມຈົນໄດ້ຮັບຜົນສໍາເລັດຕາມມາດຖານທີ່ວາງໄວ້ ແລະ ໄດ້ຕາມຄຸນນະສົມບັດຂອງການເປັນແພດປິ່ນປົວຮັກສາບາດແຜ ແລະ ຂໍແດງຄວາມຂອບໃຈມາຍັງໝົດທຸກຄົນທີ່ໄດ້ປະກອບສ່ວນເຂົ້າໃນການສ້າງຄວາມປອດໄພໃຫ້ແກ່ການປະຕິບັດງານຂອງພວກເຮົາ.

## ວຽກຈຸດສຸມໃນປີ 2013:

ສິ່ງທ້າທາຍໃນອານາຄົດຂອງພວກເຮົາແມ່ນຍັງຄືເກົ່າຄືບັນຫາເລື່ອງການແຂ່ງກັນຂອງບັນດາບໍລິສັດເກັບກູ້ລະເບີດ ແລະ ມູນມອງທາງດ້ານວິຊາສະເພາະໃນການດໍາເນີນທຸລະກິດຂອງພວກເຮົາ.

ການກວດກູ້ລບຕ ໃຫ້ແກ່ໂຄງການສໍາຫຼວດບໍ່ແຮ່ ໄດ້ເຮັດໃຫ້ລາຍຮັບຂອງມິວເຊີດສ໌ ດີຂຶ້ນ ບວກກັບ ສະພາບເສດຖະກິດປະຈຸບັນຢູ່ໃນເອີລົບ ກໍ່ໄດ້ຄ່ອຍໆມີການອ່ອນໂຕລົງ, ບໍລິສັດມິວເຊີດສ໌ ຈະໄດ້ສືບຕໍ່ຂະຫຍາຍລູກຄ້າຂອງຕົນ ແລະ ກະຈາຍແຫຼ່ງທຶນຂອງຕົນໄປຫາແຫຼ່ງອຸດສະຫະກໍາອື່ນໆໃນປີ 2012.

ໃນປີ 2012, ມິວເຊີດສ໌ ໄດ້ມີການທົດລອງນໍາໃຊ້ເທັກໂນໂລຊີກ່ຽວກັບການກວດກູ້ໃໝ່ໆຫຼາຍຢ່າງ ແລະ ຜົນໄດ້ຮັບເຫັນວ່າສາມາດນໍາເອົາເຂົ້າມາປັບໃຊ້ໃນການກວດກູ້ ລບຕ ຢູ່ລາວ ຫຼື ຢູ່ອົດສຕຣາລີໄດ້.

ການຄົ້ນຄວ້າ ແລະ ການພັດທະນາ ຍັງຈະສືບຕໍ່ປັບປຸງຕໍ່ໄປ ເພື່ອຮັກລະດັບມາດຕະຖານຂອງບໍລິສັດເກັບກູ້ລະເບີດທີ່ດີທີ່ສຸດຂອງອາຊີ. ໃນເດືອນກຸມພາ 2013 ມິວເຊີດສ໌ ວາງແຜນວ່າຈະດໍາເນີນການທົດລອງຢູ່ປະເທດອົດສຕາລີກ່ຽວກັບລະບົບອີເອັມເພື່ອນໍາໃຊ້ເຂົ້າໃນການກວດກູ້ ລບຕ, ຊຶ່ງຖ້າປະສົບຜົນສໍາເລັດແມ່ນຈະໄດ້ນໍາເອົາມາທົດສອບຢູ່ໃນເຂດພື້ນຫ່າງໄກສອກຫຼີກ ແລະ ເຂດພູສູງໃນ ສປປ ລາວ.

ລະບົບການອອກໜັງສືຢັ້ງຢືນຮັບຮອງໃນການດໍາເນີນງານຂອງ ຄຊກລ ແມ່ນການກໍານົດໃຫ້ບັນດາບໍລິສັກເອກະຊົນເກັບກູ້ ລບຕ ໃຫ້ມີການຂໍຕໍ່ໜັງສືຢັ້ງຢືນຮັບຮອງເປັນແຕ່ລະປີ ແລະ ມິວເຊີດສ໌ ກໍ່ເຫັນວ່າເປັນຂະບວນການທີ່ມີຄວາມສໍາຄັນເພື່ອເປັນການທົບທວນຄືນການປະຕິບັດງານໃຫ້ໄດ້ຕາມມາດຕະຖານ ແລະ ມີຄວາມປອດໄພໃນທີ່ວຂະແໜງການ.

## ລູກຄ້າ:

ບໍລິສັດມິວເຊີດສ໌ ຈະສືບຕໍ່ໃຫ້ບໍລິການ 2 ລູກຄ້າລາຍໃຫ່ຍຂອງຕົນໃນປີ 2011 ຄື: ບໍລິສັດພູເບ້ຍມາຍນິ້ງ ແລະ ບໍລິສັດເຊກອງລິເວີ້ມາຍນິ້ງ. ນອກຈາກນັ້ນ, ບໍລິສັດມິວເຊີດສ໌ ຍັງໄດ້ມີການເຮັດສັນເພື່ອກວດກູ້ ລບຕ ໃຫ້ກັບ 5 ບໍລິສັດອື່ນໆອີກຄື: 2 ບໍລິສັດຂອງລາວ, 1 ບໍລິສັດຂອງໄທ ແລະ 2 ບໍລິສັດຂອງອົດສຕຣາລີອີກດ້ວຍ. 2 ລູກຄ້າລາຍໃຫຍຂອງພວກເຮົາ ແມ່ນຈະສືບຕໍ່ປະຕິບັດຄໍາໝັ້ນສັນຍາຂອງເຂົາເຈົ້າກ່ຽວກັບການພັດທະນາແບບຍືນຍົງຢູ່ຊຸມຊົນໄປພ້ອມກັບການດໍາເນີນງານຂອງເຂົາເຈົ້າ.

ບໍລິສັດ ພູເບ້ຍມາຍນິ້ງ (ແພນອອດສ໌ທ໌)- ໄດ້ຮັກສາມາດຕະຖານສູງສຸດກ່ຽວກັບການກວດກູ້ ລບຕ ຢູ່ສະຖານທີ່ບ່ອນເຮັດວຽກພ້ອມດ້ວຍໄດ້ສະໜອງທຶນເຂົ້າໃສ່ການກວດກູ້ ລບຕ ເພື່ອຊ່ວຍເຫຼືອຊຸມຊົນຢູ່ທ້ອງຖິ່ນ.

ບໍລິສັດ ເຊກອງລິເວີ້ມາຍນິ້ງ(ອັກໂກນັດ ລີຊອດສ໌)- ໄດ້ສະໜອງການພັດທະນາແບບຍືນຍົງ ແລະ ແຜນງານພັດທະນາຊຸມຊົນຢູ່ໃນເຂດອ້ອມແອ້ມທີ່ພັກອາໄສຂອງຕົນຢູ່ແຂວງເຊກອງພາກໃຕ້ຂອງລາວ. ສະນັ້ນ, ບໍລິສັດພູເບ້ຍມາຍນິ້ງ ແລະ ບໍລິສັດເຊກອງລິເວີ້ມາຍນິ້ງ ຈຶ່ງໄດ້ຮັບການຢືນຢັນວ່າເປັນບໍລິສັດທີ່ໄດ້ມີການດໍາເນີນວຽກງານກວດກູ້ ລບຕ ໄດ້ດີທີ່ສຸດໃນໂລກຢູ່ໃນຂອບເຂດພື້ນທີ່ເຮັດວຽກຂອງຕົນ ກ່ອນຈະເລີ່ມລົງມືເຮັດການສໍາຫຼວດບໍ່ແຮ່ໃນແຕ່ລະຄັ້ງ.

ທັງ 2 ບໍລິສັດດັ່ງກ່າວຂ້າງເທິງ ຍັງຄົງເປັນບໍລິສັດທີ່ມີການສະໜອງການສະໜັບສະໜູນໃຫ້ແກ່ບັນດາຊຸມຊົນ ໂດຍການກວດກູ້ ລບຕ ອອກຈາກບໍລິເວນພື້ນທີ່ດໍາເນີນງານທີ່ດີທີ່ສຸດໃນໂລກບໍລິສັດໜຶ່ງ, ຊຶ່ງວຽກງານດັ່ງກ່າວນີ້ ແມ່ນເປັນສ່ວນໜຶ່ງທີ່ນອນຢູ່ໃນແຜນງານພັດທະນາແບບຍືນຍົງຂອງເຂົາເຈົ້າ.

## ບຸກຄະລາກອນໃນປີ 2012:

| ປະຈຳຢູ່ຫ້ອງການ | | | | ປະຈຳຢູ່ຝ່າຍປະຕິບັດງານ | | | |
|---|---|---|---|---|---|---|---|
| ລາວ | | ຕ່າງປະເທດ | | ລາວ | | ຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 2 | 12 | 4 | 2 | 332 | 221 | 15 | 0 |
| ***ລວມ: 14*** | | ***6*** | | ***553*** | | ***15*** | |

## ຕົວເລກສະຖິຕິໃນປີ 2012:

| ການກວດກູ້ (ເຮັກຕາ) | | |
|---|---|---|
| ***ເນື້ອທີ່ກະສິກຳ*** | ***ເນື້ອທີ່ພັດທະນາ*** | ***ລວມ*** |
| 0 | 295.8 | 295.8 |

## ລບຕ ທີ່ພົບເຫັນ, ຍົກຍ້າຍ ແລະ ທຳລາຍ:

| ***ລບຕ ທີ່ຖືກຍົກຍ້າຍ/ທຳລາຍ*** | | | | | |
|---|---|---|---|---|---|
| ***ໜ້າວຽກ*** | *ບົມໃຫຍ່* | *ລະເບີດລູກຫວ່ານ* | *ລະເບີດຝັງດິນ* | *ລບຕ ຊະນິດອື່ນໆ* | *ລວມ* |
| ການສຳຫຼວດທາງດ້ານວິຊາການ | 30 | 1154 | 0 | 2594 | ***3,778*** |
| ***ລວມ*** | ***30*** | ***1154*** | ***0*** | ***2594*** | |

## ພື້ນທີ່ການປະຕິບັດງານ:

| ***ກິດຈະກຳ*** | ***ສະຖານທີ່ຈັດຕັ້ງປະຕິບັດກິດຈະກຳ*** |
|---|---|
| ການກວດກູ້ເນື້ອທີ່ | ແຂວງວຽງຈັນ, ຊຽງຂວາງ, ເຂດພິເສດໄຊສົມບູນ, ບໍລິຄຳໄຊ, ຄຳມ່ວນ, ສະຫັວນນະເຂດ, ເຊກອງ ແລະ ອັດຕະປື |
| ການສຳຫຼວດ ແລະ ການທຳລາຍເຄື່ອນທີ່ | ຊຽງຂວາງ, ຄຳມ່ວນ ແລະ ສະຫວັນນະເຂດ |

## ສະພາບການເງິນ:

### ຄ່າໃຊ້ຈ່າຍໃນປີ 2012: (ໂດລາສະຫະລັດ)

| ***ລາຍລະອຽດ*** | ***ຈຳນວນ (ໂດລາສະຫະລັດ)*** |
|---|---|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 1,884,389.00 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 941,898.00 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | 54,650.00 |
| ຄ່າໃຊ້ຈ່າຍສຳລັບຊື້ອຸປະກອນ-ຊັບສິນຄົງທີ່ | 18,564.00 |
| ຄ່າໃຊ້ຈ່າຍສຳລັບຊື້ອຸປະກອນ-ຊັບສິນຄົງບໍ່ຄົງທີ່ | 126,850.00 |
| ***ລວມ*** | ***3,026,351.00*** |

# ບໍລິສັດພີເອັດສ໌ດີ ເກັບກູ້ລະເບີດ ຈຳກັດ (ພີເອັດສ໌ດີ)

## ກິດຈະກຳໃນປີ 2012:

ໃນປີ 2012 ບໍລິສັດພີເອັດສ໌ດີ ໄດ້ກວດກູ້ ແລະ ທຳລາຍ ລບຕ ໃຫ້ແກ່ບໍລິສັດສີມູລະຢູ່ບ້ານທົ່ງສຸຍ, ເມືອງເລົ່າງາມ, ແຂວງສາລະວັນ ໃນເນື້ອທີ່ 207 ເຮັກຕາ ເພື່ອປູກຕົ້ນໄມ້ເປັນຢາ.

ບໍລິສັດພີເອັດສ໌ດີ ໄດ້ສຳເລັດ 100% ການກວດກູ້ ແລະ ທຳລາຍ ລບຕ ໃຫ້ແກ່ບໍລິສັດສີມູລະ ຢູ່ບ້ານທົ່ງສຸຍ, ເມືອງເລົ່າງາມ, ແຂວງສາລະວັນ ໃນເນື້ອທີ່ 207 ເຮັກຕາ ເພື່ອປູກຕົ້ນໄມ້ເປັນຢາ.





*ຮູບຊ້າຍມື: ທີມກວດກູ້ ລບຕ ຂອງບໍລິສັດພີເອັດສ໌ດີ.*
*ຮູບດ້ານເທິງ: ກຳລັງໃຊ້ເຄື່ອງກວດຊອກຫາ ລບຕ*

## ພື້ນທີ່ການປະຕິບັດງານ:

| *ກິດຈະກຳ* | *ສະຖານທີ່ຈັດຕັ້ງປະຕິບັດກິດຈະກຳ* |
|---|---|
| ການກວດກູ້ພື້ນທີ່ | ແຂວງຊຽງຂວາງ ແລະ ສາລະວັນ |
| ການສຳຫຼວດ ແລະ ການທຳລາຍເຄື່ອນທີ່ | ແຂວງຊຽງຂວາງ ແລະ ສາລະວັນ |

## ສະພາບການເງິນ:

**ຄ່າໃຊ້ຈ່າຍໃນປີ 2012: (ໂດລາສະຫະລັດ)**

| *ລາຍລະອຽດ* | *ຈຳນວນ (ໂດລາສະຫະລັດ)* |
|---|---:|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 15,200 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 35,420 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | - |
| ຄ່າໃຊ້ຈ່າຍສຳລັບຊື້ອຸປະກອນ-ຊັບສິນຄົງທີ່ | 18000 |
| *ລວມ* | ***68,620*** |

## ການປະກອບສ່ວນຂອງຜູ້ໃຫ້ທຶນ (ໂດລາສະຫະລັດ)

**ຕາຕະລາງລຸ່ມນີ້ ສະແດງໃຫ້ເຫັນທຶນຂອງບໍລິສັດພີເອັດສ໌ດີ ທີ່ໃຊ້ເຂົ້າໃນການດຳເນີນວຽກງານກວດກູ້ ລບຕ.**

| *ລາຍລະອຽດ* | *ຈຳນວນ (ໂດລາສະຫະລັດ)* |
|---|---:|
| ທຶນຂອງບໍລິສັດເອງ | 68,620 |
| *ລວມ* | ***68,620*** |

# ບໍລິສັດເອັດສ໌ບີເຫັດ ເກັບກູ້ລະເບີດ ຈຳກັດ (ເອັດສ໌ບີເຫັດ)

## ກິດຈະກຳໃນປີ 2012:

ໃນປີ 2012, ບໍລິສັດເອັດສ໌ບີເຫັດ ໄດ້ດຳເນີນການກວດກູ້ ລບຕ ໃນເຂດພື້ນທີ່ປູກໄມ້ວິກຂອງບໍລິສັດສະໂຕລາເອັນໂຊ ຢູ່ແຂວງສະຫວັນນະເຂດ, ສາລະວັນ ແລະ ໂຄງການເຂື່ອນນ້ຳອູ 2 ຢູ່ແຂວງຫຼວງພະບາງ.



## ຜົນສຳເລັດຕົ້ນຕໍໃນປີ 2012:

ໃນປີ 2012, ຜົນສຳເລັດຕົ້ນຕໍຂອງບໍລິສັດເອັດສ໌ບີເຫັດແມ່ນສາມາດກວດກູ້ ລບຕ ອອກຈາກພື້ນທີ່ໄດ້ຕາມເປົ້າໝາຍ. ໃນປີ 2012 ບໍລິສັດເອັດສ໌ບີເຫັດ ສາມາດກວດກູ້ເນື້ອທີ່ດິນກະສິກຳ ແລະ ເນື້ອທີ່ດິນພັດທະນາໄດ້ທັງໝົດ 568.8 ເຮັກຕາ ແລະ ສາມາດທຳລາຍ ລບຕ ໄດ້ຈຳນວນ 720 ໜ່ວຍ.

1. **ຢູ່ແຂວງສະຫວັນນະເຂດ:**

- ກວດກູ້ ລບຕ ອອກຈາກພື້ນທີ່ຢູ່ເມືອງເຊໂປນ ຈຳນວນ 1,999,584 ຕາແມັດ ແລະ ສາມາດທຳລາຍ ລບຕ ໄດ້ຈຳນວນ 16 ໜ່ວຍ.
- ກວດກູ້ ລບຕ ອອກຈາກພື້ນທີ່ຢູ່ເມືອງນອງ ຈຳນວນ 1,293,035 ຕາແມັດ ແລະ ສາມາດທຳລາຍ ລບຕ ໄດ້ຈຳນວນ 247 ໜ່ວຍ.

2. **ຢູ່ແຂວງສາລະວັນ:**

- ກວດກູ້ ລບຕ ອອກຈາກພື້ນທີ່ຢູ່ເມືອງຕະໂອ້ຍ ຈຳນວນ 2,222,610 ຕາແມັດ ແລະ ສາມາດທຳລາຍ ລບຕ ໄດ້ຈຳນວນ 447 ໜ່ວຍ.

3. **ຢູ່ແຂວງຫຼວງພະບາງ:**

- ກວດກູ້ ລບຕ ອອກຈາກພື້ນທີ່ຢູ່ເມືອງງອຍ ຈຳນວນ 172,666 ຕາແມັດ ແລະ ສາມາດທຳລາຍ ລບຕ ໄດ້ຈຳນວນ 10 ໜ່ວຍ.

## ຂ່າວດີ:

ກະລຸນາເບິ່ງຢູ່ໜ້າທີ 16.

## ວຽກຈຸດສຸມໃນປີ 2013:

ບໍລິສັດເອັດສ໌ບີເຫັດຈະສືບຕໍ່ກວດກູ້ລບຕປະມານ 600 ເຮັກຕາ ຫາ 1,000 ເຮັກຕາ ໃນເຂດເນື້ອທີ່ປູກໄມ້ວິກຂອງບໍລິສັດສະໂຕລາເອັນໂຊ ຢູ່ແຂວງສະຫັນນະເຂດ ແລະ ສາລະວັນ.

## ລູກຄ້າ:

ລູກຄ້າຂອງເຮົາໃນປີ 2012 ແມ່ນບໍລິສັດສະໂຕລາເອັນໂຊ



*ທີມກວດກູ້ ລບຕ ຂອງບໍລິສັດເອັດສ໌ບີເຫັດ ຢູ່ແຂວງສະຫວັນນະເຂດ.*

## ບຸກຄະລາກອນໃນປີ 2012:

| ປະຈຳຢູ່ຫ້ອງການ | | | | ປະຈຳຢູ່ຝ່າຍປະຕິບັດງານ | | | |
|---|---|---|---|---|---|---|---|
| ລາວ | | ຕ່າງປະເທດ | | ລາວ | | ຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 1 | 1 | 0 | 0 | 39 | 5 | 0 | 0 |
| | ລວມ | | | | | | ***46*** |

## ຕົວເລກສະຖິຕິໃນປີ 2012:

### ການກວດກູ້:

| ການກວດກູ້ (ເຮັກຕາ) | | |
|---|---|---|
| ***ເນື້ອທີ່ກະສິກຳ*** | ***ເນື້ອທີ່ພັດທະນາ*** | ***ລວມ*** |
| 551.53 | 17.27 | 568.8 |

## ລບຕ ທີ່ພົບເຫັນ, ຍົກຍ້າຍ ແລະ ທຳລາຍ:

| ***ລບຕ ທີ່ຖືກຍົກຍ້າຍ/ທຳລາຍ*** | | | | | |
|---|---|---|---|---|---|
| ***ໜ້າວຽກ*** | *ບົມໃຫຍ່* | *ລະເບີດລູກຫວ່ານ* | *ລະເບີດຝັງດິນ* | *ລບຕ ຊະນິດອື່ນໆ* | *ລວມ* |
| ການກວດກູ້ | 2 | 656 | 0 | 30 | ***720*** |

## ພື້ນທີ່ການປະຕິບັດງານ:

| ***ກິດຈະກຳ*** | ***ສະຖານທີ່ຈັດຕັ້ງປະຕິບັດກິດຈະກຳ*** |
|---|---|
| ການກວດກູ້ພື້ນທີ່ | ເມືອງນອງ ແລະ ເຊໂປນ ຢູ່ແຂວງສະຫັນນະເຂດ<br>ເມືອງຕະໂອ້ຍ ຢູ່ແຂວງສາລະວັນ<br>ເມືອງງອຍ ຢູ່ແຂວງຫຼວງພະບາງ |

## ສະພາບການເງິນ:

### ຄ່າໃຊ້ຈ່າຍໃນປີ 2012: (ໂດລາສະຫະລັດ)

| ***ລາຍລະອຽດ*** | ***ຈຳນວນ (ໂດລາສະຫະລັດ)*** |
|---|---|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 178,596 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 69,560 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | 0 |
| ຄ່າໃຊ້ຈ່າຍສຳລັບຊື້ອຸປະກອນ-ຊັບສິນຄົງທີ່ | 53,265 |
| ຄ່າໃຊ້ຈ່າຍສຳລັບຊື້ອຸປະກອນ-ຊັບສິນຄົງບໍ່ຄົງທີ່ | 5,890 |
| ***ລວມ*** | ***307,311*** |

# ບົດລາຍງານ ກອງປະຊຸມວິຊາການ ວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ

ກອງປະຊຸມວິຊາການວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ມີໜ້າທີ່ໃນການປະສານງານກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຂອງບັນດາອົງການປະຕິບັດທີ່ເຮັດວຽກໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃນຂອບເຂດທົ່ວປະເທດ. ນອກຈາກນັ້ນ, ຈຸດປະສົງຂອງກອງປະຊຸມດັ່ງກ່າວແມ່ນເພື່ອກຳນົດ ແລະ ແກ້ໄຂຊ່ອງຫວ່າງໃນການດຳເນີນວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ, ແລກປ່ຽນຂໍ້ມູນຂ່າວສານ, ໃຫ້ຄຳແນະນຳ ແລະ ແນວຄວາມຄິດ ກ່ຽວກັບການດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃຫ້ມີປະສິດທິຜົນ ແລະ ໄດ້ຮັບຜົນສຳເລັດ. ວາລະຂອງກອງປະຊຸມປະກອບມີ 3 ພາກຄື ການລາຍງານກ່ຽວກັບກິດຈະກຳຂອງ ຄຊກລ, ການລາຍງານກ່ຽວກັບກິດຈະກຳອົງການປະຕິບັດງານ ແລະ ເປີດການສົນທະນາປຶກສາຫາລືກັນ.

ໃນປີ 2012, ກອງປະຊຸມວິຊາການວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໄດ້ຈັດຂຶ້ນ 4 ຄັ້ງ. ການສົນທະນາປຶກສາຫາລືທີ່ສຸມໃສ່ຕົ້ນຕໍໃນປີ 2012 ແມ່ນເຮົາຈະນຳໃຊ້ສື່ໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ຊຸມຊົນ, ໂຮງຮຽນ ແລະ ກຸ່ມເປົ້າໝາຍຕ່າງໆໃຫ້ມີປະສິດທິຜົນ.

ນອກຈາກນັ້ນ, ກໍ່ໄດ້ມີການສົນທະນາປຶກສາຫາລືກ່ຽວກັບຂະບວນການໃນການອານຸມັດຮັບຮອງ ເພື່ອປັບປຸງ ແລະ ຈັດພິມວັດຖຸອຸປະກອນສື່ໂຄສະນາສຶກສາຄວາມສ່ຽງຈາກ ລບຕ ອັນໃໝ່ ແລະ ເອກະສານແນະນຳລະອຽດ ກໍ່ໄດ້ມີການປັບປຸງ ແລະນຳໄປຈັດຕັ້ງປະຕິບັດ. ນອກຈາກນັ້ນ, ບັນຫາທີ່ສຳຄັນອີກຢ່າງໜຶ່ງທີ່ໄດ້ມີການສົນທະນາກັນ ແມ່ນການລາຍງານຜົນຄວາມໜ້າການດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຜ່ານລະບົບເອເລັກໂຕຼນິກຂອງຖານຂໍ້ມູນເກັບກູ້ ລບຕ (ລະບົບອິມສ໌ມາ), ຊຶ່ງບັນຫານີ້ ອົງການປະຕິບັດງານທີ່ກ່ຽວຂ້ອງກໍ່ໄດ້ຮັບການຝຶກອົບຮົມເພີ່ມເຕີມແລ້ວກ່ຽວກັບການນຳໃຊ້ລະບົບລາຍງານຜ່ານລະບົບອິມສ໌ມາ ພ້ອມດ້ວຍ ວິທີການນຳໃຊ້ແບບຟອມລາຍງານໃໝ່.

ກ່ຽວກັບຜົນການສຳຫຼວດກ່ຽວກັບຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳ ກໍ່ໄດ້ມີການແລກປ່ຽນກັນ ເປັນຕົ້ນແມ່ນ ເຕັກນິກໃໝ່ໃນການສິດສອນ, ວິທີເຮັດການສຳຫຼວດໃຫ້ດີຂຶ້ນ ແລະ ຄຳແນະນຳກ່ຽວກັບການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃຫ້ແກ່ເດັກນ້ອຍຢູ່ໃນໂຮງຮຽນ ເພື່ອນຳໄປສິດສອນຕໍ່ໃຫ້ຜູ້ເຖົ້າຜູ້ແກ່ໃຫ້ຮັບຮູ້ກ່ຽວກັບຜົນຮ້າຍຂອງ ລບຕ ເນື່ອງຈາກວ່າ ບາງຊຸມຊົນກໍ່ບໍ່ຄ່ອຍມີຜູ້ທີ່ຮູ້ຫຼາຍກ່ຽວກັບການໂຄສະນາສຶກສາຄວາມສ່ຽງຈາກ ລບຕ.

ນອກຈາກນັ້ນ, ກອງປະຊຸມວິຊາການວຽກງານໂຄສະນາສຶກສາຄວາມສ່ຽງ ຈາກ ລບຕ ຍັງໄດ້ສະໜັບສະໜູນການຝຶກອົບຮົມຄືນໃຫ້ແກ່ພະນັກງານ ແລະ ຄູສອນຢູ່ໃນໂຮງຮຽນ ກ່ຽວກັບການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ລວມທັງ ຕິດຕາມການຝຶກອົບຮົມ ເພື່ອສະໜັບສະໜູນໃຫ້ແກ່ຄູສອນ ແລະ ຍົກລະດັບທາງດ້ານວິທີການສິດສອນອີກນຳ. ກອງປະຊຸມວິຊາການວຽກງານໂຄສະນາສຶກສາຄວາມສ່ຽງ ຈາກ ລບຕ ໄດ້ເຮັດວຽກກັບກະຊວງສຶກສາທິການ ແລະກິລາ ແລະອົງການເວີອິດູເຄເຊັນ ຈັດການຝຶກອົບຮົມໃຫ້ແກ່ຄູສອນໃນການເປັນນັກສະແດງລະຄອນຕຸກກະຕານຳອີກ.

ໃນປີ 2013, ກອງປະຊຸມວິຊາການວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຈະສືບຕໍ່ສຸມໃສ່ເພື່ອສ້າງກົນໄກໃນການລາຍງານ ແລະ ເອກະສານແນະນຳກ່ຽວກັບການນຳໃຊ້ອຸປະກອນສື່ໂຄສະນາໃຫ້ມີຄວາມຈະແຈ້ງ. ນອກຈາກນັ້ນ, ກອງປະຊຸມວິຊາການວຽກງານໂຄສະນາສຶກສາຄວາມສ່ຽງ ຈາກ ລບຕ ຍັງຈະສະໜັບສະໜູນບັນດາອົງການປະຕິບັດງານທີ່ດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃນການເຮັດການໂຄສະນາລະດົມຊຸມຂວາຍທຶນ ແລະ ວຽກງານຕ່າງໆທີ່ກ່ຽວຂ້ອງເຊັ່ນ ການແຂ່ງຂັນກິລາບານເຕະຢູ່ແຂວງຊຽງຂວາງ, ການຈັດລາຍການວິທະຍຸໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ແຂວງຊຽງຂວາງ ແລະ ສາລະວັນ. ຄຽງຄູ່ກັນນັ້ນ, ກອງປະຊຸມວິຊາການວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຍັງຈະໃຫ້ຄຳແນະນຳ ແລະ ຊ່ວຍໃນການຈັດພິມຄືນໃໝ່ ແລະ ແຈກຢາຍປຶ້ມຫຼັກສູດການສິດສອນວິຊາ ລບຕ ໃຫ້ແກ່ບັນດາໂຮງຮຽນຊັ້ນປະຖົມສຶກສາຢູ່ 42 ເມືອງໃນ 9 ແຂວງ ແລະ ຂໍສະແດງຄວາມຂອບໃຈອົງການຢູນິເຊັບ ທີ່ໄດ້ໃຫ້ການສະໜັບສະໜູນ.

- ໃນປີ 2012, ກອງປະຊຸມວິຊາການວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໄດ້ຖືກຈັດຂຶ້ນ 4 ຄັ້ງ.
- ຢູ່ໃນກອງປະຊຸມວິຊາການວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ປະກອບມີ 3 ພາກຄື ພາກທີ 1 ແມ່ນໜ່ວຍງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຂອງຫ້ອງການ ຄຊກລ ລາຍງານກ່ຽວກັບການຈັດຕັ້ງປະຕິບັດກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ແຜນການໃນຕໍ່ໜ້າ, ພາກທີ 2 ແມ່ນການລາຍງານຂອງບັນດາອົງການປະຕິບັດງານກ່ຽວກັບກິດຈະກຳຂອງຕົນທີ່ໄດ້ປະຕິບັດໃນໄຕມາດຜ່ານມາ ແລະ ແຜນການຈຸດສຸມໃນຕໍ່ໜ້າ ໂດຍປະກອບມີ ແຜນງົບປະມານຄາດຄະເນເພື່ອຈັດຕັ້ງປະຕິບັດກິດຈະກຳ ແລະ ພາກທີ 3 ແມ່ນການເປີດສົນທະນາປຶກສາຫາລືບັນຫາຕ່າງໆທີ່ພົວພັນກັບວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ.
- ວຽກງານທີ່ໄດ້ມີການປຶກສາຫາລືກັນໃນປີ 2012 ມີ:
  - ບັນຫາການດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ຊຸມຊົນ ແລະ ໂຮງຮຽນເຊັ່ນ: ເຮົາຈະມີນຳໃຊ້ອຸປະກອນສື່ໂຄສະນາໃຫ້ມີປະສິດທິຜົນຫຼາຍທີ່ສຸດໄດ້ແນວໃດ ແລະ ເຮົາຈະຕິດຕໍ່ພົວພັນກັບບັນດາກຸ່ມເປົ້າໝາຍທີ່ໃຊ້ພາສາຊົນເຜົ່າ ແລະ ມີຮີດຄອງປະເພນີທີ່ແຕກຕ່າງກັນ.
  - ເຮົາຈະມີວິທີແກ້ໄຂການນຳໃຊ້ພາສາທີ່ແຕກຕ່າງກັນນີ້ໄດ້ຄືແນວໃດ ແລະ ນຳໃຊ້ທັກສະອັນໃດ.
  - ອຸປະກອນສື່ໂຄສະນາ: ຂະບວນການໃນການອານຸມັດຮັບຮອງເພື່ອປັບປຸງແລະຈັດພິມອຸປະກອນສື່ໂຄສະນາໃໝ່ (ຜູ້ໃດຈະເປັນຄົນນຳພາ), ເພື່ອໃຫ້ມີປະສິດທິຜົນຫຼາຍຂຶ້ນກວ່າເກົ່າ.
- ການລາຍງານຜົນຄວາມຄືບໜ້າໃນການດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຜ່ານລະບົບອິມສ໌ມາ, ໂດຍການກະຕຸກຊຸກຍູ້ໃຫ້ອົງການປະຕິບັດງານນຳໃຊ້ແບບຟອມລາຍງານອິມສ໌ມາ, ຝຶກອົບຮົມ ແລະ ອະທິບາຍຄວາມສຳຄັນຂອງແບບຟອມດັ່ງກ່າວ ແລະການປັບປຸງແບບຟອມລາຍງານຄືນໃໝ່ໃນປີ 2012.

- ການສຳຫຼວດເບິ່ງຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳ: ໄດ້ມີການແລກປ່ຽນຂໍ້ມູນຂ່າວສານນຳກັນຢູ່ໃນກອງປະຊຸມ, ຮຽນຮູ້ກ່ຽວກັບວິທີການສຳຫຼວດ, ເທັກນິກໃໝ່ໃນການສິດສອນເຊັ່ນ ສິດສອນນັກຮຽນຢູ່ໃນໂຮງຮຽນເປົ້າໝາຍ ເພື່ອໃຫ້ເຂົາເຈົ້າສາມາດນຳເອົາຄວາມຮູ້ກ່ຽວກັບການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໄປແລກປ່ຽນກັບພໍ່ແມ່ຂອງເຂົາເຈົ້າ.
- ການຝຶກອົບຮົມ: ການຝຶກອົບຮົມຄືນໃຫ້ແກ່ພະນັກງານ ແລະ ຄູສອນຢູ່ໃນໂຮງຮຽນ ກ່ຽວກັບການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ລວມທັງ ຕິດຕາມການຝຶກອົບຮົມເພື່ອສະໜັບສະໜູນໃຫ້ແກ່ຄູສອນ ແລະ ຍົກລະດັບທາງດ້ານວິທີການສິດສອນ. ກະຊວງສຶກສາທິການ ແລະ ກິລາ ແລະ ອົງການເວີອີດູເຄເຊີ້ນ ໄດ້ຈັດການຝຶກອົບຮົມໃຫ້ແກ່ຄູສອນໃນການເປັນນັກສະແດງລະຄອນຕຸກກະຕາ.
- ການລາຍງານກ່ຽວກັບອຸປະຕິເຫດຈາກ ລບຕ ແລະ ການວິເຄາະກ່ຽວກັບສາມາດຂອງການເກີດອຸປະຕິເຫດ ເພື່ອນຳມາປັບປຸງການດຳເນີນກິດຈະກຳໂຄສະນາໃຫ້ມີຄວາມຖືກຕ້ອງ, ຊຶ່ງໄດ້ມີການປຶກສາກັນຢູ່ໃນໄຕມາດ 2 ແລະ 4.

## ກິດຈະກຳຕ່າງໆໃນປີ 2013:

- ໃນປີ 2013, ກອງປະຊຸມວິຊາການວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຈະສືບຕໍ່ສຸມໃສ່ເພື່ອສ້າງກົນໄກໃນການລາຍງານ ແລະ ເອກະສານແນະນຳກ່ຽວກັບການນຳໃຊ້ອຸປະກອນສື່ໂຄສະນາໃຫ້ມີຄວາມຈະແຈ້ງ. ນອກຈາກນັ້ນ, ກອງປະຊຸມວິຊາການວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຍັງຈະສະໜັບສະໜູນບັນດາອົງການປະຕິບັດງານທີ່ດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃນການເຮັດການໂຄສະນາລະດົມຂົນຂວາຍທຶນ ແລະ ກິດຈະກຳຕ່າງໆທີ່ກ່ຽວຂ້ອງເຊັ່ນ ການແຂ່ງຂັນກິລາບານເຕະຮ່ວມນ້ຳໃຈຢູ່ແຂວງຊຽງຂວາ, ການຈັດລາຍການວິທະຍຸໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ແຂວງຊຽງຂວາງ ແລະ ສາລະວັນ. ຄຽງຄູ່ກັນນັ້ນ, ກອງປະຊຸມກຸ່ມວິຊາການວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຍັງຈະໃຫ້ຄຳແນະນຳ ແລະ ຊ່ວຍໃນການຈັດພິມຄືນໃໝ່ ແລະ ແຈກຢາຍປຶ້ມຫຼັກສູດການສິດສອນວິຊາ ລບຕ ໃຫ້ແກ່ບັນດາໂຮງຮຽນຊັ້ນປະຖົມສຶກສາຢູ່ 42 ເມືອງໃນ 9 ແຂວງ ແລະ ຂໍສະແດງຄວາມຂອບໃຈອົງການຢູນິເຊັບ ທີ່ໄດ້ໃຫ້ການສະໜັບສະໜູນ.
- ເອກະສານແນະນຳລະອຽດໃນການຈັດພິມອຸປະກອນສື່ໂຄສະນາ ໄດ້ຖືກສົ່ງອອກໄປຫາອົງການປະຕິບັດງານທັງໝົດທີ່ກ່ຽວຂ້ອງ
- ເອກະສານແນະນຳກ່ຽວກັບການເຮັດລາຍງານຢູ່ໃນກອງປະຊຸມວິຊາການວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ
- ຕິດຕາມ ແລະ ສືບຕໍ່ສະໜັບສະໜູນອົງການປະຕິບັດງານ ແລະ ລົງຕິດຕາມ ແລະ ປະເມີນຜົນ ກ່ຽວກັບການນຳເອົາກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ເຂົ້າໃນຫຼັກສູດການສອນຂອງຄູຢູ່ໃນວິທະຍາໄລຝຶກອົບຮົມຄູ.
- ກິດຈະກຳກິລາເຕະບານຮ່ວມນ້ຳໃຈຂອງອົງການບານເຕະຮ່ວມນ້ຳໃຈ ຈະສືບຕໍ່ສົ່ງເສີມການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຜ່ານການແຈກຢາຍສິ່ງຂອງໃນການເຕາະບານ ແລະ ຈະຈັດການແຂ່ງຂັນເຕະບານຂຶ້ນຢູ່ແຂວງຊຽງຂວາງ.
- ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຈະເຄື່ອນໄຫວການຈັດລາຍການວິທະຍຸໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ແຂວງຊຽງຂວາງ ແລະ ສາລະວັນ.
- ອົງການຢູນິເຊບ ຈະສືບຕໍ່ສະໜັບສະໜູນການຈັດພິມປຶ້ມຫຼັກສູດການສິດສອນວິຊາ ລບຕ ໃຫ້ແກ່ບັນດາໂຮງຮຽນຊັ້ນປະຖົມສຶກສາຢູ່ 42 ເມືອງໃນ 9 ແຂວງ.

# ອົງການການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ

## ສະມາຄົມຊ່ວຍເຫຼືອບັນເທົາທຸກຂອງຍີ່ປຸ່ນ (ເອເອອາ) ຢູ່ແຂວງຊຽງຂວາງ (ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ)

AAR Japan
Association for Aid and Relief, Japan



*ກຳລັງເຜີຍແຜ່ ແລະ ອະທິບາຍ ກ່ຽວກັບວິທີການນຳໃຊ້ເຄື່ອງປະຖົມພະຍາບານຂັ້ນເບື້ອງຕົ້ນ, ປຶ້ມນ້ອຍ ແລະ ໃບປິວ ໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ.*

ອົງການເອເອອາ ໄດ້ສະໜອງການຝຶກອົບຮົມກ່ຽວກັບການປະຖົມພະຍາບານຂັ້ນເບື້ອງຕົ້ນ ໃຫ້ແກ່ພະຍາບານທີ່ປະຈຳຢູ່ສຸກສາລາ ແລະ ອາສາສະໝັກສຸກສາລາຂັ້ນບ້ານ ໃນກໍລະນີທີ່ມີອຸປະຕິເຫດ ລບຕ ເກີດຂຶ້ນ. ນອກຈາກນັ້ນ, ອົງການເອເອອາ ຍັງໄດ້ຮ່ວມມືກັບໜ່ວຍງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ອີກດ້ວຍ.

### ກິດຈະກຳຕ່າງໆໃນປີ 2012:

ປີ 2012 ເປັນໄລຍະທີ II ຂອງອົງການເອເອອາ ໃນການດຳເນີນໂຄງການໄລຍະ 3 ປີຢູ່ແຂວງຊຽງຂວາງ, ຊຶ່ງຈຸດປະສົງຂອງໂຄງການແມ່ນເພື່ອເສີມສ້າງຄວາມເຂັ້ມແຂງໃນການດູແລປິ່ນປົວທາງການແພດແບບສຸກເສີນໃຫ້ແກ່ຜູ້ລອດຊີວິດຈາກ ລບຕ ແລະ ການນຳສົ່ງຄົນເຈັບໄປຍັງສະຖານທີ່ປິ່ນປົວຮັກສາ. ນອກຈາກນັ້ນ, ອົງການເອເອອາ ຍັງໄດ້ສະໜັບສະໜູນ ຄກລ ຢູ່ແຂວງຊຽງຂວາງອີກດ້ວຍ.

**ບາງກິດຈະກຳທີ່ໄດ້ປະຕິບັດໃນປີ 2012 ມີດັ່ງລຸ່ມນີ້:**

- ໄດ້ສະໜອງການຝຶກອົບຮົມກ່ຽວກັບການເປັນຄູຝຶກໃຫ້ແກ່ພະນັກງານຢູ່ໂຮງໝໍເມືອງຄຳ ແລະ ພູກູດ
- ໄດ້ສະໜອງການຝຶກອົບຮົມກ່ຽວກັບການເຮັດປະຖົມພະຍາບານຂັ້ນເບື້ອງຕົ້ນໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ ແລະ ພະຍາບານທີ່ປະຈຳຢູ່ສຸກສາລາ ຢູ່ເມືອງຄຳ ແລະ ພູກູດ.
- ໄດ້ສະໜອງອຸປະກອນການເຮັດປະຖົມພະຍາບານຂັ້ນເບື້ອງຕົ້ນໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານຢູ່ເມືອງຄຳ ແລະ ພູກູດ
- ໄດ້ຜະລິດ ແລະ ແຈກຢາຍປຶ້ມນ້ອຍໃຫ້ຂໍ້ມູນຂ່າວສານ, ໃບປິວ ແລະ ແຜ່ນໂພດສເຕີ້ ກ່ຽວກັບ ລບຕ ແລະ ການເຮັດປະຖົມພະຍາບານຂັ້ນເບື້ອງຕົ້ນ ໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ ແລະ ປະຊາຊົນ ຢູ່ເມືອງຄຳ ແລະ ພູກູດ.
- ໄດ້ສະໜອງອຸປະກອນການແພດສຳລັບການດູແລປິ່ນປົວບາດແຜ, ປຶ້ມນ້ອຍ ແລະ ແຜ່ນພັບໃຫ້ແກ່ພະຍາບານທີ່ປະຈຳຢູ່ສຸກສາລາ ຢູ່ເມືອງແປກ, ຜາໄຊ, ຄຳ ແລະ ພູກູດ.
- ໄດ້ຈັດກອງປະຊຸມສຳມະນາຢູ່ຂັ້ນບ້ານຢູ່ຕາມບ້ານເປົ້າໝາຍທີ່ໄດ້ຮັບຜົນກະທົບສູງຈາກ ລບຕ ຕັ້ງຢູ່ເມືອງແປກ, ຜາໄຊ, ຄຳ ແລະ ພູກູດ.
- ໄດ້ສະໜອງສື່ໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃຫ້ແກ່ ຄກລ ຢູ່ແຂວງຊຽງຂວາງ.
- ໄດ້ສຳພາດຜູ້ຖືກເຄາະຮ້າຍໃໝ່ຈາກລບຕ, ຊຶ່ງເປັນຜູ້ທີ່ລາຍງານ ແລະ ສະໜອງຂໍ້ມູນໃຫ້ແກ່ ຄຊກລ.

### ຜົນສຳເລັດຕົ້ນຕໍໃນປີ 2012:

**ບັນດາຜົນສຳເລັດຕົ້ນຕໍຂອງໂຄງການທີ່ຈັດຕັ້ງປະຕິບັດຢູ່ແຂວງຊຽງຂວາງໃນປີ 2012 ມີ:**

- ປຶ້ມນ້ອຍໃຫ້ຂໍ້ມູນຂ່າວສານ ຫຼາຍກວ່າ 200 ຫົວ, ໃບປິວ ແລະ ແຜ່ນໂພດສເຕີ້ໂຄສະນາກ່ຽວກັບ ລບຕ ຫຼາຍກວ່າ 2,000 ແຜ່ນ ແລະ ອຸປະກອນປະຖົມພະຍາບານຂັ້ນຕົ້ນໄດ້ຖືກຜະລິດຂຶ້ນ ແລະ ແຈກຢາຍໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ ແລະ ປະຊາຊົນຢູ່ໃນເຂດພື້ນທີ່ເປົ້າໝາຍ. ຜ່ານການປະເມີນປະເມີນຜົນຫຼັງການຝຶກອົບຮົມ ເຫັນວ່າ ປຶ້ມນ້ອຍໃຫ້ຂໍ້ມູນຂ່າວສານ, ໃບປິວ ແລະ ແຜ່ນໂພດສເຕີ້ໂຄສະນາ ແມ່ນໄດ້ຖືກນຳໃຊ້ເຂົ້າໃນການຝຶກອົບຮົມເປັນຈຳນວນຫຼວງຫຼາຍໃນການສົ່ງຄວາມຮູ້ ແລະ ຂໍ້ມູນທີ່ເປັນປະໂຫຍດໃຫ້ແກ່ຊາວບ້ານ.
- ທັກສະ ແລະ ຄວາມຮູ້ຂອງພະນັກງານຢູ່ໂຮງໝໍເມືອງ/ສຸກສາລາ ຢູ່ເມືອງຄຳ ແລະ ພູກູດ ໄດ້ຖືກຍົກລະດັບໂດຍຜ່ານການຝຶກອົບຮົມໃນການເປັນຄູຝຶກໃນການເຮັດປະຖົມພະຍາບານຂັ້ນຕົ້ນ ແລະ ການສິດສອນກ່ຽວກັບເຕັກນິກ. ການຝຶກອົບຮົມກ່ຽວກັບການເປັນຄູຝຶກໃຫ້ແກ່ຜູ້ເຂົ້າຮ່ວມຝຶກໄດ້ສະໜອງການຝຶກອົບຮົມກ່ຽວກັບການເຮັດປະຖົມພະ



*ອາສາສະໝັກບ້ານກຳລັງຝຶກແອບພື້ນຖານການຊ່ວຍເຫຼືອຊີວິດໃຫ້ແກ່ຄົນເຈັບຢູ່ໃນການຝຶກອົບຮົມອາສາສະໝັກບ້ານ.*

ຍາບານຂັ້ນຕົ້ນໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ ຈຳນວນ 14 ຄົນ ຢູ່ເມືອງຄຳ ແລະ ພູກູດ.

- ທັກສະ ແລະ ຄວາມຮູ້ຂອງອາສາສະໝັກສຸກສາລາຂັ້ນບ້ານ ຈຳນວນ 196 ຄົນ ຢູ່ເມືອງຄຳ ແລະ ພູກູດ ໄດ້ຖືກຍົກລະດັບໂດຍຜ່ານການຝຶກອົບຮົມໃນການເປັນຄູຝຶກໃນການເຮັດປະຖົມພະຍາບານຂັ້ນຕົ້ນ. ຜ່ານການທົດສອບຫຼັງການຝຶກອົບຮົມເຫັນວ່າ ຄວາມຮູ້ຂອງອາສາສະໝັກສຸກສາລາຂັ້ນບ້ານກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນແມ່ນໄດ້ມີການປັບປຸງດີຂຶ້ນເປັນທີ່ໜ້າຊົມເຊີຍ. ຄວາມຮູ້ສຶກ ແລະ ການມີຄວາມຮັບຜິດຊອບ ແລະ ແຮງຈູງໃຈ ແມ່ນໄດ້ມີການປັບປຸງດີຂຶ້ນເຊັ່ນດຽວກັນ.
- ອາສາສະໝັກສຸກສາລາຂັ້ນບ້ານຈຳນວນ 196 ຄົນ ຢູ່ເມືອງຄຳ ແລະ ພູກູດ ໄດ້ຮັບອຸປະກອນການເຮັດປະຖົມພະຍາບານຂັ້ນຕົ້ນ, ປຶ້ມນ້ອຍໃຫ້ຂໍ້ມູນ ແລະ ແຜ່ນພັບ.
- ສຸກສາລາຈຳນວນ 25 ແຫ່ງ ໄດ້ຮັບການປະກອບອຸປະກອນການແພດກ່ຽວກັບການປິ່ນປົວບາດແຜ, ປຶ້ມນ້ອຍໃຫ້ຂໍ້ມູນ ແລະ ແຜ່ນພັບ ຢູ່ເມືອງແປກ, ຜາໄຊ, ຄຳ ແລະ ພູກູດ.
- ໄດ້ຈັດກອງປະຊຸມສຳມະນາຢູ່ຂັ້ນບ້ານ ແລະ ມີການລົງຢ້ຽມຢາມຕິດຕາມຢູ່ໃນ 50 ບ້ານ ຢູ່ເມືອງແປກ, ຜາໄຊ, ຄຳ ແລະ ພູກູດ
    - ປະຊາຊົນຢູ່ໃນ 50 ບ້ານ ໄດ້ຮັບຮູ້ກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນ ແລະ ຄວາມອັນຕະລາຍຈາກ ລບຕ ຜ່ານການເຂົ້າຮ່ວມກອງປະຊຸມສຳມະນາ, ຮັບຮູ້ຜ່ານໃບປິວ/ແຜ່ນໂພດສເຕີ້ໂຄສະນາ.
    - 'ນັກຂັບລົດຮັບສົ່ງຄົນເຈັບ' ທີ່ເປັນເຈົ້າຂອງລົດດັ່ງກ່າວໄດ້ຖືກແຕ່ງຕັ້ງໃຫ້ໄປເຮັດໜ້າທີ່ໃນການນຳສົ່ງສຸກເສີນຜູ້ລອດຊີວິດຈາກ ລບຕ
- ຄກລ ແຂວງຊຽງຂວາງ ໄດ້ສະໜອງແຜ່ນໂພດສ໌ເຕີ້ໂຄສະນາ 2 ຊະນິດກ່ຽວກັບ ລບຕ ແລະ ອຸປະກອນທີ່ຈຳເປັນເພື່ອໃຊ້ເຂົ້າໃນການດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ.
- ໄດ້ລົງສຳຫຼວດຜູ້ຖືກເຄາະຮ້າຍຈາກ ລບຕ ຈຳນວນ 43 ຄົນ ຢູ່ເມືອງແປກ, ຜາໄຊ, ພູກູດ ແລະ ຄູນ.

## ວຽກຈຸດສຸມໃນປີ 2013:

ໃນປີ 2013, ອົງການເອເອອາ ຈະຂະຫຍາຍກິດຈະກຳຕື່ມອີກໄປຍັງ 2 ເມືອງຢູ່ແຂວງຊຽງຂວາງຄື: ເມືອງໜອງແຮດ ແລະ ຄູນ ໂດຍການນຳໃຊ້ວິທີການແບບເດີມທີ່ເຄີຍປະຕິບັດຢູ່ໃນໄລຍະທີ I ແລະ II. ອົງການເອເອອາ ຈະສືບຕໍ່ສະໜອງການຝຶກອົບຮົມໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ ແລະ ພະຍາບານທີ່ປະຈຳຢູ່ສຸກສາລາ ແລະ ຈະສະໜອງວັດຖຸອຸປະກອນສຳລັບການປິ່ນປົວບາດແຜໃຫ້ແກ່ໂຮງໝໍເມືອງ 6 ແຫ່ງອີກດ້ວຍ. ນອກຈາກນັ້ນ, ທີມງານເຄື່ອນທີ່ຂອງອົງການເອເອອາ ຈະສືບຕໍ່ລົງຢ້ຽມຢາມເພື່ອຄັດເລືອກເອົາຊາວບ້ານທີ່ອາໄສຢູ່ເຂດທີ່ໄດ້ຮັບຜົນກະທົບສູງຈາກ ລບຕ ເພື່ອໃຫ້ເຂົາເຈົ້າຮັບຮູ້ກ່ຽວກັບອັນຕະລາຍຂອງ ລບຕ ແລະ ວິທີການເຮັດປະຖົມພະຍາບານຂັ້ນຕົ້ນ. ນອກຈາກນັ້ນ, ໂດຍການປະສານສົມທົບກັບທີມງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຂອງ ຄກລ ແຂວງຊຽງຂວາງ, ອົງການເອເອອາ ຈະສະໜອງແຜ່ນໂພດສເຕີ້, ປຶ້ມຂຽນ ແລະ ເພັງຮ້ອງກ່ຽວກັບ ລບຕ ເພື່ອໃຊ້ເຂົ້າໃນການເຄື່ອນໄຫວກິດຈະກຳ.

## ຂ່າວດີ: ການຝຶກອົບຮົມກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນ

ໃນຈຳນວນອາສາສະໝັກສຸກສາລາຂັ້ນບ້ານ 196 ຄົນ, ອົງການເອເອອາ ໄດ້ສຳພາດແຕ່ 74 ຄົນ ເພື່ອປະເມີນເບິ່ງການປ່ຽນແປງຂອງເຂົາເຈົ້າ ພາຍຫຼັງທີ່ສຳເລັດການຝຶກອົບຮົມກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນ. ຈາກການປະເມີນຜົນເຫັນວ່າ ອາສາສະໝັກສຸກສາລາຂັ້ນບ້ານຈຳນວນ 71 ຄົນ ສາມາດທວນຄືນບົດຮຽນທີ່ໄດ້ຮຽນມາໄດ້ ແລະ 51 ຄົນ ແມ່ນໄດ້ມີການສະໜອງການຝຶກອົບຮົມໃຫ້ແກ່ຊາວບ້ານກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນ. ພວກເຂົາບໍ່ສະເພາະຊ່ວຍຮັກສາຜູ້ຖືກເຄາະຮ້າຍຈາກ ລບຕ ທີ່ບາດເຈັບເທົ່ານັ້ນ, ແຕ່ຍັງໄດ້ສະໜັບສະໜູນໃນການໃຫ້ກຳລັງໃຈແກ່ຜູ້ຖືກເຄາະຮ້າຍຈາກ ລບຕ ນຳອີກ.

ອາສາສະໝັກສຸກສາລາຂັ້ນບ້ານຄົນໜຶ່ງຢູ່ເມືອງພູກູດ, ທ້າວ ປາດ ໄດ້ກ່າວວ່າ ລາວເຄີຍໄດ້ຊ່ວຍຜູ້ຖືກເຄາະຮ້າຍຈາກອຸປະຕິເຫດ ລບຕ 2 ຄົນແລ້ວ ກ່ອນໜ້າທີ່ລາວຈະໄດ້ເຂົ້າຮ່ວມການຝຶກອົບຮົມ, ແຕ່ລາວກໍ່ບໍ່ສາມາດຈະເຮັດການປິ່ນປົວຮັກສາໃນເວລານັ້ນໄດ້ ເນື່ອງຈາກວ່າ ຂາດຄວາມຮູ້ ແລະ ເຕັກນິກໃນການຮັກສາ. ແຕ່ເຖິງຢ່າງໃດກໍ່ຕາມ, ພາຍຫຼັງທີ່ໄດ້ເຂົ້າຮ່ວມຝຶກອົບຮົມກັບອົງການເອເອອາ, ເຮັດໃຫ້ລາວໄດ້ຮຽນຮູ້ກ່ຽວກັບວິທີການເຮັດປະຖົມພະຍາບານເບື້ອງຕົ້ນ. ປະຈຸບັນ, ລາວຮູ້ສຶກໝັ້ນໃຈຂຶ້ນຫຼາຍກວ່າເກົ່າໃນການປິ່ນປົວຮັກສາ. ນອກຈາກນັ້ນ, ລາວຍັງໄດ້ນຳໄປເຜີຍແຜ່ໃຫ້ຊາວບ້ານໄດ້ຮັບຮູ້ກ່ຽວກັບອັນຕະລາຍຂອງ ລບຕ ແລະ ວິການເຮັດປະຖົມພະຍາບານຂັ້ນຕົ້ນອີກດ້ວຍໃນເວລາທີ່ມີກອງປະຊຸມຂັ້ນບ້ານແຕ່ລະຄັ້ງ. ລາວກ່າວຕື່ມອີກວ່າ ຂ້ອຍຕ້ອງການຢາກຮຽນຮູ້ຕື່ມອີກກ່ຽວກັບການເຮັດປະຖົມພະຍາບານເບື້ອງຕົ້ນ, ຢາກເຜີຍແຜ່ໃຫ້ປະຊາຊົນຮັບຮູ້ກ່ຽວກັບອັນຕະລາຍຈາກ ລບຕ ແລະ ການເຮັດປະຖົມພະຍາບານເບື້ອງຕົ້ນໃຫ້ຫຼາຍຂຶ້ນ.



*ທ້າວ ປາດ ທາງຂວາມື ກຳລັງຮຽນກ່ຽວກັບການຫ້າມເລືອດຢູ່ໃນການຝຶກອົບຮົມກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ.*



*ກຳລັງສຳພາດຜູ້ຖືກເຄາະຮ້າຍຈາກ ລບຕ ກ່ຽວກັບອຸປະຕິເຫດທີ່ເກີດຂຶ້ນ.*

## ຄູ່ຮ່ວມປະຕິບັດງານຕ່າງໆ:

- ອົງການເອເອອາ ຈະເຮັດວຽກໂດຍກົງກັບສູນຟື້ນຟູໜ້າທີ່ການ, ສູນຟື້ນຟູໜ້າທີ່ການຂັ້ນແຂວງ, ພະແນກສາທາລະນະສຸກຂັ້ນແຂວງ ລວມທັງ ໂຮງໝໍທ້ອງຖິ່ນ ແລະ ອຳນາດການປົກຄອງຂັ້ນບ້ານ.
- ງົບປະມານໃນການປະຕິບັດງານໃນການແກ້ໄຂບັນຫາ ລບຕ ແມ່ນສະໜັບສະໜູນໂດຍກະຊວງການຕ່າງປະເທດຍີ່ປຸ່ນ, ທຶນຊ່ວຍເຫຼືອຂອງອົງການ ເອັນຈີໂອ ຂອງຍີ່ປຸ່ນ ແລະ ເງິນບໍລິຈາກຂອງປະຊາຊົນຍີ່ປຸ່ນ.




*ການສອນຊາວບ້ານໃຫ້ຮູ້ກ່ຽວກັບການເຮັດປະຖົມພະຍາບານຂັ້ນເບື້ອງຕົ້ນຢູ່ໂພດສ໌ເຕີ້ ເພື່ອປັບປຸງຄວາມຮູ້ກ່ຽວກັບການເຮັດປະຖົມພະຍາບານຂັ້ນເບື້ອງຕົ້ນຢູ່ໃນກອງປະຊຸມຝຶກອົບຮົມຂັ້ນບ້ານ.*



*ການສອນຊາວບ້ານໃຫ້ຮູ້ກ່ຽວກັບການເຮັດປະຖົມພະຍາບານຂັ້ນເບື້ອງຕົ້ນຢູ່ໂພດສ໌ເຕີ້ ເພື່ອປັບປຸງຄວາມຮູ້ກ່ຽວກັບການເຮັດປະຖົມພະຍາບານຂັ້ນເບື້ອງຕົ້ນຢູ່ໃນກອງປະຊຸມຝຶກອົບຮົມຂັ້ນບ້ານ.*



*ອາສາສະໝັກສຸກສາລາຂັ້ນບ້ານກຳລັງຝຶກແອບກ່ຽວກັບພື້ນຖານການປໍ້າຫົວໃຈເພື່ອຊ່ວຍຊີວິດ ຢູ່ໃນການຝຶກອົບຮົມໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ.*

## ບຸກຄະລາກອນໃນປີ 2012:

| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | |
|---|---|
| ຈຳນວນຄັ້ງລົງຢ້ຽມຢາມ | ຜູ້ໄດ້ຮັບຜົນປະໂຫຍດ |
| 52 | ຊາຍ=1,097<br>ຍິງ=1,447 |
| ***Total*** | ***2,544*** |

## ພື້ນທີ່ການປະຕິບັດງານ:

| ***ກິດຈະກຳ*** | ***ສະຖານທີ່ຈັດຕັ້ງປະຕິບັດກິດຈະກຳ*** |
|---|---|
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ເມືອງແປກ, ຜາໄຊ, ຄຳ ແລະ ພູກູດ ຢູ່ແຂວງຊຽງຂວາງ |
| ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ | ເມືອງແປກ, ຜາໄຊ, ຄຳ, ພູກູດ ແລະ ໜອງແຮດ ຢູ່ແຂວງຊຽງຂວາງ |

## ສະພາບການເງິນ:

**ຄ່າໃຊ້ຈ່າຍໃນປີ 2012: (ໂດລາສະຫະລັດ)**

| *ລາຍລະອຽດ* | *ຈຳນວນ (ໂດລາສະຫະລັດ)* |
|---|---:|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 22,000 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 145,000 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | 0 |
| ຄ່າໃຊ້ຈ່າຍສຳລັບຊື້ອຸປະກອນ-ຊັບສິນຄົງທີ່ | 13,000 |
| ຄ່າໃຊ້ຈ່າຍສຳລັບຊື້ອຸປະກອນ-ຊັບສິນຄົງບໍ່ຄົງທີ່ | 0 |
| *ລວມ* | ***180,000*** |

## ການປະກອບສ່ວນຂອງຜູ້ໃຫ້ທຶນ (ໂດລາສະຫະລັດ)

| *ຜູ້ໃຫ້ທຶນ* | *ເງິນທີ່ໄດ້ຮັບໃນປີ 2012 (ໂດລາສະຫະລັດ)* |
|---|---:|
| ທຶນພາຍໃນຂອງອົງການເອເອອາ | 7,000 |
| ການຊວງການຕ່າງປະເທດຍີ່ປຸ່ນ | 173,000 |
| *ລວມ* | ***180,000*** |

## ການໂອນທຶນຊ່ວຍເຫຼືອເພື່ອສະໜັບສະໜູນແກ່ວຽກງານຕ່າງໆ:

**ເປັນທຶນຊ່ວຍເຫຼືອທີ່ໂອນໃຫ້ແກ່ອົງການປະຕິບັດງານອື່ນໆ**

| *ຊື່ອົງການ ທີ່ໄດ້ມີການໂອນເງິນຊ່ວຍເຫຼືອໃຫ້* | *ຈຳນວນເງິນ (ໂດລາສະຫະລັດ)* |
|---|---:|
| ສະມາຄົມຊ່ວຍເຫຼືອເພື່ອປັບປຸງຄຸນນະພາບຊີວິດຂອງຜູ້ເສຍອົງຄະ ແລະ ຜູ້ຖືກເຄາະຮ້າຍຈາກ ລບຕ | 3,937 |
| *ລວມ* | ***3,937*** |

# ອົງການບໍລິການບັນເທົາທຸກຂອງກາໂຕລິກ (ຊີອາເອັດ)

*(ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ການໂຄສະນາສຶກສາ ຄວາມສ່ຽງຈາກ ລບຕ)*

## ກິດຈະກຳໃນປີ 2012:

ອົງການຊີອາເອັດ ໄດ້ຈັດຕັ້ງປະຕິບັດໂຄງການ "ເຟີດທູແອັກ: ແມ່ນການຕອບຮັບກ່ຽວກັບການປິ່ນປົວຂັ້ນພື້ນຖານຂອງຊຸມຊົນໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ ລບຕ" ຢູ່ແຂວງໄຊຍະບູລີ, ເລີ່ມແຕ່ວັນທີ 30 ກັນຍາ 2010 ເຖິງ 31 ມີນາ 2012. ງົບປະມານຂອງໂຄງການແມ່ນ 230,000 ໂດລາສະຫະລັດ ໂດຍການສະໜັບສະໜູນຂອງກະຊວງການຕ່າງປະເທດສະຫະລັດອາເມລິກາ (ຫ້ອງການຫຼຸດຜ່ອນອາວຸດຄັງແສງ ແລະ ການສູ້ຮົບ).

"ເຟີດທູແອັກ" ແມ່ນວິທີການທີ່ສຸມໃສ່ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ. ການດຳເນີນກິດຈະກຳແມ່ນກວມເອົາ 40 ບ້ານຢູ່ໃນແຂວງໄຊຍະບູລີ. ອົງການຊີອາເອັດ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈຮ່ວມກັບກະຊວງສຶກສາທິການ ແລະ ກິລາ. ຄູ່ຮ່ວມປະຕິບັດໂຄງການຕົ້ນຕໍແມ່ນພະນັກງານສາທາລະນະສຸກທີ່ປະຈຳຢູ່ຂັ້ນແຂວງ ແລະ ເມືອງ. ນອກຈາກນັ້ນ, ອົງການຊີອາເອັດ ຍັງໄດ້ເຮັດວຽກຢ່າງໃກ້ສິດຕິດແທດກັບ ຄຊກລ.

## ຜົນສຳເລັດຕ່າງໆ ແຕ່ວັນທີ 1 ຕຸລາ 2011-31 ມີນາ 2012:

- ພະຍາບານ ແລະ ທ່ານໝໍຈຳນວນ 22 ຄົນ ຫຼື (55%) ໄດ້ຖືກຄັດເລືອກໃຫ້ເຂົ້າຮ່ວມການຝຶກອົບຮົມກ່ຽວກັບການປິ່ນປົວບາດແຜສຸກເສີນໃຫ້ຜູ້ຖືກເຄາະຮ້າຍຈາກ ລບຕ, ໄລຍະເວລາ 5 ວັນ.
- ອາສາສະໝັກສຸກສາລາຂັ້ນບ້ານ 83 ຄົນ ຫຼື (ເພດຍິງ 52%) ແລະ ພະນັກງານຕອບຮັບສຸກເສີນຢູ່ຂັ້ນບ້ານ ຫຼື (ເພດຍິງ 50%) ໄດ້ຮັບການຝຶກອົບຮົມກ່ຽວກັບການປະຖົມພະຍາບານຂັ້ນຕົ້ນ, ໄລຍະເວລາ 2 ວັນ.
- ອົງການຊີອາເອັດ ໄດ້ສະໜອງການຝຶກອົບຮົມຢູ່ໃນ 32 ບ້ານກ່ຽວກັບວິທີການແຕ້ມແຜນທີ່ບ້ານ ແລະ ການວາງແຜນສຸກເສີນ; ການແຕ້ມແຜນທີ່ໃນຈຳນວນບ້ານດັ່ງກ່າວ ແລະ ການວາງແຜນສຳລັບຊຸມຊົນແມ່ນໄດ້ເຮັດສຳເລັດແລ້ວ 59%
- ອົງການຊີອາເອັດໄດ້ສະໜັບສະໜູນອາສາສະໝັກສຸກສາລາຂັ້ນບ້ານ ແລະ ພະນັກງານຕອບຮັບສຸກເສີນຢູ່ຂັ້ນບ້ານ ເພື່ອດຳເນີນກິດຈະກຳໂຄສະນາສຶກຄວາມສ່ຽງຈາກ ລບຕ ໂດຍເອົາໂຮງຮຽນເປັນພື້ນຖານ ຢູ່ໃນ 40 ບ້ານເປົ້າໝາຍ ໂດຍປະກອບມີຜູ້ເຂົ້າຮ່ວມທັງໝົດ 2,148 ຄົນ ຫຼື (55%).
- ຜູ້ຖືກເຄາະຮ້າຍທີ່ມີບາດແຜຈຳນວນ 164 ຄົນ ໄດ້ຮັບການປິ່ນປົວທາງການແພດ, ໃນນັ້ນມີຜູ້ຖືກເຄາະຮ້າຍຈາກ ລບຕ 4 ຄົນ.
- ໄດ້ລົງໄປສຳພາດປະຊາຊົນຢູ່ໃນ 40 ບ້ານ ເພື່ອເພີ່ມຄວາມຮູ້ໃຫ້ຫຼາຍຂຶ້ນກ່ຽວກັບການສ້າງຄວາມປອດໄພໃນເວລາເຫັນ ລບຕ.

## ຜົນສຳເລັດຕົ້ນຕໍໃນປີ 2012:

ໂຄງການ "ເຟີດທູແອັກ" ຂອງອົງການຊີອາເອັດແມ່ນວິທີການທີ່ສຸມໃສ່ເພື່ອແກ້ໄຂບັນຫາທີ່ຢູ່ໃນເຂດພື້ນທີ່ ລບຕ ຕົກຄ້າງໂດຍຜ່ານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ. ອົງການຊີອາເອັດ ໄດ້ເຮັດວຽກຮ່ວມກັບໂຮງໝໍເມືອງ, ສຸກສາລາ ແລະ ຊຸມຊົນ ເພື່ອສ້າງ "ຕອງໂສ້ເພື່ອຄວາມຢູ່ລອດ" ຂຶ້ນສຳຜູ້ຖືກເຄາະຮ້າຍທີ່ມີບາດແຜ ໂດຍຜ່ານການສະໜອງການຝຶກອົບຮົມຫຼາຍຢ່າງໃຫ້ແກ່ບັນດາຄູ່ຮ່ວມງານຕ່າງໆກ່ຽວກັບ ແພດປິ່ນປົວຜູ້ຖືກເຄາະຮ້າຍຈາກອຸປະຕິເຫດ ລບຕ, ອາສາສະໝັກສຸກສາລາຂັ້ນບ້ານ ແລະ ພະນັກງານຕອບຮັບສຸກເສີນຢູ່ຂັ້ນບ້ານ. ອົງການຊີອາເອັດ ໄດ້ຮ່ວມມືກັບໂຮງໝໍເມືອງ ແລະ ສຸກສາລາ ເພື່ອຄັດເລືອກເອົາພະນັກງານປິ່ນປົວທາງການແພດ ເພື່ອມາປິ່ນປົວຜູ້ທີ່ຖືກເຄາະຮ້າຍຈາກ ລບຕ ໂດຍມີພາລະບົດບາດໃນການເປັນຜູ້ນຳພາຈັດຕັ້ງປະຕິບັດກິດຈະກຳກ່ຽວກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຕ່າງໆ. ຄູ່ຮ່ວມງານຂອງອົງການຊີອາເອັດ ແລະ ກອງທຶນປິ່ນປົວຮັກສາບາດແຜໃຫ້ຄົນເຈັບ ໄດ້ສະໜອງການຝຶກອົບຮົມໃຫ້ແກ່ແພດປິ່ນປົວຜູ້ທີ່ຖືກເຄາະຮ້າຍຈາກ ລບຕ ເພື່ອສິດສອນເຂົາເຈົ້າໃຫ້ມີທັກສະໃນການຕອບຮັບບັນດາຜູ້ຖືກເຄາະຮ້າຍທີ່ມີບາດແຜຕ່າງໆໃຫ້ໄດ້ດີຫຼາຍຂຶ້ນ. ນອກຈາກນັ້ນ, ອົງການຊີອາເອັດ ຍັງໄດ້ກະກຽມເອົາແພດປິ່ນປົວຜູ້ທີ່ຖືກເຄາະຮ້າຍຈາກ ລບຕ ເພື່ອໄປຝຶກອົບຮົມໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານກ່ຽວກັບວິທີການເຮັດປະຖົມພະຍາບານຂັ້ນຕົ້ນ ແລະ ພື້ນຖານການຊ່ວຍເພື່ອກອບກູ້ເອົາຊີວິດນຳອີກດ້ວຍ. ສະມາຊິກໃນບ້ານຈຳນວນ 10 ຄົນທີ່ມາຈາກແຕ່ລະບ້ານ ລວມມີ ຜູ້ຊາຍ, ຍິງ, ນັກຮຽນ ແລະ ສະມາຊິກຈາກຄະນະກຳມະການປັບປຸງການສຶກສາຢູ່ຂັ້ນບ້ານ ແມ່ນໄດ້ຄັດເລືອກໃຫ້ເປັນພະນັກງານຕອບຮັບສຸກເສີນຢູ່ຂັ້ນບ້ານ ຫຼື ເປັນຜູ້ທີ່ຢູ່ໃນເຫດການສຸກເສີນກ່ອນໝູ່ ກໍ່ໃຫ້ສາມາດເຮັດການປະຖົມພະຍາບານເບື້ອງຕົ້ນໃຫ້ໄດ້. ການນຳໃຊ້ວິທີການຝຶກອົບຮົມແບບນີ້, ອົງການຊີອາເອັດ ສາມາດນຳເອົາສະມາຊິກໃນຊຸມຊົນຢູ່ຂັ້ນເມືອງ ແລະ ຂັ້ນບ້ານ ເຮັດການປະຖົມພະຍາບານຂັ້ນເບື້ອງຕົ້ນ ແລະ ການຊ່ວຍເຫຼືອ ເພື່ອກອບກູ້ເອົາຊີວິດໃຫ້ແກ່ບັນດາຜູ້ຖືກເຄາະຮ້າຍທີ່ມີບາດແຜໄດ້. ໃນຂະນະດຽວກັນ, ກໍ່ເປັນການເຊື່ອມໂຍງເອົາຜູ້ທີ່ເຮັດວຽກຕົວຈິງ ສາມາດສະໜອງການປິ່ນປົວໃຫ້ມີຄວາມເໝາະສົມ ແລະ ທັນເວລາ ໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ ລບຕ.

## ວຽກຈຸດສຸມໃນປີ 2013:

ອີງໃສ່ຜົນສຳເລດທີ່ໄດ້ຈາກການປະຕິບັດໂຄງການໃນໄລຍະທີ I, ອົງການຊີອາເອັດ ຈະສືບຕໍ່ຈັດຕັ້ງປະຕິບັດໂຄງການໄລຍະທີ II ຄື: "ການຕອບຮັບປິ່ນປົວສຸກເສີນຢູ່ຂັ້ນບ້ານ" ໂດຍຈະມີການນຳໃຊ້ວິທີການແບບເກົ່າທີ່ເຄີຍເຮັດໃນໄລຍະທຳອິດ ແບບສຸມໃສ່ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ. ອົງການຊີອາເອັດ ຈະເສີມສ້າງຄວາມເຂັ້ມແຂງເພີ່ມເຕີມໃນການດຳເນີນກິດຈະກຳຕ່າງໆຢູ່ໃນເມືອງໄຊບົວທອງ ແລະ ຈະຂະຫຍາຍກິດຈະກຳໄປສູ່ເມືອງອື່ນໆຢູ່ໃນແຂວງຄຳມ່ວນອີກນຳ. ອົງການຊີອາເອັດ ຈະເພີ່ມການເຊື່ອມໂຍງລະຫວ່າງການດຳເນີນວຽກງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃຫ້ມີການເຄື່ອນໄຫວຮ່ວມກັບຫ້ອງການສາທາລະນະສຸກ ແລະ ຫ້ອງການສຶກສາຂັ້ນທ້ອງຖິ່ນ ລວມທັງ ຄຊກລ ໃຫ້ຫຼາຍຂຶ້ນກວ່າເກົ່າ. ນອກຈາກນັ້ນ, ອົງການຊີອາເອັດ ຍັງຈະສືບຕໍ່ພົວພັນປະສານງານກັບບັນດາອົງການປະຕິບັດງານກວດກູ້ ລບຕ ທີ່ເຄື່ອນໄຫວຢູ່ແຂວງຄຳມ່ວນ ເພື່ອຮ່ວມກັນກຳນົດ ແລະ ສ້າງການເຊື່ອມໂຍງກັບບັນດາຄູ່ຮ່ວມງານຕ່າງໆ.

## ຄູ່ຮ່ວມປະຕິບັດງານຕ່າງໆ:

ຄູ່ຮ່ວມງານຕົ້ນຕໍຂອງອົງການຊີອາເອັດ ແມ່ນກະຊວງສາທາລະນະສຸກ. ນອກຈາກນັ້ນ, ອົງການຊີອາເອັດ ຍັງໄດ້ເຮັດວຽກຢ່າງໃກ້ຊິດຕິດແທດກັບ ຄຊກລ, ຫ້ອງການສາທາລະນະສຸກແຂວງ ແລະ ເມືອງ ລວມທັງ ຫ້ອງການສຶກສາເມືອງ ອີກດ້ວຍ. ອົງການຊີອາເອັດ ແລະ ກອງທຶນປິ່ນປົວຮັກສາບາດແຜ ຈະສືບຕໍ່ເຮັດວຽກຮ່ວມກັບພະນັກງານສາທາລະນະສຸກເມືອງ ເພື່ອຄັດເລືອກເອົາກຸ່ມປະມານ 4-6 ຄົນຕໍ່ກຸ່ມ ທີ່ເອີ້ນວ່າ "ກຸ່ມຄູຝຶກຕົ້ນຕໍ" ເພື່ອຊ່ວຍໃນການຊີ້ນໍາການຝຶກອົບຮົມທີ່ຈັດຂຶ້ນໂດຍແພດປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ ໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ ແລະ ພະນັກງານຕອບຮັບສຸກເສີນຢູ່ຂັ້ນບ້ານ ແລະ ເພື່ອໃຫ້ແນ່ໃຈວ່າ ບັນດາຄູຝຶກ ໄດ້ມີການນໍາໃຊ້ວິທີການຢ່າງເໝາະສົມ, ມີປະສິດທິຜົນ ແລະ ມີການສົ່ງຂໍ້ມູນຂ່າວສານ ໄດ້ຢ່າງຖືກຕ້ອງ. ນອກຈາກນັ້ນ, ບັນດາຄູຝຶກຕົ້ນຕໍ, ກອງທຶນປິ່ນປົວບາດແຜ, ອົງການຊີອາເອັດ, ພະນັກງານຈາກກະຊວງສາທາລະນະສຸກ ແລະ ຄຊກລ ຈະສືບຕໍ່ຕິດຕາມການຝຶກອົບຮົມຢ່າງເປັນປົກກະຕິ ເພື່ອເພື່ອຮັບປະກັນວ່າ ຄຸນນະພາບ, ການສົ່ງເສີມຮ່ວມກັນ, ການສະໜອງການສະໜັບສະໜູນ ແລະທິດທາງໄດ້ນໍາເຂົ້າໄປຢູ່ໃນການຝຶກອົບຮົມໃຫ້ແກ່ແພດປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ.

ນອກຈາກນັ້ນ, ຜູ້ທີ່ໄດ້ຮັບຜົນປະໂຫຍດ ຍັງລວມມີ ອາສາສະໝັກສຸກສາລາຂັ້ນບ້ານ ຜູ້ທີ່ໄດ້ຮັບການຝຶກອົບຮົມກ່ຽວກັບພື້ນຖານການຊ່ວຍເຫຼືອເພື່ອກອບກູ້ເອົາຊີວິດ ແລະ ບັນດາຊຸມຊົນທີ່ມີກິດຈະກໍາໂຄສະນາສຶກສາຄວາມສ່ຽງຈາກ ລບຕ.

### ຂ່າວດີ: ອາສາສະໝັກສຸກສາລາຂັ້ນບ້ານ

ທ້າວ ເສີດ ແມ່ນອາສາສະໝັກສຸກສາລາຂັ້ນບ້ານ ຢູ່ບ້ານໜອງຜື ເມືອງໄຊບົວທອງ ແຂວງຄໍາມ່ວນ, ຊຶ່ງເຮັດວຽກດັ່ງກ່າວຢູ່ທີ່ບ້ານຂອງລາວມາເປັນເວລາ 5 ປີແລ້ວ ແລະ ລາວໄດ້ສະໜອງການປິ່ນປົວດູແລໃຫ້ແກ່ຊາວບ້ານໄດ້ທັງໝົດ 67 ຄອບຄົວ.

ລາວເປັນຜູ້ທີ່ຕອບຮັບເລື່ອງປິ່ນປົວດູແລຂັ້ນຕົ້ນໃຫ້ແກ່ບັນດາປະຊາຊົນທີ່ມີບັນຫາທາງດ້ານສຸຂະພາບນັບຈໍານວນບໍ່ຖ້ວນ ເປັນຕົ້ນແມ່ນ ການຮັກສາບາດແຜຂັ້ນຕົ້ນທີ່ເກີດຈາກອຸປະຕິເຫດ ລບຕ.

ໃນປີ 2011, ອົງການຊີອາເອັດສ໌ ໄດ້ເອົາທ້າວເສີດເຂົ້າຮ່ວມການຝຶກອົບຮົມກ່ຽວກັບອາສາສະໝັກສຸກສາລາຂັ້ນບ້ານ ເພື່ອສະໜອງການຝຶກອົບຮົມກ່ຽວກັບການຊ່ວຍຊີວິດຂັ້ນພື້ນຖານ, ຊຶ່ງເປັນການຝຶກອົບຮົມຄັ້ງທໍາອິດແບບທາງການ ທີ່ລາວໄດ້ເຂົ້າຮ່ວມ. ພາຍຫຼັງຝຶກອົບຮົມແລ້ວ, ທ້າວ ເສີດ ກໍ່ຮູ້ສຶກມີຄວາມໝັ້ນໃຈຂຶ້ນຫຼາຍກວ່າເກົ່າ ໃນເວລາທີ່ສະໜອງການດູແລຮັກສາໃຫ້ແກ່ຄົນເຈັບ. ແຕ່ເຖິງຢ່າງໃດກໍ່ຕາມ, ລາວກໍ່ຍັງບໍ່ແນ່ໃຈວ່າ ລາວຈະສາມາດນໍາເອົາທັກສະທີ່ໄດ້ຮຽນມາເຂົ້າໃນການປິ່ນປົວແບບສຸກເສີນໄດ້ດີຊໍ່າໃດ.

ໃນເດືອນທັນວາ 2012, ລາວກໍ່ໄດ້ມີໂອກາດໄດ້ໃຊ້ມັນ. ທ້າວຈັນ (18) ໄດ້ຖືກຫາມສົ່ງມາຫາທ້າວ ເສີດ ພາຍຫຼັງເກີດອຸປະຕິເຫດ ແລະ ລາວກໍ່ຕົກຢູ່ໃນອາການໂຄມາ 30 ນາທີແລ້ວ.

ທ້າວ ເສີດ ຈື່ໄດ້ສິ່ງທີ່ໄດ້ຮຽນມາຈາກການຝຶກອົບຮົມ ແລະ ລາວກໍ່ໄດ້ກວດເບິ່ງຊີບພະຈອນ ແລະ ການຫາຍໃຈຂອງທ້າວຈັນ, ຈຶ່ງເຮັດໃຫ້ທ້າວ ເສີດ ກາຍເປັນຜູ້ຊ່ຽວຊານດ້ານນີ້ ແລະ ລາວກໍ່ໄດ້ສອນໃຫ້ແມ່ຂອງທ້າວ ຈັນ ກ່ຽວກັບວິທີການປໍ້າຫົວໃຈ. ຫຼັງຈາກ 30 ນາທີຜ່ານໄປ, ທ້າວ ຈັນ ກໍ່ເລີ່ມຫາຍໃຈຄືນມາອີກເທື່ອໜຶ່ງ.

ພາຍຫຼັງ ທ້າວ ເສີດ ກອບກູ້ເອົາຊີວິດຂອງທ້າວ ຈັນ ກັບຄືນມາໄດ້, ບັນດາຊາວບ້ານ ກໍ່ພາກັນເຊື່ອໃນຄວາມສໍາຄັນຂອງການຮຽນຮູ້ກ່ຽວກັບທັກສະໃນການຊ່ວຍຊີວິດຂັ້ນພື້ນຖານ. ຂ່າວລືດັ່ງກ່າວນີ້ ໄດ້ມີການໂຄສະນາເຜີຍແຜ່ຫຼາຍຂຶ້ນ ແລະ ໄດ້ເຮັດໃຫ້ທ້າວ ເສີດ ກາຍມາເປັນຄູຝຶກຢູ່ໃນບ້ານຂອງລາວ. ປະຈຸບັນນີ້, ທ້າວ ເສີດ ໄດ້ຈັດການຝຶກອົບຮົມຂຶ້ນ 3 ຄັ້ງ ໂດຍມີຜູ້ເຂົ້າຮ່ວມຈໍານວນ 40 ຄົນ ໃນທັງໝົດ 228 ຄົນໃນທົ່ວບ້ານ.

ທ້າວ ເສີດ ກ່າວວ່າ: "ປະຈຸບັນນີ້, ຂ້ອຍຮູ້ກ່ຽວກັບການຝຶກອົບຮົມນີ້ໄດ້ເປັນຢ່າງດີແລ້ວ". ຂ້ອຍຮູ້ສຶກມີຄວາມໝັ້ນໃຈຫຼາຍໃນເວລານໍາໃຊ້ທັກສະຕ່າງໆເຂົ້າໃນການດູແລຄົນເຈັບ ແລະ ກໍ່ເປັນຄົນທໍາອິດ ທີ່ໄດ້ຮຽນກ່ຽວກັບການຝຶກອົບຮົມນີ້. ຄວາມຮູ້ດັ່ງກ່າວດຽວນີ້ ກໍ່ໄດ້ມີການຖ່າຍທອດໃຫ້ປະຊາຊົນເພື່ອນໍາໄປໃຊ້ເຂົ້າໃນການຊ່ວຍເຫຼືອເພື່ອກອບກູ້ເອົາຊີວິດ ແລະ ສາມາດເຫັນໄດ້ວ່າ ທຸກໆຄົນແມ່ນເຫັນຄວາມສໍາຄັນຂອງມັນແລ້ວ. ການຝຶກອົບຮົມຂອງອົງການຊີອາເອັດສ໌ ແມ່ນສິ່ງຜົນດີໃຫ້ແກ່ໝູ່ບ້ານນ້ອຍໆຂອງພວກເຮົາ. ຂ້ອຍຫວັງວ່າ ຂ້ອຍຈະສາມາດຮຽນຮູ້ໄດ້ຕື່ມອີກໃນອານາຄົດ ເພື່ອຊ່ວຍເຫຼືອໝູ່ບ້ານໃກ້ຄຽງຂອງຂ້ອຍ".

## ບຸກຄະລາກອນໃນປີ 2012:

| *ປະຈຳຢູ່ຫ້ອງການ* | | | | *ປະຈຳຢູ່ຝ່າຍປະຕິບັດງານ* | | | |
|---|---|---|---|---|---|---|---|
| *ລາວ* | | *ຕ່າງປະເທດ* | | *ລາວ* | | *ຕ່າງປະເທດ* | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 3 | 1 | 0 | 0 | 5 | 2 | 0 | 2 |

## ພື້ນທີ່ການປະຕິບັດງານ:

| ***ກິດຈະກຳ*** | ***ສະຖານທີ່ຈັດຕັ້ງປະຕິບັດກິດຈະກຳ*** |
|---|---|
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ເມືອງໄຊບົວທອງ ແຂວງຄຳມ່ວນ |
| ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ | ເມືອງໄຊບົວທອງ ແຂວງຄຳມ່ວນ |


## ບຸກຄະລາກອນໃນປີ 2012:

| *ປະຈຳຢູ່ຫ້ອງການ* | | | | *ປະຈຳຢູ່ຝ່າຍປະຕິບັດງານ* | | | |
|---|---|---|---|---|---|---|---|
| *ລາວ* | | *ຕ່າງປະເທດ* | | *ລາວ* | | *ຕ່າງປະເທດ* | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 3 | 1 | 0 | 0 | 5 | 2 | 0 | 2 |

## ພື້ນທີ່ການປະຕິບັດງານ:

| ***ກິດຈະກຳ*** | ***ສະຖານທີ່ຈັດຕັ້ງປະຕິບັດກິດຈະກຳ*** |
|---|---|
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ເມືອງໄຊບົວທອງ ແຂວງຄຳມ່ວນ |
| ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ | ເມືອງໄຊບົວທອງ ແຂວງຄຳມ່ວນ |


## ສະພາບການເງິນ:

**ຄ່າໃຊ້ຈ່າຍໃນປີ 2012: (ໂດລາສະຫະລັດ)**

| ***ລາຍລະອຽດ*** | ***ຈຳນວນ (ໂດລາສະຫະລັດ)*** |
|---|---|
| ***ລວມ*** | ***14,0781*** |

## ການປະກອບສ່ວນຂອງຜູ້ໃຫ້ທຶນ ໃນປີ 2012 (ໂດລາສະຫະລັດ)

| ***ຜູ້ໃຫ້ທຶນ*** | ***ເງິນທີ່ໄດ້ຮັບໃນປີ 2012 (ໂດລາສະຫະລັດ)*** |
|---|---|
| ກະຊວງການຕ່າງປະເທດຂອງສະຫະລັດອາເມລິກາ, ຫ້ອງການຫຼຸດຜ່ອນອາວຸດຄັງແສງ ແລະ ການສູ້ຮົບ | 14,078.80 |
| ***ລວມ*** | ***14,078.80*** |

# ອົງການຊ່ວຍເຫຼືອດ້ານອົງຄະທຽມ ແລະ ເຄື່ອງຄ້ຳຊູ (ໂຄບ)

*(ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ)*

## ກິດຈະກຳໃນປີ 2012:

ໃນປີ 2012, ອົງການໂຄບ ໄດ້ສືບຕໍ່ປະຕິບັດວຽກງານຂອງຕົນໃນການປັບປຸງຊີວິດການເປັນຢູ່ຂອງຄົນເສຍອົງຄະ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ລັດຖະບານລາວໃນການບໍລິຫານຄຸ້ມຄອງສູນຟື້ນຟູໜ້າທີ່ການ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງສາທາລະນະສຸກ ເພື່ອສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງຜູ້ທີ່ເສຍອົງຄະ. ໜ້າວຽກຕົ້ນຕໍຂອງພວກເຮົາ ປະກອບມີ 3 ໜ້າວຽກການເຊື່ອມຕໍ່ຄື:

- ອົງການໂຄບ ແມ່ນຮັບຜິດຊອບຄ່າໃຊ້ຈ່າຍສຳລັບອົງຄະທຽມ ແລະ ເຄື່ອງຄ້ຳຊູ, ການຜ່າຕັດ ແລະ ການປິ່ນປົວຮັກສາ ສຳລັບຜູ້ທີ່ບໍ່ມີຄວາມສາມາດໃນການຈ່າຍໄດ້. ນອກຈາກນັ້ນ, ອົງການໂຄບ ຍັງໄດ້ສະໜອງຄ່າໃຊ້ຈ່າຍໃນການເດີນທາງໃຫ້ແກ່ຜູ້ທີ່ຈະມາປິ່ນປົວຕັ້ງແຕ່ເຮືອນຈົນຮອດສູນຟື້ນຟູ ພ້ອມທັງ ຮັບຜິດຊອບຄ່າໃຊ້ຈ່າຍປະຈຳວັນໃຫ້ແກ່ຄົນເຈັບ ແລະ ຄ່າປິ່ນປົວຮັກສາໃນເວລາທີ່ພັກຢູ່ສູນຟື້ນຟູນຳອີກດ້ວຍ. ສິ່ງດັ່ງກ່າວ ແມ່ນມີຄວາມສຳຄັນ ເນື່ອງຈາກວ່າ ຖ້າບໍ່ມີເງິນໄວ້ສຳລັບສິ່ງດັ່ງກ່າວນີ້ແລ້ວ ມັນກໍ່ເປັນສິ່ງລຳບາກ ທີ່ຈະໃຫ້ເຂົ້າເຈົ້າ ສາມາດເດີນທາງເຂົ້າມາຮັບການບໍລິການ ຫຼື ປິ່ນປົວຮັກສາໄດ້.

- ອົງການໂຄບ ດຳເນີນງານເພື່ອເພີ່ມການໂຄສະນາກ່ຽວກັບການໃຫ້ການບໍລິການສຳລັບຄົນທີ່ເສຍອົງຄະທາງຮ່າງກາຍ. ວຽກງານດັ່ງກ່າວນີ້ສຳເລັດໄດ້ ກໍ່ຍ້ອນວ່າ ໄດ້ມີການປັບປຸງການໃຫ້ການບໍລິການ ໂດຍການລົງໄປຫາຊຸມຊົນຕ່າງໆ ໂດຍກົງເລີຍ ເພື່ອໂຄສະນາເຜີຍແຜ່ໃຫ້ຮັບຮູ້ວ່າມີການບໍລິການແບບນີ້ຢູ່ທີ່ແຂວງຂອງທ່ານ ຫຼື ຢູ່ທີ່ນະຄອນຫຼວງວຽງຈັນທີ່ສູນຟື້ນຟູໜ້າທີ່ການຂອງລັດຖະບານ ເປັນທີ່ຮຽບຮ້ອຍແລ້ວ.



*ເດັກນ້ອຍຄົນນີ້ ໄດ້ຮັບການປິ່ນປົວຮັກສາພະຍາດຕີນເປ ຢູ່ທີ່ສູນສູນຟື້ນຟູໜ້າທີ່ການ, ທີ່ນະຄອນຫຼວງວຽງຈັນ.*



*ໃນເດືອນກໍລະກົດ 2012, ລັດຖະມົນຕີວ່າການກະຊວງການຕ່າງປະເທດສະຫະລັດອາເມລິກາ ທ່ານນາງ ເຮລາຣີ ຄຼິນຕັນ ໄດ້ມາຢ້ຽມຢາມສູນອົງການໂຄບ. ພະນັກງານທ່ານໜຶ່ງຂອງສູນອົງການໂຄບ ກຳລັງອະທິບາຍຫຍໍ້ກ່ຽວກັບບັນຫາ ລບຕ ຢູ່ ສປປ ລາວ. ຮູບຖ່າຍ: ສະຖານທູດສະຫະລັດອາເມລິກາ, ນະຄອນຫຼວງວຽງຈັນ.*

- ນອກຈາກນັ້ນ, ອົງການໂຄບຍັງໄດ້ນຳເອົາຜູ້ທີ່ມີປະສົບການໃນການຜະລິດອົງຄະທຽມ ແລະ ເຄື່ອງຄ້ຳຊູ, ນັກກາຍະພາບບຳບັດ ແລະ ນັກສິດສອນກ່ຽວກັບການປະກອບອາຊີບ ລົງເຮັດວຽກກັບພະນັກລັດຖະກອນ ເພື່ອສະໜອງການຝຶກອົບຮົມກ່ຽວກັບການປະກອບອາຊີບ, ການປັບປຸງທັກສະ ແລະ ຍົກລະດັບທາງດ້ານການປິ່ນປົວ. ອົງການໂຄບ ໄດ້ສະໜັບສະໜູນສູນຟື້ນຟູໜ້າທີ່ການຢູ່ທີ່ນະຄອນຫຼວງວຽງຈັນ, ຊຽງຂວາງ, ຈຳປາສັກ, ຫຼວງພະບາງ ແລະ ສະຫວັນນະເຂດ ອີກດ້ວຍ.

## ຜົນສຳເລັດຕົ້ນຕໍໃນປີ 2012:

- ໃນປີ 2012, ມີຄົນເຈັບຈຳນວນ 1,131 ຄົນ ໄດ້ເຄື່ອງຄ້ຳຊູ ແລະ ອົງຄະທຽມ ຈຳນວນ 1,190 ອັນ. ໃນຈຳນວນດັ່ງກ່າວ, ມີຄົນເຈັບຈຳນວນ 623 ຄົນ ແມ່ນໄດ້ຮັບເຄື່ອງຄ້ຳຊູທີ່ເປັນຂາທຽມ ຫຼື (52.3%), 70 ຄົນ ແມ່ນໄດ້ຮັບເຄື່ອງຄ້ຳຊູທີ່ເປັນແຂນ/ຂາທຽມ ຫຼື (5.9%) ແລະ 438 ຄົນ ແມ່ນໄດ້ຮັບອົງຄະທຽມ ຫຼື (36.8%).
- ໃນຈຳນວນດັ່ງກ່າວ, ເປັນຄົນເຈັບໃໝ່ຈຳນວນ 496 ຄົນ ຫຼື (43.8%) ແມ່ນໄດ້ແທກເພື່ອກຽມໃສ່ເຄື່ອງຄ້ຳຊູ ແລະ ອົງຄະທຽມໃໝ່, ຄົນເຈັບຈຳນວນ 635 ຄົນ ຫຼື (56.1%) ແມ່ນໄດ້ກັບມາປ່ຽນເອົາເຄື່ອງຄ້ຳຊູໂຕເກົ່າອອກ.



*ກຳລັງວັດແທກແຂນຂອງຄົນເຈັບ ເພື່ອຈະນຳໄປເຮັດແຂນທຽມ*

- ສູນຢ້ຽມຢາມຂອງອົງການໂຄບ ໄດ້ມີຄົນເຂົ້າມາຢ້ຽມຊົມເປັນຈຳນວນ 17,000 ຄົນ ໃນປີ 2012 ແລະ ໄດ້ມີການໂຄສະນາເຜີຍແຜ່ກ່ຽວກັບບັນຫາ ລບຕ ຕົກຄ້າງຢູ່ ສປປ ລາວ ແລະຄວາມສຳຄັນຂອງວຽກງານຕ່າງໆທີ່ເຮັດສຳເລັດຢູ່ໃນສູນຟື້ນຟູໜ້າທີ່ການ.
- ຜູ້ລອດຊີວິດຈາກ ລບຕ ຈຳນວນ 278 ຄົນ ໄດ້ຮັບ ຫຼື ປ່ຽນເຄື່ອງຄ້ຳຊູໂຕໃໝ່ໃນປີ 2012, ໃນນັ້ນ, 31 ຄົນ ແມ່ນເປັນຜູ້ຖືກເຄາະຮ້າຍໃໝ່ ຫຼື (11.1%) ທີ່ຫາກໍ່ໄດ້ຮັບເຄື່ອງຄ້ຳຊູເປັນຄັ້ງທຳອິດ.

## ຂ່າວດີ: ເລື່ອງເລົ່າຂອງຄົນເຈັບ - ທ້າວ ບຸນ

ພາຍຫຼັງທີ່ສູນເສຍຕາ ແລະ ມືເບື້ອງຊ້າຍໄປ ຕອນອາຍຸ 11 ປີ ຍ້ອນລະເບີດແຕກໃສ່ ແລະ ທ້າວ ບຸນ ກໍ່ໄດ້ເຂົ້າມາໃສ່ແຂນທຽມໃໝ່ ຢູ່ສູນອົງການໂຄບ.

ດຽວນີ້ ທ້າວ ບຸນ ມີອາຍຸໄດ້ 27 ປີແລ້ວ ແລະ ໄດ້ບວດເປັນຄູບາຢູ່ທີ່ເມືອງທຸລະຄົມ ແຂວງວຽງຈັນ. ພາຍຫຼັງໄດ້ຍິນຂ່າວກ່ຽວກັບອົງການໂຄບຈາກໝູ່ທີ່ອາໄສຢູ່ບ້ານດຽວກັນກັບຕົນເອງ, ຊຶ່ງໝູ່ຂອງເພິ່ນຄົນນີ້ ກໍ່ເປັນຜູ້ໜຶ່ງທີ່ໄດ້ຮັບການບໍລິການຈາກສູນອົງການໂຄບ ຈຶ່ງເຮັດໃຫ້ ຄູບາ ບຸນ ເດີນທາງເຂົ້າມາພົບກັບວິຊາການຢູ່ສູນອົງການໂຄບ ແລະ ໃນທີ່ສຸດ ລາວກໍ່ໄດ້ໃສ່ແຂນທຽມໂຕໃໝ່ ໃນວັນທີ 2 ກໍລະກົດ 2012.

ຄູບາ ບຸນ ສູນເສຍທັງແຂນ ແລະ ຕາ ເບື້ອງຊ້າຍພ້ອມກັນ ຕອນເພິ່ນອາຍຸໄດ້ 11 ປີ. ໃນຂະນະທີ່ເພິ່ນກຳລັງຫຼິ້ນຢູ່ສະຖານທີ່ພັກເຊົາເກົ່າຂອງທະຫານອາເມລິກາ ທີ່ຢູ່ໃກ້ກັບບ້ານຂອງເພິ່ນ. ເພິ່ນ ແລະ ໝູ່ອີກ 3 ຄົນ ໄດ້ຍ່າງຂ້າມລະເບີດລູກຫວ່ານ, ແຕ່ວ່າ ຄູບາ ບຸນ ແລະ ໝູ່ຂອງເພິ່ນອີກຄົນໜຶ່ງ ພັດມີຄວາມສົນໃຈຢາກຮູ້ຢາກເຫັນ ເພື່ອບາງທີ່ມັນອາດຈະສາມາດມ້າງໄດ້ ເພື່ອແກະເອົາໝື້ໄປເຮັດບັ້ງໄຟ. ພໍດີວ່າຕອນນັ້ນ ຄູບາ ບຸນ ໄດ້ຖືພ້າໄປນຳພໍດີ ກໍ່ເລີຍໃຊ້ແກະລະເບີດດັ່ງກ່າວ, ສ່ວນໝູ່ຂອງເພິ່ນກໍ່ພາກັນນັ່ງອ້ອມເບິ່ງ.

ທັນທີທັນໃດນັ້ນ, ມັນກໍ່ແຕກຂຶ້ນຄາມືຂອງເພິ່ນ. ໝູ່ຂອງເພິ່ນຜູ້ໜຶ່ງເສຍຊີວິດຄາທີ່. ສ່ວນຄູບາ ບຸນ ແລະ ໝູ່ຄົນອື່ນໆແມ່ນໄດ້ຮັບບາດເຈັບສາຫັດ. ຫຼັງຈາກນັ້ນ, ພວກເຂົາ ກໍ່ໄດ້ຖືກທະຫານສົ່ງໄປໂຮງໝໍເມືອງ, ແຕ່ວ່າບາດແຜຂອງຄູບາ ບຸນ ແມ່ນມີອາການຕິດເຊື້ອຢ່າງໜັກ ຈຶ່ງຈຳເປັນຕ້ອງໄດ້ສົ່ງຕໍ່ໄປໂຮງໝໍຢູ່ວຽງຈັນ ເພື່ອເຮັດການຕັດແຂນອອກ. ຄູບາ ບຸນ ເສຍໝູ່ໄປຄົນໜຶ່ງ, ແຂນເບື້ອງໜຶ່ງ ແລະ ຕາເບື້ອງໜຶ່ງ ຈາກອຸປະຕິເຫດ ລບຕ ໃນຄັ້ງນັ້ນ.

ຄູບາ ບຸນ ໄດ້ກາຍເປັນຄົນຂີ້ອາຍໄປເລີຍ ແລະ ເພິ່ນກໍ່ໄດ້ອອກຈາກໂຮງຮຽນ. ຄຽງຄູ່ກັນນັ້ນ, ຄອບຄົວຂອງເພິ່ນກໍ່ພັດມີຖານະທີ່ຍາກຈົນ ແລະ ບໍ່ສາມາດສົ່ງເສີມເພິ່ນໄດ້. ດັ່ງນັ້ນ, ຈຶ່ງເຮັດໃຫ້ເພິ່ນຕັດສິນໃຈໄປບວດເປັນຄູບາໃນປີ 2008. ປະຈຸບັນນີ້, ເພິ່ນກຳລັງຝຶກແອບເຄື່ອນເໜັງແຂນຂອງເພິ່ນຢູ່ ເນື່ອງຈາກວ່າ ເພິ່ນໄດ້ຮັບບໍລິຈາກໃຫ້ໃສ່ແຂນທຽມໃໝ່ ແລະ ໄດ້ກ່າວວ່າ “ປະຈຸບັນນີ້ຂ້ອຍມີແຂນຄືກັບຄົນທຳມະດາອື່ນໆແລ້ວ, ຂ້ອຍຮູ້ສຶກໝັ້ນໃຈໃນເວລາໄປຮ່ວມເຮັດກິດຈະກຳທາງສາດສະໜາຕ່າງໆ ເຖິງແມ່ນວ່າຈະຍັງເຫຼືອແຕ່ຕາຂ້າງດຽວກໍ່ຕາມ. ຂ້ອຍຂໍສະແດງຄວາມຂອບໃຈມາຍັງອົງການໂຄບ ແລະ ປະຊາຊົນຜູ້ທີ່ໃຫ້ເງິນບໍລິຈາກທັງຫຼາຍ. ແຂນທຽມດັ່ງກ່າວນີ້ ໄດ້ປ່ຽນແປງຊີວິດຂອງຂ້ອຍ”.

## ວຽກຈຸດສຸມໃນປີ 2013:

ອົງການໂຄບ ຈະສືບຕໍ່ສຸມໃສ່ປັບປຸງຄຸນນະພາບຊີວິດການເປັນຢູ່ຂອງຜູ້ເສຍອົງຄະ ໂດຍການສະໜະໜັບສະໜູນສູນຟື້ນຟູໜ້າທີ່ການຂອງລັດຖະບານລາວ ແລະ ນຳເອົາທຶນຊ່ວຍເຫຼືອຕ່າງໆເພື່ອໃຊ້ເຂົ້າໃນການດູແລປິ່ນປົວ ແລະ ການບໍລິການຕ່າງໆ.

## ຄູ່ຮ່ວມປະຕິບັດງານຕ່າງໆ:

ບັນດາຜູ້ທີ່ໄດ້ຮັບຜົນປະໂຫຍດຂອງອົງການໂຄບ ລວມມີ ຜູ້ລອດຊີວິດຈາກອຸປະຕິເຫດ ລບຕ, ອຸປະຕິເຫດຈາກທ້ອງຖະໜົນ, ຜູ້ທີ່ເປັນໂລກຂີ້ເຮື້ອນ, ໂລກໂປລີໂອ, ພະຍາດເສັ້ນເລືອດຕີບ, ພະຍາດຕີນເປ, ອຳມະພຶກ ແລະ ມີຄວາມຜິດປົກກະຕິມາແຕ່ເກີດ. ນອກຈາກນັ້ນ, ອົງການໂຄບ ຍັງໄດ້ເຮັດວຽກໂດຍກົງກັບສູນຟື້ນຟູໜ້າທີ່ການຂອງກະຊວງສາທາລະນະສຸກ ເພື່ອຝຶກອົບຮົມໃຫ້ພະນັກງານ ແລະ ສິດສອນເຕັກນິກວິຊາການໃຫ້.



*ທ້າວ ບຸນທັນ ໄດ້ຮັບການປິ່ນປົວຮັກສາພະຍາດຕີນເປ ຢູ່ສູນຟື້ນຟູໜ້າທີ່ການ, ທີ່ນະຄອນຫຼວງວຽງຈັນ.*

## ບຸກຄະລາກອນໃນປີ 2012:

| ປະຈຳຢູ່ຫ້ອງການ | | | | ປະຈຳຢູ່ຝ່າຍປະຕິບັດງານ | | | |
|---|---|---|---|---|---|---|---|
| ລາວ | | ຕ່າງປະເທດ | | ລາວ | | ຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 3 | 2 | | 1 | 6 | 2 | | 3 |
| ***Total*** | | | | | | | |

## ຕົວເລກສະຖິຕິໃນປີ 2012:

| *ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ*<br>ຈຳນວນຜູ້ທີ່ໄດ້ຮັບການຊ່ວຍເຫຼືອ | |
|---|---|
| ທາງດ້ານການເງິນ | ທາງການແພດ |
| | 278 |

## ພື້ນທີ່ການປະຕິບັດງານ:

| *ກິດຈະກຳ* | *ສະຖານທີ່ຈັດຕັ້ງປະຕິບັດກິດຈະກຳ* |
|---|---|
| ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ | ທຸກໆແຂວງທີ່ໄດ້ຮັບການສະໜັບສະໜູນຈາກກະຊວງສາທາລະນະສຸກ, ແຂວງທີ່ມີສູນພື້ນຟູໜ້າທີ່ການຂັ້ນແຂວງຄື: ແຂວງສະຫວັນນະເຂດ, ຊຽງຂວາງ, ຫຼວງພະບາງ, ຈຳປາສັກ ແລະ ສູນພື້ນຟູໜ້າທີ່ການຢູ່ນະຄອນຫຼວງວຽງຈັນ |
| ວຽກອື່ນໆ | ໂຄສະນາເຜີຍແຜ່ ໂດຍຜ່ານສູນຢັ້ງມຢາມອິງການໂຄບ-ໂຄງການໃຫ້ການບໍລິການຢູ່ນະຄອນຫຼວງວຽງຈັນ 'ໂຄບເຊື່ອມຕໍ່' ຢູ່ແຂວງຊຽງຂວາງ, ທົ່ວພັນ, ອຸດົມໄຊ, ຫຼວງນ້ຳທາ, ນະຄອນຫຼວງວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ຈຳປາສັກ, ເຊກອງ ແລະ ອັດຕະປື |

## ສະພາບການເງິນ:

**ຄ່າໃຊ້ຈ່າຍໃນປີ 2012: (ໂດລາສະຫະລັດ)**

**ຍັງບໍ່ທັນມີການໃຈ້ແຍກຄ່າໃຊ້ຈ່າຍໂດຍລະອຽດເພື່ອໃນບົດລາຍງານສະບັບນີ້**

| *ລາຍລະອຽດ* | *ຈຳນວນ (ໂດລາສະຫະລັດ)* |
|---|---|
| ***ລວມ*** | ***837,000*** |

## ການປະກອບສ່ວນຂອງຜູ້ໃຫ້ທຶນ ໃນປີ 2012 (ໂດລາສະຫະລັດ)

| *ຜູ້ໃຫ້ທຶນ* | *ເງິນທີ່ໄດ້ຮັບໃນປີ 2012 (ໂດລາສະຫະລັດ)* |
|---|---|
| ທຶນຊ່ວຍເຫຼືອຂອງສະຫະລັດອາເມລິກາ | 537,000 |
| ທຶນຊ່ວຍເຫຼືອຂອງອົດສຕຼາລີ | 200,000 |
| ຄຼີດສ໌ໂຕເຟວ ບູາຍເດັມ ມິດເຊີ້ນ | 100,000 |
| ***ລວມ*** | ***837,000*** |

# ສະມາຄົມຊ່ວຍເຫຼືອເພື່ອປັບປຸງຟື້ນຟູຄຸນະພາບຊີວິດ ໃຫ້ແກ່ຜູ້ເສຍອົງຄະ ແລະ ຜູ້ລອດຊີວິດຈາກ ລບຕ

*(ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ)*

## ກິດຈະກຳໃນປີ 2012:

ສະມາຄົມຊ່ວຍເຫຼືອເພື່ອປັບປຸງຄຸນນະພາບຊີວິດໃຫ້ແກ່ຜູ້ເສຍອົງຄະ ແລະຜູ້ລອດຊີວິດຈາກລບຕ ແມ່ນສະມາຄົມທີ່ເຮັດວຽກໂດຍບໍ່ຫວັງຜົນກຳໄລ, ສ້າງຕັ້ງຂຶ້ນໃນເດືອນກັນຍາ 2011 ຢູ່ແຂວງຊຽງຂວາງ. ເປົ້າໝາຍຂອງວຽກງານແມ່ນເພື່ອສະໜອງການບໍລິການໃຫ້ແກ່ຜູ້ລອດຊີວິດຈາກ ລບຕ, ຜູ້ທີ່ເສຍອົງຄະ ແລະ ສະໜອງຂໍ້ມູນຂ່າວສານຕ່າງໆໃຫ້ແກ່ສາທາລະນະກ່ຽວກັບການບໍລິການເພື່ອປັບປຸງຄຸນນະພາບຊີວິດໃຫ້ແກ່ບັນດາຜູ້ລອດຊີວິດຈາກ ລບຕ ແລະ ຄົນເສຍອົງຄະ.

ການບໍລິການແບບໂດຍກົງ ປະກອບມີການສະໜອງການຊ່ວຍເຫຼືອທາງດ້ານການປິ່ນປົວຮັກສາໃຫ້ແກ່ບັນດາຜູ້ລອດຊີວິດຈາກ ລບຕ ແລະ ສະໜອງການຝຶກອົບຮົມເພື່ອປັບປຸງຊີວິດການເປັນຢູ່ເພື່ອສ້າງລາຍໄດ້ໃຫ້ແກ່ຄອບຄົວ. ສູນໃຫ້ຂໍ້ມູນຂ່າວສານກ່ຽວກັບຜູ້ລອດຊີວິດຈາກ ລບຕ ແມ່ນສ້າງຕັ້ງຂຶ້ນຢູ່ເມືອງໂພນສະຫວັນ ແຂວງຊຽງຂວາງ ເພື່ອສະໜອງຂໍ້ມູນຂ່າວສານກ່ຽວກັບຜົນກະທົບຈາກ ລບຕ ແລະ ຂໍ້ມູນຂ່າວສານກ່ຽວກັບການເຄື່ອນໄຫວກິດຈະກຳຕ່າງໆຂອງຜູ້ລອດຊີວິດຈາກ ລບຕ. ນອກຈາກນັ້ນ, ສະມາຄົມເພື່ອປັບປຸງຄຸນນະພາບຊີວິດໃຫ້ແກ່ຜູ້ເສຍອົງຄະ ແລະ ຜູ້ລອດຊີວິດຈາກ ລບຕ ຍັງໄດ້ດຳເນີນການສ້າງ "ຮ້ານຄ້າຢູ່ບ້ານ", ຊຶ່ງຈະເປັນບ່ອນທີ່ຜະລິດເຄື່ອງຫັດຖະກຳທີ່ຜະລິດຂຶ້ນໂດຍຜູ້ທີ່ໄດ້ຮັບຜົນກະທົບຈາກ ລບຕ ນຳເອົາມາຂາຍຢູ່ທີ່ນັ້ນ.

**ໃນປີ 2012, ບັນດາກິດຈະກຳຕົ້ນຕໍທີ່ໄດ້ຈັດຕັ້ງປະຕິບັດປະກອບມີຄື:**

- ການປັບປຸງສູນໃຫ້ຂໍ້ມູນຂ່າວສານກ່ຽວກັບຜູ້ລອດຊີວິດຈາກ ລບຕ ແລະ "ຮ້ານຄ້າຢູ່ບ້ານ":
    - ສ້ອມແປງຮູບຮ່າງໜ້າຕາຂອງສູນຄືນໃໝ່ ລວມມີ ການວາງສະແດງໃໝ່ ແລະ ຫ້ອງສາຍຮູບເງົາ
    - ສ້າງ "ຮ້ານຄ້າຢູ່ບ້ານ" ເພື່ອຂາຍສິນຄ້າຫັດຖະກຳທີ່ເຮັດໂດຍຜູ້ລອດຊີວິດຈາກ ລບຕ ແລະ ຜູ້ເສຍອົງຄະ
    - ໄດ້ຮັບສະໝັກພະນັກງານໃໝ່ ແລະ ອາສາສະໝັກປະຈຳຢູ່ສູນ
    - ໄດ້ຈັດການເປີດຕົວສູນໃຫ້ຂໍ້ມູນຂ່າວສານກ່ຽວກັບຜູ້ລອດຊີວິດຈາກ ລບຕ ຄືນໃໝ່ໃນເດືອນມີນາ 2012
- 'ແຜນງານປັບປຸງຊີວິດການເປັນຢູ່ຂອງຜູ້ລອດຊີວິດຈາກ ລບຕ ແລະ ຜູ້ເສຍອົງຄະ' ໄດ້ຖືກຈັດຕັ້ງປະຕິບັດຂຶ້ນຢູ່ໃນບ້ານທີ່ໄດ້ຮັບຜົນກະທົບຈາກ ລບຕ ຮ່ວມກັບຜູ້ລອດຊີວິດຈາກ ລບຕ ແລະ ຜູ້ເສຍອົງຄະຄື:
    - ການຝຶກອົບຮົມກ່ຽວກັບຫັດຖະກຳຢູ່ໃນ 10 ບ້ານ ໂດຍປະກອບມີ ທັກສະໃນການຕ່ຳຫູກຢູ່ໃນ 3 ບ້ານ ແລະ ການເຮັດສິ່ງຂອງເຊັ່ນ ກະເປົາຫິ້ວ, ກະເປົາໃສ່ຄອມພິວເຕີ້ແລັບທ໋ອບ ແລະ ໃສ່ໂທລະສັບມືຖື ຢູ່ໃນ 7 ບ້ານ. ນອກຈາກນັ້ນ, ກໍ່ຍັງມີການຝຶກກ່ຽວກັບການຍ້ອມໄໝດ້ວຍສີທຳມະຊາດໃຫ້ແກ່ປະຊາຊົນຈຳນວນ 45 ຄົນ ແລະ ການຝຶກອົບຮົມກ່ຽວກັບຫັດຖະກຳໃຫ້ແກ່ແມ່ຍິງຈຳນວນ 90 ຄົນ ຢູ່ທີ່ແຂວງຊຽງຂວາງ



*ການຝຶກອົບຮົມກ່ຽວກັບຄວາມຮູ້ທາງການເງິນ ໃນລະຫວ່າງຊ່ວງກອງປະຊຸມຄູຮ່ວມງານຂອງສະມາຄົມຊ່ວຍເຫຼືອເພື່ອປັບປຸງຄຸນນະພາບຊີວິດໃຫ້ແກ່ຜູ້ເສຍອົງຄະ ແລະ ຜູ້ລອດຊີວິດຈາກ ລບຕ*

    - ການລ້ຽງສັດ/ການຝຶກອົບຮົມກ່ຽວກັບທັກສະດ້ານສັດຕະວະແພດ ໃຫ້ແກ່ປະຊາຊົນຈຳນວນ 30 ຄົນ
    - ນອກຈາກການຝຶກອົບຮົມ 2 ຢ່າງຂ້າງເທິງນັ້ນ, ຍັງມີການສິດສອນກ່ຽວກັບຮູບແບບການວາງແຜນເສດຖະກິດ, ມີການເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບສິດທິຂອງຄົນພິການ ແລະ ການຈັດຕັ້ງຂອງກຸ່ມການຜະລິດ ອີກດ້ວຍ
- ການລະດົມຂົນຂວາຍທຶນຊ່ວຍເຫຼືອ ແລະ ສະໜອງທຶນການຊ່ວຍເຫຼືອເຂົ້າໃນກອງທຶນຊ່ວຍເຫຼືອຜູ້ຖືກເຄາະຮ້າຍໃນສະໄໝສົງຄາມ (ໂດຍການປະສານງານກັບອົງການເວີອິດູເຄເຊິ້ນ):
    - ສະມາຄົມຊ່ວຍເຫຼືອເພື່ອປັບປຸງຄຸນນະພາບຊີວິດໃຫ້ແກ່ຜູ້ເສຍອົງຄະ ແລະ ຜູ້ລອດຊີວິດຈາກ ລບຕ ໄດ້ຮັບເງິນບໍລິຈາກໆສູນຢູ່ມູຢາມ ແລະ ສາມາດສະໜອງທຶນການປິ່ນປົວຮັກສາໃຫ້ແກ່ປະຊາຊົນຈຳນວນ 13 ຄົນ ຢູ່ແຂວງຊຽງຂວາງ ລວມມູນຄ່າທັງໝົດ 4,574 ໂດລາສະຫະລັດ

## ຜົນສຳເລັດຕົ້ນຕໍໃນປີ 2012:

ໃນເບື້ອງຕົ້ນ, ອົງການເວີອິດູເຄເຊິ້ນ ໄດ້ສະໜອງການບໍລິຫານຄຸ້ມຄອງແລະຊີ້ນຳ; ເຖິງຢ່າງໃດກໍ່ຕາມ, ຕະຫຼອດໄລຍະເວລາ 1 ປີຜ່ານມາ ມັນກໍ່ໄດ້ເຮັດໃຫ້ສະມາຄົມຊ່ວຍເຫຼືອເພື່ອປັບປຸງຄຸນນະພາບຊີວິດໃຫ້ແກ່ຜູ້ເສຍອົງຄະ ແລະ ຜູ້ລອດຊີວິດຈາກ ລບຕ

ໄດ້ກາຍມາເປັນອົງການທີ່ບໍ່ຫວັງຜົນກຳໄລຂອງລາວແບບເປັນເອກະລາດ. ສະມາຄົມຊ່ວຍເຫຼືອເພື່ອປັບປຸງຄຸນນະພາບຊີວິດໃຫ້ແກ່ຜູ້ເສຍອົງຄະ ແລະ ຜູ້ລອດຊີວິດຈາກ ລບຕ ໄດ້ສືບຕໍ່ປັບປຸງທັກສະໃນການບໍລິຫານຄຸ້ມຄອງທີ່ຈຳເປັນ ເພື່ອໃຊ້ເຂົ້າໃນການວາງແຜນ ແລະການຈັດກິດຈະກຳຕ່າງໆໃຫ້ມີປະສິດທິຜົນ.

ປະຈຸບັນນີ້, ສະມາຄົມຊ່ວຍເຫຼືອເພື່ອປັບປຸງຄຸນນະພາບຊີວິດໃຫ້ແກ່ຜູ້ເສຍອົງຄະແລະຜູ້ລອດຊີວິດຈາກ ລບຕ ມີສະມາຊິກທີ່ເປັນຜູ້ເສຍອົງຄະ ແລະ ຜູ້ລອດຊີວິດຈາກ ລບຕ ທັງໝົດ 20 ຄົນ ແລະ ມີກອງປະຊຸມພົບປະກັນທຸກໆສອງປີ. ເນື້ອໃນຂອງກອງປະຊຸມແມ່ນແຈ້ງຂໍ້ມູນຂ່າວສານກ່ຽວກັບການຈັດກິດຈະກຳ ແລະ ການຝຶກອົບຮົມຕ່າງໆຂອງສະມາຄົມຊ່ວຍເຫຼືອເພື່ອປັບປຸງຄຸນນະພາບຊີວິດໃຫ້ແກ່ຜູ້ເສຍອົງຄະ ແລະຜູ້ລອດຊີວິດຈາກລບຕ ເພື່ອນຳຜົນປະໂຫຍດຕ່າງໆມາໃຫ້ແກ່ເຂົາເຈົ້າ, ຊຶ່ງບັນດາຜູ້ທີ່ໄດ້ເຂົ້າຮ່ວມກິດຈະກຳກ່ຽວກັບການປັບປຸງຊີວິດ ສ່ວນຫຼາຍກໍ່ແມ່ນການຝຶກອົບຮົມທີ່ຈັດຂຶ້ນໂດຍສະມາຄົມຊ່ວຍເຫຼືອເພື່ອປັບປຸງຄຸນນະພາບຊີວິດໃຫ້ແກ່ຜູ້ເສຍອົງຄະ ແລະ ຜູ້ລອດຊີວິດຈາກ ລບຕ. ກອງປະຊຸມທີ່ຈັດຂຶ້ນໃນເດືອນມິຖຸນາ 2012 ປະກອບມີ ການຝຶກອົບຮົມກ່ຽວກັບຄວາມຮູ້ທາງການເງິນ ອັນທີ່ຊ່ວຍໃຫ້ສະມາຊິກ ສາມາດບໍລິຫານທຸລະກິດຂະໜາດນ້ອຍກ່ຽວກັບຫັດຖະກຳ ແລະ ການລ້ຽງສັດ ໄດ້ດີຂຶ້ນກວ່າເກົ່າ

ສະມາຄົມຊ່ວຍເຫຼືອເພື່ອປັບປຸງຄຸນນະພາບຊີວິດໃຫ້ແກ່ຜູ້ເສຍອົງຄະ ແລະ ຜູ້ລອດຊີວິດຈາກ ລບຕ ໄດ້ບໍລິຫານຄຸ້ມຄອງສູນໃຫ້ຂໍ້ມູນຂ່າວສານກ່ຽວກັບຜູ້ລອດຊີວິດຈາກ ລບຕ ແລະ ໄດ້ສະໜອງຂໍ້ມູນຂ່າວສານດັ່ງກ່າວໃຫ້ແກ່ຜູ້ເຂົ້າມາຢ້ຽມຢາມຫຼາຍກວ່າ 5000 ຄົນ ໃນລະຫວ່າງປີ 2012. ນອກຈາກນັ້ນ, ຍັງໄດ້ສະໜອງຂໍ້ມູນຂ່າວສານກ່ຽວກັບຄວາມສຳຄັນຂອງການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ຊີວິດທີ່ປ່ຽນແປງໄປຢ່າງສິ້ນເຊີງ ທີ່ໄດ້ສົ່ງຜົນກະທົບຕໍ່ການດຳລົງຊີວິດຂອງຜູ້ເສຍອົງຄະ ແລະ ຜູ້ລອດຊີວິດຈາກ ລບຕ. ນອກຈາກນັ້ນ, ສູນໃຫ້ຂໍ້ມູນຂ່າວສານກ່ຽວກັບຜູ້ລອດຊີວິດຈາກ ລບຕ ຍັງໄດ້ລວບລວມທຶນຊ່ວຍເຫຼືອທີ່ໄດ້ຈາກເງິນບໍລິຈາກ ແລະ ເງິນທີ່ໄດ້ຈາກການຂາຍເຄື່ອງຫັດຖະກຳທີ່ເຮັດຂຶ້ນໂດຍຊຸມຊົນທີ່ໄດ້ຮັບຜົນກະທົບ ເພື່ອນຳໃຊ້ເຂົ້າໃນການສະໜອງການບໍລິການ, ຊຶ່ງເງິນຈຳນວນດັ່ງກ່າວນັ້ນ, ເຮັດໃຫ້ສະມາຄົມຊ່ວຍເຫຼືອເພື່ອປັບປຸງຄຸນນະພາບຊີວິດໃຫ້ແກ່ຜູ້ເສຍອົງຄະ ແລະ ຜູ້ລອດຊີວິດຈາກ ລບຕ ສາມາດສະໜອງທຶນການດູແລປິ່ນປົວໃຫ້ແກ່ຜູ້ລອດຊີວິດຈາກ ລບຕ ໄດ້ຈຳນວນ 13 ຄົນ ໃນປີ 2012.



*ທ້າວ ຈິງລີ, ໄດ້ຮັບບາດເຈັບຈາກອຸບັດຕິເຫດ ລບຕ ໃນປີ 2012, ໄດ້ເຂົ້າຮ່ວມການຝຶກອົບຮົມ ທີ່ຈັດຂຶ້ນໂດຍສະມາຄົມປັບປຸງຄຸນນະພາບຊີວິດ ໃນເດືອນພະຈິກ ແລະ ໄດ້ຊ່ວຍຄອບຄົວຂອງລາວໃຫ້ສາມາດລ້ຽງໝູໄດ້.*

## ຂ່າວດີ: ການປັບປຸງຊ່ອງທາງ ເພື່ອອານາຄົດທີ່ສົດໃສ

ທ້າວ ຈິງລີ ອາຍຸ 20 ປີ, ອາໄສຢູ່ເມືອງຄູນ, ໄດ້ຮັບບາດເຈັບຈາກອຸປະຕິເຫດ ລບຕ ໃນເວລາທີ່ລາວກຳລັງຈູດຂີ້ເຫຍື້ອ ພາຍຫຼັງອານາໄມເດີ່ນບ້ານອ້ອມແອ້ມເຮືອນແລ້ວ. ບ່ອນທີ່ຈູດຂີ້ເຫຍື້ອນັ້ນແມ່ນມີ ລບຕ ຝັງຢູ່ພື້ນດິນ ແລະ ເມື່ອກະທົບກັບຄວາມຮ້ອນເຮັດໃຫ້ມັນແຕກກະຈາຍຂຶ້ນ ສົ່ງຜົນເຮັດໃຫ້ໃບໜ້າຂອງລາວໄດ້ຮັບບາດເຈັບ, ຕາເບື້ອງໜຶ່ງບອດ ແລະ ມີຮອຍແຜຢູ່ຕາມໃບໜ້າ.

ຫຼັງຈາກນັ້ນ, ກໍ່ເຮັດໃຫ້ທ້າວ ຈິງລີ ລາອອກຈາກໂຮງຮຽນ ແລະລາວກໍ່ມີຄວາມຮູ້ສຶກໂສກເສົ້າເສຍໃຈຫຼາຍ. ລາວຢາກກັບໄປຮຽນອີກເທື່ອໜຶ່ງໃນອານາຄົດ, ແຕ່ວ່າ ລາວຄືຊິຮຽນໜັງສືບໍ່ໄດ້ຄືເກົ່າແລ້ວ. ໝູ່ຂອງລາວ ບໍ່ເຄີຍມາຢ້ຽມລາວຈັກເທື່ອພາຍຫຼັງເກີດອຸປະຕິເຫດ ແລະ ກໍ່ບໍ່ຊວນລາວໄປຫຼິ້ນຢູ່ເຮືອນ ຫຼື ໄປຫຼິ້ນຢູ່ຕາມບ້ານຄືແຕ່ກ່ອນ.

ໃນເດືອນຕຸລາ, ສະມາຄົມຊ່ວຍເຫຼືອເພື່ອປັບປຸງຄຸນນະພາບຊີວິດໃຫ້ແກ່ຜູ້ເສຍອົງຄະ ແລະ ຜູ້ລອດຊີວິດຈາກ ລບຕ ໄດ້ລົງໄປຢ້ຽມຢາມລາວ ເພື່ອໂອ້ລົມກ່ຽວກັບຊີວິດຂອງລາວໃນປະຈຸບັນນີ້ ແລະ ແນວຄວາມຄິດຂອງລາວໃນການວາງແຜນຊີວິດໃນອານາຄົດ. ຈິງລີ ກ່າວວ່າ ຕົນຢາກຮຽນໜັງສືໃຫ້ຈົບຊັ້ນມັດທະຍົມຕອນປາຍ ແລະ ຮຽນຕໍ່ວິທະຍາໄລໃນສາຂາການບັນຊີ ແລະ ການເງິນ. ໃນທ້າຍເດືອນພະຈິກ, ພະນັກງານຈາກສະມາຄົມຊ່ວຍເຫຼືອເພື່ອປັບປຸງຄຸນນະພາບຊີວິດໃຫ້ແກ່ຜູ້ເສຍອົງຄະ ແລະ ຜູ້ລອດຊີວິດຈາກ ລບຕ ໄດ້ຈັດການຝຶກອົບຮົມກ່ຽວກັບທັກສະໃນການລ້ຽງສັດ/ສັດຕະວະແພດ ຂຶ້ນທີ່ບ້ານພູຊານ, ເມືອງແປກ. ຈິງລີ ກໍ່ໄດ້ມີໂອກາດເຂົ້າຮ່ວມການຝຶກອົບຮົມດັ່ງກ່າວ ແລະ ໄດ້ໄປພັກຢູ່ກັບພີ່ນ້ອງຂອງຕົນຢູ່ບ້ານດັ່ງກ່າວ. ຫຼັງຈາກການຝຶກອົບຮົມ, ລາວກໍ່ໄດ້ຮັບທຶນຊ່ວຍເຫຼືອ ຈຳນວນ 80 ໂດລາສະຫະລັດ ເພື່ອນຳໄປຊື້ຢາວັກແຊັງກັນພະຍາດສັດ, ປຸກຄອກໝູ, ແລະ ຊື້ໝູຈຳນວນໜຶ່ງ. ພ້ອມດຽວນັ້ນ, ຄອບຄົວຂອງລາວ ກໍ່ໄດ້ອອກເງິນຊື້ໝູໃຫ້ຕື່ມອີກ 2 ໂຕ ຊ່ວຍລາວ ຍ້ອນເຫັນວ່າ ຈິງລີ ມີຄວາມຕັ້ງໃຈລ້ຽງດູໄດ້ເປັນຢ່າງດີ.

ປະຈຸບັນນີ້, ຈິງລີ ຮູ້ສຶກດີກັບຊີວິດຂອງຕົນຫຼາຍຂຶ້ນ. ການຝຶກອົບຮົມກ່ຽວກັບການລ້ຽງສັດ ສາມາດຊ່ວຍໃຫ້ລາວມີຄວາມຮູ້

ສຶກວ່າ ລາວສາມາດປະກອບສ່ວນເຂົ້າໃນການສ້າງລາຍໄດ້ໃຫ້ແກ່ຄອບຄົວ ແລະ ລາວກໍ່ສາມາດຮຽນຮູ້ນຳໃຊ້ອຸປະກອນໃນການລ້ຽງສັດຫຼາຍຢ່າງເພີ່ມຂຶ້ນ. ສະມາຄົມຊ່ວຍເຫຼືອເພື່ອປັບປຸງຄຸນນະພາບຊີວິດໃຫ້ແກ່ຜູ້ເສຍອົງຄະ ແລະ ຜູ້ລອດຊີວິດຈາກ ລບຕ ຈະສືບຕໍ່ເຮັດວຽກຮ່ວມກັບລາວ ເພື່ອປັບປຸງຊ່ອງທາງອື່ນໆເພີ່ມເຕີມອີກໃນອານາຄົດ.

## ວຽກຈຸດສຸມໃນປີ 2013:

ສະມາຄົມປັບປຸງຄຸນນະພາບຊີວິດ ວາງແຜນຈະສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ອຳນວຍການ ແລະ ສະມາຊິກຢູ່ໃນສະມາຄົມປັບປຸງຄຸນນະພາບຊີວິດ, ໂດຍສະເພາະແມ່ນເພື່ອຂະຫຍາຍສະມາຊິກຈາກ 22 ຄົນ ໃຫ້ກວມເອົາບັນດາກຸ່ມຜູ້ຜະລິດເຂົ້ານຳ. ສິ່ງດັ່ງກາວ ຈະລວມທັງການປັບປຸງຄວາມອາດສາມາດ ແລະ ອຳນວຍການ ກໍ່ຈະສາມາດຮຽນຮູ້ກ່ຽວກັບການເປັນຜູ້ນຳໄດ້ຢ່າງມີປະສິດທິຜົນ.

ນອກຈາກນັ້ນ, ສະມາຄົມປັບປຸງຄຸນນະພາບຊີວິດ ຍັງຈະຂະຫຍາຍພະນັກງານ ແລະ ວຽກງານຂັ້ນຕື່ມ ເພື່ອປັບປຸງການຄຸ້ມຄອງບໍລິຫານບັນດາສະມາຄົມທີ່ບໍ່ຫວັງຜົນກຳໄລຕ່າງໆຂອງລາວ. ພະນັກງານໃໝ່ນີ້ ຈະເລີ່ມຕົ້ນເຮັດວຽກໃນປີ 2013 ເພື່ອປັບປຸງການຄຸ້ມຄອງບໍລິຫານຂອງສະມາຄົມປັບປຸງຄຸນນະພາບຊີວິດກ່ຽວກັບການເຮັດ “ຮ້ານຄ້າຢູ່ບ້ານ” ແລະ ການຄຸ້ມຄອງບໍລິຫານທົ່ວໄປບັນດາສະມາຄົມທີ່ບໍ່ຫວັງຜົນກຳໄລຕ່າງໆຂອງລາວ.

ໃນປີ 2013, ສະມາຄົມປັບປຸງຄຸນນະພາບຊີວິດ ຈະສືບຕໍ່ປັບປຸງໂດຍຝຶກອົບຮົມຢູ່ຂັ້ນບ້ານເປັນພື້ນຖານ ເພື່ອປັບປຸງຊີວິດການເປັນຢູ່ຂອງຜູ້ລອດຊີວິດຈາກ ລບຕ ໂດຍຜ່ານກິດຈະກຳຕ່າງໆຢູ່ໃນການຝຶກອົບຮົມ ລວມທັງ ການຝຶກອົບຮົມໄລຍະສັ້ນຢູ່ໃນບ້ານ ເພື່ອປັບປຸງການຄຸ້ມຄອງບໍລິຫານກຸ່ມຜູ້ຜະລິດ. ນອກຈາກນັ້ນ, ສະມາຄົມປັບປຸງຄຸນນະພາບຊີວິດ ຍັງຈະປັບປຸງຕ່ອງໂສ້ວິທີການສະໜອງ ແລະ ການວາງແຜນ. ຫຼັງຈາກນັ້ນ, ກຸ່ມຜູ້ຜະລິດກໍ່ຈະສາມາດສະໜອງໄດ້ຕາມຄວາມຕ້ອງການເພື່ອຮັກສາສະມາຄົມປັບປຸງຄຸນນະພາບຊີວິດໃຫ້ຄົງຢູ່ໄດ້ຕໍ່ໄປ ໂດຍການເຮັດ “ຮ້ານຄ້າຢູ່ບ້ານ” ເພື່ອຂາຍສິນຄ້າຈາກກຸ່ມຜູ້ຜະລິດຢູ່ໃນບ້ານນັ້ນໆ.

## ຄູ່ຮ່ວມປະຕິບັດງານຕ່າງໆ:

ຜູ້ທີ່ໄດ້ຮັບຜົນປະໂຫຍດຕົ້ນຕໍຈາກສະມາຄົມປັບປຸງຄຸນນະພາບຊີວິດໃນປີ 2012 ແມ່ນບັນດາຜູ້ລອດຊີວິດຈາກ ລບຕ ແລະ ຜູ້ທີ່ເສຍອົງຄະຕ່າງໆ ຢູ່ແຂວງຊຽງຂວາງ.



ຮູບຂ້າງເທິງ: ສະມາຄົມປັບປຸງຄຸນນະພາບຊີວິດ ໄດ້ຈັດການຝຶກອົບຮົມຂຶ້ນກ່ຽວກັບການເຮັດກະເປົາໃສ່ຄອມພິວເຕີ້ແລບທ໋ອບຢູ່ທີ່ບ້ານດົງແດນ, ຊຶ່ງເປັນບ້ານທີ່ມີຜູ້ລອດຊີວິດຈາກ ລບຕ ອາໄສຢູ່ຫຼາຍ.



ການຝຶກອົບຮົມກ່ຽວກັບການເງິນໃນຊ່ວງໄລຍະກອງປະຊຸມຄູ່ຮ່ວມງານຂອງສະມາຄົມປັບປຸງຄຸນນະພາບຊີວິດໃນເດືອນ ມິຖຸນາ 2012.



ນາງ ບຸນມີ ຢູ່ສູນຫັດຖະກຳເມືອງຄຳ, ກຳລັງໃຫ້ຄຳຄິດຄຳເຫັນກ່ຽວກັບຄຸນນະພາບຂອງການຕຳຫູກແຜ່ຜືນນີ້ຢູ່ໃນລະຫວ່າງການຝຶກອົບຮົບກ່ຽວກັບການເຮັດຫັດຖະກຳຢູ່ທີ່ບ້ານຍອນທອງ, ຊຶ່ງເປັນບ້ານທີ່ມີຜູ້ລອດຊີວິດຈາກ ລບຕ ແລະ ຄົນເສຍອົງຄະ ອາໄສຢູ່ຫຼາຍ.



ຮູບຂ້າງເທິງ: ການຝຶກອົບຮົມກ່ຽວກັບຫັດຖະກຳ ຈັດຂຶ້ນໂດຍສະມາຄົມປັບປຸງຄຸນນະພາບຊີວິດ ຢູ່ທີ່ບ້ານໄຫຫີນ.



ຮູບຂ້າງເທິງ: ນາງ ນວນ ທຳມະວົງ, ເມຍຂອງທ້າວລາດຸອນ, ຊຶ່ງນາງເອງກໍ່ເປັນຜູ້ທີ່ລອດຊີວິດຈາກ ລບຕ ໄດ້ມີໂອກາດເຂົ້າຮ່ວມການຝຶກອົບຮົມກ່ຽວກັບການຕຳຫູກ ຢູ່ທີ່ບ້ານຍອນທອງ.




ຮູບຂ້າງເທິງ: ທ້າວ ທຸມມີ ສີລຳພັນ ກຳລັງໃຫ້ຂໍ້ມູນ ແລະ ອະທິບາຍກ່ຽວກັບການວາງສະແດງຕ່າງໆຢູ່ໃນສູນໃຫ້ຂໍ້ມູນຂ່າວສານກ່ຽວກັບຜູ້ລອດຊີວິດຈາກ ລບຕ.

## ບຸກຄະລາກອນໃນປີ 2012:

| ປະຈຳຢູ່ຫ້ອງການ | | | | ປະຈຳຢູ່ຝ່າຍປະຕິບັດງານ | | | |
|---|---|---|---|---|---|---|---|
| ລາວ | | ຕ່າງປະເທດ | | ລາວ | | ຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| | | | | 2 | 1.2 | | |
| *ລວມ* | | | | | | | |

*ອົງການເວີອິດູເຄເຊີ້ນ ຍັງສືບຕໍ່ໃຫ້ການສະໜັບສະໜູນກ່ຽວກັບການຄຸ້ມຄອງບໍລິຫານທາງດ້ານວິຊາການ

## ຕົວເລກສະຖິຕິໃນປີ 2012:

| ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ, ຈຳນວນຜູ້ທີ່ໄດ້ຮັບການຊ່ວຍເຫຼືອ | |
|---|---|
| ການຝຶກອົບຮົມ | ປິ່ນປົວທາງການແພດ |
| 135 ຄົນ ຢູ່ໃນ 10 ບ້ານ** | ຜູ້ຖືກເຄາະຮ້າຍຈາກ ລບຕ** ຈຳນວນ 13 ຄົນ ໄດ້ຮັບທຶນຊ່ວຍເຫຼືອປິ່ນປົວຮັກສາໂດຍຜ່ານກອງທຶນປິ່ນປົວຜູ້ຖືກເຄາະຮ້າຍໃນສະໄໝສົງຄາມ |

**ຕົວເລກດັ່ງກ່າວແມ່ນລວມຢູ່ໃນລາຍງານຂອງອົງການເວີອິດູເຄເຊີ້ນນຳ.

## ພື້ນທີ່ການປະຕິບັດງານ:

| *ກິດຈະກຳ* | *ສະຖານທີ່ຈັດຕັ້ງປະຕິບັດກິດຈະກຳ* |
|---|---|
| ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ | ທຸກໆເມືອງຢູ່ແຂວງຊຽງຂວາງ |

## ສະພາບການເງິນ:

### ຄ່າໃຊ້ຈ່າຍໃນປີ 2012: (ໂດລາສະຫະລັດ)

### *ຍັງບໍ່ທັນມີການໃຈ້ແຍກຄ່າໃຊ້ຈ່າຍໂດຍລະອຽດເພື່ອໃນບົດລາຍງານສະບັບນີ້

| *ລາຍລະອຽດ* | *ຈຳນວນ (ໂດລາສະຫະລັດ)* |
|---|---|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | ບໍ່ສາມາດໃຫ້ລາຍລະອຽດໄດ້ |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | 11,862 |
| ທຶນຊ່ວຍເຫຼືອໃນການປິ່ນປົວຮັກສາສຳລັບຜູ້ລອດຊີວິດຈາກ ລບຕ ຈໍນວນ 13 ຄົນ | 4,574 |
| ***ລວມ*** | ***16,436*** |

## ການປະກອບສ່ວນຂອງຜູ້ໃຫ້ທຶນ ໃນປີ 2012 (ໂດລາສະຫະລັດ)

| *ຜູ້ໃຫ້ທຶນ* | *ເງິນທີ່ໄດ້ຮັບໃນປີ 2012 (ໂດລາສະຫະລັດ)* |
|---|---|
| ອົງການເນູດພໍເດີເອີ ກ່ຽວກັບການລ້ຽງສັດ ແລະ ການພັດທະນາບຸກຄະລາກອນຢູ່ໃນສະມາຄົມປັບປຸງຄຸນນະພາບຊີວິດ | 5,768 |
| ສະຖາບັນແຊມຣານາ ກ່ຽວກັບການພັດທະນາການເຮັດຫັດຖະກຳ | 5,420 |
| ອົງການເອເອອາ ສຳລັບການພັດທະນາກ່ຽວກັບການເຮັດຫັດຖະກຳ | 3,942 |
| ກອງທຶນພັດທະນາສັງຄົມຂອງສະຖານທູດຝຼັ່ງ (ແຕ່ເດືອນພະຈິກ 2012 ເຖິງ ຕຸລາ 2014) | 64,525 |
| ***ລວມ*** | ***79,655*** |

# ອົງການສຶກສາໂລກ (ເວີອິດູເຄຊັ້ນ)

*(ວຽກງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ)*

## ກິດຈະກຳໃນປີ 2012:

### ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ຜູ້ລອດຊີວິດຈາກ ລບຕ: ແບບສຸກເສີນ/ ການສືບຕໍ່ປິ່ນປົວທາງການແພດ

- ອົງການເວີອິດູເຄຊັ້ນ ໄດ້ເຮັດວຽກຮ່ວມກັບລັດຖະບານລາວ ເພື່ອປັບປຸງທັກສະໃຫ້ແກ່ຜູ້ທີ່ຈະເປັນພະນັກງານທາງດ້ານການຮັກສາສຸຂະພາບ. ຢູ່ແຂວງເຊກອງ, ປະຊາຊົນຈຳນວນ 172 ຄົນ ໄດ້ເຂົ້າຮ່ວມກິດຈະກຳຕ່າງໆ, ເຂົ້າຮ່ວມກອງປະຊຸມກ່ຽວກັບການບໍລິຫານໂຄງການ, ການຝຶກອົບຮົມກ່ຽວກັບການປິ່ນປົວແບບສຸກເສີນຢູ່ຂັ້ນແຂວງ ແລະ ເມືອງ ແລະ ການຝຶກອົບຮົມໃຫ້ພະນັກງານສຸກສາລາຂັ້ນເມືອງ ແລະ ອາສາສະໝັກສຸກສາລາຂັ້ນບ້ານກ່ຽວກັບການປະຖົມພະຍາບານຂັ້ນເບື້ອງຕົ້ນ.ຢູ່ແຂວງຊຽງຂວາງ, ປະຊາຊົນຈຳນວນ 202 ຄົນ ກໍ່ໄດ້ເຂົ້າຮ່ວມກິດຈະກຳແບບນີ້ເຊັ່ນດຽວກັນ. ນອກຈາກນັ້ນ, ພະນັກງານຈຳນວນ 44 ຄົນ ກໍ່ຍັງໄດ້ເຂົ້າຮ່ວມກິດຈະກຳໃນການການຝຶກອົບຮົມໃຫ້ແກ່ຄູຝຶກອີກດ້ວຍ.
- ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍໃນສະໄໝສົງຄາມ ໄດ້ສະໜອງທຶນສະໜັບສະໜູນໂດຍກົງໃນການດູແລປິ່ນປົວສຳລັບຜູ້ລອດຊີວິດຈາກ ລບຕ ຢູ່ໃນ 7 ແຂວງ. ຜູ້ລອດຊີວິດໃໝ່ຈາກ ລບຕ ຈຳນວນ 30 ຄົນ ຢູ່ແຂວງຊຽງຂວາງ ແລະ 2 ຄົນຢູ່ແຂວງເຊກອງ ໄດ້ຮັບທຶນຊ່ວຍເຫຼືອໃນການຮັກສາປິ່ນປົວຂັ້ນພື້ນຖານ. ຜູ້ລອດຊີວິດໃໝ່ຈາກ ລບຕ ຈຳນວນ 16 ຄົນ ໄດ້ຮັບການຊ່ວຍເຫຼືອໃນການສືບຕໍ່ດູແລປິ່ນປົວທາງການແພດ.
- ອົງການເວີອິດູເຄຊັ້ນ ໄດ້ເຮັດວຽກຮ່ວມກັບສູນຟື້ນຟູໜ້າທີ່ການ ເພື່ອຂະຫຍາຍວຽກງານຝຶກອົບຮົມກ່ຽວກັບການຜະລິດລໍ້ເຫຼື່ອນ. ປະຈຸບັນນີ້, ພື້ນທີ່ໄວ້ສຳລັບເຮັດສີ ແລະ ຈອດເຫຼັກ ແລະ ບອນເຮັດວຽກ ແມ່ນໄດ້ມີການປັບປຸງໃຫ້ມີລົມລວງສະດວກຫຼາຍຂຶ້ນກວ່າເກົ່າ. ພ້ອມດຽວນັ້ນ, ພວກເຮົາກໍ່ມີພື້ນທີ່ໄວ້ສຳລັບເຮັດການປະເມີນຜູ້ທີ່ຝຶກແອບໃຊ້ລໍ້ເຫຼື່ອນຢູ່ທີ່ສະຖານທີ່ເຮັດວຽກນຳອີກດ້ວຍ.

### ການປັບປຸງຊີວິດການເປັນຢູ່:

- ພາຍຫຼັງຄົນເຈັບອອກຈາກໂຮງໝໍ, ອົງການເວີອິດູເຄຊັ້ນ ແລະ ຄູ່ຮ່ວມງານ ກໍ່ໄດ້ມີການລົງໄປຢ້ຽມຢາມຕິດຕາມອາການຂອງຜູ້ກ່ຽວ ແລະ ໄດ້ມີການລົງທະບຽນຄົນເຈັບເພື່ອກະກຽມການຝຶກອົບຮົມໃຫ້ຜູ້ກ່ຽວໃນການປັບປຸງຊີວິດການເປັນຢູ່ຕາມຄວາມເໝາະສົມທາງດ້ານສະພາບຮ່າງກາຍ, ຊຶ່ງວຽກງານດັ່ງກ່າວນີ້ ຖືໄດ້ວ່າເປັນແຜນງານໜຶ່ງໃນການປັບປຸງຄຸນນະພາບຊີວິດໃຫ້ແກ່ຜູ້ທີ່ລອດຊີວິດຈາກ ລບຕ ຂອງອົງການເວີອິດູເຄຊັ້ນ.ຜູ້ທີ່ລອດຊີວິດຈາກ ລບຕ ຈຳນວນ 55 ຄົນ ແລະ/ຫຼື ສະມາຊິກໃນຄອບຄົວ ຢູ່ແຂວງຊຽງຂວາງ ແລະ ເຊກອງ ໄດ້ເຂົ້າຮ່ວມການຝຶກອົບຮົມກ່ຽວກັບທັກສະໃນການລ້ຽງສັດ/ສັດຕະວະແພດ. ພາຍຫຼັງສຳເລັດການຝຶກອົບຮົມແລ້ວ, ພວກເຂົາກໍ່ໄດ້ຮັບທຶນກ້ອນນ້ອຍໜຶ່ງ ເພື່ອນຳໄປຊື້ສັດລ້ຽງ, ຫົວອາຫານ ແລະ ຢາວັກແຊງປ້ອງກັນພະຍາດໃຫ້ສັດລ້ຽງ. ນອກຈາກນັ້ນ, ສະມາຄົມປັບປຸງຄຸນນະພາບຊີວິດໃຫ້ແກ່ຜູ້ລອດຊີວິດຈາກ ລບຕ ຍັງໄດ້ຈັດການຝຶກອົບຮົມກ່ຽວກັບຫັດຖະກຳໃຫ້ແກ່ປະຊາຊົນຈຳນວນ 150 ຄົນ ເພື່ອຝຶກແອບກ່ຽວກັບການຕ່ຳຫູກ ແລະ ການເຮັດຜະລິດຕະພັນຫັດຖະກຳອີກດ້ວຍ.



*ການຝຶກອົບຮົມໃຫ້ແກ່ຄູ.*

### ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ:

ອົງການເວີອິດູເຄຊັ້ນ ແລະ ລັດຖະບານ ໄດ້ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຜ່ານວິທີການຝຶກອົບຮົມໃຫ້ແກ່ຄູຝຶກ, ປັບປຸງຄວາມອາດສາມາດຂອງຄູ່ຮ່ວມງານຢູ່ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ແລະ ຢູ່ໃນໂຮງຮຽນ. ໃນຂະນະທີ່ພວກເຮົາຈັດການຝຶກອົບຮົມກ່ຽວກັບວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ເຂົ້າໃນຫຼັກສູດການຮຽນການສອນຢູ່ໃນຂັ້ນປະຖົມສຶກສານັ້ນ, ມັນຍັງເປັນການປັບປຸງຮູບແບບແຜນງານໄປນຳ ກ່ອນຈະມີການຝຶກອົບຮົມໃຫ້ແກ່ຄູ ຢູ່ທີ່ວິທະຍາໄລຝຶກອົບຮົມຄູ 8 ແຫ່ງອີກດ້ວຍ:

ໃນສົກປີ2011-2012,ວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໄດ້ມີການຂະຫຍາຍກິດຈະກຳໄປຫາ 4 ເມືອງໃໝ່ຄື: ເມືອງໝອກ ແລະ ທ່າໂທມ ຂອງແຂວງຊຽງຂວາງ, ເມືອງປາກອູ ແລະ ພູຄູນ ຂອງແຂວງຫຼວງພະບາງ. ທີມງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ພ້ອມກັບພະນັກງານລັດ ໄດ້ຈັດການຝຶກອົບຮົມກ່ຽວກັບການສິດສອນຫຼັກສູດການຮຽນການສອນວິຊາ ລບຕ ໃຫ້ແກ່ຄູສອນຈຳນວນ 186 ຄົນ (ເປັນຍິງ 70 ຄົນ), ມີນັກຮຽນຈຳນວນ 5497 ຄົນ (ເປັນຍິງ 2,756 ຄົນ) ຢູ່ໃນໂຮງຮຽນຂັ້ນປະຖົມທັງໝົດຈຳນວນ 36 ແຫ່ງ. ພ້ອມນັ້ນ, ກໍ່ຍັງໄດ້ສະໜອງອຸປະກອນການຮຽນການສອນນຳອີກດ້ວຍ.

ການສະແດງລະຄອນຕຸກກະຕາ ຖືໄດ້ວ່າເປັນວິທີໜຶ່ງທີ່ໄດ້ຮັບຜົນສຳເລັດ ໃນການເຜີຍແຜ່ຂໍ້ມູນກ່ຽວກັບຄວາມສ່ຽງຂອງ ລບຕ ໃຫ້ແກ່ນັກຮຽນ ແລະ ຊຸມຊົນຕາມງານກິດຈະກຳຕ່າງໆເຊັ່ນ ວັນຄູແຫ່ງຊາດ ແລະ ວັນເດັກນ້ອຍສາກົນ. ນອກຈາກນັ້ນ, ຍັງໄດ້ມີການຝຶກອົບຮົມໃຫ້ແກ່ນັກສະແດງລະຄອນຕຸກກະຕາຈຳນວນ 7 ຄົນ, ຊຶ່ງຄະນະສະແດງແຕ່ລະຄະນະ ຈະປະກອບມີນັກຮຽນຂັ້ນປະຖົມ 6 ຄົນ ແລະ ຄູສອນທີ່ມາຈາກເມືອງໃໝ່ 1 ຄົນ, ລວມມີນັກສະແດງລະຄອນຕຸກກະຕາຈຳນວນທັງໝົດ 33 ຄົນ.

ໂຄງການສິດສອນກ່ຽວກັບ ລບຕ ໄດ້ສະໜອງການສະໜັບສະໜູນໃຫ້ແກ່ວິທະຍາໄລຝຶກອົບຮົມຄູ ໂດຍຜ່ານການເຊື່ອມສານບົດຮຽນກ່ຽວກັບ ລບຕ ເຂົ້າໃນຫຼັກສູດການຝຶກອົບຮົມຄູ ລວມທັງມີການຝຶກອົບຮົມກ່ຽວກັບວິທີສິດສອນວິຊາ ລບຕ ແລະ ການປັບ

ປຸງແບບແຜນການຝຶກອົບຮົມກ່ຽວກັບການສິດສອນ ລບຕ ຢູ່ໃນຫຼັກສູດຂອງວິທະຍາໄລຝຶກອົບຮົມຄູ ອີກດ້ວຍ.

## ຜົນສໍາເລັດຕົ້ນຕໍໃນປີ 2012:

### ຜົນສໍາເລັດທາງດ້ານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ

- ກິດຈະກໍາທາງດ້ານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຢູ່ແຂວງເຊກອງ ໄດ້ສິ້ນສຸດລົງໃນເດືອນສິງຫາ 2012, ພາຍຫຼັງທີ່ໄດ້ມີການຈັດຕັ້ງປະຕິບັດມາເປັນເວລາ3ປີ.ຜູ້ໃຫ້ທຶນ, ກະຊວງການຕ່າງປະເທດສະຫະລັດອາເມລິກາ/ຫ້ອງການຫຼຸດຜ່ອນອາວຸດຄັ້ງແສງ ແລະ ການສູ້ຮົບ ໄດ້ອະນຸມັດທຶນສະໜັບສະໜູນໃຫ້ໃໝ່ເພື່ອດໍາເນີນວຽກງານດັ່ງກ່າວຢູ່ແຂວງຊຽງຂວາງ.

- ໃນເດືອນກໍລະກົດ/ສິງຫາ, ອົງການເວີອິດູເຄເຊັ້ນ ໄດ້ເຮັດການປະເມີນຜົນ ແລະ ພົບວ່າ ຄຸນນະພາບຂອງການດູແລປິ່ນປົວໄດ້ມີການປັບປຸງດີຂຶ້ນ, ເຄືອຂ່າຍຝຶກອົບຮົມສາມາດສົ່ງເສີມໂອກາດໃນການຮຽນຮູ້ໃຫ້ພະນັກງານຢູ່ແຂວງຈົນຮອດຂັ້ນບ້ານໄດ.

- ການເຮັດວຽກກ່ຽວກັບການຈັດ ແລະ ການປັບປຸງອຸປະກອນຕ່າງໆທີ່ມີຢູ່ໃນປະຈຸບັນ ເພື່ອໃຊ້ເຂົ້າໃນປັບປຸງພື້ນຖານຫຼັກສູດການຮຽນການສອນ, ການຝຶກອົບຮົມໃຫ້ຄູຝຶກ ແລະ ການປິ່ນປົວສຸກເສີນທາງການແພດ ແມ່ນໄດ້ເລີ່ມຕົ້ນຂຶ້ນແລ້ວ.

- ເລີ່ມແຕ່ປີ 2007 ເປັນຕົ້ນມາ, ອົງການເວີອິດູເຄເຊັ້ນ ໄດ້ເຮັດວຽກກັບບັນດາຜູ້ລອດຊີວິດຈາກ ລບຕ ເພື່ອປັບປຸງສະມາຄົມທີ່ບໍ່ຫວັງຜົນກໍາໄລຂຶ້ນ. “ສະມາຄົມປັບປຸງຄຸນນະພາບຊີວິດໃຫ້ແກ່ຜູ້ລອດຊີວິດຈາກ ລບຕ” ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2011 ແລະ ກໍ່ເລີ່ມເຮັດວຽກຮ່ວມກັບອົງການເວີອິດູເຄເຊັ້ນໃນການສະໜອງການຊ່ວຍເຫຼືອໃຫ້ແກ່ຜູ້ລອດຊີວິດຈາກ ລບຕ ໂດຍການລະດົມຂົນຂວາຍທຶນ, ສະໜອງທຶນຊ່ວຍເຫຼືອຜ່ານກອງປິ່ນປົວທາງການແພດສໍາລັບຜູ້ຖືກເຄາະຮ້າຍໃນສະໄໝສົງຄາມ ແລະ ການປັບປຸງຄຸນນະພາບຊີວິດ.

## ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ:

### ໂຄງການທົດລອງປັບປຸງຮູບແບບການສິດສອນ ລບຕ ຢູ່ວິທະຍາໄລຝຶກອົບຮົມຄູ

- ໄດ້ເຊື່ອມສານບົດຮຽນກ່ຽວກັບ ລບຕ ເຂົ້າໃນຫຼັກສູດການສິດສອນຂອງຄູ ພ້ອມທັງມີການຈັດຝຶກອົບຮົມ

- ໄດ້ປັບປຸງແຜນການສິດສອນຮ່ວມກັບວິທະຍາໄລຝຶກອົບຮົມຄູ ແລະ ໄດ້ສໍາເລັດການຝຶກອົບຮົມກ່ຽວກັບການປຶກສາຫາລື ແລະ ທົບທວນປະສິດທິຜົນຂອງການສິດສອນ/ແຜນການຮໍ່າຮຽນ

- ໄດ້ຂະຫຍາຍວິທະຍາໄລຝຶກອົບຮົມຄູຂຶ້ນຕື່ມຈາກ 3 ແຫ່ງໃນປີ 2010/11 ມາເປັນ 8 ແຫ່ງໃນສົກປີ 2011/12

- ໄດ້ຝຶກອົບຮົມໃຫ້ແກ່ຄູຢູ່ໃນວິທະຍາໄລຝຶກອົບຮົມຄູແຕ່ລະແຫ່ງ. ປະຈຸບັນນີ້ ມີຄູຝຶກຈໍານວນທັງໝົດ 24 ຄົນ

- ໄດ້ສະໜອງການຝຶກອົບຮົມກ່ຽວກັບການສະແດງລະຄອນຸກກະຕາໃຫ້ແກ່ຄູສອນໃນວິທະຍາໄລຝຶກອົບຮົມຄູ 8 ແຫ່ງ

### ການຝຶກອົບຮົມຢູ່ຂັ້ນແຂວງເປັນພື້ນຖານ

- ໄດ້ສະໜອງການຝຶກອົບຮົມໃຫ້ແກ່ຄູສອນຢູ່ໃນ 4 ເມືອງໃໝ່ພ້ອມທັງ ຕິດຕາມວິທີການສິດສອນຂອງຄູ



*ກໍາລັງຮຽນຮູ້ກ່ຽວກັບຄວາມສ່ຽງຂອງ ລບຕ ຢູ່ໃນຫ້ອງຮຽນ*



*ກຳລັງເອົາເຈ້ຍມາເຮັດເປັນຕຸກກະຕາ, ຊຶ່ງເປັນພາກສ່ວນໜຶ່ງທີ່ນອນຢູ່ໃນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ*

- ໄດ້ດຳເນີນກອງປະຊຸມສຳມະນາກ່ຽວກັບການສະແດງລະຄອນຕຸກກະຕາໃຫ້ແກ່ນັກສະແດງທີ່ເປັນຄູສອນຈຳນວນ 33 ຄົນ ທີ່ມາຈາກ 9 ແຂວງ
- ໄດ້ສຳເລັດການເກັບກຳຂໍ້ມູນກ່ຽວກັບການສຳຫຼວດເບິ່ງຄວາມຮູ້, ທັດສະນະຄະຕິ ແລະ ການປະພຶດ ຂອງນັກຮຽນຊັ້ນປະຖົມ ແຕ່ປໍ 1-5 ໃນເວລາທີ່ສິດສອນກ່ຽວກັບ ລບຕ, ຊຶ່ງບົດລາຍງານດັ່ງກ່າວ ຈະໄດ້ແຈກຢາຍໃນກາງປີ 2013
- ໄດ້ສະໜັບສະໜູນການສະແດງລະຄອນຕຸກກະຕາກ່ຽວກັບການເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບຄວາມສ່ຽງຂອງ ລບຕ ໃນຊ່ວງໄລຍະວັນເດັກນ້ອຍສາກົນ, ວັນຄູແຫ່ງຊາດ ແລະ ວັນຊາດຂອງລາວ ຢູ່ໃນ 9 ແຂວງ

**ການສະໜອງອຸປະກອນ:**

- ໄດ້ຈັດພິມ ແລະ ສະໜອງອຸປະກອນ ເພື່ອສະໜັບສະໜູນໃຫ້ແກ່ການສິດສອນກ່ຽວກັບ ລບຕ ໃຫ້ແກ່ 4 ເມືອງ ແລະ ວິທະຍາໄລຝຶກອົບຮົມຄູ 8 ແຫ່ງ. ອຸປະກອນດັ່ງກ່າວ ແມ່ນປະກອບມີ ແຜນການສິດສອນກ່ຽວກັບ ລບຕ, ປຶ້ມເລົ່າເລື່ອງ, ໂພດສ໌ເຕີ້, ປຶ້ມເພັງກ່ຽວກັບ ລບຕ, ປຶ້ມແຕ້ມຮູບ ແລະ ຄູ່ມືການສອນກ່ຽວກັບ ລບຕ

**ຂ່າວ: ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ**

ໃນວັນທີ 1 ກັນຍາ 2012, ທ້າວ ຢົວຢັງ (12) ແລະ ພີ່ນ້ອງຂອງລາວ, ທ້າວ ກົວລໍ (10) ໄດ້ພາກັນແລ່ນຫຼິ້ນຢູ່ນອກເຮືອນຂອງຕົນຢູ່ທີ່ບ້ານໜອງ, ເມືອງໂພນສະຫວັນ, ແຂວງຊຽງຂວາງ. ໝູ່ຂອງລາວອີກຜູ້ໜຶ່ງ ຊື່ທ້າວ ເຢ ໄດ້ພົບເຫັນສິ້ນສ່ວນຂອງເສດເຫຼັກຢູ່ໃກ້ແຖວນັ້ນ ແລະ ກໍ່ໄດ້ເອົາກ້ອນຫີນທຸບລົງໃສ່. ທັນທີທັນໃດນັ້ນ, ມັນກໍ່ແຕກຂຶ້ນ ແລະ ເຮັດໃຫ້ທ້າວ ເຢ ເສຍຊີວິດກັບທີ່, ສ່ວນທ້າວ ຢົວຢັງ ແລະ ພີ່ນ້ອງຂອງລາວ ທ້າວ ກົວລໍ ບາດເຈັບທັງສອງ. ທ້າວ ກົວ ບາດເຈັບທີ່ທ້ອງ, ແຂນທັງສອງຂ້າງ, ກ້ອງຫົວເຂົ່າເບື້ອງຊ້າຍ ແລະ ປາກເບື້ອງຂວາ (ແຂວແຕກ 6 ເຫຼັ້ມ). ສ່ວນທ້າວ ຢົວຢັງ, ແຂນຂວາເບື້ອງເທິງຂອງລາວແມ່ນກະດູກແຕກ ແລະ ມີບາດແຜກວ້າງຢູ່ຫົວເຂົ່າເບື້ອງຂວາ, ຊຶ່ງເຮັດໃຫ້ລາວຕ້ອງນອນຮັກສາຢູ່ໂຮງໝໍເປັນເດືອນ.

ກໍລະນີເຫດການຂອງທ້າວ ຢົວຢັງ ແລະ ກົວລໍ ສະແດງໃຫ້ເຫັນຄວາມສຳຄັນຂອງທຶນຊ່ວຍເຫຼືອໃນການດູແລປິ່ນປົວໃຫ້ແກ່ຜູ້ລອດຊີວິດຈາກ ລບຕ ຈາກອຸປະຕິເຫດ ລບຕ ເກີດຂຶ້ນແມ່ນໄດ້ສິ່ງຜົນໃຫ້ມີການບາດເຈັບສາຫັດ ອັນເປັນເຫດໃຫ້ຕ້ອງມີການນອນປິ່ນປົວຮັກສາຢູ່ໂຮງໝໍເປັນເວລາດົນນານ ແລະ ຕ້ອງໄດ້ໃຊ້ເງິນຄຳຈາກຄອບຄົວມາປິ່ນປົວເປັນຈຳນວນຫຼວງຫຼາຍ. ຄ່າໃຊ້ຈ່າຍໃນການປິ່ນປົວ ທ້າວ ຢົວຢັງ ລວມທັງໝົດແມ່ນ 5 ລ້ານກີບ, ຊຶ່ງກໍ່ໂຊກດີຫຼາຍ ທີ່ມີກອງທຶນຊ່ວຍເຫຼືອຜູ້ຖືກເຄາະຮ້າຍໃນສະໃໝສົງຄາມ ເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍໃຫ້ທັງໝົດ.

ສ່ວນຄອບຄົວໃດ ທີ່ບໍ່ເໝາະສົມຈະໄດ້ຮັບທຶນຊ່ວຍເຫຼືອສຳລັບແກ້ໄຂຄວາມທຸກຍາກນັ້ນ ກໍ່ເນື່ອງຈາກວ່າ ພວກເຂົາມີເງິນແຮ້ກ້ອນນ້ອຍໜຶ່ງເກັບໄວ້ແລ້ວ. ແຕ່ໃນກໍລະນີ ທີ່ເຂົາເຈົ້າຕ້ອງໄດ້ນຳອອກມາຈ່າຍຄ່າປິ່ນປົວຮັກສາດ້ວຍຕົນເອງນັ້ນ, ອາດຈະເຮັດໃຫ້ເງິນແຮທັງໝົດບໍ່ເຫຼືອຢູ່ເລີຍ ແລະ ການຄ້ຳປະກັນທາງການເງິນເພື່ອດູແລອູ້ມຊູຄອບຄົວກໍ່ອາດຈະບໍ່ມີ.

## ວຽກຈຸດສຸມໃນປີ 2013:

**ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ຜູ້ລອດຊີວິດຈາກ ລບຕ**

ການຈັດຕັ້ງປະຕິບັດໂຄງການ "ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານດູແລປິ່ນປົວແບບສຸກເສີນ" ຢູ່ແຂວງຊຽງຂວາງ.

- ຝຶກອົບຮົມຫຼັກສູດການປິ່ນປົວທາງການແພດຢູ່ໂຮງໝໍແຂວງ, ເມືອງ, ສຸກສາລາຍ່ອຍຂັ້ນເມືອງ ແລະ ຂັ້ນບ້ານ ພ້ອມທັງສະໜອງວັດຖຸອຸປະກອນທີ່ສຳຄັນໃນການປິ່ນປົວທາງການແພດ
- ຈັດຕັ້ງ ແລະ ຍົກລະດັບການປິ່ນປົວທາງການແພດແບບສຸກເສີນ ແລະ ຫຼັກສູດຢູ່ໃນວິທະຍາໄລຝຶກອົບຮົມຄູ
- ຈັດພິມ ແລະ ແຈກຢາຍປຶ້ມຫຼັກສູດການປິ່ນປົວທາງການແພດ
- ຈັດຕັ້ງໂຄງການນ້ຳສະອາດ ແລະ ສຸຂະອະນາໄມ ຢູ່ໃນຊຸມຊົນທີ່ໄດ້ຮັບຜົນກະທົບຈາກ ລບຕ ຈຳນວນ 4 ແຫ່ງ ຢູ່ແຂວງຊຽງຂວາງ ໂດຍປະກອບມີການນຳໃຊ້ຂໍ້ຄວາມ ແລະ ແຜນທີ່ບ້ານ ເພື່ອຕິດຕາມ ແລະ ລາຍງານເບິ່ງສະພາບກ່ຽວກັບພະຍາດຖອກທ້ອງຂອງເດັກນ້ອຍຢູ່ເຂດດັ່ງກ່າວ



*ນາງພະຍາບານທີ່ຫາກໍ່ຮຽນຈົບໃໝ່ ຢູ່ທີ່ໂຮງໝໍແຂວງຊຽງຂວາງ. ການຝຶກອົບຮົມ ສາມາດຊ່ວຍໃຫ້ເຂົາເຈົ້າມີຄວາມໝັ້ນໃຈຂຶ້ນໃນການເວລາເຮັດການຮັກສາບາດແຜຂັ້ນຕົ້ນໃຫ້ແກ່ຄົນເຈັບ.*



*ເດັກນ້ອຍ ກັບຕຸກກະຕາທີ່ໃຊ້ເຂົ້າໃນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ*

**ປະສານກັບສະມາຄົມປັບປຸງຄຸນນະພາບຊີວິດ ແລະ ພາກສວນລັດຖະບານ ເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ:**

- ລົງຕິດຕາມຢ້ຽມຢາມບັນດາຜູ້ລອດຊີວິດຈາກ ລບຕ ເພື່ອກຳນົດເບິ່ງຄວາມຕ້ອງການ ແລະ ຊັບພະຍາກອນຂອງເຂົາເຈົ້າ
- ສືບຕໍ່ລະດົມຂົນຂວາຍທຶນຊ່ວຍເຫຼືອສຳລັບການດູແລປິ່ນປົວຜູ້ລອດຊີວິດຈາກ ລບຕ ແລະ ການປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າ
- ສືບຕໍ່ດຳເນີນກິດຈະກຳກ່ຽວກັບການປັບປຸງຊີວິດການເປັນຢູ່ ແລະ ແຜນງານອື່ນໆ ສຳລັບຜູ້ລອດຊີວິດຈາກ ລບຕ

**ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ:**

ໂຄງການສິດສອນກ່ຽວກັບ ລບຕ ຈະເປັນການສ້າງຄວາມອາດສາມາດໃຫ້ແກ່ຄູສອນຢູ່ໃນໂຮງຮຽນຊັ້ນປະຖົມສຶກສາ ແລະ ວິທະຍາໄລຝຶກອົບຮົມຄູ ໃຫ້ມີຄວາມເຂັ້ມແຂງ ພ້ອມທັງ ຈະສະໜັບສະໜູນທາງດ້ານວິຊາການ ແລະ ການເງິນ ໃຫ້ແກ່ບັນດາຄູທີ່ກຽມຈະຂຶ້ນສອນໃໝ່ຢູ່ໃນວິທະຍາໄລຝຶກອົບຮົມຄູ ຄື:

- ສະໜັບສະໜູນນັກສະແດງລະຄອນຕຸກກະຕາ ກ່ຽວກັບວິທີການນຳເອົາຂໍ້ມູນຂ່າວສານກ່ຽວກັບ ລບຕ ລົງເຜີຍແຜ່ໃນຊຸມຊົນຕ່າງໆ
- ສະໜອງ ແລະ ສະໜັບສະໜູນການຝຶກອົບຮົມໃຫ້ແກ່ຄູສອນ ພ້ອມທັງ ມີການຕິດຕາມ
- ດຳເນີນການຝຶກອົບຮົມໃຫ້ແກ່ຄູສອນມືອາຊີບ ແລະ ບັນດາຄູທີ່ກຽມຈະຂຶ້ນສອນໃໝ່ຢູ່ໃນວິທະຍາໄລ
- ສັງລວມມາດຕະຖານຄູ່ມືໃນການສິດສອນກ່ຽວກັບຄວາມສ່ຽງຈາກ ລບຕ ຢູ່ໃນວິທະຍາໄລຝຶກອົບຮົມຄູ
- ເຮັດການປະເມີນໃຫ້ແກ່ພະນັກງານຂັ້ນເມືອງແລະຄູອາຈານຢູ່ໃນ 21ເມືອງ
- ສະໜອງອຸປະກອນການຮຽນ

## ຄູ່ຮ່ວມປະຕິບັດງານຕ່າງໆ:

**ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ/ລອດຊີວິດຈາກ ລບຕ:**

ສູນຟື້ນຟູໜ້າທີ່ການ ແມ່ນຄູ່ຮ່ວມງານຫຼັກໃນລະດັບສູນກາງ ແລະ ເປັນສູນກາງໃນການປະສານງານຕິດຕໍ່ພົວພັນ ກ່ຽວກັບການດຳເນີນກິດຈະກຳຊ່ວຍເຫຼືອຜູ້ຖືກເຄາະຮ້າຍຢູ່ຂັ້ນແຂວງ.

ພະແນກສາທາລະນະສຸກ, ໂຮງໝໍແຂວງ ແລະ ເມືອງ ຢູ່ແຂວງຊຽງຂວາງ, ຫົວພັນ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ ແລະ ເຊກອງ ໄດ້ມີສ່ວນຮ່ວມໃນການຄຸ້ມຄອງບໍລິຫານກອງທຶນປິ່ນປົວຜູ້ຖືກເຄາະຮ້າຍແຕ່ປາງສົງຄາມ ແລະ ຈັດຕັ້ງປະຕິບັດການຝຶກອົບຮົມຕ່າງໆ.

**ຜູ້ທີ່ໄດ້ຮັບຜົນປະໂຫຍດ:**

- ພະນັກງານແພດໝໍ ແລະ ອາສາສະໝັກສຸກສາລາຂັ້ນບ້ານຢູ່ໃນບັນດາເມືອງເປົ້າໝາຍ
- ບັນດາຜູ້ລອດຊີວິດຈາກ ລບຕ ແລະ ສະມາຊິກໃນຄອບຄົວເຂົາເຈົ້າຜູ້ທີ່ໄດ້ຮັບທຶນຊ່ວຍເຫຼືອໃນການຟື້ນຟູຮັກສາ ແລະ ການປັບປຸງຊີວິດການເປັນຢູ່
- ສະມາຊິກໃນຄອບຄົວຜູ້ທີ່ເສຍຊີວິດຈາກອຸປະຕິເຫດ ລບຕ ແລະ ປະຊາຊົນຜູ້ທີ່ຖືກກຳນົດຢູ່ໃນຊ່ວງການສຳຫຼວດກ່ຽວກັບຜູ້ຖືກເຄາະຮ້າຍ ແລະ ອຸປະຕິເຫດຈາກ ລບຕ ແມ່ນໄດ້ຮັບການປັບປຸງຊີວິດການເປັນຢູ່

**ການສຶກສາກ່ຽວກັບ ລບຕ:**

ກົມປະຖົມ ແລະ ອະນຸບານ, ກະຊວງສຶກສາທິການ ແລະ ກິລາ.

**ຜູ້ທີ່ໄດ້ຮັບຜົນປະໂຫຍດ:**

ແມ່ນບັນດາຄູສອນແຕ່ຊັ້ນປໍ 1-5, ອຳນວຍການ ແລະ ຄູອາຈານຕ່າງໆ ທີ່ໄດ້ນຳໃຊ້ຫຼັກສູດການຮຽນການສອນວິຊາ ລບຕ ໂດຍໄດ້ຮັບການແນະນຳຈາກກົມປະຖົມ ແລະ ອານຸບານ, ລວມທັງບັນດາກຸ່ມຄົນທີ່ຮັບການຝຶກອົບຮົມ ແລະ ສະໜັບສະໜູນຈາກໂຄງການດັ່ງກ່າວຢູ່ໃນ 4 ເມືອງ (ໝອກ, ທ່າໂທມ, ແປກ ແລະ ພູຄູນ), ຊຶ່ງລວມມີນັກຮຽນທີ່ໄດ້ຮັບຜົນປະໂຫຍດຈຳນວນ 3,757 ຄົນ ຢູ່ໃນ 22 ໂຮງຮຽນ ແລະ ມີຄູຈຳນວນ 93 ຄົນ. ຢູ່ໃນວິທະຍາໄລຝຶກອົບຮົມຄູ, ກໍ່ປະກອບຄູຈຳນວນ 15 ຄົນທີ່ໄດ້ເຂົ້າຮ່ວມໃນຝຶກອົບຮົມວິຊາສະເພາະຄູ ແລະ ນັກຮຽນ 1,000 ຄົນ.

## ຂ່າວດີ: ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ

ຕ໋ອກ (8) ແມ່ນນັກຮຽນຊັ້ນປະຖົມຢູ່ບ້ານຫາດແປງ, ເມືອງປາກອູ, ແຂວງຫຼວງພະບາງ. ລາວ ໄດ້ພົບເຫັນ ລບຕ ໃນຂະນະທີ່ລາວກໍາລັງຍາງຢູ່ກັບພໍ່ຕູ້ຂອງລາວຕາມທາງໄປນາ. ລບຕ ແມ່ນຕົກຢູ່ບໍລິເວນຄອງຊົນລະປະທານ. ລາວສາມາດເຫັນມັນໄດ້ ກໍ່ເນື່ອງຈາກວ່ານໍ້າຢູ່ໃນຄອງຊົນລະປະທານໃນຊ່ວງນັ້ນແມ່ນແຫ້ງ. ຕ໋ອກກໍ່ເປັນນັກຮຽນຄົນໜຶ່ງທີ່ໄດ້ຮຽນກ່ຽວກັບວິຊາ ລບຕ, ຈຶ່ງເຮັດໃຫ້ລາວ ຮູ້ວ່າ ສິ່ງດັ່ງກ່າວທີ່ຕົກຢູ່ໃນຄອງຊົນລະປະທານນັ້ນ ແມ່ນສິ່ງຂອງທີ່ອັນຕະລາຍແນ່ນອນ ຖ້າລາວຫາກໄປຈັບມັນຂຶ້ນມາ ແລະ ແກວ່ງຫຼິ້ນ. ຫຼັງຈາກນັ້ນ, ລາວກໍ່ໄດ້ໄປບອກພໍ່ຕູ້ຂອງລາວກ່ຽວກັບ ລບຕ ທີ່ໄດ້ພົບເຫັນ. ພໍ່ຕູ້ຂອງລາວ ກໍ່ໄດ້ເຕືອນລາວວ່າຢ່າໄປໃກ້ເດັດຂາດ ເພາະວ່າ ມັນສາມາດແຕກຂຶ້ນໄດ້ທຸກເວລາ. ຫຼັງຈາກນັ້ນ, ພໍ່ຕູ້ຂອງລາວ ກໍ່ໄດ້ໄປລາຍງານໃຫ້ນາຍບ້ານຮັບຊາບ ແລະ ນາຍບ້ານກໍ່ໄດ້ນໍາໄປລາຍງານໃຫ້ ຄກລ ແລະ ມັນກໍ່ໄດ້ຖືກທໍາລາຍໃນທີ່ສຸດ. ການປະສານສົມທົບກັນແບບນີ້ ແມ່ນສາມາດປ້ອງກັນປະຊາຊົນໃຫ້ມີຄວາມປອດໄພຈາກເຫດການຮ້າຍແຮງທີ່ອາດຈະເກີດຂຶ້ນໃນທຸກເມື່ອ. ເລື່ອງລາວດັ່ງກ່າວນີ້ ແມ່ນບົ່ງບອກໃຫ້ເຮົາໄດ້ຮູ້ຈັກຄວາມສໍາຄັນຂອງວຽກງານ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ໃນບັນດາບ້ານທີ່ມີ ລບຕ ຕົກຄ້າງ.



*ການຈັດກິດຈະກໍາເປັນກຸ່ມຢູ່ໂຮງຮຽນ ເພື່ອຮຽນຮູ້ກ່ຽວກັບການໂຄສະນາສຶກສາຄວາມສ່ຽງຈາກ ລບຕ.*

## ບຸກຄະລາກອນໃນປີ 2012:

| ປະຈຳຢູ່ຫ້ອງການ | | | | ປະຈຳຢູ່ຝ່າຍປະຕິບັດງານ | | | |
|---|---|---|---|---|---|---|---|
| ລາວ | | ຕ່າງປະເທດ | | ລາວ | | ຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 2 | 4 | 1 | | 6 | 4 | | 5 |

## ຕົວເລກສະຖິຕິໃນປີ 2012:

| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ການໂຄສະນາສຶກສາຊຸມຊົນ | | ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈຳນວນຜູ້ທີ່ໄດ້ຮັບການຊ່ວຍເຫຼືອ | | ການຊ່ວຍເຫຼືອທາງດ້ານການດຳລົງຊີວິດ (ສະມາຄົມປັບປຸງຄຸນນະພາບຊີວິດ) | |
|---|---|---|---|---|---|
| ສະຖານທີ່ ລົງຢ້ຽມຢາມ | ຜູ້ໄດ້ຮັບ ຜົນປະໂຫຍດ | ທາງດ້ານການເງິນ | ທາງດ້ານການແພດ | ຈ/ນ ບ້ານ | ຈ/ນ ຜູ້ເຂົ້າຮ່ວມ |
| ໂຮງຮຽນ | 1,962 | ຜູ້ລອດຊີວິດ ໃໝ່ຈາກ ລບຕ | ຊຽງຂວາງ – 30 ສະຫວັນນະເຂດ - 2 | ສັດລ້ຽງ: 2 ບ້ານ | 30 ຄົນ |
| ນັກຮຽນ | 182,345 | ການຮັກສາ ຟື້ນຟູ | ຜູ້ລອດຊີວິດ 16 ຄົນ ໃນຈຳນວນ 22 ຄົນ | ຫັດຖະກຳ: 10 ບ້ານ | 150 |
| ຄູສອນ | 6,237 | ***ລວມມູນຄ່າ: 20,000*** *ໂດລາສະຫະລັດ* | | | |

## ພື້ນທີ່ການປະຕິບັດງານ:

| *ກິດຈະກຳ* | *ສະຖານທີ່ຈັດຕັ້ງປະຕິບັດກິດຈະກຳ* |
|---|---|
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | 1. 4 ເມືອງ ຢູ່ແຂວງຫົວພັນ: ເມືອງຊຳເໜືອ, ຫົວເມືອງ, ວຽງທອງ ແລະ ວຽງໄຊ<br>2. 8 ເມືອງ ຢູ່ແຂວງຊຽງຂວາງ: ເມືອງແປກ, ພູກູດ, ຄຳ, ໜອງແຮດ, ຄູນ, ຜາໄຊ, ທ່າໂທມ ແລະ ໝອກ<br>3. 4 ເມືອງ ຢູ່ແຂວງຫຼວງພະບາງ: ເມືອງງອຍ, ນ້ຳບາກ, ປາກອູ ແລະ ພູຄູນ<br>4. 4 ເມືອງ ຢູ່ແຂວງຄຳມ່ວນ: ເມືອງມະຫາໄຊ, ຍົມມະລາດ, ບົວລະພາ ແລະ ໄຊບົວທອງ<br>5. 6 ເມືອງ ຢູ່ແຂວງສະຫວັນນະເຂດ: ເມືອງນອງ, ເຊໂປນ, ວິລະບູລີ, ພິນ, ພະລານໄຊ ແລະ ທ່າພັງທອງ<br>6. 5 ເມືອງ ຢູ່ແຂວງສາລະວັນ: ເມືອງເລົ່າງາມ, ຕຸມລານ, ຕະໂອ້ຍ ແລະ ສະມ້ວຍ<br>7. 2 ເມືອງ ຢູ່ແຂວງຈຳປາສັກ: ເມືອງປາກຊ່ອງ ແລະ ບາຈຽງ<br>8. 4 ເມືອງ ຢູ່ແຂວງເຊກອງ: ລະມາມ, ທ່າແຕງ, ກະລຶມ ແລະ ດາກຈຶງ<br>9. 5 ເມືອງ ຢູ່ແຂວງອັດຕະປື: ພູວົງ, ສານໄຊ, ໄຊເສດຖາ, ສາມັກຄີໄຊ ແລະ ສະໜາມໄຊ<br>ໃນສົກປີ 2012 - 2013. ໂຄງການຈະຈັດຕັ້ງປະຕິບັດວຽກງານຢູ່ໃນ 4 ເມືອງຂອງແຂວງຫຼວງພະບາງ ແລະ ຊຽງຂວາງຄື:<br>1. ເມືອງພູຄູນ ຢູ່ແຂວງຫຼວງພະບາງ<br>2. ເມືອງປາກອູ ຢູ່ແຂວງຫຼວງພະບາງ<br>3. ເມືອງໝອກ ຢູ່ແຂວງຊຽງຂວາງ<br>4. ເມືອງທ່າໂທມ ຢູ່ແຂວງຊຽງຂວາງ |
| ກອງທຶນຊ່ວຍເຫຼືອຜູ້ຖືກເຄາະຮ້າຍແຕ່ປາງສົງຄາມ | ໃນທຸກໆເມືອງຂອງແຂວງຊຽງຂວາງ, ຫົວພັນ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ ແລະ ເຊກອງ |
| ປັບປຸງຂອດບໍລິການປິ່ນປົວທາງການແພດ | ເມືອງທ່າໂທມ, ໝອກ, ຄຳ, ຄູນ, ໜອງແຮດ ແລະ ແປກ (ໂຮງໝໍແຂວງ) |

## ສະພາບການເງິນ:

**ຄ່າໃຊ້ຈ່າຍໃນປີ 2012: (ໂດລາສະຫະລັດ)**

| *ລາຍລະອຽດ* | *ຈຳນວນ (ໂດລາສະຫະລັດ)* |
|---|---:|
| ຄ່າໃຊ້ຈ່າຍໃນການປະຕິບັດງານພິເສດ | 213,221 |
| *ລວມ* | ***213,221*** |

## ການປະກອບສ່ວນຂອງຜູ້ໃຫ້ທຶນ ໃນປີ 2012 (ໂດລາສະຫະລັດ)

| ***ຜູ້ໃຫ້ທຶນ*** | *ເງິນທີ່ໄດ້ຮັບໃນປີ 2012 (ໂດລາສະຫະລັດ)* |
|---|---:|
| ກະຊວງການຕ່າງປະເທດອາເມລິກາ, ຫ້ອງການຫຼຸດຜ່ອນອາວຸດ ແລະ ການສູ້ຮົບ ສຳລັບ "ການສ້າງຄວາມເຂັ້ມແຂງທາງການການປະຖົມພະຍາບານຂັ້ນຕົ້ນ" | 136,000 |
| ກອງທຶນເນຍໂດດສ໌ ສຳລັບການປັບປຸງການສຶກສາ, ການດູແລຜູ້ລອດຊີວິດຈາກ ລບຕ ແລະ ການດຳລົງຊີວິດ | 26,500 |
| ອົງການແມັກ ສຳລັບການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ | 10,684 |
| ສະຖານທູດອົດສ໌ຕຣາລີ (ທຶນຊ່ວຍເຫຼືອລ້າໂດຍກົງ) ເພື່ອຂະຫຍາຍການຝຶກອົບຮົມກ່ຽວກັບການຜະລິດລໍ້ເຫຼື່ອນ | 17,964 |
| ແຫຼບສ໌ຟໍຣູແມນນິຕິ ສຳລັບການດູແລຜູ້ລອດຊີວິດຈາກ ລບຕ ແລະ ວັດຖຸອຸປະກອນຕ່າງໆທີ່ໃຊ້ເຂົ້າໃນການຝຶກອົບຮົມກ່ຽວກັບການຜະລິດລໍ້ເຫຼື່ອນ | 20,000 |
| *ລວມ* | ***211,148*** |

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ນາຍົກລັດຖະມົນຕີ** ເລກທີ: 406/ນຍ
ນະຄອນຫຼວງວຽງຈັນ, ວັນທີ່ 8/11/2011

# ດຳລັດ

## ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ່ 06 ພຶດສະພາ 2003.
- ອີງຕາມຂໍ້ຕົກລົງວ່າດ້ວຍການແບ່ງໜ້າທີ່ຮັບຜິດຊອບຊີ້ນຳວຽກງານລະຫວ່າງນາຍົກ ແລະ ບັນດາຮອງນາຍົກລັດຖະມົນຕີ ສະບັບເລກທີ່ 71/ນຍ, ລົງວັນທີ 15 ສິງຫາ 2011.
- ອີງຕາມການສະເໜີຂອງຫົວໜ້າ ຄພທສ, ປະທານຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ, ສະບັບເລກທີ່ 730/ຄພທສ, ລົງວັນທີ 2 ກັນຍາ 2011.

### ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1:** ແຕ່ງຕັ້ງ ທ່ານ ອາຊາງ ລາວລີ ຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ ເປັນຜູ້ຊີ້ນຳຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ.

**ມາດຕາ 2:** ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ) ໂດຍປະກອບດ້ວຍບັນດາທ່ານ ທີ່ມີລາຍຊື່ດັ່ງລຸ່ມນີ້:

| | | |
|---|---|---|
| 1. | ທ່ານລັດຖະມົນຕີປະຈຳ ຫລບ, ຫົວໜ້າ ຄພທສ | ເປັນປະທານ |
| 2. | ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງການຕ່າງປະເທດ | ເປັນຮອງປະທານ |
| 3. | ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ເປັນຮອງປະທານ |
| 4. | ທ່ານຫົວໜ້າ ກົມຊ່າງແສງ ກະຊວງປ້ອງກັນປະເທດ | ເປັນກຳມະການ |
| 5. | ທ່ານຫົວໜ້າກົມຈັດຕັ້ງສາກົນ ກະຊວງການຕ່າງປະເທດ | ເປັນກຳມະການ |
| 6. | ທ່ານຫົວໜ້າກົມສື່ມວນຊົນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | ເປັນກຳມະການ |
| 7. | ທ່ານຫົວໜ້າກົມປິ່ນປົວ ກະຊວງສາທາລະນະສຸກ | ເປັນກຳມະການ |
| 8. | ທ່ານຫົວໜ້າກົມຮ່ວມມືສາກົນ ກະຊວງແຜນການ ແລະ ການລົງທຶນ | ເປັນກຳມະການ |
| 9. | ທ່ານຫົວໜ້າກົມງົບປະມານ ກະຊວງການເງິນ | ເປັນກຳມະການ |
| 10. | ທ່ານຫົວໜ້າກົມແຜນການ-ຮ່ວມມື ກະຊວງໂຍທາທິການ ແລະ ຂົນສົ່ງ | ເປັນກຳມະການ |
| 11. | ທ່ານຫົວໜ້າກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້ | ເປັນກຳມະການ |
| 12. | ກົມ 106 ກົມໃຫ່ຍ ປກສ ກະຊວງປ້ອງກັນຄວາມສະຫງົບ | ເປັນກຳມະການ |
| 13. | ທ່ານຮອງຫົວໜ້າຫ້ອງການ ກະຊວງສຶກສາທິການ ແລະ ກິລາ | ເປັນກຳມະການ |
| 14. | ທ່ານຫົວໜ້າກົມອົບຮົມຂະບວນການ ສູນກາງ ຊປປ ລາວ | ເປັນກຳມະການ |
| 15. | ທ່ານຫົວໜ້າກົມອົບຮົມຂະບວນການ ສູນກາງ ຊປປ ລາວ | ເປັນກຳມະການ |

16. ທ່ານຮອງຫົວໜ້າຫ້ອງການ ສູນກາງສະຫະພັນແມ່ຍິງລາວ ເປັນກຳມະການ
17. ທ່ານຫົວໜ້າຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ເປັນກຳມະການ ແລະ ເປັນຫົວໜ້າກອງເລຂາ

**ມາດຕາ 3:** ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ມີພາລະບົດບາດດັ່ງລຸ່ມນີ້:

1. ຄົ້ນຄ້ວາສ້າງ, ຊີ້ນຳປະຕິບັດ ແລະ ທົບທວນແຜນຍຸດທະສາດແກ້ໄຂບັນຫາລະເບີດບໍ່ທັນແຕກ,
2. ກຳນົດ ແລະ ສະໜອງທິດທາງນະໂຍບາຍກ່ຽວກັບການແກ້ໄຂບັນຫາລະເບີດບໍ່ທັນແຕກ,
3. ຢັ້ງຢືນ, ອອກໃບອະນຸຍາດ, ກວດກາ ບັນດາອົງການແກ້ໄຂບັນຫາລະເບີດບໍ່ທັນແຕກ,
4. ສ້າງ ແລະ ຄຸ້ມຄອງຖານຂໍ້ມູນ, ຈັດລຽງບູລິມະສິດ ແລະ ອື່ນໆ ກ່ຽວກັບວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກ,
5. ປະສານງານໃນການຈັດກິດຈະກຳຕ່າງໆກ່ຽວກັບວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກ,
6. ຢັ້ງຢືນຄຸນນະພາບຂອງບັນດາກິດຈະກຳເກັບກູ້ລະເບີດບໍ່ທັນແຕກ,
7. ປະເມີນຜົນກະທົບພາຍຫລັງສຳເລັດການກວດກູ້ ແລະ ວຽກອື່ນໆ,
8. ສັງລວມລາຍງານການປະຕິບັດກິດຈະການແກ້ໄຂບັນຫາລະເບີດບໍ່ທັນແຕກໃຫ້ລັດຖະບານ.
9. ປະສານສົມທົບກັບຂະແໜງການກ່ຽວຂ້ອງຕ່າງໆ ແຕ່ສູນກາງ-ທ້ອງຖິ່ນ, ປະເທດຜູ້ໃຫ້ທຶນ ແລະ ອົງການຈັດຕັ້ງສາກົນຢູ່ພາຍໃນ ແລະ ຕ່າງປະເທດ.

**ມາດຕາ 4:** ມອບໃຫ້ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ຄົ້ນຄວ້າອອກຂໍ້ກຳນົດ, ກົດລະບຽບການເຄື່ອນໄຫວ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບວຽກງານເກັບກູ້ລະເບີດແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ.

**ມາດຕາ 5:** ບັນດາກະຊວງ, ອົງການທຽບເທົ່າ ແລະ ທ້ອງຖິ່ນກ່ຽວຂ້ອງພ້ອມດ້ວຍບັນດາທ່ານທີ່ໄດ້ຮັບການແຕ່ງຕັ້ງຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 6:** ດຳລັດສະບັບນີ້ ປ່ຽນແທນດຳລັດສະບັບເລກທີ 164/ນຍ, ລົງວັນທີ 9 ມິຖຸນາ 2011 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກ ຄ້າງຢູ່ ສປປ ລາວ ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະບານແຫ່ງ ສປປ ລາວ**
**ລາຍເຊັນ ແລະ ກາປະທັບ**

**ທອງສິງ ທຳມະວົງ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການລັດຖະບານ
ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ

ເລກທີ່___096__ /ຄຊກລ.
ນະຄອນຫຼວງວຽງຈັນ, ວັນທີ່ 28 ພຶດສະພາ 2013

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ

## ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ)

- ອີງຕາມດຳລັດສະບັບເລກທີ່ 406/ນຍ, ວັນທີ່ 8 ພະຈິກ 2012 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ).
- ອີງຕາມ ແຜນຍຸດທະສາດແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາລະເບີດບໍ່ທັນແຕກ (ລບຕ) ສຳລັບປີ 2011 ເຖິງ 2020, ວັນທີ່ 22 ມິຖຸນາ 2012.

**ລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ,**

**ປະທານຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາ
ລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1: ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກ ຄ້າງ ຢູ່ ສປປ ລາວ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ສປປລາວແມ່ນໂຄງປະກອບການຈັດຕັ້ງຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ກົມການເມືອງສູນກາງພັກ ແລະ ລັດຖະບານ ໃນການຄຸ້ມຄອງມະຫາພາກ, ເປັນຜູ້ຄົ້ນຄວ້ານະໂຍບາຍ, ແຜນການ, ໂຄງການ ແລະ ປະສານງານຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ສປປ ລາວ ໃນຂອບເຂດທົ່ວປະເທດ.

**ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ຂຽນເປັນຕົວອັກສອນຫຍໍ້ວ່າ “ຄຊກລ”**

## ໝວດທ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່ຂອງ ຄຊກລ.**

3.1 ຄົ້ນຄວ້າ, ເຊື່ອມຊຶມ ແລະ ຫັນແນວທາງນະໂຍບາຍຂອງພັກ ແລະ ທິດທາງແຜນການຂອງລັດ ເຂົ້າໃນຂົງເຂດວຽກງານການແກ້ໄຂບັນຫາລະເບີດບໍ່ທັນແຕກ (ລບຕ).

3.2 ສ້າງ, ຈັດຕັ້ງປະຕິບັດ ແລະ ທົບທວນແຜນຍຸດທະສາດ ຫຼື ແຜນດຳເນີນງານອື່ນໆກ່ຽວກັບວຽກງານແກ້ໄຂບັນຫາ ລບຕ.

3.3 ຄຸ້ມຄອງພະນັກງານລາວ ແລະ ຕ່າງປະເທດຂອງບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ.

3.4 ຮັບຮອງແຜນການ ແລະ ງົບປະມານແຕ່ລະໄລຍະຂອງ ຄຊກລ ແລະ ໂຄງການເກັບກູ້ລະເບີດແຫ່ງຊາດ.

3.5 ກັບກະຊວງ, ອົງການທຽບເທົ່າ ແລະ ທ້ອງຖິ່ນ ເພື່ອຈັດລຽງບູລິມະສິດການເກັບກູ້, ການໂຄສະນາສຶກສາຄວາມອັນຕະລາຍ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ.

3.6 ກວດກາ, ຢັ້ງຢືນຄຸນນະພາບ ແລະ ອອກໃບອະນຸຍາດໃຫ້ບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ.

3.7 ເກັບກຳ, ວິເຄາະ, ສ້າງແຜນທີ່ ແລະ ຄຸ້ມຄອງຖານຂໍ້ມູນກ່ຽວກັບວຽກງານການແກ້ໄຂບັນຫາ ລບຕ.

3.8 ປະສານກັບບັນດາປະເທດຜູ້ໃຫ້ທຶນ ແລະ ບັນດາອົງການຈັດຕັ້ງສາກົນຕ່າງໆ ເພື່ອປຸກລະດົມທຶນ ແລະ ເຕັກນິກວິຊາການເຂົ້າໃນວຽກງານແກ້ໄຂບັນຫາ ລບຕ.

3.9 ຄຸ້ມຄອງສູນຝຶກອົບຮົມເກັບກູ້ລະເບີດແຫ່ງຊາດ.

3.10 ຄົ້ນຄວ້າທົດລອງເຕັກນິກ, ເຕັກໂນໂລຊີ ເຂົ້າໃນວຽກງານແກ້ໄຂບັນຫາ ລບຕ.

3.11 ປະເມີນຜົນພາຍຫຼັງການເກັບກູ້, ການໂຄສະນາຄວາມອັນຕະລາຍ ແລະ ການຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ ຂອງບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ.

3.12 ຄຸ້ມຄອງພາຫະນະ, ອຸປະກອນຮັບໃຊ້ຕ່າງໆຂອງ ຄຊກລ ແລະ ຂອງບັນດາອົງການປະຕິບັດງານດ້ານການແກ້ໄຂບັນຫາ ລບຕ.

3.13 ສະຫຼຸບສັງລວມ ແລະ ລາຍງານການປະຕິບັດກິດຈະກຳແກ້ໄຂບັນຫາ ລບຕ ໃຫ້ລັດຖະບານຢ່າງປົກກະຕິ.

**ມາດຕາ 4. ຂອບເຂດສິດຂອງ ຄຊກລ.**

4.1 ອອກຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ແລະ ມາດຕະການຕ່າງໆກ່ຽວກັບວຽກງານການແກ້ໄຂບັນຫາ ລບຕ.

4.2 ຕົກລົງ ສ້າງຕັ້ງ ແລະ ຍົກເລີກໜ່ວຍງານຂອງ ຄຊກລ ຂັ້ນສູນກາງ ແລະ ທ້ອງຖິ່ນ.

4.3 ອະນຸມັດການນຳໃຊ້ທຶນລັດຖະບານ ແລະ ທຶນຊ່ວຍເຫຼືອລ້າຈາກສາກົນເຂົ້າໃນວຽກງານການແກ້ໄຂບັນຫາ ລບຕ ພ້ອມທັງດຳເນີນການກວດກາການນຳໃຊ້ທຶນດັ່ງກ່າວຢ່າງປົກກະຕິ.

4.4 ເຂົ້າຮ່ວມກອງປະຊຸມສົນທິສັນຍາ ແລະ ອະນຸສັນຍາສາກົນຕ່າງໆ ກ່ຽວກັບວຽກງານການແກ້ໄຂບັນຫາ ລບຕ.

4.5 ຄົ້ນຄ້ວາ ແລະ ລົງນາມໃສ່ບົດບັນທຶກຄວາມເຂົ້າໃຈ ຫຼື ຂໍ້ຕົກລົງຮ່ວມມືຕ່າງໆກ່ຽວກັບວຽກງານການແກ້ໄຂບັນຫາ ລບຕ.

4.6 ຮຽກປະຊຸມຕ່າງໆກ່ຽວກັບວຽກງານແກ້ໄຂບັນຫາ ລບຕ.

4.7 ປະຕິບັດສິດອື່ນໆທີ່ພົວພັນກັບວຽກງານການແກ້ໄຂບັນຫາ ລບຕ.

**ມາດຕາ 5. ໜ້າທີ່ຂອງຫ້ອງການ ຄຊກລ.**

5.1 ເປັນເສນາທິການຄົ້ນຄວ້າທຸກໆບັນຫາກ່ຽວກັບວຽກງານແກ້ໄຂບັນຫາ ລບຕ ໃຫ້ແກ່ ຄຊກລ.

5.2 ຊ່ວຍ ຄຊກລ ຄຸ້ມຄອງພະນັກງານ-ລັດຖະກອນລາວ ແລະ ຕ່າງປະເທດ ທີ່ວຂະແໜງການແກ້ໄຂບັນຫາ ລບຕ.

5.3 ຊ່ວຍ ຄຊກລ ປະສານກັບກະຊວງ, ອົງການທຽບເທົ່າ ແລະ ທ້ອງຖິ່ນ ເພື່ອສ້າງແຜນການ ແລະ ງົບປະມານຂອງ ຄຊກລ ແຕ່ລະໄລຍະ.

5.4 ຕາງໜ້າ ຄຊກລ ປະສານກັບປະເທດຜູ້ໃຫ້ທຶນ, ອົງການສາກົນຕ່າງໆ ເພື່ອລະດົມທຶນຮອນ ແລະ ເຕັກນິກວິຊາການເຂົ້າໃນວຽກງານການແກ້ໄຂບັນຫາ ລບຕ.

5.5 ຊ່ວຍ ຄຊກລ ຄົ້ນຄວ້າທົດລອງ ເຕັກນິກ-ເຕັກໂນໂລຊີ ເຂົ້າໃນວຽກງານແກ້ໄຂບັນຫາ ລບຕ.

5.6 ຊ່ວຍ ຄຊກລ ກວດກາ, ຮັບຮອງຄຸນນະພາບ ແລະ ອອກໃບອະນຸຍາດໃຫ້ບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ.

5.7 ຊ່ວຍ ຄຊກລ ເກັບກຳ, ວິເຄາະ ແລະ ຄຸ້ມຄອງຖານຂໍ້ມູນ ລບຕ.

5.8 ຊ່ວຍ ຄຊກລ ປະເມີນຜົນພາຍຫຼັງການປະຕິບັດການເກັບກູ້, ໂຄສະນາສຶກສາຄວາມອັນຕະລາຍ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ.

5.9 ຊ່ວຍ ຄຊກລ ຄຸ້ມຄອງພາຫະນະ, ວັດຖຸອຸປະກອນຮັບໃຊ້ຕ່າງໆຂອງຂະແໜງການແກ້ໄຂບັນຫາ ລບຕ.

5.10 ສ້າງ ແລະ ສະເໜີບົດລາຍງານການປະຕິບັດວຽກງານຂອງ ຄຊກລ ໃນແຕ່ລະໄລຍະ.

5.11 ຊ່ວຍ ຄຊກລ ຄຸ້ມຄອງສູນຝຶກອົບຮົມເກັບກູ້ລະເບີດແຫ່ງຊາດ.

5.12 ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງປະທານ ຄຊກລ.

**ມາດຕາ 6. ຂອບເຂດສິດຂອງຫ້ອງການ ຄຊກລ.**

6.1 ຄົ້ນຄວ້າ, ສະເໜີປັບປຸງ ຫຼື ປ່ຽນແປງໂຄງປະກອບການຈັດຕັ້ງຊ່ວຍວຽກຂອງ ຄຊກລ.

6.2 ຕາງໜ້າໃຫ້ ຄຊກລ ອະນຸມັດຄ່າໃຊ້ຈ່າຍທັງໝົດຂອງຫ້ອງການ ຄຊກລ ຕາມແຜນງົບປະມານປະຈຳປີທີ່ຖືກອະນຸມັດຈາກ ຄຊກລ ແລ້ວ.

6.3 ຕາງໜ້າ ຄຊກລ ກວດກາການຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈຂອງບັນດາອົງການປະຕິບັດງານການແກ້ໄຂບັນຫາ ລບຕ.

6.4 ຕາງໜ້າໃຫ້ ຄຊກລ ປະສານສົມທົບກັບບັນດາກະຊວງ, ອົງການທຽບເທົ່າ ແລະ ທ້ອງຖິ່ນ ເພື່ອຄຸ້ມຄອງວຽກງານການແກ້ໄຂບັນຫາ ລບຕ.

6.5 ເຂົ້າຮ່ວມກອງປະຊຸມສົນທິສັນຍາ ແລະ ອະນຸສັນຍາສາກົນຕ່າງໆ ກ່ຽວກັບວຽກງານການແກ້ໄຂບັນຫາ ລບຕ ທັງຢູ່ພາຍໃນ ແລະ ຕ່າງປະເທດ.

6.6 ຕາງໜ້າ ຄຊກລ ເຊັນບົດບັນທຶກຄວາມເຂົ້າໃຈ ກັບບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ.

6.7 ປະຕິບັດສິດອື່ນໆຕາມການມອບໝາຍຂອງ ຄຊກລ.

**ມາດຕາ 7. ໜ້າທີ່ຂອງບັນດາພະແນກ ຂອງຫ້ອງການ ຄຊກລ.**

**7.1 ພະແນກບໍລິຫານ ແລະ ການເງິນ.**

1) ຄົ້ນຄວ້າ, ສະເໜີຮັບ ແລະ ຄຸ້ມຄອງພະນັກງານ-ລັດຖະກອນລາວ ແລະ ຕ່າງປະເທດຂອງຂະແໜງການ ລບຕ.

2) ປະສານກັບກະຊວງທີ່ກ່ຽວຂ້ອງ ເພື່ອບໍລິການໃບອະນຸຍາດເຮັດວຽກ, ວີຊາ, ໜັງສືຜ່ານແດນ, ບັດປະຈຳຕົວ ແລະ ໃບອະນຸຍາດຂັບຂີ່ຍານພາຫະນະຢູ່ ສປປ ລາວ ໃຫ້ແກ່ຊ່ຽວຊານ ແລະ ທີ່ປຶກສາຕ່າງປະເທດ.

3) ຮັບຜິດຊອບວຽກງານພິທີການ, ວຽກງານຮັກສາຄວາມສະອາດ, ຄວາມເປັນລະບຽບຮຽບຮ້ອຍ ແລະ ວຽກງານປ້ອງກັນຄວາມສະຫງົບຂອງຫ້ອງການ ຄຊກລ.

4) ຮັບຜິດຊອບວຽກງານເອກະສານທາງລັດຖະການຂອງ ຄຊກລ ແລະ ຂອງຫ້ອງການ ຄຊກລ ເຊັ່ນ: ເອກະສານ ຂາເຂົ້າ-ອອກ, ຈັດສົ່ງເອກະສານ, ພິມເອກະສານ, ອັດສຳເນົາ ແລະ ອື່ນໆ.

5) ຄອງ ແລະ ປົກປັກຮັກສາຊັບສິນບັດຕ່າງໆເຊັ່ນ: ກາປະທັບ, ຍານພາຫະນະ, ເຄື່ອງອັດສຳເນົາເອກະສານ, ຄອມພິວເຕີ, ເຄື່ອງພິມ, ໂທລະສັບ, ໂທລະສານ, ເຄຫາສະຖານ ແລະ ຊັບສິນບັດອື່ນໆຂອງ ຄຊກລ ແລະ ຂອງບັນດາອົງການປະຕິບັດງານດ້ານການແກ້ໄຂບັນຫາ ລບຕ.

6) ຂື້ນແຜນງົບປະມານ, ຄຸ້ມຄອງການຮັບ-ຈ່າຍ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດງົບປະມານຂອງ ຄຊກລ ເປັນແຕ່ລະໄລຍະ.

7) ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງຫ້ອງການ ຄຊກລ.

**7.2 ພະແນກແຜນການ ແລະ ການຮ່ວມມື.**

1) ຄົ້ນຄວ້າ ສະເໜີ ແຜນຍຸດທະສາດ, ແຜນການ ແລະ ໂຄງການ ຂອງ ຄຊກລ ພ້ອມທັງສະຫຼຸບລາຍງານການປະຕິບັດແຜນການດັ່ງກ່າວເປັນແຕ່ລະໄລຍະ.
2) ກະກຽມກອງປະຊຸມປະຈຳປີ, ກອງປະຊຸມສາມັນຂອງ ຄຊກລ, ກອງປະຊຸມທົບທວນກັບ ສປຊ, ກອງປະຊຸມຂະແໜງການກັບປະເທດຜູ້ໃຫ້ທຶນ.
3) ຄົ້ນຄວ້າ ສະເໜີ ບົດບັນທຶກຄວາມເຂົ້າໃຈ, ບັນດາສົນທິສັນຍາສາກົນ, ອະນຸສັນຍາສາກົນ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງກັບການແກ້ໄຂບັນຫາ ລບຕ.
4) ຈັດຕັ້ງງານສະຫຼອງວັນສົນທິສັນຍາ ວ່າດ້ວຍລະເບີດຝັງດິນ, ລະເບີດລູກຫວ່ານ ແລະ ອື່ນໆ...
5) ປະສານກັບສື່ມວນຊົນລາວ ແລະ ຕ່າງປະເທດ ແລະ ພັດທະນາເວັບໄຊ ຂອງ ຄຊກລ.
6) ໂຄສະນາຂົນຂວາຍທຶນຮອນ ແລະ ເຕັກນິກວິຊາການຈາກພາຍໃນ ແລະ ຕ່າງປະເທດ ເຂົ້າໃນການແກ້ໄຂບັນຫາ ລບຕ.
7) ສ້າງ ແລະ ສະເໜີ ບົດລາຍງານປະຈຳປີ ພ້ອມທັງຈັດພິມປື້ມດັ່ງກ່າວ ສະໜອງຂໍ້ມູນການຈັດຕັ້ງປະຕິບັດສົນທິສັນຍາສາກົນ, ອະນຸສັນຍາສາກົນ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງກັບການແກ້ໄຂບັນຫາ ລບຕ.
8) ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງຫ້ອງການ ຄຊກລ.

**7.3 ພະແນກຄຸ້ມຄອງຄຸນນະພາບ ແລະ ມາດຕະຖານ.**

1) ຄົ້ນຄວ້າ ສະເໜີ ປັບປຸງມາດຕະຖານແຫ່ງຊາດ ກ່ຽວກັບວຽກງານແກ້ໄຂບັນຫາ ລບຕ.
2) ຄົ້ນຄວ້າ ສະເໜີ ມາດຕະຖານການປະຕິບັດງານຂອງບັນດາອົງການປະຕິບັດງານ ແລະ ບໍລິສັດເກັບກູ້ ລບຕ.
3) ກວດກາຄຸນນະພາບການຈັດຕັ້ງປະຕິບັດໜ້າທີ່ຂອງບັນດາອົງການປະຕິບັດງານ ແລະ ບັນດາບໍລິສັດເກັບກູ້ ລບຕ.
4) ຄົ້ນຄວ້າ ສະເໜີ ເພື່ອຮັບຮອງຄຸນນະພາບ ແລະ ອອກໃບຢັ້ງຢືນໃຫ້ແກ່ອົງການປະຕິບັດງານແກ້ໄຂບັນຫາ ລບຕ.
5) ຄວບຄຸມມາດຕະຖານການຝຶກອົບຮົມວຽກງານການແພດ, ການເກັບກູ້-ທຳລາຍ ລບຕ ແລະ ການສຳຫຼວດຂອງບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ.

**7.4 ພະແນກປະຕິບັດງານ ແລະ ຂໍ້ມູນຂ່າວສານ.**

1) ປະສານງານກັບກະຊວງ, ອົງການທຽບເທົ່າ ແລະ ທ້ອງຖິ່ນ ເພື່ອເກັບກຳຂໍ້ມູນຮັບໃຊ້ການສ້າງແຜນການ, ການກຳນົດບູລິມະສິດການເກັບກູ້, ການໂຄສະນາສຶກສາຄວາມອັນຕະລາຍ, ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ.
2) ປະສານກັບບັນດາອົງການປະຕິບັດງານ ເພື່ອຊຸກຍູ້ການຈັດຕັ້ງປະຕິບັດວຽກງານການເກັບກູ້, ການໂຄສະນາສຶກສາຄວາມອັນຕະລາຍ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ.
3) ຈັດກອງປະຊຸມກຸ່ມວິຊາການເກັບກູ້ ລບຕ, ການໂຄສະນາສຶກສາຄວາມອັນຕະລາຍ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ.
4) ແກ້ໄຂບັນຫາລະເບີດບໍ່ທັນແຕກສຸກເສີນຮ່ວມກັບບັນອົງການປະຕິບັດງານ ແລະ ບັນດາບໍລິສັດເກັບກູ້ ລບຕ.
5) ຄົ້ນຄວ້າ ພັດທະນາ ເຕັກນິກ-ເຕັກໂນໂລຊີ ແລະ ອຸປະກອນຮັບໃຊ້ວິຊາການຕ່າງໆ ເຂົ້າໃນວຽກງານແກ້ໄຂບັນຫາ ລບຕ.
6) ຄົ້ນຄວ້າ ແລະ ແລກປ່ຽນບົດຮຽນກ່ຽວກັບການແກ້ໄຂບັນຫາ ລບຕ ກັບອົງການຈັດຕັ້ງອື່ນໆ ທີ່ເຮັດວຽກຢູ່ພາຍໃນປະເທດ ແລະ ຢູ່ຕ່າງປະເທດ.

7) ປະເມີນຜົນການກວດກູ້, ການໂຄສະນາຄວາມອັນຕະລາຍ ແລະ ການຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ.

8) ຕິດຕາມ ແລະ ປັບປຸງໂປຣແກຣມຂໍ້ມູນຂ່າວສານ ລບຕ (IMSMA) ໃນທີ່ວຂະແໜງການແກ້ໄຂບັນຫາ ລບຕ.

9) ຝຶກອົບຮົມການນຳໃຊ້ໂປຣແກຣມຂໍ້ມູນຂ່າວສານ ລບຕ (IMSMA) ໃຫ້ທີ່ວຂະແໜງການແກ້ໄຂບັນຫາ ລບຕ.

10) ສ້າງ ແລະ ສະໜອງແຜນທີ່ຂໍ້ມູນຂ່າວສານ ລບຕ ໃຫ້ທີ່ວຂະແໜງການແກ້ໄຂບັນຫາ ລບຕ.

11) ເກັບຮັກສາ ແລະ ສຳເນົາຂໍ້ມູນຂ່າວສານ ກ່ຽວກັບວຽກງານການແກ້ໄຂບັນຫາ ລບຕ.

12) ລາຍງານຂໍ້ມູນກ່ຽວກັບຂະແໜງການແກ້ໄຂບັນຫາ ລບຕ ເປັນແຕ່ລະໄລຍະ.

13) ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງຫ້ອງການ ຄຊກລ.

**7.5 ສູນຝຶກອົບຮົມ ເກັບກູ້ລະເບີດແຫ່ງຊາດ.**

1) ສ້າງ ແລະ ພັດທະນາຫຼັກສູດການຝຶກອົບຮົມກ່ຽວກັບການແກ້ໄຂບັນຫາ ລບຕ.

2) ສ້າງ ແລະ ບຳລຸງ ພະນັກງານຄຸ້ມຄອງບໍລິຫານ ແລະ ຄູຝຶກເພື່ອປະກອບເຂົ້າໃນສູນຝຶກ.

3) ສ້າງແຜນການ, ງົບປະມານ ແລະ ດຳເນີນການຝຶກອົບຮົມກ່ຽວກັບການແກ້ໄຂບັນຫາ ລບຕ ພ້ອມທັງສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດການຝຶກອົບຮົມໃນແຕ່ລະໄລຍະ.

4) ດຳເນີນການຝຶກອົບຮົມ ແພດ, ນັກສຳຫຼວດ, ນັກເກັບກູ້, ນັກໂຄສະນາຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ.

5) ອອກໃບປະກາດສະນີຍະບັດຮັບຮອງການຝຶກອົບຮົມວຽກງານແກ້ໄຂບັນຫາ ລບຕ.

6) ຕິດຕາມກວດກາ ແລະ ປະເມີນການປະຕິບັດໜ້າທີ່ຂອງຜູ້ທີ່ໄດ້ຮັບການຝຶກອົບຮົມຕາມຄວາມຈຳເປັນ.

7) ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງຫ້ອງການ ຄຊກລ.

**ມາດຕາ 8. ໜ້າທີ່ຂອງຫ້ອງການປະສານງານ ຄຊກລ ຂັ້ນທ້ອງຖິ່ນ (ແຂວງ ແລະ ເມືອງ).**

8.1 ເປັນເສນາທິການຊ່ວຍວຽກໃຫ້ແກ່ ຄຊກລ ຂັ້ນສູນກາງ ແລະ ອຳນາດການປົກຄອງທ້ອງຖິ່ນໃນທຸກບັນຫາທີ່ກ່ຽວຂ້ອງກັບວຽກງານການແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ທ້ອງຖິ່ນຕົນ.

8.2 ສົມທົບກັບອຳນາດການປົກຄອງ ແລະ ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອເກັບກຳຂໍ້ມູນກ່ຽວກັບ ລບຕ ທີ່ຕົກຄ້າງ ແລະ ຈັດລຽງບູລິມະສິດແກ້ໄຂບັນຫາ ລບຕ ຢູ່ທ້ອງຖິ່ນຕົນ.

8.3 ປະສານກັບອົງການປະຕິບັດງານ ແລະ ບໍລິສັດເກັບກູ້ລະເບີດ ເພື່ອຕິດຕາມ, ກວດກາ, ຊຸກຍູ້ ການຈັດຈັດຕັ້ງປະຕິບັດວຽກງານການແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ທ້ອງຖິ່ນຕົນ.

8.4 ຕາງໜ້າໃຫ້ ຄຊກລ ຄຸ້ມຄອງພະນັກງານ-ລັດຖະກອນລາວ ແລະ ຕ່າງປະເທດ ທີ່ປະຕິບັດໜ້າທີ່ແກ້ໄຂບັນຫາ ລບຕ ຢູ່ທ້ອງຖິ່ນຕົນ.

8.5 ສະຫຼຸບລາຍງານກ່ຽວກັບຄວາມຄືບໜ້າ ແລະ ຜົນໄດ້ຮັບຂອງການຈັດຕັ້ງປະຕິບັດວຽກງານດັ່ງກ່າວຢູ່ທ້ອງຖິ່ນໃຫ້ແກ່ ຄຊກລ ເປັນແຕ່ລະໄລຍະຢ່າງເປັນປົກກະຕິ.

8.6 ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ.

## ໝວດທ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 9. ໂຄງປະກອບກົງຈັກ**

ໂຄງປະກອບການຈັດຕັ້ງຂອງ ຄຊກລ ປະກອບມີ 2 ຂັ້ນຄື: ຂັ້ນສູນກາງ ແລະ ທ້ອງຖິ່ນ.

**9.1 ຂັ້ນສູນກາງ**:

ຄຊກລ ມີຫ້ອງການຊ່ວຍວຽກຂອງຕົນສັງກັດຢູ່ໂຄງປະກອບການຈັດຕັ້ງຂອງ ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ ທາງດ້ານພັກ-ພະນັກງານ ແລະ ງົບປະມານ, ສ່ວນດ້ານວິຊາການແມ່ນຂຶ້ນກັບ ຄຊກລ. ຫ້ອງການ ຄຊກລ ມີຖານະທຽບເທົ່າກົມຂອງກະຊວງ, ປະກອບມີ 4 ພະແນກ ແລະ 1 ສູນຝຶກຄື:

1) ພະແນກບໍລິຫານ ແລະ ການເງິນ.

2) ພະແນກແຜນການ ແລະ ການຮ່ວມມື.

3) ພະແນກຄຸ້ມຄອງຄຸນນະພາບ ແລະ ມາດຕະຖານ.

4) ພະແນກປະຕິບັດງານ ແລະ ຂໍ້ມູນຂ່າວສານ.

5) ສູນຝຶກອົບຮົມເກັບກູ້ລະເບີດແຫ່ງຊາດ.

ສູນຝຶກອົບຮົມ ແລະ ບັນດາພະແນກ ຂອງ ຄຊກລ ຍັງປະກອບມີບັນດາຂະແໜງການຈຳນວນໜຶ່ງຕາມຄວາມຈຳເປັນຂອງວຽກງານຕົວຈິງ.

**9.2 ຂັ້ນທ້ອງຖິ່ນ.**

ຂັ້ນແຂວງ:

ມີຫ້ອງການປະສານງານ ຄຊກລ ປະຈຳຢູ່ບັນດາແຂວງ ທີ່ມີລະເບີດບໍ່ທັນແຕກຕົກຄ້າງ. ຫ້ອງການປະສານງານ ຄຊກລ ຂັ້ນແຂວງ ສັງກັດຢູ່ໂຄງປະກອບການຈັດຕັ້ງຂອງ ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນແຂວງ ທາງດ້ານພັກ-ພະນັກງານ ແລະ ງົບປະມານ, ສ່ວນດ້ານວິຊາການ ແມ່ນຂຶ້ນກັບ ຄຊກລ. ຫ້ອງການປະສານງານ ຄຊກລ ຂັ້ນແຂວງ ມີຖານະທຽບເທົ່າຂະແໜງ ຂອງພະແນກແຂວງ.

ຂັ້ນເມືອງ:

ມີຈຸດປະສານງານ ຄຊກລ ສັງກັດຢູ່ຫ້ອງການ ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນເມືອງ ທາງດ້ານພັກ-ພະນັກງານ ແລະ ງົບປະມານ, ສ່ວນດ້ານວິຊາການແມ່ນຂຶ້ນກັບ ຄຊກລ. ຈຸດປະສານງານ ຄຊກລ ຂັ້ນເມືອງມີຖານະທຽບເທົ່າໜ່ວຍງານຂອງຫ້ອງການເມືອງ.

**ມາດຕາ 10. ໂຄງປະກອບບຸກຄະລາກອນ.**

10.1 ຄຊກລ ມີບຸກຄະລາກອນ ຕາມດຳລັດນາຍົກລັດຖະມົນຕີ ສະບັບເລກທີ 406/ນຍ, ລົງວັນທີ 08 ພະຈິກ 2011.

10.2 ຫ້ອງການ ຄຊກລ ປະກອບມີຫົວໜ້າ 1 ທ່ານ ມີຕຳແໜ່ງບໍລິຫານປະເພດ 2 ຫຼື ທຽບເທົ່າຫົວໜ້າກົມ, ຊຶ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍນາຍົກລັດຖະມົນຕີຕາມການສະເໜີຂອງປະທານ ຄຊກລ ແລະ ຄວາມເປັນເອກະພາບຂອງ ອົງການສະຫະປະຊາຊາດເພື່ອການພັດທະນາ (ສປຊ). ຫົວໜ້າຫ້ອງການເປັນຜູ້ຮັບຜິດຊອບໂດຍກົງຕໍ່ປະທານ ຄຊກລ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງໃນການຈັດຕັ້ງປະຕິບັດໜ້າທີ່ ແລະ ຂອບເຂດສິດທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

10.3 ຫ້ອງການ ຄຊກລ ມີຮອງ 2 ທ່ານ, ມີຕຳແໜ່ງບໍລິຫານປະເພດ 3 ຫຼື ທຽບເທົ່າຮອງຫົວໜ້າກົມ, ຊຶ່ງໄດ້ ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍປະທານ ຄຊກລ ຕາມການສະເໜີຂອງຫົວໜ້າຫ້ອງການ ຄຊກລ ແລະ ຄວາມເປັນເອກະພາບຂອງ ສປຊ. ຮອງຫົວໜ້າຫ້ອງການ ປະຕິບັດໜ້າທີ່ ທີ່ກຳນົດໄວ້ໃນສັນຍາແຮງງານ ແລະ ຕາມການມອບໝາຍຂອງຫົວໜ້າຫ້ອງການ. ຮອງຫົວໜ້າຫ້ອງການມີຄວາມຮັບຜິດຊອບໂດຍກົງຕໍ່ຫົວໜ້າຫ້ອງການກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງຂອງການປະຕິບັດໜ້າທີ່ທີ່ຕົນຮັບຜິດຊອບ.

10.4 ຫ້ອງການ ຄຊກລ ມີຫົວໜ້າພະແນກ ແລະ ຫົວໜ້າສູນຝຶກອົບຮົມ, ຊຶ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍປະທານ ຄຊກລ ແລະ ຄວາມເປັນເອກະພາບຂອງ ສປຊ.

10.5 ຫ້ອງການ ຄຊກລ ມີບັນດາຫົວໜ້າຂະແໜງ ແລະ ພະນັກງານວິຊາການຈຳນວນໜຶ່ງ ຕາມຄວາມຕ້ອງການຂອງວຽກງານ, ຊຶ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍປະທານ ຄຊກລ ຕາມການສະເໜີຂອງຫົວໜ້າຫ້ອງການ ແລະ ຄວາມເປັນເອກະພາບຂອງ ສປຊ.

10.6 ຫ້ອງການປະສານງານ ຄຊກລ ຂັ້ນແຂວງ ມີຫົວໜ້າ ແລະ ພະນັກງານວິຊາການຈຳນວນໜຶ່ງຕາມຄວາມຈຳເປັນຂອງວຽກງານ, ຊຶ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍປະທານ ຄຊກລ ຕາມການສະເໜີຂອງເຈົ້າແຂວງ.

10.7 ຈຸດປະສານງານ ຄຊກລ ຂັ້ນເມືອງ ມີພະນັກງານວິຊາການຈຳນວນໜຶ່ງຕາມຄວາມຈຳເປັນຂອງວຽກງານ, ຊຶ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍປະທານ ຄຊກລ ຕາມການສະເໜີຂອງເຈົ້າແຂວງ.

## ໝວດທ 4
## ຫຼັກການ ແລະ ວິທີເຮັດວຽກ

**ມາດຕາ 11. ຫຼັກການ.**

ຄຊກລ ເຄື່ອນໄຫວ ແລະ ດຳເນີນວຽກງານບົນຫຼັກການດັ່ງນີ້:

11.1 ຄຊກລ ເຄື່ອນໄຫວວຽກງານຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະກ່ຽວກັບແຜນການ, ການຈັດຕັ້ງພະນັກງານ ແລະ ການພົວພັນ-ຮ່ວມມືກັບຕ່າງປະເທດ. ປະຕິບັດລະບອບຫົວໜ້າດຽວ ບົນພື້ນຖານການແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນທຸກລະດັບ.

11.2 ທຸກການເຄື່ອນໄຫວຂອງ ຄຊກລ ແລະ ພະນັກງານ-ລັດຖະກອນທຸກຄົນ ແມ່ນໃຫ້ອີງໃສ່ລະບຽບກົດໝາຍ ແລະ ຫຼັກການລວມຂອງລັດຖະບານ. ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນເປັນຈິງ.

**ມາດຕາ 12. ວິທີເຮັດວຽກ.**

ຄຊກລ ມີວິທີເຮັດວຽກດັ່ງນີ້:

12.1 ເຮັດວຽກຢ່າງມີແຜນການ, ມີໂຄງການລະອຽດ; ປະຕິບັດ ແລະ ແກ້ໄຂວຽກຢ່າງມີຈຸດສຸມ ແລະ ມີເປົ້າໝາຍແຕ່ລະໄລຍະ.

12.2 ພົວພັນປະສານ ແລະ ສົມທົບແໜ້ນກັບສາຍຕັ້ງ- ສາຍຂວາງພາຍໃນ ແລະຕ່າງປະເທດ ເພື່ອເສີມຂະຫຍາຍວຽກງານຂອງຕົນໃຫ້ເຂັ້ມແຂງ.

12.3 ເຮັດວຽກຢ່າງມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາປະເມີນຜົນ ແລະ ລາຍງານຢ່າງເຂັ້ມງວດ.

12.4 ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ ຫຼື ປີ ເພື່ອລາຍງານໃຫ້ຂັ້ນເທິງຢ່າງປົກກະຕິ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 13. ກາປະທັບ.**

ຄຊກລ ແລະ ຫ້ອງການ ຄຊກລ ສູນກາງ ແລະ ທ້ອງຖິ່ນ ມີກາປະທັບເປັນຂອງຕົນເອງ ເພື່ອຮັບໃຊ້ວຽກງານທາງລັດຖະການ ຕາມໜ້າທີ່ຮັບຜິດຊອບຂອງຕົນ.

**ມາດຕາ 14.** ຄຊກລ ແລະ ຫ້ອງການ ຄຊກລ ສູນກາງ ແລະ ທ້ອງຖິ່ນ ມີງົບປະມານຂອງຕົນເອງ ທີ່ມາຈາກລັດຖະບານ ແລະ ສາກົນ.

**ມາດຕາ 15. ການຈັດຕັ້ງປະຕິບັດ.**

ຫ້ອງວ່າການລັດຖະບານ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອຳນາດການປົກຄອງທ້ອງຖິ່ນ ອົງການຈັດຕັ້ງສາກົນ ແລະ ຄຊກລ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງມີປະສິດທິຜົນ.

**ມາດຕາ 16.** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ທຸກຂໍ້ຕົກລົງທີ່ຂັດກັບຂໍ້ຕົກລົງສະບັບນີ້ແມ່ນຖືກລົບລ້າງ.

ລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ
ປະທານ ຄຊກລ



ສອບຖາມຂໍ້ມູນເພີ່ມເຕີມ ກະລຸນາພົວພັນ:

ຄະນະກຳມະການຄຸ້ມຄອງແຫ່ງຊາດ
ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ
ບ້ານສີສັງວອນ, ໜ່ວຍ 19, ເມືອງໄຊເສດຖາ, ຕູ້ ປ.ນ 7261,
ນະຄອນຫຼວງວຽງຈັນ, ສປປ ລາວ

ເວັບໄຊ້: www.nra.gov.la